ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນພັດທະນາ
# ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ
# 5 ປີ (2021-2025)

ກະຊວງອຸດສາຫະກຳ ແລະ ການຄ້າ
(2021)

# ຄຳນຳ

ແຜນພັດທະນາຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ 5 ປີ (2021-2025) ສະບັບນີ້ ໄດ້ສ້າງຂຶ້ນ ເພື່ອສືບຕໍ່ເສີມຂະຫຍາຍການຊຸກຍູ້ສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ມີການເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ຕາມທິດສີມດຸນ, ສີຂຽວ ແລະ ຍືນຍົງ. ການສ້າງແຜນພັດທະນາສະບັບນີ້ ໄດ້ມີການກະກຽມ ແລະ ດຳເນີນການສອດຄ່ອງຕາມຂັ້ນຕອນ ແລະ ວິທີການ ສ້າງແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ແລະ ບົດຮຽນຂອງສາກົນ ໂດຍໄດ້ມີການເກັບກຳຂໍ້ມູນ, ຕີລາຄາ, ວິເຄາະ ແລະ ວິໃຈ ໝາກຜົນຂອງການຈັດຕັ້ງຜັນຂະຫຍາຍນະໂຍບາຍຂອງລັດຖະບານ ກໍຄືການຈັດຕັ້ງປະຕິບັດວຽກງານສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນໄລຍະ 5 ປີຜ່ານມາ, ຊຶ່ງໄດ້ຕີລາຄາ ດ້ານດີ, ດ້ານອ່ອນ, ກາລະໂອກາດ ແລະ ສິ່ງທ້າທາຍ ແລ້ວຖອດເປັນບົດຮຽນ ຈາກດ້ານທີ່ປະສົບຜົນສຳເລັດ ແລະ ຂໍ້ຄົງຄ້າງ ມາກຳນົດເປັນແຜນງານ, ໂຄງການ ແລະ ມາດຕະການຈັດຕັ້ງປະຕິບັດ ເພື່ອຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ກໍ່ຄືແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ ປີ 2021-2025.

ການສ້າງແຜນພັດທະນານີ້ ເປັນໄລຍະທີ່ມີການລະບາດຂອງພະຍາດໂຄວິດ-19 ຊຶ່ງເຮັດໃຫ້ເສດຖະກິດໂລກ, ພາກພື້ນ ແລະ ພາຍໃນປະເທດ ມີຄວາມຫຍຸ້ງຍາກ. ເຖິງແນວໃດກໍ່ຕາມ, ກົມອຸດສາຫະກຳ ແລະ ຫັດຖະກຳ ກໍ່ໄດ້ພະຍາຍາມ ແລະ ເອົາໃຈໃສ່ ດ້ວຍຄວາມຮັບຜິດຊອບສູງ ໃນການດຳເນີນການໃນແຕ່ລະຂັ້ນຕອນ ເລີ່ມແຕ່ການເກັບກຳຂໍ້ມູນ, ຕີລາຄາ ແລະ ວິເຄາະວິໄຈ. ແຜນພັດທະນາສະບັບນີ້ ປະກອບມີ 5 ແຜນງານ ແລະ 3 ວຽກງານປິ່ນອ້ອມ ປະກອບມີ: 1) ແຜນງານທີ 1: ການສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງໃຫ້ເຕີບໂຕມີຄຸນນະພາບ ຕາມທິດສີມດຸນ, ສີຂຽວ ແລະ ຍືນຍົງ; 2) ແຜນງານທີ 2: ການພັດທະນາພື້ນຖານໂຄງລ່າງ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍແກ່ຂະແໜງອຸດສາຫະກຳປຸງແຕ່ງ; 3) ແຜນງານທີ 3: ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ; 3) ແຜນງານທີ 4: ການສົ່ງເສີມ ແລະ ພັດທະນາຫັດຖະກຳ; ແລະ 5) ແຜນງານທີ 5: ການອະນຸລັກ, ສະຫງວນ ແລະ ປົກປັກຮັກສາຫັດຖະກຳລາວແບບຍືນຍົງ. ພ້ອມນີ້, 3 ວຽກງານປິ່ນອ້ອມ ປະກອບມີ: 1) ການສົ່ງເສີມການພັດທະນາຕາມເຂດແຄວ້ນ; 2) ການຟື້ນຟູຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ສຳລັບຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ; ແລະ 3) ການສົ່ງເສີມບົດບາດຍິງ-ຊາຍ. ໃນນີ້, ໄດ້ກຳນົດເປັນ 64 ໂຄງການ ເພື່ອຈັດຕັ້ງປະຕິບັດແຜນງານເປັນອັນລະອຽດ ໃນໄລຍະ 5 ປີຕໍ່ໜ້າ. ແຜນພັດທະນາສະບັບນີ້ ໄດ້ນຳເຂົ້າສະເໜີຜ່ານກອງປະຊຸມລັດຖະບານໃນເດືອນສິງຫາ ປີ 2021 ແລະ ຮັບຮອງຢ່າງເປັນທາງການ ຕາມແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1660/ຫສນຍ, ລົງວັນທີ 16 ທັນວາ 2021.

ຂ້າພະເຈົ້າ ຂໍສະແດງຄວາມຂອບອົກຂອບໃຈ ມາຍັງກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ບັນດາທ່ານທີ່ໄດ້ປະກອບສ່ວນເຂົ້າໃນການສ້າງແຜນພັດທະນາຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປີ 2021-2025. ແຜນພັດທະນາສະບັບນີ້ ຈະເປັນບ່ອນອີງ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ທຸລະກິດ ລວມທັງຄູ່ຮ່ວມພັດທະນາ ເພື່ອພ້ອມກັນປະກອບສ່ວນຈັດຕັ້ງປະຕິບັດ, ໃຫ້ການສະໜັບສະໜູນ ແລະ ຊຸກຍູ້ການຜັນຂະຫຍາຍ ຕາມພາລະບົດບາດຂອງຕົນ ເຮັດໃຫ້ບັນດາແຜນງານໂຄງການ ແລະ ກິດຈະກຳ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາສະບັບນີ້ ໄດ້ບັນລຸຕາມຈຸດປະສົງ ແລະ ເປົ້າໝາຍ ປະກອບສ່ວນເຂົ້າໃນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງວຽກງານອຸດສາຫະກຳ ແລະ ຫັດຖະກຳ ກໍຄືການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ຕາມທິດສີມດຸນ, ສີຂຽວ ແລະ ຍືນຍົງ.

ລັດຖະມົນຕີ

ປອ.ຄຳແພງ ໄຊສົມແພງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1660 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 16 ທັນວາ 2021

# ແຈ້ງການ

**ຮຽນ :** - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ທີ່ເຄົາລົບ.

- ທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື.

**ເລື່ອງ:** ທິດຊີ້ນຳ ກ່ຽວກັບການຮັບຮອງແຜນພັດທະນາຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ 05 ປີ (2021-2025).

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 574/ນຍ, ລົງວັນທີ 28 ກັນຍາ 2021.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍລະບຽບການ ແລະ ກົນໄກການເຮັດວຽກ ຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021.
- ອີງຕາມ ໜັງສືສະເໜີ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1137/ອຄ, ລົງວັນທີ 26 ພະຈິກ 2021.
- ອີງຕາມ ການຊີ້ນຳ ຂອງ ທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 09 ທັນວາ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳ ຂອງ ທ່ານ ນາຍົກລັດຖະມົນຕີ ມາຍັງທ່ານ ດັ່ງນີ້: **"ເຫັນດີຮັບຮອງເອົາແຜນພັດທະນາຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ 05 ປີ (2021-2025) ຕາມການສະເໜີ. ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງຜັນຂະຫຍາຍແຜນພັດທະນາດັ່ງກ່າວ ໃຫ້ໄດ້ຮັບຜົນເປັນກ້າວໆ ແລະ ລາຍງານໃຫ້ລັດຖະບານ ຊາບ ເປັນແຕ່ລະໄລຍະ".**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ລັດຖະມົນຕີ,**

**ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ບ່ອນນຳສົ່ງ:

1. ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ ທ່ານລະ 01 ສະບັບ
2. ຫ້ອງວ່າການສູນກາງພັກ 01 ສະບັບ
3. ຫ້ອງວ່າການສຳນັກງານປະທານປະເທດ 01 ສະບັບ
4. ຄະນະເລຂາທິການສະພາແຫ່ງຊາດ 01 ສະບັບ
5. ຄະນະ ຫສນຍ ທ່ານລະ 01 ສະບັບ
6. ເກັບມ້ຽນ 01 ສະບັບ

ສຳນັກງານນາຍົກລັດຖະມົນຕີ

ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ຄຳເຈນ ວົງໂພສີ

# ສາລະບານ

ບົດສະເໜີ 1

II. ສະຫຼຸບການຈັດຕັ້ງປະຕິບັດວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໄລຍະແຕ່ປີ 2016-2020 2

1. ການຈັດຕັ້ງປະຕິບັດວຽກງານອຸດສາຫະກຳປຸງແຕ່ງ ປີ 2016-2020 2

1.1 ຈຳນວນໂຮງງານອຸດສາຫະກຳປຸງແຕ່ງ 3

1.2 ການຈ້າງງານ ໃນຫົວໜ່ວຍອຸດສາຫະກຳປຸງແຕ່ງ 4

1.3 ການລົງທຶນ ໃນອຸດສາຫະກຳປຸງແຕ່ງ 5

1.4 ການສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງ 6

1.5 ຜະລິດຕະພາບ 7

2. ການຈັດຕັ້ງປະຕິບັດວຽກງານຫັດຖະກຳ ປີ 2016-2020 7

2.1 ຈຳນວນໂຮງງານ ແລະ ໂຮງຊ່າງຫັດຖະກຳ 7

2.2 ການຈ້າງງານໃນຫົວໜ່ວຍຫັດຖະກຳ 8

2.3 ການສົ່ງອອກສິນຄ້າຫັດຖະກຳ 8

2.4 ການປົກປ້ອງຜະລິດຕະພັນຫັດຖະກຳ 9

3. ການຈັດຕັ້ງປະຕິບັດແຜນງານສົ່ງເສີມ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປີ 2016-2020 10

3.1 ວຽກງານເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ 10

3.2 ວຽກງານສ້າງສະພາບແວດລ້ອມທີ່ເອື້ອອຳນວຍແກ່ພາກທຸລະກິດ 12

3.3 ວຽກງານສ້າງຄວາມເຂັ້ມແຂງໃຫ້ແກ່ພາກທຸລະກິດເພື່ອຮອງຮັບການແຂ່ງຂັນທີ່ເພີ່ມຂຶ້ນ 13

3.4 ການຈັດຕັ້ງປະຕິບັດໂຄງການລະດັບຊາດ ເພື່ອສົ່ງເສີມການຜະລິດເປັນສິນຄ້າ ແລະ ຄ້ຳປະກັນສະບຽງອາຫານ: 14

3.5 ການສົ່ງເສີມ ແລະ ດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້: 15

3.6 ການສົ່ງເສີມຫັດຖະກຳ 16

3.7 ວຽກງານສົ່ງເສີມການຜະລິດທີ່ສະອາດ 18

3.8 ການເຄື່ອນໄຫວປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດໂຄວິດ-19 19

4. ການປະເມີນຈຸດດີ, ຈຸດອ່ອນ, ກາລະໂອກາດ ແລະ ຄວາມສ່ຽງ 19

4.1 ຈຸດດີ 19

4.2 ຈຸດອ່ອນ 20

4.3 ກາລະໂອກາດ 21

4. ຄວາມສ່ຽງ 21

4.5 ບົດຮຽນທີ່ຖອດຖອນໄດ້ 22

II. ແຜນພັດທະນາຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ 5 ປີ (2021-2025) 23

1. ວິໄສທັດຮອດປີ 2030 23

1.1 ເປົ້າໝາຍລວມ ຮອດປີ 2025 23

1.2 ທິດທາງລວມ 23

1.3 ຄາດໝາຍລວມ ແລະ ຕົວຊີ້ບອກ 23

2. ແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປີ 2021-2025 24

2.1 ແຜນງານທີ 1: ການສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ໃຫ້ເຕີບໂຕມີຄຸນນະພາບ ຕາມທິດສີມດຸນ, ສີຂຽວ ແລະ ຍືນຍົງ 24

2.2 ແຜນງານທີ 2: ການປັບປຸງໂຄງລ່າງພື້ນຖານ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ 32

2.3 ແຜນງານທີ 3: ການເຊື່ອມໂຍງ ກັບພາກພື້ນ ແລະ ສາກົນ 35

2.4 ແຜນງານທີ 4: ການສົ່ງເສີມ ແລະ ພັດທະນາຫັດຖະກຳ 38

2.5 ແຜນງານທີ 5: ການອະນຸລັກ, ການສະໜອງວນ ແລະ ປົກປັກຮັກສາຫັດຖະກຳລາວ 44

3. ສົ່ງເສີມການພັດທະນາຕາມເຂດແຄວ້ນ (ແຕ່ລະພາກ) 45

4. ການຟື້ນຟູຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 46

5. ສົ່ງເສີມບົດບາດຍິງ-ຊາຍ 48

III. ມາດຕະການຈັດຕັ້ງປະຕິບັດ, ກົນໄກປະສານງານ, ວິທີການຈັດຕັ້ງປະຕິບັດ ແລະ ການຕິດຕາມ, ປະເມີນຜົນ ແລະ ລາຍງານ 49

1. ມາດຕະການຈັດຕັ້ງປະຕິບັດ 49

2. ກົນໄກປະສານງານ 50

3. ວິທີການຈັດຕັ້ງປະຕິບັດ 50

4. ການຕິດຕາມ, ປະເມີນຜົນ ແລະ ລາຍງານ 53

IV. ງົບປະມານ ແລະ ແຫຼ່ງທຶນ 54

1. ງົບປະມານ 54

2. ແຫຼ່ງທຶນ 54

# ບົດສະເໜີ

ການຈັດຕັ້ງປະຕິບັດວຽກງານສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນໄລຍະຜ່ານມາ ແມ່ນໄດ້ອີງໃສ່ແນວທາງນະໂຍບາຍຂອງພັກ-ລັດຖະບານ, ບັນດາກົດໝາຍ ແລະ ແຜນພັດທະນາຕ່າງໆ ຂອງລັດຖະບານເປັນຕົ້ນ ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ກົດໝາຍວ່າດ້ວຍຫັດຖະກຳ, ກົດໝາຍວ່າດ້ວຍການຄຸ້ມຄອງທາດເຄມີ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນຍຸດທະສາດການພັດທະນາຂອງຂະແໜງການອຸດສາຫະກຳ ແລະ ການຄ້າ. ລັດຖະບານເວົ້າລວມ, ຂະແໜງອຸດສາຫະກຳ ແລະ ການຄ້າ ເວົ້າສະເພາະ ໄດ້ຕັ້ງພັນຂະຫຍາຍອອກມາເປັນນິຕິກຳລຸ່ມກົດໝາຍ ເປັນຕົ້ນ ດຳລັດ, ຂໍ້ຕົກລົງ, ບົດແນະນຳ ແລະ ແຈ້ງການຕ່າງໆ ເພື່ອເປັນບ່ອນອີງໃນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໂດຍສະເພາະ ແມ່ນສົ່ງເສີມການສ້າງໂຄງລ່າງພື້ນຖານໃຫ້ແກ່ການລົງທຶນດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ, ສົ່ງເສີມການເອື້ອອຳນວຍຄວາມສະດວກ, ການສ້າງຄວາມສາມາດແຂ່ງຂັນ ແລະ ຄຸ້ມຄອງດ້ານມາດຕະຖານເຕັກນິກ, ສຸຂານາໄມ ແລະ ຄວາມປອດໄພໂຮງງານ, ດ້ານມາດຕະຖານຜະລິດຕະພັນອຸດສາຫະກຳ, ດ້ານສິ່ງແວດລ້ອມ ແລະ ເຄມີອຸດສາຫະກຳ.

ໃນຊຸມປີຜ່ານມາ, ລັດຖະບານ ໄດ້ພະຍາຍາມ ແລະ ເອົາໃຈໃສ່ໃນການສົ່ງເສີມໃຫ້ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ. ແຕ່ເບິ່ງຕົວຈິງແລ້ວ ການພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຍັງຂາດຄວາມຫຼາກຫຼາຍທາງດ້ານຜະລິດຕະພັນ, ການລົງທຶນສ່ວນໃຫຍ່ຍັງສຸມໃສ່ດ້ານຊັບພະຍາກອນແຮ່ທາດ ແລະ ປ່າໄມ້, ອາໃສຄ່າແຮງງານຖືກ ແລະ ເອື່ອຍອີງໃສ່ແກ່ການນຳເຂົ້າອຸປະກອນ, ຊິ້ນສ່ວນ, ທຶນ ແລະ ເຕັກໂນໂລຊີ ຈາກຕ່າງປະເທດ. ນອກນັ້ນ, ອຸດສາຫະກຳສະໜັບສະໜູນ ຍັງບໍ່ທັນເຂັ້ມແຂງ, ການຜະລິດຫັດຖະກຳສ່ວນໃຫຍ່ຍັງເປັນລັກສະນະຄອບຄົວ, ຂາດການເຊື່ອມໂຍງກັບເຄືອຂ່າຍການຜະລິດພາກພື້ນ ແລະ ສາກົນ, ການກຳນົດນະໂຍບາຍຂອງລັດ ແລະ ການຈັດຕັ້ງປະຕິບັດ ບາງດ້ານຍັງບໍ່ທັນໄດ້ສຸມໃສ່ຢ່າງເອົາຈິງເອົາຈັງ ແລະ ໃຫ້ມີຄວາມຕໍ່ເນື່ອງ ຕະຫຼອດເຖິງ ດ້ານການຈັດຕັ້ງ, ບຸກຄະລາກອນ ແລະ ງົບປະມານ ກໍມີຈຳກັດ. ຖ້າຫາກມີການປັບປຸງແກ້ໄຂບັນຫາເຫຼົ່ານີ້ ຈະເຮັດໃຫ້ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳໄດ້ຮັບການພັດທະນາ, ຂະຫຍາຍຕົວ ແລະ ປະກອບສ່ວນຕໍ່ການພັດທະນາເສດຖະກິດ ແລະ ສັງຄົມຫຼາຍກວ່ານີ້ຕື່ມໃນຕໍ່ໜ້າ.

# I. ສະຫຼຸບການຈັດຕັ້ງປະຕິບັດວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໄລຍະແຕ່ປີ 2016-2020

## 1. ການຈັດຕັ້ງປະຕິບັດວຽກງານອຸດສາຫະກຳປຸງແຕ່ງ ປີ 2016-2020

ການຈັດຕັ້ງປະຕິບັດວຽກງານອຸດສາຫະກຳປຸງແຕ່ງ ໄລຍະ 5 ປີຜ່ານມາ ໄດ້ດຳເນີນໄປທ່າມກາງສະພາບແວດລ້ອມສາກົນ, ພາກພື້ນ ແລະ ພາຍໃນ ມີສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກ ຫຼາຍປະການ ເຊັ່ນ: ສົງຄາມການຄ້າອາເມລິກາ ແລະ ຈີນ, ໄພທຳມະຊາດ ແລະ ການລະບາດຂອງພະຍາດໂຄວິດ-19. ເຖິງແນວໃດກໍຕາມ ອຸດສາຫະກຳປຸງແຕ່ງ ສືບຕໍ່ຂະຫຍາຍໂຕຢ່າງຕໍ່ເນື່ອງ ແລະ ປະກອບສ່ວນສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສະແດງອອກຄື: ໃນໄລຍະປີ 2016-2020 ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ [1] ຂະຫຍາຍໂຕສະເລ່ຍຕໍ່ປີ 9,22% (ແຜນການ 12%), ຂະແໜງອຸດສາຫະກຳປຸງແຕ່ງ ແລະ ການຄ້າ ສາມາດສູ້ຊົນທີ່ປະກອບສ່ວນສ້າງລວມຍອດຜະລິດຕະພັນພາຍໃນ (GDP) ປະມານ 20%. ໃນນີ້ ອຸດສາຫະກຳປຸງແຕ່ງທີ່ຂະຫຍາຍໂຕສູງ ລວມມີ: ໝວດການຜະລິດເຈ້ຍ ແລະ ຜະລິດຕະພັນເຈ້ຍ ສະເລ່ຍຕໍ່ປີ 42,38%; ໝວດການຜະລິດເຄື່ອງຄອມພິວເຕີ, ເຄື່ອງເອເລັກໂຕຣນິກ ແລະ ຜະລິດຕະພັນດ້ານສາຍຕາ ສະເລ່ຍຕໍ່ປີ 26,04%; ໝວດການຜະລິດເຄື່ອງນຸ່ງຫົ່ມ ສະເລ່ຍຕໍ່ປີ 25,31%; ໝວດການຜະລິດຢາງພາລາ ແລະ ຜະລິດຕະພັນປລາສະຕິກ ສະເລ່ຍຕໍ່ປີ 10,47%; ໝວດການຜະລິດເຄື່ອງດື່ມ ສະເລ່ຍຕໍ່ປີ 8,43%; ແລະ ໝວດການຜະລິດສະບຽງອາຫານ ສະເລ່ຍຕໍ່ປີ 6,43% ເປັນຕົ້ນ.

ໃນປີ 2016 ອຸດສາຫະກຳປຸງແຕ່ງສຳຄັນ ທີ່ກວມອັດຕາສ່ວນສູງຂອງລວມຍອດມູນຄ່າການຜະລິດ ລວມມີ: ໝວດການຜະລິດສະບຽງອາຫານ ກວມ 29,12%; ໝວດການຜະລິດເຄື່ອງດື່ມ ກວມ 16,39%, ໝວດການຜະລິດເຄື່ອງນຸ່ງຫົ່ມ ກວມ 11,61%; ໝວດການຜະລິດແຮ່ທາດອື່ນໆ ທີ່ບໍ່ແມ່ນໂລຫະ (ແກ້ວ, ຊີມັງ, ຫີນຂັດ, ເສົາໄຟຟ້າ, ດິນຈີ່ດິນບລັອກ, ກະເບື້ອງ...) ກວມ 6,03%; ໝວດການຜະລິດເຄື່ອງເຟີນີເຈີ (ຈາກໄມ້, ຫວາຍ, ປລາສະຕິກ, ໂລຫະ ແລະ ອື່ນໆ) ກວມ 5,75%; ໝວດການຜະລິດຢາງພາລາ ແລະ ຜະລິດຕະພັນປລາສະຕິກ 5,29% ແລະ ໝວດການຜະລິດເຄື່ອງໜັງ (ກະເປົາເດີນທາງ, ເກີບ ແລະ ອື່ນໆ) ກວມ 4,21% ເປັນຕົ້ນ.

ໃນປີ 2020 ຂະແໜງອຸດສາຫະກຳປຸງແຕ່ງ ກວມ 7,45% ຂອງລວມຍອດຜະລິດຕະພັນພາຍໃນ (ສົມທຽບ 7,77% ໃນປີ 2016). ອຸດສາຫະກຳປຸງແຕ່ງສຳຄັນ ທີ່ກວມອັດຕາສ່ວນສູງຂອງລວມຍອດມູນຄ່າການຜະລິດ ປະກອບມີໝວດການຜະລິດສະບຽງອາຫານ ກວມ 23,58%; ໝວດການຜະລິດເຄື່ອງດື່ມ ກວມ 16,50%; ໝວດການຜະລິດເຄື່ອງນຸ່ງຫົ່ມ ກວມ 12,27%; ໝວດການຜະລິດເຈ້ຍ ແລະ ຜະລິດຕະພັນເຈ້ຍ ກວມ 10,48%; ໝວດການຜະລິດເຄື່ອງຄອມພິວເຕີ, ເຄື່ອງເອເລັກໂຕຣນິກ ແລະ ຜະລິດຕະພັນດ້ານສາຍຕາ ກວມ 6,30%; ໝວດການຜະລິດແຮ່ທາດອື່ນໆ ທີ່ບໍ່ແມ່ນໂລຫະ (ແກ້ວ, ຊີມັງ, ຫີນຂັດ, ເສົາໄຟຟ້າ, ດິນຈີ່ດິນບລັອກ, ກະເບື້ອງ...) ກວມ 5,97% ແລະ ໝວດການຜະລິດຢາງພາລາ ແລະ ຜະລິດຕະພັນປລາສຕິກ ກວມ 4,24% ເປັນຕົ້ນ. ໂດຍລວມເຫັນວ່າມີການປ່ຽນແປງດ້ານໂຄງສ້າງອັດຕາສ່ວນຂອງລວມຍອດມູນຄ່າການຜະລິດ, ໃນນີ້ໄດ້ມີອຸດສາຫະກຳປຸງແຕ່ງທີ່ມີການ ຜະລິດທີ່ພົ້ນເດັ່ນເກີດຂຶ້ນໃໝ່ ຄື: ໝວດການຜະລິດເຈ້ຍ ແລະ ຜະລິດຕະພັນເຈ້ຍ; ໝວດການຜະລິດເຄື່ອງຄອມພິວເຕີ, ເຄື່ອງເອເລັກໂຕຣນິກ ແລະ ຜະລິດຕະພັນດ້ານສາຍຕາ.

---

[1] ມູນຄ່າການຜະລິດ ແມ່ນມູນຄ່າເພີ່ມຂອງຜະລິດຕະພັນອຸດສາຫະກຳ, ບໍ່ແມ່ນມູນຄ່າການຈຳໜ່າຍສິນຄ້າ (ລາຄາ) ຈາກການຂາຍຍົກ ແລະ ຂາຍຍ່ອຍ. ມູນຄ່າການຜະລິດທີ່ເພີ່ມສູງຂຶ້ນ ອາດໝາຍເຖິງ ຫຼື ບໍ່ໝາຍເຖິງການເພີ່ມຂຶ້ນຂອງປະລິມານການຜະລິດຂອງອຸດສາຫະກຳປຸງແຕ່ງ, ແຕ່ໝາຍເຖິງການຍົກລະດັບຜະລິດຕະພາບ ຫຼື ການຍົກລະດັບເຕັກໂນໂລຊີ ເຂົ້າໃນຂະບວນການຜະລິດ.

ແຜນວາດ 1 ອັດຕາສ່ວນມູນຄ່າການຜະລິດ ຂອງອຸດສາຫະກຳປຸງແຕ່ງສຳຄັນ ປີ 2016 ແລະ ປີ 2020




ແຫຼ່ງຂໍ້ມູນ: ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ.

## 1.1 ຈຳນວນໂຮງງານອຸດສາຫະກຳປຸງແຕ່ງ

ຜ່ານການຈັດຕັ້ງປະຕິບັດໃນໄລຍະ 5 ປີ ຜ່ານມາ, ອັດຕາການຂະຫຍາຍຕົວຂອງໂຮງງານອຸດສາຫະກຳປຸງແຕ່ງ (ໂຮງງານຂະໜາດນ້ອຍ, ກາງ ແລະ ໃຫຍ່) ສະເລ່ຍແມ່ນຫຼຸດລົງ -0,19% ຕໍ່ປີ ປະກອບມີ: ໂຮງງານຂະໜາດໃຫຍ່ ຫຼຸດລົງສະເລ່ຍ -0,15% ຕໍ່ປີ, ຂະໜາດກາງ ເພີ່ມຂຶ້ນສະເລ່ຍ 0,95% ຕໍ່ປີ ແລະ ຂະໜາດນ້ອຍ ເພີ່ມຂຶ້ນສະເລ່ຍ 0,95% ຕໍ່ປີ. ຫົວໜ່ວຍອຸດສາຫະກຳປຸງແຕ່ງຂະໜາດນ້ອຍແບບຄອບຄົວ ຫຼຸດລົງສະເລ່ຍ -0,63% ຕໍ່ປີ. ເຖິງແນວໃດກໍຕາມ, ມີປະເພດໂຮງງານອຸດສາຫະກຳປຸງແຕ່ງທີ່ເກີດຂຶ້ນມາໃໝ່ທົດແທນ ອັນເປັນພື້ນຖານໃຫ້ການຜະລິດໄດ້ສືບຕໍ່ມີທ່າກ້າວຂະຫຍາຍໂຕ, ສ້າງມູນຄ່າເພີ່ມ ແລະ ສ້າງວຽກເຮັດງານທຳ ເຊັ່ນ:

- ປະເພດໂຮງງານອຸດສາຫະກຳປຸງແຕ່ງທີ່ເກີດຂຶ້ນໃໝ່ ລວມມີ: ການຜະລິດດິນຈີ່, ດິນບລັອກ, ສັງກະສີອາລູຊິງ, ເຍື່ອເຈ້ຍ, ທໍ່ຢາງ, ກະຕຼກຢາງ, ເມັດຢາງ, ຖົງຢາງປລາສະຕິກ, ອັດຮ່າຍແກັສ, ນ້ຳດື່ມ, ນ້ຳກ້ອນ, ສາລີອົບ, ເສັ້ນເຂົ້າປຸ້ນ, ຝຸ່ນເຄືອແຫມ, ໝາກເດືອຍ, ເກີບ, ຝຸ່ນຊີວະພາບ, ຖ່ານດຳ, ຖ່ານຂາວ, ເຫຼັກເສັ້ນ, ຊີມັງ, ແກ່ນຕົ້ນຈັນໃດ, ແປ້ງມັນຕົ້ນ, ນ້ຳນົມ, ນ້ຳຕານ ແລະ ອື່ນໆ.
- ສຳລັບປະເພດໂຮງງານອຸດສາຫະກຳປຸງແຕ່ງທີ່ຢຸດເຊົາກິດຈະການ ລວມມີ: ເຄື່ອງນຸ່ງຫົ່ມ, ນ້ຳກ້ອນ, ເຂົ້າ, ເຂົ້າປຸ້ນ, ດິນຈີ່, ເລື່ອຍໄມ້, ປຸງແຕ່ງໄມ້ເຄິ່ງສຳເລັດຮູບ ແລະ ເຟີນີເຈີໄມ້, ເຫຼົ້າ, ວາຍ, ຊາ, ແປ້ງນົວ, ເກືອ, ເຄື່ອງຈັກກະສິກຳ, ຕົ້ມກັ່ນຫົວສີໄຄ, ນ້ຳຊ້ອດ, ເສົາຊີມັງ ແລະ ອື່ນໆ.

ສາເຫດທີ່ພາໃຫ້ໂຮງງານອຸດສາຫະກຳປຸງແຕ່ງຢຸດເຊົາ ແມ່ນມາຈາກການຖືກດັດສົມໂຮງງານ, ບໍ່ສາມາດແຂ່ງຂັນໃນຕະຫຼາດພາຍໃນ ແລະ ພາກພື້ນໄດ້, ຂາດທຶນ ແລະ ສິນຄ້າບໍ່ໄດ້ຄຸນນະພາບພໍທີ່ຈະແຂ່ງຂັນເປັນຕົ້ນ.

ໃນປີ 2020 ຫົວໜ່ວຍອຸດສາຫະກຳປຸງແຕ່ງ ໃນຂອບເຂດທົ່ວປະເທດ ມີທັງໝົດ 27.997 ແຫ່ງ; ໃນນີ້ຈັດເປັນໂຮງງານອຸດສາຫະກຳປຸງແຕ່ງ 8.475 ແຫ່ງ ເທົ່າກັບ 30,81% ປະກອບດ້ວຍ ໂຮງງານອຸດສາຫະກຳປຸງແຕ່ງຂະໜາດໃຫຍ່ 684 ແຫ່ງ ກວມ 2,42%, ຂະໜາດກາງ 1.025 ແຫ່ງ ກວມ 3,63% ແລະ ຂະໜາດນ້ອຍ 6.766 ແຫ່ງ ກວມ 23,98% ແລະ ມີຫົວໜ່ວຍອຸດສາຫະກຳປຸງແຕ່ງ ຂະໜາດນ້ອຍແບບຄອບຄົວ 19.522

ແຫ່ງ ກວມ 69,19%[2].

ສົມທຽບໃສ່ປີ 2016 ທີ່ມີຫົວໜ່ວຍອຸດສາຫະກຳປຸງແຕ່ງໃນຂອບເຂດທົ່ວປະເທດ ທັງໝົດ 28.214 ແຫ່ງ; ແບ່ງເປັນໂຮງງານອຸດສາຫະກຳປຸງແຕ່ງ 8.189 ແຫ່ງ ກວມ 29,02% ແລະ ຫົວໜ່ວຍອຸດສາຫະກຳປຸງແຕ່ງຂະໜາດນ້ອຍແບບຄອບຄົວ 20.025 ແຫ່ງ ກວມ 70,98%. ໂຮງງານອຸດສາຫະກຳປຸງແຕ່ງ ຈັດເປັນໂຮງງານຂະໜາດໃຫຍ່ 688 ແຫ່ງ ກວມ 2,44%, ຂະໜາດກາງ 987 ແຫ່ງ ກວມ 3,50% ແລະ ຂະໜາດນ້ອຍ 6.514 ແຫ່ງ ກວມ 23,09%.

ແຜນວາດ 2 ອັດຕາສ່ວນໂຮງງານອຸດສາຫະກຳປຸງແຕ່ງ ປີ 2016 ແລະ ປີ 2020



ອັດຕາສ່ວນໂຮງງານອຸດສາຫະກຳປຸງແຕ່ງ ປີ 2016



ອັດຕາສ່ວນໂຮງງານອຸດສາຫະກຳປຸງແຕ່ງ ປີ 2020

## 1.2 ການຈ້າງງານ ໃນຫົວໜ່ວຍອຸດສາຫະກຳປຸງແຕ່ງ

ອຸດສາຫະກຳປຸງແຕ່ງ ແມ່ນໜຶ່ງໃນຂະແໜງທີ່ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນລາວໃຫ້ມີລາຍຮັບພາໃຫ້ເສດຖະກິດລາວມີການເຕີບໂຕຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ ສະແດງອອກຄື ການຈ້າງງານທີ່ປະກອບເຂົ້າໃນຂະແໜງອຸດສາຫະກຳປຸງແຕ່ງ ໂດຍລວມແມ່ນມີອັດຕາການຂະຫຍາຍໂຕເພີ່ມຂຶ້ນສະເລ່ຍຕໍ່ປີ 2,13%, ປະກອບດ້ວຍ: ໃນໂຮງງານຂະໜາດໃຫຍ່ ເພີ່ມຂຶ້ນສະເລ່ຍ 2,75%, ໃນໂຮງງານຂະໜາດກາງ ເພີ່ມຂຶ້ນສະເລ່ຍ 4,30% ແລະ ໃນໂຮງງານຂະໜາດນ້ອຍ ເພີ່ມຂຶ້ນສະເລ່ຍ 2,70%, ສ່ວນໃນຫົວໜ່ວຍອຸດສາຫະກຳປຸງແຕ່ງຂະໜາດນ້ອຍແບບຄອບຄົວ ຫຼຸດລົງສະເລ່ຍ -0,61%. ສາເຫດທີ່ພາໃຫ້ການຈ້າງງານໃນຫົວໜ່ວຍອຸດສາຫະກຳປຸງແຕ່ງຂະໜາດນ້ອຍແບບຄອບຄົວ ມີອັດຕາການຂະຫຍາຍໂຕສະເລ່ຍຕໍ່ປີຫຼຸດລົງ ຍ້ອນເປັນແຮງງານທີ່ບໍ່ໄດ້ຮັບຄ່າຈ້າງ ກວມອັດຕາສ່ວນທີ່ສູງ[2]. ອັດຕາການຂະຫຍາຍໂຕສະເລ່ຍຕໍ່ປີ ຂອງຈຳນວນແຮງງານຊາຍ ເພີ່ມຂຶ້ນສະເລ່ຍ 1,14% ແລະ ຈຳນວນແຮງງານຍິງ ເພີ່ມຂຶ້ນສະເລ່ຍ 1,89%.

ດ້ານອັດຕາສ່ວນການຈ້າງງານ ໃນຫົວໜ່ວຍອຸດສາຫະກຳປຸງແຕ່ງ ປີ 2020 ປະກອບມີ: ໃນໂຮງງານຂະໜາດໃຫຍ່ ມີ 65.041 ຄົນ ເທົ່າກັບ 40.25%, ໃນໂຮງງານຂະໜາດກາງ ມີ 25.930 ຄົນ ເທົ່າກັບ 16,05%, ໃນໂຮງງານຂະໜາດນ້ອຍ ມີ 33.358 ຄົນ ເທົ່າກັບ 20,64% ແລະ ໃນຫົວໜ່ວຍອຸດສາຫະກຳປຸງແຕ່ງຂະໜາດນ້ອຍແບບຄອບຄົວ ມີ 37.255 ຄົນ ເທົ່າກັບ 23,06%; ທຽບໃສ່ ປີ 2016 ທີ່ມີອັດຕາສ່ວນຂອງການຈ້າງງານໃນ

[2] ອີງຕາມຜົນການສຳຫຼວດໂຮງງານອຸດສາຫະກຳປຸງແຕ່ງ ປີ 2016 ໃນທົ່ວປະເທດ ແຮງງານທີ່ບໍ່ໄດ້ຄ່າຈ້າງກວມ 18,44% ຂອງແຮງງານທັງໝົດ, ອຸດສາຫະກຳຂະໜາດຄອບຄົວ ມີອັດຕາສ່ວນແຮງງານທີ່ບໍ່ໄດ້ຮັບຄ່າຈ້າງ ກວມອັດຕາສ່ວນສູງເຖິງ 41,24%, ຮອງລົງມາແມ່ນຂະໜາດນ້ອຍ 35,92% ແລະ ຂະໜາດກາງ 5,17%. ສຳລັບຂະໜາດໃຫຍ່ ແມ່ນມີພຽງ 2%.

ຫົວໜ່ວຍອຸດສາຫະກຳປຸງແຕ່ງ ຄື: ໃນໂຮງງານຂະໜາດໃຫຍ່ ມີ 56.181 ຄົນ ເທົ່າກັບ 36,71%, ໃນໂຮງງານຂະໜາດກາງ ມີ 25.807 ຄົນ ເທົ່າກັບ 16,86%, ໃນໂຮງງານຂະໜາດນ້ອຍ ມີ 33.267 ຄົນ ເທົ່າກັບ 21,74% ແລະ ໃນຫົວໜ່ວຍອຸດສາຫະກຳປຸງແຕ່ງຂະໜາດນ້ອຍແບບຄອບຄົວ ມີ 37.799 ຄົນ ຫຼື 24,70%.

ແຜນວາດ 3 ການຈ້າງງານໃນອຸດສາຫະກຳປຸງແຕ່ງແບ່ງຕາມຂະໜາດ ປີ 2016 ແລະ ປີ 2020




ແຫຼ່ງຂໍ້ມູນ: ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ.

ດັ່ງນັ້ນ, ຈຶ່ງສັງລວມໄດ້ວ່າໃນໄລຍະ 5 ປີ ຜ່ານມາ, ຂະແໜງອຸດສາຫະກຳປຸງແຕ່ງ ໄດ້ມີຜົນສຳເລັດຫຼາຍໃນດ້ານການສ້າງອາຊີບໃຫ້ປະຊາຊົນ ສະແດງອອກຄື ໃນປີ 2020 ສາມາດສ້າງວຽກເຮັດງານທຳໄດ້ 161.584 ຄົນ, ໃນນັ້ນ ອັດຕາສ່ວນການຈ້າງງານທີ່ປະກອບເຂົ້າໃນຫົວໜ່ວຍອຸດສາຫະກຳປຸງແຕ່ງ ທີ່ກວມຫຼາຍກວ່າໝູ່ ຄື: ການຜະລິດເຄື່ອງນຸ່ງຫົ່ມ ກວມ 23,46%, ການຜະລິດສະບຽງອາຫານ ກວມ 13,56%, ການຜະລິດແຮ່ທາດອື່ນໆທີ່ບໍ່ແມ່ນໂລຫະ (ຊີມັງ, ດິນຈີ່, ດິນບ໋ອກ, ກະເບື້ອງ...) ກວມ 9,01%, ການຜະລິດໄມ້ແປຮູບ ແລະ ຜະລິດຕະພັນຈາກໄມ້ ແລະ ຫວາຍ (ຍົກເວັ້ນເຄື່ອງເຟີນີເຈີ, ຜະລິດຕະພັນຈາກເຟືອງ ແລະ ວັດຖຸຈັກສານ) ກວມ 7,91%, ການຜະລິດຢາງພາລາ ແລະ ຜະລິດຕະພັນປລາສະຕິກ ກວມ 7,48%, ການຜະລິດເຄື່ອງເຟີນີເຈີ ກວມ 6,53% ແລະ ການຜະລິດເຄື່ອງດື່ມ ກວມ 5,82%.

## 1.3 ການລົງທຶນ ໃນອຸດສາຫະກຳປຸງແຕ່ງ

ໃນໄລຍະຜ່ານມາ, ຍ້ອນມີຄວາມສະຖຽນລະພາບທາງດ້ານເມືອງ, ທ່າແຮງບົ່ມຊ້ອນໃນຫຼາຍດ້ານ ແລະ ນະໂຍບາຍຄຸ້ມຄອງ-ສົ່ງເສີມຈາກພັກ ແລະ ລັດຖະບານ ຈຶ່ງພາໃຫ້ການລົງທຶນເຂົ້າມາສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງ ໃນ ສປປ ລາວ ຍັງສືບຕໍ່ຂະຫຍາຍໂຕຢ່າງຕໍ່ເນື່ອງ ຈາກທັງພາຍໃນ ແລະ ຕ່າງປະເທດ. ໃນປີ 2018 ມີໂຄງການລົງທຶນສູງ[3] ເຊັ່ນ: ການຜະລິດພະລັງງານໄຟຟ້າຢູ່ເມືອງຫົງສາ, ການຜະລິດເຍື່ອເຈ້ຍຢູ່ແຂວງສະຫວັນນະເຂດ, ການຜະລິດເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ, ການຜະລິດຊີມັງ ແລະ ການຜະລິດຢາປົວພະຍາດ ເປັນຕົ້ນໃນທ້າຍປີ 2020 ໂຮງກັ່ນນ້ຳມັນແຫ່ງທຳອິດຂອງ ສປປ ລາວ ໄດ້ເປີດຢູ່ນະຄອນຫຼວງວຽງຈັນ. ໃນນັ້ນ, ອຸດສາຫະກຳປຸງແຕ່ງທີ່ມີອັດຕາສ່ວນການລົງທຶນກວມຫຼາຍກວ່າໝູ່ [4] ແມ່ນ: ໝວດການຜະລິດຜະລິດຕະພັນແຮ່ທາດ (ຊີມັງ, ດິນຈີ່ ດິນບລັອກ, ຫີນຂັບ...) ກວມ 25,21%; ໝວດການຜະລິດສະບຽງອາຫານ ກວມ 15,61%; ໝວດການຜະລິດ

[3] ສະຖິຕິປະຈຳປີ 2018, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

[4] ບົດລາຍງານ ການພັດທະນາອຸດສາຫະກຳປຸງແຕ່ງຂອງ ສປປ ລາວ ປີ 2017, ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ.

ເຄື່ອງດື່ມ ກວມ 10,61%; ໝວດການຜະລິດຢາງພາລາ ແລະ ຜະລິດຕະພັນປລາສະຕິກ ກວມ 5,96%, ໝວດການຜະລິດເຄື່ອງນຸ່ງຫົ່ມ ກວມ 6,57% ແລະ ໝວດການຜະລິດເຄື່ອງເຟີນີເຈີ ກວມ 5,03%.

## 1.4 ການສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງ

ການສົ່ງອອກຂອງສິນຄ້າອຸດສາຫະກຳປຸງແຕ່ງ ໃນປີ 2020 ມີມູນຄ່າທັງໝົດປະມານ 2.108 ລ້ານໂດລາສະຫະລັດ ສົມທຽບໃສ່ປີ 2016, ເຫັນວ່າຂະຫຍາຍໂຕ ເພີ່ມຂຶ້ນສະເລ່ຍ 15,17% ຕໍ່ປີ (ແຜນການ 12%), ຊຶ່ງສິນຄ້າອຸດສາຫະກຳປຸງແຕ່ງ ທີ່ມີອັດຕາການຂະຫຍາຍໂຕສູງ ລວມມີ: ເຍື່ອເຈ້ຍ ແລະ ຜະລິດຕະພັນເຈ້ຍ, ຜະລິດຕະພັນການຢາ, ຊີມັງ, ປລາສຕິກ ແລະ ເຄື່ອງໃຊ້ທີ່ເຮັດດ້ວຍປລາສຕິກ ແລະ ເຟີນີເຈີ. ສິນຄ້າອຸດສາຫະກຳປຸງແຕ່ງສົ່ງອອກໃນປີ 2020 ປະກອບດ້ວຍ: ເຍື່ອເຈ້ຍ ແລະ ຜະລິດຕະພັນເຈ້ຍ ກວມ 13,96%; ເຄື່ອງດື່ມ (ນໍ້າ, ເຄື່ອງດື່ມຊູກຳລັງ, ນໍ້າຫວານອັດລົມ) ກວມ 11,17%; ຊິ້ນສ່ວນກ້ອງບັນທຶກພາບ ກວມ 11,09%; ຢາງພາລາ ກວມ 10,60%; ເຄື່ອງນຸ່ງຫົ່ມ ກວມ 10,36%; ເຄື່ອງໃຊ້ໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າ ກວມ 8,57%; ນໍ້າຕານ ກວມ 6,01%; ຢາສູບ ແລະ ຜະລິດຕະພັນຢາສູບ ກວມ 4,13%. ສົມທຽບໃສ່ປີ 2016 ສ່ວນແບ່ງປະກອບດ້ວຍ: ຊິ້ນສ່ວນກ້ອງບັນທຶກພາບ ກວມ 19,11%; ເຄື່ອງນຸ່ງຫົ່ມ ກວມ 13,04%; ເຄື່ອງດື່ມ (ນໍ້າ, ເຄື່ອງດື່ມຊູກຳລັງ, ນໍ້າຫວານອັດລົມ) ກວມ 13,03%; ເຄື່ອງໃຊ້ໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າ ກວມ 9,62%; ຢາສູບ ແລະ ຜະລິດຕະພັນຢາສູບ ກວມ 7,39%; ຢາງພາລາ ກວມ 6,26%; ພາຫະນະທາງບົກ ແລະ ຊິ້ນສ່ວນພາຫະນະທາງບົກ ກວມ 4,84%; ນໍ້າຕານ ກວມ 4,46% ຕາມລຳດັບ. ຕະຫຼາດສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງ ກວມຫຼາຍກວ່າ 70% ປະກອບມີ: ຫວຽດນາມ, ໄທ, ຈີນ, ຍີ່ປຸ່ນ ແລະ ສ. ເກົາຫຼີ ເປັນຕົ້ນ.

ແຜນວາດ 4 ການສົ່ງອອກສິນຄ້າອຸດສາຫະກຳ ແບ່ງຕາມໝວດສິນຄ້າ ປີ 2016 ແລະ 2020




ແຫຼ່ງຂໍ້ມູນ: ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.

## 1.5 ຜະລິດຕະພາບ

ໃນປີ 2015, ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ມີຜະລິດຕະພາບ[5] ເທົ່າກັບ 1,36 (136 ສ່ວນຮ້ອຍ) ໃນນີ້, ອຸດສາຫະກຳເຄື່ອງດື່ມ ມີຜະລິດຕະພາບສູງສຸດ 6,30; ຮອງລົງມາແມ່ນອຸດສາຫະກຳເຈ້ຍ ແລະ ຜະລິດຕະພັນເຈ້ຍ ແລະ ອຸດສາຫະກຳຜະລິດເຄື່ອງໜັງ 4,66 ແລະ 4,21 ຕາມລຳດັບ.

# 2. ການຈັດຕັ້ງປະຕິບັດວຽກງານຫັດຖະກຳ ປີ 2016-2020

## 2.1 ຈຳນວນໂຮງງານ ແລະ ໂຮງຊ່າງຫັດຖະກຳ

ປີ 2020 ມີໂຮງງານ ແລະ ໂຮງຊ່າງຫັດຖະກຳທົ່ວປະເທດທັງໝົດ 11.728 ແຫ່ງ, ໃນນີ້ແບ່ງເປັນໂຮງງານຫັດຖະກຳ 189 ແຫ່ງ ກວມ 1,61% ແລະ ໂຮງຊ່າງຫັດຖະກຳຄອບຄົວ 11.539 ແຫ່ງກວມ 98,39%. ໃນຈຳນວນໂຮງງານຫັດຖະກຳ 189 ແຫ່ງ ປະກອບມີ: ໂຮງງານຫັດຖະກຳຂະໜາດໃຫຍ່ 6 ແຫ່ງ ກວມ 0,05%, ຂະໜາດກາງ 21 ແຫ່ງ ກວມ 0,18% ແລະ ຂະໜາດນ້ອຍ 162 ແຫ່ງ ກວມ 1,38%. ສຳລັບໂຮງຊ່າງຫັດຖະກຳຄອບຄົວປະເພດ 1 (ຜະລິດເປັນອາຊີບຕົ້ນຕໍ) 1.520 ແຫ່ງ ກວມ 12,96% ແລະ ປະເພດ 2 (ຜະລິດເປັນອາຊີບສຳຮອງ) 10.019 ແຫ່ງ ກວມ 85,43%.

ສົມທຽບໃສ່ປີ 2016 ມີໂຮງງານ ແລະ ໂຮງຊ່າງຫັດຖະກຳທົ່ວປະເທດທັງໝົດ 16.204 ແຫ່ງ; ໃນນີ້ແບ່ງເປັນໂຮງງານຫັດຖະກຳ 223 ແຫ່ງ ກວມ 1,38% ແລະ ໂຮງຊ່າງຫັດຖະກຳຄອບຄົວ 15.981 ແຫ່ງ ກວມ 98,62%; ໂຮງງານຫັດຖະກຳຂະໜາດໃຫຍ່ 2 ແຫ່ງ ເທົ່າກັບ 0,01%, ຂະໜາດກາງ 32 ແຫ່ງ ເທົ່າກັບ 0,20% ແລະ ຂະໜາດນ້ອຍ 189 ແຫ່ງ ເທົ່າກັບ 1,17%. ໂຮງຊ່າງຫັດຖະກຳຄອບຄົວປະເພດ 1 (ຜະລິດເປັນອາຊີບຕົ້ນຕໍ) 3.259 ແຫ່ງ ກວມ 20,11% ແລະ ໂຮງຊ່າງຫັດຖະກຳຄອບຄົວປະເພດ 2 (ຜະລິດເປັນອາຊີບສຳຮອງ) 12.722 ແຫ່ງ ກວມ 78,51%. ສະນັ້ນເຫັນວ່າອັດຕາການຂະຫຍາຍຕົວສະເລ່ຍຕໍ່ປີ ຂອງໂຮງງານ ແລະ ໂຮງຊ່າງຫັດຖະກຳຄອບຄົວ ຫຼຸດລົງສະເລ່ຍ -6,26% ຕໍ່ປີ (ທຽບໃສ່ປີ 2016) ເນື່ອງຈາກການຫັນປ່ຽນໄປເຮັດອາຊີບອື່ນທີ່ມີຊ່ອງທາງຫາລາຍໄດ້ທີ່ດີກວ່າ, ຄຸນນະພາບຂອງສິນຄ້າ ແລະ ຕະຫຼາດຈຳໜ່າຍສິນຄ້າທີ່ຈຳກັດພາຍໃນປະເທດ.

ແຜນວາດ 5 ຈຳນວນໂຮງງານ ແລະ ໂຮງຊ່າງຫັດຖະກຳ ໃນປີ 2016 ແລະ ປີ 2020




ແຫຼ່ງຂໍ້ມູນ: ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ.

[5] ຜະລິດຕະພາບວັດແທກຈາກມູນຄ່າເພີ່ມການຜະລິດ (Manufacturing Value Added) ຫານໃຫ້ປັດໄຈການຜະລິດ (Input).

## 2.2 ການຈ້າງງານໃນຫົວໜ່ວຍຫັດຖະກຳ

ວຽກງານຫັດຖະກຳ ກໍ່ແມ່ນວຽກງານໜຶ່ງທີ່ສ້າງວຽກເຮັດງານທຳ ແລະ ສ້າງລາຍຮັບໃຫ້ແກ່ປະຊາຊົນບັນດາເຜົ່າ ທັງເປັນການອະນຸລັກມູນເຊື້ອ, ວັດທະນະທຳ ແລະ ເສດຖະກິດຂອງຊາດ. ແຕ່ເຖິງແນວໃດກໍຕາມ, ໄລຍະ 5 ປີ ຜ່ານມາ ການຈ້າງງານໃນຫົວໜ່ວຍຫັດຖະກຳ ມີອັດຕາການຂະຫຍາຍໂຕຫຼຸດລົງສະເລ່ຍ -4,63% ຕໍ່ປີ. ໃນປີ 2020 ອັດຕາສ່ວນການຈ້າງງານໃນໂຮງງານ ແລະ ໂຮງຊ່າງຫັດຖະກຳ ປະກອບມີ: ໂຮງງານຂະໜາດໃຫຍ່ 1.313 ຄົນ ກວມ 5,73%, ຂະໜາດກາງ 886 ຄົນ ກວມ 3,86%, ຂະໜາດນ້ອຍ 1.241 ຄົນ ກວມ 5,41%; ໂຮງຊ່າງຫັດຖະກຳຄອບຄົວປະເພດ 1 3.696 ຄົນ ກວມ 16,12% ແລະ ປະເພດ 2 15.789 ຄົນ ກວມ 68,87%. ທຽບໃສ່ ປີ 2016 ທີ່ມີອັດຕາສ່ວນຂອງການຈ້າງງານໃນໂຮງງານ ແລະ ໂຮງຊ່າງຫັດຖະກຳ ຄື: ໂຮງງານຂະໜາດໃຫຍ່ 1.720 ຄົນ ກວມ 4,44%, ຂະໜາດກາງ 1.809 ຄົນ ກວມ 6,32%, ຂະໜາດນ້ອຍ 7.233 ຄົນ ກວມ 25,38%, ໃນໂຮງຊ່າງຫັດຖະກຳຄອບຄົວປະເພດ 1: 1.596 ຄົນ ກວມ 5,58% ແລະ ປະເພດ 2: 16.701 ຄົນ ກວມ 58,38%.

ແຜນວາດ 6 ຈຳນວນໂຮງງານ ແລະ ໂຮງຊ່າງຫັດຖະກຳ ໃນປີ 2016 ແລະ ປີ 2020




ແຫຼ່ງຂໍ້ມູນ: ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ.

## 2.3 ການສົ່ງອອກສິນຄ້າຫັດຖະກຳ

ການສົ່ງອອກຂອງສິນຄ້າຫັດຖະກຳ ໃນປີ 2020 ມີລວມຍອດມູນຄ່າທັງໝົດປະມານ 900.000 ໂດລາສະຫະລັດ, ທຽບໃສ່ປີ 2016 ເຫັນວ່າຫຼຸດລົງສະເລ່ຍ -6,09% ຕໍ່ປີ ເນື່ອງຈາກຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19. ອັດຕາສ່ວນມູນຄ່າການສົ່ງອອກ ໃນປີ 2020 ປະກອບມີ: ຜະລິດຕະພັນຈາກໄມ້ໄຜ່, ຫວາຍ ກວມ 66,73%; ຜະລິດຕະພັນຈາກຝ້າຍ ກວມ 13,91%; ເສັ້ນໄຍຕ່ຳທີ່ໄດ້ຈາກພືດ ກວມ 6,58%, ຜະລິດຕະພັນເຄື່ອງຈັກສານ ກວມ 5,29% ແລະ ຜະລິດຕະພັນຫັດຖະກຳອື່ນໆ ກວມ 7,5%. ສຳລັບຕະຫຼາດສົ່ງອອກສິນຄ້າຫັດຖະກຳ ທີ່ກວມເອົາຫຼາຍກວ່າ 70% ແມ່ນປະກອບມີ: ຈີນ, ໄທ, ຫວຽດນາມ, ອາເມລິກາ ແລະ ຍີ່ປຸ່ນ.

ແຜນວາດ 7 ການສົ່ງອອກສິນຄ້າຫັດຖະກຳແບ່ງຕາມຜະລິດຕະພັນ ປີ 2016 ແລະ ປີ 2020







ແຫຼ່ງຂໍ້ມູນ: ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.

## 2.4 ການປົກປ້ອງຜະລິດຕະພັນຫັດຖະກຳ

ປະຈຸບັນປະຊາຊົນບັນດາເຜົ່າ ມີຄວາມນິຍົມຊົມໃຊ້ຜະລິດຕະພັນຫັດຖະກຳລາວເພີ່ມຂຶ້ນຢ່າງຕໍ່ເນື່ອງ, ຍ້ອນວ່າລັດຖະບານມີນະໂຍບາຍສົ່ງເສີມ ແລະ ອະນຸລັກວັດທະນາທຳຫັດຖະກຳຂອງຊາດ, ຊຶ່ງຜະລິດຕະພັນຫັດຖະກຳ ໄດ້ຮັບການພັດທະນາການອອກແບບຈາກແບບດັ່ງເດີມໄປສູ່ແບບທັນສະໄໝ ທີ່ສາມາດຕອບສະໜອງຄວາມຕ້ອງການຂອງຜູ້ບໍລິໂພກ ແລະ ຕະຫຼາດ. ຄຽງຄູ່ກັນນັ້ນ, ຫັດຖະກຳລາວໄດ້ຖືກອະນຸລັກມູນເຊື້ອມໍລະດົກຫັດຖະກຳຂອງຊາດໃນ 7 ຂະແໜງ ວິຊາຊີບຫັດຖະກຳ ໂດຍສະເພາະຜະລິດຕະພັນແຜ່ນແພໄໝ ແລະ ຝ້າຍ, ເຄື່ອງຈັກສານ ແລະ ອື່ນໆ ເພື່ອຊຸກຍູ້ສົ່ງເສີມຊາວຊ່າງຫັດຖະກຳ ແລະ ຜູ້ປະກອບການ ສາມາດແຈ້ງຂໍຂຶ້ນທະບຽນຊັບສິນທາງປັນຍາໃຫ້ບັນທຶກເຂົ້າບັນຊີລາຍການສິນຄ້າທີ່ລັດຖະບານຄຸ້ມຄອງ.

ໃນປີ 2019-2020 ມີສະພາບກ່ຽວກັບການນຳເຂົ້າສິນຄ້າລອກຮຽນແບບ (ສິ້ນໄໝກອບປີ້) ຈາກ ສປ ຈີນ ຊຶ່ງການນຳເຂົ້າແມ່ນແຈ້ງເປັນປະເພດແຜ່ນແພເປັນກົ້ມາຈຳໜ່າຍ ແລ້ວຕັດຫຍິບເປັນສິ້ນ ໂດຍເຫັນວ່າມີລວດລາຍຄືກັບລາຍສິ້ນໄໝຕ່າງໆຂອງວັດທະນາທຳລາວ ໂດຍລາຄາຈຳໜ່າຍລະຫວ່າງ 80.000-150.000 ກີບ. ຕະຫຼາດຈຳໜ່າຍສິ້ນໄໝລອກຮຽນແບບ ແມ່ນຢູ່ນະຄອນຫຼວງວຽງຈັນ ເປັນຕົ້ນ: ຕະຫຼາດຂົວດິນ, ງານຕະຫຼາດນັດ, ງານປະເພນີຢູ່ນະຄອນຫຼວງວຽງຈັນ ແລະ ບາງແຂວງເປັນວົງກວ້າງ ເຊິ່ງໄດ້ສົ່ງຜົນກະທົບຕໍ່ຫົວໜ່ວຍຫັດຖະກຳຕໍ່າຫູກ ແລະ ຜູ້ປະກອບການໃນການຜະລິດ ແລະ ຈຳໜ່າຍທັງທາງກົງ ແລະ ທາງອ້ອມ ທີ່ສົ່ງຜົນກະທົບເຖິງຜູ້ຕ່ຳຫູກ ທີ່ເຮັດດ້ວຍສີໄມ້ລາຍມື ພູມປັນຍາຫັດຖະກຳທ້ອງຖິ່ນ, ມູນມໍລະດົກຫັດຖະກຳຂອງຊາດ. ເພື່ອແກ້ໄຂບັນຫາດັ່ງກ່າວ ຜ່ານມາໄດ້ຈັດກອງປະຊຸມປຶກສາຫາລື, ແຕ່ງຕັ້ງຄະນະກຳມະການຮັບຜິດຊອບສະເພາະ ເພື່ອກວດກາ, ຕິດຕາມ ເກັບກຳຂໍ້ມູນ, ລາຍງານ ແລະ ແກ້ໄຂບັນຫາດັ່ງກ່າວ; ໄດ້ຊຸກຍູ້ສົ່ງເສີມ ແລະ ບຸກລະດົມໃຫ້ຊາວຊ່າງຫັດຖະກຳຕ່ຳຫູກ ທີ່ມີເງື່ອນໄຂໃຫ້ເຂົ້າໃຈເຖິງບັນຫາດັ່ງກ່າວ ແລະ ນຳເອົາລວດລາຍຜືນສິ້ນໄໝ ແລະ ຝ້າຍ ໄປແຈ້ງຂຶ້ນທະບຽນຊັບສິນທາງປັນຍາ ເພື່ອບັນຈຸເປັນບັນຊີກິດຈະກຳຫັດຖະກຳຕ່ຳຫູກທີ່ລັດຖະບານຄຸ້ມຄອງ ແລະ ນຳສະເໜີແນວທາງນະໂຍບາຍສົ່ງເສີມ ຕໍ່ກັບການແຈ້ງຂໍລິຂະສິດຊັບສິນທາງປັນຍາ ຫຼື ໃນຖານະມໍລະດົກຂອງຊາດ.

## 3. ການຈັດຕັ້ງປະຕິບັດແຜນງານສົ່ງເສີມ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປີ 2016-2020

### 3.1 ວຽກງານເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ

ກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ມີການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ຕາມທິດທາງແຜນການທີ່ວາງໄວ້ໂດຍໄດ້ສຸມໃສ່ວຽກງານແຕ່ລະດ້ານ ດັ່ງນີ້:

3.1.1 ການຮ່ວມມືກັບລັດເຊຍ

ໄດ້ຮ່ວມມືກັບກະຊວງອຸດສາຫະກຳ ແລະ ການຄ້າສະຫະພັນລັດເຊຍ ກະກຽມແຜນວຽກເພື່ອສຶກສາແລກປ່ຽນຂໍ້ມູນຂ່າວສານກ່ຽວກັບທາດໄຍຫີນຂາວ ພ້ອມທັງໄດ້ຮ່ວມມືກັບສູນຂໍ້ມູນຂ່າວສານທາດໄຍຫີນຂາວ (CIC) ຄົ້ນຄວ້າ ແລະ ລາຍງານຄະນະນຳ ຕໍ່ເອກະສານຈາກກະຊວງອຸດສາຫະກຳ ແລະ ການຄ້າ ສະຫະພັນລັດເຊຍ ກ່ຽວກັບການຮ່ວມມືດ້ານວິຊາການລະຫວ່າງ ສປປ ລາວ ແລະ ສະຫະພັນລັດເຊຍ ເພື່ອສຶກສາຄົ້ນຄວ້າ ແລະ ການນຳໃຊ້ທາດໄຍຫີນຂາວຢ່າງປອດໄພ ຢູ່ ສປປ ລາວ.

3.1.2 ຂອບການຮ່ວມມື ສ.ເກົາຫຼີ

ໄດ້ສະເໜີແຜນງານແລກປ່ຽນທາງດ້ານຄວາມຮູ້ລະຫວ່າງ ສປປ ລາວ ກັບ ສ.ເກົາຫຼີ ສຳລັບປີ 2022-2023 ປະກອບມີ 2 ຫົວຂໍ້ ຄື: ພັດທະນາຖານຂໍ້ມູນຕົວຊີ້ບອກ ເພື່ອເຊື່ອມໂຍງການຮ່ວມມືດ້ານການຄ້າ ແລະ ການລົງທຶນລະຫວ່າງ ສປປ ລາວ ແລະ ສ.ເກົາຫຼີ ແລະ ສົ່ງເສີມການຜະລິດກະສິກຳເປັນສິນຄ້າ.

3.1.3 ການຈັດຕັ້ງປະຕິບັດໂຄງການໃນຂອບການຮ່ວມມື ກອງທຶນແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ (MLC)

- ໂຄງການຈັດການການປ່ອຍມົນລະພິດທາງອາກາດຈາກໂຮງງານອຸດສາຫະກຳປຸງແຕ່ງ.
- ໂຄງການສົ່ງເສີມການສ້າງມູນຄ່າເພີ່ມສຳລັບຜະລິດຕະພັນປຸງແຕ່ງຈາກກະສິກຳ.
- ໂຄງການສົ່ງເສີມຄວາມອາດສາມາດໃນການສ້າງນະໂຍບາຍ ແລະ ແຜນການເພື່ອການພັດທະນາ ແລະ ການຮ່ວມມືດ້ານອຸດສາຫະກຳປຸງແຕ່ງ
- ໂຄງການສ້າງຄວາມເຂັ້ມແຂງທາງດ້ານການແຂ່ງຂັນສຳລັບອຸດສາຫະກຳປຸງແຕ່ງຈາກກະສິກຳ ຂອງລາວ.
- ໂຄງການສ້າງຖານຂໍ້ມູນເຄມີແຫ່ງຊາດ.

3.1.4 ໂຄງການ RELATED (GIZ): ສ້າງຄວາມເຂັ້ມແຂງໃຫ້ແກ່ພາກລັດ ແລະ ເອກະຊົນ ໃນການຕິດຕາມກວດກາໄມ້ສົ້ນເຂົ້າ ແລະ ສົ້ນອອກ ໃນໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ການຄ້າໄມ້ ໂດຍໄດ້ຮັບການຊ່ວຍເຫຼືອຈາກໂຄງການ LAO-EU FLEGT VPA ຂອງສະຫະພາບເອີລົບ ໄລຍະທີ 1 ຊຶ່ງສຳເລັດການທົດລອງການນຳໃຊ້ລະບົບການຄຸ້ມຄອງຕິດຕາມໄມ້ສົ້ນເຂົ້າ ແລະ ສົ້ນອອກ ຢູ່ແຂວງອັດຕະປື, ກຳລັງປະຕິບັດໂຄງການ ໄລຍະ 2 ຢູ່ແຂວງຄຳມ່ວນ.

3.1.5 ທະນາຄານໂລກ : ສ້າງແຜນພັດທະນາຍົກລະດັບໂຮງສີເຂົ້າ ແລະ ບົດແນະນຳຈັດຕັ້ງປະຕິບັດ.

3.1.6 ການຮ່ວມມືກັບ ຍີ່ປຸ່ນ

- ຮ່ວມມືກັບເມືອງໂອກາວາປະເທດຍີ່ປຸ່ນ: ສຳເລັດການຈັດຕັ້ງປະຕິບັດໂຄງການ ໄລຍະ 1 ປີ 2015- 2017 ຊຶ່ງປະກອບມີ ❶ຝຶກອົບຮົມດ້ານເຕັກນິກໃຫ້ແກ່ນາຍຊ່າງໂຮງງານປຸງແຕ່ງໄມ້ ແລະ ໂຮງຮຽນວິຊາຊີບ ທີ່ກ່ຽວຂ້ອງກັບການປຸງແຕ່ງໄມ້ຂອງລາວ, ❷ເອົານາຍຊ່າງ ແລະ ຄູສອນຂອງລາວ, ພະນັກງານກະຊວງ ອຄ ແລະ ສະພາການຄ້າອຸດສາຫະກຳແຫ່ງຊາດໄປທັດສະນະສຶກສາຢູ່ຍີ່ປຸ່ນ, ❸ສຳມະນາດ້ານການຕະຫຼາດໃຫ້ຝ່າຍລາວ ໄລຍະ 2 ປີ 2018-2020 ໂດຍຍີ່ປຸ່ນໄດ້ສົ່ງຊ່ຽວຊານ 1 ທ່ານ ເຂົ້າມາປະຈຳ ໃນໄລຍະປະຕິບັດໂຄງການ ເພື່ອມາສ້າງຫຼັກສູດ ແລະ ວາງລະບົບຝຶກອົບຮົມ. ໄດ້ນຳເຂົ້າ ແລະ ສຳເລັດການຕິດຕັ້ງເຄື່ອງຈັກ ແລະ ອຸປະກອນ ເພື່ອມາຕິດຕັ້ງຢູ່ສະຖານທີ່ສຳລັບຝຶກອົບຮົມຍົກລະດັບສີມືແຮງ.

- ສຳເລັດການສ້າງແຜນພັດທະນາອຸດສາຫະກຳປຸງແຕ່ງ ແຕ່ປີ 2016-2030 ຮ່ວມກັບສະຖາບັນຄົ້ນຄວ້າເສດຖະກິດສຳລັບອາຊຽນ ແລະ ອາຊີຕາເວັນອອກ (ERIA) ໂດຍໄດ້ສຶກສາລົງເລິກ 5 ອຸດສາຫະກຳຍ່ອຍ ຄື: 1. ອຸດສາຫະກຳປຸງແຕ່ງກະສິກຳ; 2. ອຸດສາຫະກຳແຜ່ນແພ ແລະ ຕັດຫຍິບ; 3. ອຸດສາຫະກຳປຸງແຕ່ງໄມ້; 4. ຫັດຖະກຳ ແລະ 5. ອຸດສາຫະກຳໄອຊີທີ.

3.1.7 <u>ໂຄງການແມ່ນ້ຳຂອງ-ຍີ່ປຸ່ນ (MIDV 2.0)</u>

ຈັດຕັ້ງປະຕິບັດແຜນການພັດທະນາອຸດສາຫະກຳໃນຂອບການຮ່ວມມືແມ່ນ້ຳຂອງ-ຍີ່ປຸ່ນ ໄລຍະ 1 (MIDV 1.0) ແລະ ຍາດແຍ່ງການຊ່ວຍເຫຼືອໃນກອບວຽກດັ່ງກ່າວ ໂດຍສະເພາະ ໃນກອບວິໄສທັດການພັດທະນາອຸດສາຫະກຳ ແມ່ນ້ຳຂອງ-ຍີ່ປຸ່ນ ປີ 2019-2023 ໄລຍະ 2 (MIDV 2.0).

3.1.8 <u>ໂຄງການ ARISE Plus Laos</u>

- ໄດ້ຈັດຕັ້ງປະຕິບັດຮ່ວມກັບສູນການຄ້າສາກົນ (International Trade Center-ITC) ໃນການສ້າງແຜນພັດທະນາການສົ່ງອອກຂອງຂະແໜງອຸດສາຫະກຳປຸງແຕ່ງໄມ້ ພາຍໃຕ້ການຊ່ວຍເຫຼືອຂອງສະຫະພາບເອີຣົບ (EU) ຈົບສຳເລັດ (Wood Processing Sector Export Roadmap).

3.1.9 <u>ການຮ່ວມມືຂອບອາຊຽນ (ASEAN):</u>

- ໜ່ວຍງານຜະລິດຕະພັນຍານພາຫະນະອາຊຽນ (Automotive Product Working Group - APWG): ໄດ້ເຫັນດີເອກະພາບ ແລະ ກຳລັງນຳສະເໜີລັດຖະມົນຕີເສດຖະກິດອາຊຽນ ເພື່ອຮັບຮອງຂໍ້ຕົກລົງວ່າດ້ວຍການຮັບຮູ້ຊຶ່ງກັນ ແລະ ກັນ ດ້ານມາດຕະຖານຜະລິດຕະພັນຍານພາຫະນະໃນອາຊຽນ (MUTUAL RECOGNITION ARRANGEMENT- MRA) ຕາມແຜນດຳເນີນງານປະຊາຄົມເສດຖະກິດອາຊຽນ 2025 (The AEC Blueprint 2025). ນອກນັ້ນ, ຍັງໄດ້ເປັນເຈົ້າພາບຈັດກອງປະຊຸມຂອງໜ່ວຍງານຜະລິດຕະພັນຍານພາຫະນະອາຊຽນ ຄັ້ງທີ 27 ໃນເດືອນພຶດສະພາ 2018 ຢູ່ນະຄອນຫຼວງວຽງຈັນ, ພ້ອມທັງສືບຕໍ່ຮ່ວມມືໃນການເຂົ້າຮ່ວມກອງປະຊຸມປະຈຳປີ ຢ່າງເປັນປົກກະຕິ.
- ໜ່ວຍງານຜະລິດຕະພັນໄມ້ ອາຊຽນ (Task Force on Wood Based Products - TFWBP): ໄດ້ເຫັນດີ ແລະ ຮັບຮອງເອົາ 45 ມາດຕະຖານຜະລິດຕະພັນໄມ້, ໃນນີ້ ໄດ້ພິຈາລະນາຮັບຮອງເອົາອີກ 4 ມາດຕະຖານຄື: ມາດຕະຖານລະບົບຕ່ອງໂສ້ການສະໜອງໄມ້ (ISO 287 CHAIN OF CUSTODY); ມາດຕະຖານຜະລິດຕະພັນໄມ້ປ່ອງ ແລະ ຫວາຍ (ISO 296 RATTAN & BAMBOO); ມາດຕະຖານຜະລິດຕະພັນໄມ້ສຳລັບການກໍ່ສ້າງ ແລະ ເຟີນີເຈີໄມ້ (ISO136 FURNITURE), ພ້ອມທັງສືບຕໍ່ຮ່ວມມືໃນການເຂົ້າຮ່ວມກອງປະຊຸມປະຈຳປີ ຢ່າງເປັນປົກກະຕິ.
- ໜ່ວຍງານຜະລິດຕະພັນຢາງພາລາອາຊຽນ (Rubber-Based Product Working Group - RBPWG): ໄດ້ຮັບຮອງເອົາ 68 ມາດຕະຖານ ແລະ ໄດ້ສົ່ງໃຫ້ຈຸງານ 1. ໃນມາດຕະຖານທີ່ໄດ້ປັບປຸງ ແລະ ກຳລັງຈະຮັບຮອງ ປະກອບມີ: ມາດຕະຖານຖົງມືຢາງທີ່ໃຊ້ໃນຄົວເຮືອນ ແລະ ມາດຕະຖານຖົງມືຢາງທີ່ໃຊ້ເພື່ອທຳຄວາມສະອາດຄົວເຮືອນ. ນອກນີ້, ຍັງໄດ້ປັບປຸງມາດຕະຖານຖົງບັນຈຸຂີ້ເຖົ່າ (ISO 247:2006 ມາເປັນ ISO247:2018).
- ຂອບອຸດສາຫະກຳເຄມີອາຊຽນ-ຍີ່ປຸ່ນ: ໄດ້ເປັນເຈົ້າພາບຈັດກອງປະຊຸມເຄມີອາຊຽນ-ຍີ່ປຸ່ນ ຄັ້ງທີ 23 ໃນປີ 2018 ທີ່ແຂວງຫຼວງພະບາງ ແລະ ກອງປະຊຸມກ່ຽວກັບຂໍ້ລິເລີ່ມເພື່ອປັບປຸງຄວາມປອດໄພໃນເວລາອອກແຮງງານ ແລະ ຄວາມປອດໄພແຮງງານຂົງເຂດອຸດສາຫະກຳເຄມີ ໃນປີ 2020.

- ຂອບອາຊຽນ-ເກົາຫຼີ: ເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບການຄຸ້ມຄອງສິ່ງເສດເຫຼືອເອເລັກໂຕຣນິກ (E-waste) ອາຊຽນ-ເກົາຫຼີ, ການຮ່ວມມືດ້ານລະບົບຂົນສົ່ງອັດສະລິຍະ ຂອງໜ່ວຍງານຜະລິດຕະພັນຍານພາຫະນະອາຊຽນ ແລະ ການສ້າງສູນນະວັດຕະກໍາ ອາຊຽນ-ເກົາຫລີ.

## 3.2 ວຽກງານສ້າງສະພາບແວດລ້ອມທີ່ເອື້ອອໍານວຍແກ່ພາກທຸລະກິດ

ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍແກ່ພາກທຸລະກິດໃນຂະແໜງອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ແມ່ນໄດ້ຮັບການເອົາໃຈໃສ່ ແລະ ສຸມໃສ່ ໃນໄລຍະ 5 ປີຜ່ານມາ ເປັນຕົ້ນແມ່ນການສ້າງ, ປັບປຸງກົດໝາຍ ແລະ ລະບຽບການ ເພື່ອໃຫ້ການດໍາເນີນກິດຈະການໂຮງງານ ເດີນແລ່ນສະດວກ ທັງສອດຄ່ອງກັບສະພາບປະຈຸບັນທີ່ໄດ້ຮັບຜົນກະທົບຫຼາຍດ້ານ ເຊັ່ນ: ໄພພິບັດ, ໂລກລະບາດ, ສະພາບການເສດຖະກິດທີ່ປ່ຽນແປງໃນຍຸກອຸດສາຫະກໍາ 4.0 ແລະ ອື່ນໆ ເປັນຕົ້ນ. ດັ່ງນັ້ນ, ການສ້າງແຜນພັດທະນາ ແລະ ຍຸດທະສາດ ເພື່ອເປັນເຄື່ອງມືກົນໄກໃນການຄຸ້ມຄອງ ແລະ ສົ່ງເສີມຈຶ່ງມີຄວາມຈໍາເປັນທີ່ສຸດ ສະແດງອອກຢ່າງພົ້ນເດັ່ນ ເປັນຕົ້ນ ແມ່ນສໍາເລັດການສ້າງກົດໝາຍວ່າດ້ວຍ ການຄຸ້ມຄອງທາດເຄມີ ປີ 2016, ແຜນພັດທະນາອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ປີ 2019-2020, ຍຸດທະສາດການພັດທະນາອຸດສາຫະກໍາ 5 ຂະແໜງການຍ່ອຍ ປີ 2021-2025. ນອກນັ້ນ, ຍັງໄດ້ສໍາເລັດໃນການສ້າງ ແລະ ປັບປຸງນິຕິກໍາ, ຂໍ້ຕົກລົງ ສໍາເລັດໃນເບື້ອງຕົ້ນ ໂດຍມີລາຍລະອຽດຄືດັ່ງລຸ່ມນີ້:

3.2.1 ວຽກງານນິຕິກໍາ: ສໍາເລັດການສ້າງນິຕິກໍາ ຫຼາຍກວ່າ 15 ສະບັບ ເພື່ອເປັນເຄື່ອງມືໃນການຄຸ້ມຄອງ ແລະ ເອື້ອອໍານວຍແກ່ພາກທຸລະກິດໃນການດໍາເນີນກິດຈະການອຸດສາຫະກໍາປຸງແຕ່ງ ເປັນຕົ້ນ ກົດໝາຍວ່າດ້ວຍ ການຄຸ້ມຄອງທາດເຄມີ ແລະ ຂໍ້ຕົກລົງ ລວມທັງບົດແນະນໍາຕ່າງໆ ກ່ຽວກັບ ການສົ່ງເສີມ ແລະ ຄຸ້ມຄອງການດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງ.

3.2.2 ວຽກງານເຂດ ແລະ ນິຄົມອຸດສາຫະກໍາ

- ພັດທະນານິຄົມອຸດສາຫະກໍາ ແລະ ກໍານົດເຂດເປັນພື້ນທີ່ດິນຈະພັດທະນາເປັນເຂດອຸດສາຫະກໍາ ທັງໝົດ 74 ແຫ່ງ, ກວມເນື້ອທີ່ດິນທັງໝົດ 34.433 ເຮັກຕາ. ໃນນີ້ເຂດອຸດສາຫະກໍາຈໍານວນໜຶ່ງໄດ້ຮັບການພັດທະນາແລ້ວ ເຊັ່ນ: ເຂດອຸດສາຫະກໍານະຄອນຫຼວງວຽງຈັນ (ເຂດຫຼັກ 21), ເຂດອຸດສາຫະກໍາແຂວງຈໍາປາສັກ (ເຂດເມືອງປະທຸມພອນ) ແລະ ແຂວງອື່ນໆ, ຊຶ່ງມີໂຮງງານອຸດສາຫະກໍາເຂົ້າໄປຕັ້ງຢູ່ຫຼາຍເຂດຫຼາຍກວ່າ 250 ແຫ່ງ. ນອກນີ້ກໍໄດ້ພັດທະນາເປັນ ນິຄົມອຸດສາຫະກໍາ 1 ແຫ່ງ ທີ່ຈະພັດທະນາເປັນຕົ້ນແບບເພື່ອຂະຫຍາຍໄປສູ່ເຂດອຸດສາຫະກໍາອື່ນໃນຕໍ່ໜ້ານັ້ນ ແມ່ນນິຄົມອຸດສາຫະກໍາ ແລະ ການຄ້າວຽງຈັນ-ໂນນທອງ (VITA Park) ຢູ່ນະຄອນຫຼວງວຽງຈັນ, ຊຶ່ງມີເນື້ອທີ່ 110 ເຮັກຕາ ແລະ ຂະຫຍາຍເຂດພື້ນທີ່ພັດທະນາເນື້ອທີ່ອີກ 142 ເຮັກຕາ. ປະຈຸບັນນິຄົມອຸດສາຫະກໍາ ແລະ ການຄ້າວຽງຈັນ-ໂນນທອງ ມີຜູ້ເຂົ້າມາລົງທຶນທັງໝົດ 66 ບໍລິສັດ, ໄດ້ດໍາເນີນການຜະລິດ ແລະ ສົ່ງອອກໄດ້ແລ້ວ 28 ບໍລິສັດ, ມູນຄ່າສົ່ງອອກໝົດປີ 2020 ເທົ່າກັບ 47.413.416 ໂດລາສະຫະລັດ, ສາມາດສ້າງວຽກເຮັດງານທໍາໄດ້ 4.000 ກວ່າຄົນ, ໃນນີ້ແຮງງານຕ່າງປະເທດ 79 ຄົນ.

ນອກນັ້ນ ການລົງທຶນອຸດສາຫະກໍາ ໃນ 8 ເຂດເສດຖະກິດພິເສດ ລວມມີ 153 ບໍລິສັດ, ມີທຶນຈົດທະບຽນທັງໝົດ 1,67 ຕື້ໂດລາສະຫະລັດ ແລະ ມີໂຮງງານອຸດສາຫະກໍາປຸງແຕ່ງຂະໜາດໃຫຍ່ທີ່ລົງທຶນໃນບັນດາເຂດເສດຖະກິດພິເສດ ເປັນຕົ້ນ: ໂຮງງານກັ່ນນໍ້າມັນປີໂຕເຄມີ, ໂຮງງານຜະລິດຮາດດິດສ໌ ຂອງບໍລິສັດ ໂຮຢາ ຢູ່ເຂດເສດຖະກິດພິເສດໄຊເສດຖາກວມລວມ, ໂຮງງານຜະລິດຊິ້ນສ່ວນເອເລັກໂຕຣນິກ, ໂຮງງານຜະລິດເລນສ໌ກ້ອງຖ່າຍຮູບຂອງບໍລິສັດ ນິຄອນ, ໂຮງງານຜະລິດຊິ້ນສ່ວນສໍາລັບລັບຍົນ, ໂຮງງານປະກອບເບາະລົດໃຫຍ່ໃຫ້ໂຮງງານຜະລິດລົດ ໂຕໂຍຕາ ຢູ່ເຂດເສດຖະກິດພິເສດ ສະຫວັນ-ເຊໂນ, ບັນດາ

ໂຮງງານ ຂະໜາດນ້ອຍ ແລະ ກາງ ຢູ່ເຂດເສດຖະກິດພິເສດ ວິສາຫະກິດຂະໜາດນ້ອຍ ແລະ ກາງ ລາວ-ຍີ່ປຸ່ນຢູ່ແຂວງ ຈຳປາສັກ ແລະ ອື່ນໆ.

3.2.3 <u>ວຽກງານຖານຂໍ້ມູນຂຶ້ນທະບຽນໂຮງງານແບບເອເລັກໂຕຣນິກ</u>

ໄດ້ລິເລີ່ມພັດທະນາລະບົບຖານຂໍ້ມູນຂຶ້ນທະບຽນໂຮງງານອຸດສາຫະກຳປຸງແຕ່ງ ຜ່ານທາງລະບົບເອເລັກໂຕຣນິກ (e-manufacturing licenses) ແລະ ສາມາດເຊື່ອມຕໍ່ເຂົ້າກັບຖານຂໍ້ມູນຂອງທະບຽນວິສາຫະກິດແຫ່ງຊາດ. ປະຈຸບັນຖານຂໍ້ມູນໄດ້ຖືກອອກແບບສຳເລັດໃນເບື້ອງຕົ້ນ ແລະ ຈະເລີ່ມທົດລອງປ້ອນຂໍ້ມູນຂອງກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງວຽງຈັນ ແລະ ນິຄົມອຸດສາຫະກຳການຄ້າ ວຽງຈັນ-ໂນນທອງ. ຫຼັງຈາກນັ້ນ, ຈຶ່ງດຳເນີນການໃນຂັ້ນຕໍ່ໄປ ເປັນຕົ້ນ ປັບປຸງລະບົບໃຫ້ສຳເລັດຢ່າງສົມບູນ ແລະ ໃຊ້ງານໄດ້ດີຂຶ້ນ, ຈັດຝຶກອົບຮົມການນຳໃຊ້ໃຫ້ແກ່ພະນັກງານຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ.

3.2.4 <u>ວຽກງານຖານຂໍ້ມູນອະນຸຍາດດຳເນີນທຸລະກິດ</u>

ໄດ້ລິເລີ່ມເກັບກຳຂໍ້ມູນເພື່ອສ້າງເງື່ອນໄຂ ແລະ ຄວາມສະດວກໃຫ້ແກ່ວິສາຫະກິດສາມາດຍື່ນຂໍອະນຸຍາດດຳເນີນທຸລະກິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທາງເອເລັກໂຕຣນິກ.

## 3.3 ວຽກງານສ້າງຄວາມເຂັ້ມແຂງໃຫ້ແກ່ພາກທຸລະກິດເພື່ອຮອງຮັບການແຂ່ງຂັນທີ່ເພີ່ມຂຶ້ນ

ການສ້າງຄວາມເຂັ້ມແຂງໃຫ້ແກ່ພາກທຸລະກິດເພື່ອຮັບຮອງການແຂ່ງຂັນທີ່ເພີ່ມຂຶ້ນ ແມ່ນເປັນວຽກງານທີ່ສຳຄັນ ແລະ ໄດ້ເອົາໃຈໃສ່ປະຕິບັດມາເປັນແຕ່ລະໄລຍະ ເຖິງແມ່ນວ່າຈະໄດ້ຮັບງົບປະມານສະໜັບສະໜູນເຂົ້າໃນວຽກງານນີ້ຂ້ອນຂ້າງຈຳກັດກໍຕາມ ແຕ່ກໍ່ສາມາດປະຕິບັດວຽກງານທີ່ສຳຄັນໄດ້ ເຊັ່ນ:

- ເຜີຍແຜ່ນະໂຍບາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳຢ່າງເປັນປົກກະຕິ ເປັນຕົ້ນ: ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ກົດໝາຍວ່າດ້ວຍ ເຄມີ ແລະ ນິຕິກຳລຸ່ມກົດໝາຍອື່ນໆ;
- ເຜີຍແຜ່ຄວາມຮູ້ວິຊາການໃຫ້ກັບພະນັກງານຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງການທີ່ກ່ຽວຂ້ອງ ແລະ ພາກທຸລະກິດ ເປັນຕົ້ນ: ວຽກງານສະຖິຕິ ແລະ ຂໍ້ມູນຂ່າວສານອຸດສາຫະກຳ; ການຄຸ້ມຄອງການນຳເຂົ້າ-ສົ່ງອອກ ແລະ ເຄື່ອນຍ້າຍເຄມີ, ການຂຶ້ນທະບຽນ, ການນຳໃຊ້, ການເກັບຮັກສາ ແລະ ການກຳຈັດກ່ຽວກັບເຄມີ; ການຄຸ້ມຄອງໄມ້ສິ້ນເຂົ້າ ແລະ ສິ້ນອອກ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ຊຸກຍູ້ສົ່ງເສີມໃຫ້ຫົວໜ່ວຍອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເຂົ້າເຖິງແຫຼ່ງທຶນ ໂດຍສະເພາະ ກອງທຶນ SME ໃນຂະແໜງປຸງແຕ່ງກະສິກຳ ແລະ ຫັດຖະກຳ ຊຶ່ງເປັນ 2 ໃນ 4 ຂະແໜງບູລິມະສິດ ພາຍໃຕ້ໂຄງການເຂົ້າເຖິງແຫຼ່ງທຶນສະເພາະຈາກລັດຖະບານ. ສົ່ງເສີມການຍົກລະດັບເຕັກໂນໂລຊີ, ການຈັດການ ແລະ ການຕະຫຼາດ ລວມທັງ ພາຍໃຕ້ໂຄງການ BAF, ໂຄງການ UNIDO ແລະ JICA;
- ຈັດຝຶກອົບຮົມໃຫ້ພະນັງງານພາກລັດ ແລະ ພາກທຸລະກິດ ເປັນຕົ້ນ ກ່ຽວກັບການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ; ການສ້າງເຄືອຂ່າຍປຸງແຕ່ງໄມ້; ສົ່ງເສີມການພັດທະນາ ແລະ ຍົກລະດັບສີມືແຮງງານໃນຂະແໜງອຸດສາຫະກຳປຸງແຕ່ງໄມ້; ການພັດທະນາສີມື ແລະ ຍົກລະດັບທັກສະການອອກແບບດ້ານຫັດຖະກຳ, ການແກະສະລັກໄມ້; ສິ່ງເສດເຫຼືອອັນຕະລາຍຕາມສົນທິສັນຍາສາກົນ; ການຄຸ້ມຄອງການນຳໃຊ້ທາດໄຍຫີນຂາວຢ່າງປອດໄພ;
- ຊຸກຍູ້ການດັດສົມ, ປັບປຸງໂຮງງານອຸດສາຫະກຳປຸງແຕ່ງໄມ້, ໂຮງງານຂ້າສັດ, ໂຮງສີເຂົ້າ, ໂຮງງານຜະລິດນ້ຳດື່ມ ແລະ ອື່ນໆ ເພື່ອຍົກລະດັບມາດຕະຖານໂຮງງານ ແລະ ຄຸນນະພາບຜະລິດຕະພັນ;

- ເຜີຍແຜ່ ແລະ ສະໜອງຂໍ້ມູນຂ່າວສານໃຫ້ຫົວໜ່ວຍທຸລະກິດທີ່ມີຄວາມສົນໃຈຢາກມາລົງທຶນທີ່ ສປປ ລາວ ໂດຍສະເພາະດ້ານລະບຽບກົດໝາຍ, ຂັ້ນຕອນການອອກອະນຸຍາດດຳເນີນກິດຈະການໂຮງງານ, ສິ່ງແວດລ້ອມ ແລະ ເຄມີ, ເຂດ ແລະ ນິຄົມອຸດສາຫະກຳ.

## 3.4 ການຈັດຕັ້ງປະຕິບັດໂຄງການລະດັບຊາດ ເພື່ອສົ່ງເສີມການຜະລິດເປັນສິນຄ້າ ແລະ ຄໍ້າປະກັນສະບຽງອາຫານ:

### 3.4.1 ໂຄງການສົ່ງເສີມການເພີ່ມຜະລິດຕະພາບໂຮງສີເຂົ້າໃນການຜະລິດເປັນສິນຄ້າ

- ລົງເກັບກຳຂໍ້ມູນໂຮງສີເຂົ້າ ຈຳນວນ 6 ແຫ່ງ ຢູ່ 3 ແຂວງທົດລອງ ຄື: ນະຄອນຫຼວງວຽງຈັນ, ຄຳມ່ວນ ແລະ ສະຫວັນນະເຂດ ເພື່ອເປັນຂໍ້ມູນໃນການປະຕິບັດແຜນດຳເນີນງານໂຄງການ ເພື່ອປັບປຸງປະສິດທິພາບຂອງໂຮງສີ ຜະລິດເປັນລະບົບທີ່ດີ ຈົນກ້າວໄປເຖິງຂໍການຮັບຮອງມາດຕະຖານ GMP.
- ຈັດກອງປະຊຸມວິຊາການກ່ຽວກັບການປັບປຸງ ແລະ ຍົກລະດັບສະມັດຕະພາບໂຮງສີເຂົ້າໃນການຜະລິດເປັນສິນຄ້າ ຮ່ວມກັບ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ, ສາລະວັນ ແລະ ຈຳປາສັກ.
- ສຳເລັດການແນະນຳ ແລະ ໃຫ້ຄຳປຶກສາການສ້າງໂຮງສີເຂົ້າຕົວແບບ ໄດ້ 1 ແຫ່ງ.
- ຈັດກອງປະຊຸມວິຊາການ ຈຳວນ 04 ຄັ້ງ ກ່ຽວກັບການປັບປຸງ ແລະ ຍົກລະດັບສະມັດຕະພາບໂຮງສີເຂົ້າໃນການຜະລິດເປັນສິນຄ້າ ໃນປີ 2019 ທີ່ ແຂວງຫຼວງນໍ້າທາ, ບໍ່ແກ້ວ, ນະຄອນຫຼວງ ວຽງຈັນ ແລະ ແຂວງຈຳປາສັກ.
- ກຳນົດຄວາມເປັນໄປໄດ້ໃນການຊຸກຍູ້ສົ່ງເສີມໂຮງສີເຂົ້າ ໂດຍໄດ້ຄັດເລືອກໂຮງສີເຂົ້າຈຳນວນໜຶ່ງ ທີ່ຄາດວ່າຈະປະຕິບັດເປັນການທົດລອງຊຸກຍູ້ສົ່ງເສີມໃນການປັບປຸງປະສິດທິພາບຂອງໂຮງສີເຂົ້າ ໃຫ້ສາມາດຜ່ານການຮັບຮອງ GMP.
- ໄດ້ຝຶກອົບຮົບຍົກລະດັບສະມັດຖະພາບໂຮງສີເຂົ້າໃນການຜະລິດເປັນສິນຄ້າ ໂດຍໄດ້ນຳເອົາຊ່ຽວຊານມາເຜີຍແຜ່ໃຫ້ຄວາມຮູ້ກ່ຽວກັບມາດຕະຖານ GMP, ISO, 5 ສ ໃຫ້ແກ່ຫົວໜ່ວຍທຸລະກິດໂຮງສີເຂົ້າ ແລະ ໂຮງງານປຸງແຕ່ງອາຫານ.
- ໄດ້ໃຫ້ຄຳປຶກສາ ແລະ ນຳພາ ໂຮງສີເຂົ້າແຈ້ງສະຫວ່າງ ຈັດຕັ້ງປະຕິບັດປັບປຸງໂຄງຂ່າຍການຜະລິດຂອງໂຮງສີເຂົ້າຈົນໄດ້ຮັບຮອງ GMP ໃນປີ 2019 ແລະ ຊຸກຍູ້ສົ່ງເສີມໂຮງສີເຂົ້າສຸທັດ ເພື່ອສ້າງໃຫ້ເປັນໂຮງງານຕົວແບບ ແລະ ມາດຕະຖານ GMP.

### 3.4.2 ໂຄງການປັບປຸງ ແລະ ດັດສົມໂຮງງານຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ປຸງແຕ່ງຜະລິດຕະພັນຊີ້ນ ແລະ ຜະລິດຕະພັນສັດນໍ້າ:

- ເກັບກຳຂໍ້ມູນບັນດາໂຮງງານຂ້າສັດ ຢູ່ 10 ແຂວງເປົ້າໝາຍ ແລະ ປະຊຸມລະດົມຄວາມຄິດເຫັນຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອກຳນົດທິດທາງໃນການຊຸກຍູ້ສົ່ງເສີມ ໂດຍສະເພາະແມ່ນການກຳນົດເປົ້າໝາຍໂຮງງານຂ້າສັດທີ່ທັນສະໄໝ ແລະ ຈຸດຂ້າສັດຍ່ອຍໃນເມືອງໃຫຍ່ຂອງແຂວງ ແລະ ຈຸດຂ້າສັດຍ່ອຍຢູ່ບັນດາເມືອງຫ່າງໄກ ພ້ອມທັງນະໂຍບາຍຕ່າງໆທີ່ຈຳເປັນໃນການສະໜັບສະໜູນ. ນອກຈາກນີ້ກໍ່ໄດ້ສະເໜີໃຫ້ບັນດາແຂວງເປົ້າໝາຍກຳນົດ ຫຼື ຄັດເລືອກເອົາໂຮງງານທີ່ຈະສ້າງເປັນຕົວແບບ.
- ລົງເຜີຍແຜ່ກ່ຽວກັບມາດຕະຖານຂອງໂຮງງານຂ້າສັດ ແລະ ຈຸດຂ້າສັດຍ່ອຍ ແລະ ເຮັດບັນທຶກການປັບປຸງມາດຕະຖານໂຮງງານຂ້າສັດ ໃນຈຳນວນ 07 ແຂວງ ຄື: ນະຄອນຫຼວງວຽງຈັນ, ຫຼວງພະບາງ, ຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ.

- ລົງຕິດຕາມ ແລະ ປະເມີນຄືນຜົນການປັບປຸງໂຮງງານຂ້າສັດທີ່ຖືກຄັດເລືອກຈະສ້າງເປັນໂຮງງານຕົວແບບຢູ່ແຂວງຫຼວງພະບາງ, ວຽງຈັນ, ຄຳມ່ວນ ແລະ ສະຫວັນນະເຂດ.
- ສືບຕໍ່ສ້າງໂຮງງານຂ້າສັດໃຫ້ໄດ້ຮັບເປັນໂຮງງານຕົວແບບການຜະລິດທີ່ດີ (GMP) ຢູ່ບາງແຂວງ ເປັນຕົ້ນແຂວງສະຫວັນນະເຂດ, ຫຼວງພະບາງ, ອຸດສາຫະກຳ ແລະ ການຄ້ານະຄອນຫຼວງວຽງຈັນ ໃນການຈັດຕັ້ງປະຕິບັດໂຄງການຜະລິດສິນຄ້າ ແລະ ຄ້ຳປະກັນສະບຽງອາຫານ.

3.4.3 <u>ໂຄງການສົ່ງເສີມໂຮງງານຜະລິດປຸ໋ຍຊີວະພາບໃຫ້ເປັນໂຮງງານຕົວແບບດ້ານມາດຕະຖານໂຮງງານ ແລະ ມາດຕະຖານຜະລິດຕະພັນ:</u>

- ລົງເກັບກຳຂໍ້ມູນໂຮງງານຜະລິດປຸ໋ຍຊີວະພາບ 13 ແຫ່ງ ທີ່ຕັ້ງຢູ່ 6 ແຂວງ ແລະ ຈັດກອງປະຊຸມຮ່ວມກັບພາກລັດ, ຜູ້ປະກອບການ, ຜູ້ຜະລິດ ແລະ ຜູ້ຊົມໃຊ້ປຸ໋ຍຊີວະພາບ ຢູ່ພາກກາງ ແລະ ພາກໃຕ້ ກ່ຽວກັບການສົ່ງເສີມການຜະລິດ, ຍົກລະດັບການແຂ່ງຂັນ ແລະ ການນຳໃຊ້ປຸ໋ຍຊີວະພາບພາຍໃນ.
- ສ້າງຮ່າງແຜນນະໂຍບາຍກ່ຽວກັບປຸ໋ຍຊີວະພາບຢູ່ ສປປ ລາວ ແລະ ໄດ້ຈັດກອງປະຊຸມຜ່ານຮ່າງດັ່ງກ່າວ ຢູ່ນະຄອນຫຼວງວຽງຈັນ ແລະ ຈຳປາສັກ ແລະ ຈັດຝຶກອົບຮົມໃຫ້ຜູ້ປະກອບການໂຮງງານຜະລິດປຸ໋ຍຊີວະພາບກ່ຽວກັບການບໍລິການ ແລະ ການຈັດການໂຮງງານ ຢູ່ນະຄອນຫຼວງວຽງຈັນ.
- ໄດ້ແນະນຳໂຮງງານຜະລິດປຸ໋ຍຊີວະພາບ ທີ່ເປັນເປົ້າໝາຍໃນການສ້າງເປັນໂຮງງານຕົວແບບ ດ້ານມາດຕະຖານໂຮງງານ ແລະ ມາດຕະຖານຜະລິດຕະພັນປຸ໋ຍຊີວະພາບ ແລະ ນຳເອົາຕົວຢ່າງປຸ໋ຍຊີວະພາບ 5 ຕົວຢ່າງ ຂອງ 5 ໂຮງງານ ໄປວິໄຈຢູ່ຫ້ອງທົດລອງຂອງສູນປ້ອງກັນພືດ, ກະຊວງກະສິກຳ ແລະ ປ່າໄມ້ ເພື່ອຢັ້ງຢືນມາດຕະຖານ ແລະ ຄຸນນະພາບຂອງປຸ໋ຍຊີວະພາບໃຫ້ກັບໂຮງງານດັ່ງກ່າວ.
- ກຳນົດ ແລະ ສົ່ງເສີມສ້າງເປັນໂຮງງານປຸ໋ຍຊີວະພາບຕົວແບບຢ່າງໜ້ອຍ 1 ໂຮງງານ, ຢູ່ແຂວງວຽງຈັນ.
- ຈັດຕັ້ງປະຕິບັດໂຄງການຟື້ນຟູໂຮງງານປຸ໋ຍຊີວະພາບ ແລະ ກຳລັງປັບປຸງຮ່າງນະໂຍບາຍຝຸ່ນອົງຄະທາດ ແລະ ຈັດຕັ້ງປະຕິບັດສົ່ງເສີມສ້າງເປັນໂຮງງານໂຕແບບຢ່າງໜ້ອຍ 1 ໂຮງ ຢູ່ແຂວງວຽງຈັນ.
- ຊຸກຍູ້ຍົກລະດັບປະສິດທິພາບການຜະລິດປຸ໋ຍຊີວະພາບ ຈຳນວນ 2 ໂຮງງານຄື: ໂຮງງານຜະລິດປຸ໋ຍຊີວະພາບຂອງ ບໍລິສັດ ໄກອາວິຕ້າ ຕັ້ງຢູ່ ເມືອງໄຊທານີ, ນະຄອນຫຼວງວຽງຈັນ ແລະ ບໍລິສັດລາວ-ຈີນຊຸຍວິທະຍາສາດເຕັກນິກນິເວດ ຕັ້ງຢູ່ ເມືອງປາກລາຍ, ແຂວງໄຊຍະບູລີ ເພື່ອປັບປຸງ ແລະ ກວດກາມາດຕະຖານ ເພື່ອຢັ້ງຢືນຄຸນນະພາບ.

## 3.5 ການສົ່ງເສີມ ແລະ ດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້:

ເພື່ອຜັນຂະຫຍາຍ ຄຳສັ່ງເລກທີ 15/ນຍ, ລົງວັນທີ 13/5/2016 ແລະ ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 930/ຫສນຍ.ກສສ, ລົງວັນທີ 5/7/2016 ກ່ຽວກັບການກວດກາຮື້ຖອນໂຮງເລື່ອຍ ແລະ ໂຮງງານປຸງແຕ່ງໄມ້ ທີ່ຕັ້ງຢູ່ 3 ປະເພດປ່າ ໃນຂອບເຂດທົ່ວປະເທດ, ກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ຈັດຕັ້ງປະຕິບັດແຜນການປັບປຸງ ແລະ ດັດສົມໂຮງງານປຸງແຕ່ງໄມ້ ທັງເປັນໃຈກາງປະສານສົມທົບກັບຂະແໜງການກ່ຽວຂ້ອງ ແລະ ທ້ອງຖິ່ນ ຊຶ່ງສາມາດປະຕິບັດໄດ້ດັ່ງນີ້:

3.5.1 <u>ການຊຸກຍູ້ ແລະ ສົ່ງເສີມ:</u>

- ໄດ້ສຳເລັດການລິເລີ່ມການຊຸກຍູ້ສ້າງຕັ້ງເຄືອຂ່າຍ (Cluster) ໃນສະມາຄົມເຟີນິເຈີ ດ້ວຍການສ້າງຫຼັກສູດການຝຶກອົບຮົມການປຸງແຕ່ງໄມ້ ແລະ ໄດ້ສົ່ງນາຍຊ່າງເຂົ້າຮ່ວມຝຶກອົບຮົມ ຢູ່ເມືອງ OKAWA ປະເທດຍີ່ປຸ່ນ 3 ຄັ້ງ ໂດຍມີນາຍຊ່າງ 10 ຄົນ ເຂົ້າຮ່ວມ ແລະ ຈັດຝຶກອົບຮົມພັດທະນາສີມືແຮງງານໃນການຜະລິດ

ເຄື່ອງເຟີນີເຈີ ແລະ ການເລື່ອຍໄມ້ຢູ່ 4 ຄັ້ງ, ຊຶ່ງມີນາຍຊ່າງໄມ້ຂອງ 6 ໂຮງງານປຸງແຕ່ງໄມ້ ແລະ 3 ໂຮງຮຽນວິຊາຊີບ ເຂົ້າຮ່ວມ, ລວມ 75 ຄົນ.

- ໄດ້ຍົກລະດັບ ແລະ ຕິດຕັ້ງເຄື່ອງຈັກ-ອຸປະກອນ ຈຳນວນໜຶ່ງຈາກຍີ່ປຸ່ນ ເພື່ອມາຕິດຕັ້ງຢູ່ສະຖານທີ່ສຳລັບຝຶກອົບຮົມຍົກລະດັບສີມືແຮງງານ ຄື: ສູນທົດສອບ ແລະ ພັດທະນາສີມືແຮງງານເວດສະພົງ, ໂຮງງານຂອງກຸ່ມບໍລິສັດອຸດສາຫະກຳເຟີນີເຈີລາວ ແລະ ໂຮງງານເຟີນີເຈີວຽງນິຍົມ.
- ໄດ້ຍົກລະດັບຄວາມຮູ້ພື້ນຖານໃຫ້ພະນັກງານ ແລະ ຜູ້ດຳເນີນກິດຈະການ ກ່ຽວກັບວຽກງານຄວບຄຸມຕ່ອງໂສ້ການສະໜອງໄມ້ ລວມທັງການຮຽນຮູ້ຂັ້ນຕອນຂອງການຕິດຕາມກວດກາໄມ້ສົ່ງເຂົ້າ ແລະ ສົ່ງອອກ ໂດຍຈັດຝຶກອົບຮົມ ກ່ຽວກັບ ''ການກວດສອບ ແລະ ຕິດຕາມໄມ້ສົ່ງເຂົ້າ ແລະ ສົ່ງອອກ'' ຢູ່ແຂວງທົດລອງ ຄື ແຂວງ ອັດຕະປື ແລະ ຄຳມ່ວນ.
- ລົງຕິດຕາມກວດກາ ແລະ ເຂົ້າຮ່ວມປະຕິບັດວຽກງານ ໂດຍສະເພາະແມ່ນເກັບກຳສະພາບການລັກລອບໄມ້ຮ່ວມກັບຄະນະ 40/ນຍ ຢູ່ ແຂວງໄຊຍະບູລີ ແລະ ຊຽງຂວາງ ແລະ ລົງຊຸກຍູ້ຕິດຕາມ ແລະ ຕີລາຄາຜົນການຈັດຕັ້ງປະຕິບັດການປັບປຸງດັດສົມໂຮງງານປຸງແຕ່ງໄມ້ໃນຂອບເຂດທົ່ວປະເທດ ແລະ ເກັບກຳຂໍ້ມູນໂຮງງານອຸດສາຫະກຳປຸງແຕ່ງໄມ້ຈຳນວນໜຶ່ງ.
- ໄດ້ເຜີຍແຜ່ສຳເລັດວຽກງານສົ່ງເສີມ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ທ້ອງຖິ່ນຢູ່ 3 ພາກຄື: ພາກກາງ, ພາກເໜືອ ແລະ ພາກໃຕ້.

3.5.2 <u>ດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້:</u>

- ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຄຳສັ່ງ ເລກທີ 15/ນຍ, ລົງວັນທີ 13/5/ 2016 ໃນການລາຍງານຄວາມຄືບໜ້າກ່ຽວກັບການປັບປຸງ ແລະ ດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ທົ່ວປະເທດ ໃຫ້ລັດຖະບານເປັນປະຈຳແຕ່ລະງວດ. ມາເຖິງວັນທີ 27 ກໍລະກົດ 2020 ໂຮງງານອຸດສາຫະກຳປຸງແຕ່ງໄມ້ຍັງເຫຼືອ 1.030 ໂຮງງານ, ໃນນີ້ມີໂຮງງານເລື່ອຍໄມ້ 08 ໂຮງງານ, ໂຮງງານປຸງແຕ່ງໄມ້ສຳເລັດຮູບ 374 ໂຮງງານ ແລະ ໂຮງງານເຟີນີເຈີ 648 ໂຮງງານ. ພາຍຫຼັງມີຄຳສັ່ງ ເລກທີ 15/ນຍ ໄດ້ສືບຕໍ່ຍຸບເລີກທຸລະກິດປຸງແຕ່ງໄມ້ຂະໜາດນ້ອຍແບບຄອບ ຄົວຈຳນວນ 1.230 ຫົວໜ່ວຍ, ປະຈຸບັນຍັງເຫຼືອ 122 ຫົວໜ່ວຍ.
- ໄດ້ປະເມີນຜົນການຈັດຕັ້ງປະຕິບັດ ໂດຍການຈັດກອງປະຊຸມ ປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້ ສະບັບເລກທີ 0719/ອຄ, ລົງວັນທີ 3 ເມສາ 2009 ຢູ່ 3 ແຂວງຄື: ແຂວງ ຊຽງຂວາງ, ຄຳມ່ວນ ແລະ ອັດຕະປື.

## 3.6 ການສົ່ງເສີມຫັດຖະກຳ

3.6.1 <u>ໂຄງການສົ່ງເສີມສິນຄ້າຫັດຖະກຳ:</u>

- ໄດ້ສຳເລັດການສົ່ງເສີມວິຊາຊີບຫັດຖະກຳ ເພື່ອສົ່ງເສີມການຜະລິດ ເປັນຕົ້ນ ການຈັກສານໄມ້ປ່ອງ ທີ່ແຂວງຫຼວງພະບາງ ແລະ ຫຼວງນໍ້າທາ, ການແກະສະຫຼັກໄມ້ ທີ່ນະຄອນຫຼວງ ແລະ ບໍລິຄຳໄຊ, ເຄື່ອງປັ້ນດິນເຜົາ ທີ່ແຂວງຄຳມ່ວນ, ແກະສະຫຼັກຫີນ ທີ່ແຂວງຈຳປາສັກ, ຕໍ່າຫູກ ແລະ ຍ້ອມສີທຳມະຊາດ ທີ່ແຂວງສາລະວັນ ແລະ ການແກະສະຫຼັກໄມ້ ເພື່ອເປັນຜະລິດຕະພັນ ODOP ທີ່ນະຄອນຫຼວງວຽງຈັນ.
- ຊຸກຍູ້ການສະກັດກັ້ນການນຳເຂົ້າ ແລະ ຈຳໜ່າຍສິນຄ້າ (ສິ້ນໄໝລອກຮຽນແບບ), ການຄຸ້ມຄອງ ແລະ ຕິດຕາມການນຳເຂົ້າສິ້ນໄໝ ຫຼື ຮ້ານຂາຍສິ້ນໄໝຄ້າຍຄືລວດລາຍສິ້ນ ໄໝລາວ ເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ້ນໄໝລາຍລາວ ແລະ ວາງແຜນກະຕຸ້ນຫັດຖະກຳຕໍ່າຫູກ.

3.6.2 ໂຄງການພັດທະນາສິນຄ້າຫັດຖະກຳແບບຍືນຍົງ:

- ໄດ້ສຳເລັດການພັດທະນາສີມືແຮງງານຍົກລະດັບຄວາມຮູ້ຄວາມສາມາດ ດ້ວຍຮູບແບບຝຶກເປັນຜູ້ຝຶກຕໍ່ (TOT) ເປັນຕົ້ນ ການອອກແບບ ແລະ ພັດທະນາຜະລິດຕະພັນ, ການຜະລິດສິນຄ້າຫັດຖະກຳເປັນເຄື່ອງທີ່ລະນຶກ, ການນຳໃຊ້ວັດຖຸດິບ ແລະ ເຕັກນິກວິທະຍາສາດເຂົ້າໃນການຜະລິດສິນຄ້າ ເພື່ອໃຫ້ໄດ້ມາດຕະຖານ ແລະ ຄຸນນະພາບ, ການສ້າງເປັນກຸ່ມຫັດຖະກຳ, ການເຂົ້າຫາແຫຼ່ງທຶນ ແລະ ດ້ານການຕະຫຼາດ ຄື: ຫັດຖະກຳແຜ່ນແພ ແລະ ຍ້ອມສີທຳມະຊາດມີ 145 ຫົວໜ່ວຍ, ແກະສະຫຼັກໄມ້ 102 ຫົວ ໜ່ວຍ, ຫັດຖະກຳເຄື່ອງປັ້ນດິນເຜົາ 30 ຫົວໜ່ວຍ. ພ້ອມນີ້ ຜະລິດຕະພັນຈາກແຜ່ນແພ, ຈັກສານຫວາຍໄມ້ປ່ອງ ແລະ ແກະສະຫຼັກໄມ້ ມີຫຼາກຫຼາຍຜະລິດຕະພັນໄດ້ຮັບການຢັ້ງຢືນກາໝາຍ ODOP ແລະ ກໍ່ຍັງເປັນສິນຄ້າທີ່ໄດ້ຮັບລາງວັນ ໃນລະດັບປະເທດ ແລະ ລະດັບພາກພື້ນ.

3.6.3 ໂຄງການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ ກຸ່ມຜູ້ຜະລິດຫັດຖະກຳຈັກສານແຂວງວຽງຈັນ

- ສ້າງຄວາມເຂັ້ມແຂງໃຫ້ກຸ່ມຫັດຖະກຳຈັກສານ ແລະ ສົ່ງເສີມການຜະລິດຜະລິດຕະພັນຈັກສານໃຫ້ແກ່ ກຸ່ມຜູ້ຜະລິດຈາກແຂວງວຽງຈັນ ແລະ ແຂວງຫົວພັນ ເພື່ອແລກປ່ຽນບົດຮຽນ ແລະ ເຕັກນິກໃນການຈັກສານເປັນເຄື່ອງທີ່ລະນຶກເຊື່ອມໂຍງກັບການທ່ອງທ່ຽວ;
- ຄົ້ນຄວ້າ ແລະ ຈັດພິມ ປຶ້ມຈັກສານຜະລິດຕະພັນໄມ້ປ່ອງ ຄັ້ງທີ I ໂດຍໄດ້ຮັບທຶນສະໜັບສະໜູນຈາກກອງທຶນສົ່ງເສີມ SME.

3.6.4 ໂຄງການຄົ້ນຄວ້າ ແລະ ສະກັດສີຈາກພືດເພື່ອນຳເຂົ້າໃນການຍ້ອມໄໝ:

- ສຳເລັດການຄົ້ນຄວ້າ ແລະ ຈັດພິມປຶ້ມຄູ່ມືການສະກັດສີຈາກພືດທຳມະຊາດເພື່ອໃຫ້ວິຊາການໄດ້ເອົາບົດຮຽນດັ່ງກ່າວນຳໃຊ້ເຂົ້າໃນຂະບວນການຍ້ອມໄໝ ໂດຍໄດ້ຮັບ ທຶນສະໜັບສະໜູນຈາກຫ້ອງການສະພາວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ;
- ເຜີຍແຜ່ຄວາມຮູ້ກ່ຽວກັບຜົນການຄົ້ນຄວ້າ ການສະກັດສີຈາກພືດທຳມະຊາດເຂົ້າໃນການຍ້ອມໄໝ ໃຫ້ແກ່ຂະແໜງ ການທີ່ກ່ຽວຂ້ອງ, ກຸ່ມຜູ້ຜະລິດ/ຊາວຊ່າງຫັດຖະກຳ ແລະ ບຸກຄົນທົ່ວໄປ ທີ່ແຂວງວຽງຈັນ, ເຊກອງ ແລະ ສາລະວັນ ຮັບຮູ້ເຂົ້າໃຈ ແລະ ສາມາດນຳໃຊ້ເຂົ້າໃນການຜະລິດ.

3.6.5 ໂຄງການສົ່ງເສີມວັນຫັດຖະກຳແຫ່ງຊາດ

- ເຜີຍແຜ່ ໃຫ້ສັງຄົມໄດ້ຮັບຮູ້ ວັນທີ 1 ພະຈິກ ເປັນວັນຫັດຖະກຳແຫ່ງຊາດ ແລະ ສະເຫຼີມສະຫຼອງງານຫັດຖະກຳ ນັບແຕ່ປີ 2016-2020 ໄດ້ມີການຈັດງານວາງສະແດງຢ່າງເປັນຂະບວນຟົດຟື້ນໃນງານໄດ້ມີຫຼາຍກິດຈະກຳ ເພື່ອເປັນການໂຄສະນາຜະລິດຕະພັນຫັດຖະກຳຕິດພັນກັບການທ່ອງທ່ຽວ ແລະ ຊຸກຍູ້, ສົ່ງເສີມດ້ານການຕະຫຼາດ ຄຽງຄູ່ໄປກັບການອະນຸລັກຫັດຖະກຳທີ່ເປັນເອກະລັກສະເພາະຂອງທ້ອງຖິ່ນ ແລະ ຂອງຊາດ ໃຫ້ມີຄວາມຍືນຍົງ.
- ສຳເລັດການຈັດງານສະເຫຼີມສະຫຼອງ ວັນຫັດຖະກຳແຫ່ງຊາດ ຄັ້ງທີ I ປະຈຳປີ 2020 ງານດັ່ງກ່າວ ໄດ້ຂຶ້ນໃນງານມະຫາກຳສີມືຫັດຖະກຳ ຄັ້ງທີ 19 ທີ່ສູນການຄ້າ ລາວ-ໄອເຕັກ ນະຄອນຫຼວງວຽງຈັນ. ພິເສດ ປີ 2020 ເນັ້ນກິດຈະກຳ ອອນລາຍ (online) ແລະ ປັບວິທີການ ເນື່ອງຈາກການລະບາດຂອງພະຍາດໂຄວິດ-19.

3.6.6 ການສ້າງກຸ່ມຫັດຖະກຳຕົວແບບ:

ໄດ້ລົງຊຸກຍູ້ ແລະ ສ້າງກຸ່ມຫັດຖະກຳຕົວແບບ ໄດ້ຈຳນວນ 2 ກຸ່ມ ຄື:

1) ກຸ່ມຫັດຖະກຳແກະສະຫຼັກໄມ້ ບ້ານໄຜ່ລ້ອມ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ເພື່ອເປັນການພັດທະນາຊຸມຊົນກ່ຽວກັບການຜະລິດແກະສະຫຼັກໄມ້ ດ້ວຍວິທີການສ້າງເປັນກຸ່ມ, ການພັດທະນາພັດທະນາສີມື ແລະ ຖ່າຍທອດເຕັກນິກວິຊາການ, ການເຂົ້າຫາແຫຼ່ງທຶນ, ດ້ານການຕະຫຼາດ ແລະ ເຮັດໃຫ້ກຸ່ມດັ່ງກ່າວ ໄດ້ຮັບການຢັ້ງຢືນກາໝາຍ ODOP, ພ້ອມທັງໄດ້ເຂົ້າຮ່ວມງານວາງສະແດງໃນລະດັບປະເທດ ແລະ ລະດັບພາກພື້ນ.

2) ກຸ່ມຫັດຖະກຳຕໍ່າຫູກບ້ານທ່າໂພໄຊ, ເມືອງວຽງຄໍາ, ແຂວງວຽງຈັນ ໄດ້ສົ່ງເສີມກ່ຽວ ກັບການຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ຊາວຊ່າງຫັດຖະກຳກ່ຽວກັບຂັ້ນຕອນການຍ້ອມສີທຳມະຊາດ, ການນຳໃຊ້ເຕັກນິກໃນການຍ້ອມສີເພື່ອເຮັດໃຫ້ເສັ້ນໄໝໄດ້ມາດຕະຖານ ແລະ ຄຸນນະພາບສາມາດແຂ່ງຂັນໄດ້ໃນດ້ານການຕະຫຼາດ ແລະ ເປັນທີ່ຍອມຮັບຂອງຜູ້ຊົມໃຊ້.

3.6.7 <u>ການຮ່ວມມືກັບສະມາຄົມຫັດຖະກຳລາວ:</u>

ໃນຫຼາຍປີຜ່ານມາກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ຮ່ວມມືກັບສະມາຄົມຫັດຖະກຳລາວ ຢ່າງສະໜິດແໜ້ນ ແລະ ມີການປະສານງານກັນຢ່າງໃກ້ສິດ ແລະ ມີຜົນສຳເລັດຫຼາຍດ້ານ ເປັນຕົ້ນ: ການຈັດງານມະຫາກຳສີມືຫັດຖະກຳລາວປະຈຳປີ ແລະ ວຽກງານອື່ນໆ ເພື່ອເປັນການສ້າງຄວາມເຂັ້ມແຂງໃຫ້ສະມາຄົມຫັດຖະກຳ ເພື່ອເປັນການອະນຸລັກຮັກສາຮີດຄອງປະເພນີຂອງຊາດໄວ້ໃຫ້ຍືນຍົງ.

## 3.7 ວຽກງານສົ່ງເສີມການຜະລິດທີ່ສະອາດ

ໄລຍະປີ 2016-2020 ໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມວຽກງານການຜະລິດທີ່ສະອາດ ໂດຍການຈັດຕັ້ງປະຕິບັດໂຄງການຕ່າງໆ ເພື່ອຫຼຸດຜ່ອນທາດອາຍພິດເຮືອນແກ້ວ ໃນ ສປປ ລາວ ເປັນຕົ້ນ: ປີ 2016 ຄັດເລືອກເອົາໂຮງງານເກືອເວີນຄຳ, ໂຮງງານເກືອບໍ່ເຕັນ ແລະ ໂຮງງານປຸງແຕ່ງໄມເຟີນີເຈີລາວ ເພື່ອເປັນຕົວແບບໃນການສາທິດການນຳໃຊ້ສິ່ງເສດເຫຼືອໃຫ້ເປັນພະລັງງານ; ປີ 2017 ທົດລອງຕົ້ມເກືອດ້ວຍໝໍ້ອາຍນໍ້າໂດຍນຳໃຊ້ເຊື້ອເພີງອັດເມັດເປັນພະລັງງານຢູ່ໂຮງງານເກືອເວີນຄຳ; ປີ 2018 ທົດລອງປ່ຽນແທນການຕົ້ມເກືອດ້ວຍຟືນ ຫຼື ຖ່ານຫີນ ດ້ວຍການຕົ້ມເກືອດ້ວຍເຮືອນແກ້ວ. ນອກຈາກນີ້, ໄດ້ປະສານສົມທົບກັບອົງການຢູນີໂດ ແລະ ກະຊວງທີ່ກ່ຽວຂ້ອງ ເພື່ອສ້າງຕັ້ງສູນຮຽນຮູ້ ແລະ ຂໍ້ມູນຂ່າວສານ ຢູ່ສະຖາບັນພະລັງງານທົດແທນ ແລະ ວັດສະດຸໃໝ່ ໂດຍສຳຫຼວດສິ່ງເສດເຫຼືອຊີວະມວນໃນຂອບເຂດທົ່ວປະເທດ ໂດຍເນັ້ນໃສເພື່ອເກັບກຳປະລິມານສິ່ງເສດເຫຼືອຢູ່ໂຮງງານປຸງແຕ່ງໄມ້, ໂຮງງານອົບສາລີ, ໂຮງງານອົບໝາກເດືອຍ, ໂຮງສີເຂົ້າ ຊຶ່ງມີປະລິມານຫຼາຍກວ່າ 113,000 ໂຕນ ທີ່ພຽງພໍຕໍ່ການຜະລິດຊີວະມວນອັດເມັດ, ປະຈຸບັນ ກຳລັງພິຈາລະນາ ເພື່ອຄັດເລືອກ 4 ໂຮງງານເປົ້າໝາຍ ເພື່ອສົ່ງສະໝັກເຂົ້າຮ່ວມໂຄງການ. ຄຽງຄູ່ກັນ ກໍ່ໄດ້ດຳເນີນໂຄງການສ້າງຍຸດທະສາດຊີວະມວນອັດເມັດ ແລະ ເອກະສານການສ້າງເຕົາທົດລອງນຳໃຊ້ຊີວະມວນອັດເມັດຢູ່ໂຮງງານເກືອ ແລະ ໃຫ້ຄວາມຮູ້ ແລະ ວິທີການໃນການຜະລິດທີ່ສະອາດ ໃຫ້ແກ່ໂຮງງານອຸດສາຫະກຳຈຳນວນໜຶ່ງ ໂດຍໄດ້ເປີດຫ້ອງການທີ່ປຶກສາດ້ານການຜະລິດທີ່ສະອາດຢູ່ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.

ພ້ອມກັນນັ້ນ, ໄດ້ຊຸກຍູ້ສົ່ງເສີມການປູກປ່າເພື່ອຂາຍ carbon credit; ການຫຼຸດຜ່ອນການນຳໃຊ້ພະລັງງານ ແລະ ມົນລະພິດຕໍ່ສິ່ງແວດລ້ອມຂອງໂຮງງານຊີມັງ ໂດຍໄລຍະຕົ້ນຄັດເລືອກໂຮງງານຊີມັງວັງວຽງຫຼັງ 2 ແລະ 3 ເປັນຕົວແບບໃນການນຳໃຊ້ເຕັກໂນໂລຊີ ນຳຄວາມຮ້ອນຈາກເຕົາເຜົາມາຕົ້ມນໍ້າ ແລະ ຜະລິດເປັນກະແສໄຟຟ້າ ແລະ ການນຳໃຊ້ອາຍຮ້ອນ $co_2$ ຜະລິດອາຍແກັສເມຕານ ທີ່ສາມາດນຳໃຊ້ເຂົ້າເປັນພະລັງງານຄວາມຮ້ອນຂອງໂຮງງານ ຫຼື ຂາຍເປັນແກັສຫຸງຕົ້ມ.

### 3.8 ການເຄື່ອນໄຫວປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດໂຄວິດ-19

ນັບແຕ່ມີການລະບາດຂອງພະຍາດໂຄວິດ-19 ໃນທົ່ວໂລກ, ສປປ ລາວ ກໍ່ເປັນໜຶ່ງໃນປະເທດທີ່ໄດ້ຮັບຜົນກະທົບທາງດ້ານເສດຖະກິດ ແລະ ສັງຄົມ, ໃນນັ້ນ ຂະແໜງອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ກໍ່ແມ່ນໜຶ່ງໃນຂະແໜງການທີ່ໄດ້ຮັບຜົນກະທົບໃນໄລຍະຂອງການລະບາດ. ໄດ້ຈັດຕັ້ງປະຕິບັດວຽກງານປ້ອງກັນ, ຄຸ້ມຄອງ ແລະ ແກ້ໄຂ ເປັນຕົ້ນ ເຂົ້າຮ່ວມກອງປະຊຸມຂອງຄະນະສະເພາະກິດ ເພື່ອຕິດຕາມສະພາບການລະບາດ ທັງຂໍທິດຊີ້ນໍາ ແລະ ປຶກສາຫາລື ກັບຄະນະສະເພາະກິດ ໃນການປັບປຸງແຈ້ງການ ແລະ ຄໍາແນະນໍາ ທີ່ກ່ຽວຂ້ອງກັບການປ້ອງກັນ ແລະ ຄວບຄຸມການລະບາດ ຂອງພະຍາດໂຄວິດ-19 ໃນໂຮງງານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ເຊັ່ນ: ຜັນຂະຫຍາຍຄໍາສັ່ງເລກທີ 06/ນຍ ແລະ ແຈ້ງການລັດຖະບານກ່ຽວກັບການປ້ອງກັນ ແລະ ຄວບຄຸມ ການລະບາດຂອງພະຍາດໂຄວິດ-19, ໂດຍໄດ້ອອກແຈ້ງການ ແລະ ຄໍາແນະນໍາ ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ໂຮງງານ ທົ່ວປະເທດ ຈໍານວນ 13 ເອກະສານ ເປັນຕົ້ນ: ແຈ້ງການ ວ່າດ້ວຍການຮັບມືການລະບາດຂອງພະຍາດໂຄວິດ-19 ຢູ່ສະຖານປະກອບການໂຮງງານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ສະບັບເລກທີ 0484/ຫອຄ.ກອຫ, ແຈ້ງການວ່າດ້ວຍການປິດໂຮງງານອຸດສາຫະກໍາຊົ່ວຄາວ ໄລຍະວັນທີ 1-19 ເມສາ 2020 ສະບັບເລກທີ 0348/ອຄ.ກອຫ, ແຈ້ງການ ການຕິດຕາມກວດກາ ແລະ ລາຍງານການຈັດຕັ້ງປະຕິບັດ ຄໍາສັ່ງສະບັບເລກທີ 06/ນຍ ແລະ ແຈ້ງການສະບັບເລກທີ 0348/ອຄ.ກອຫ; ໄດ້ລົງຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໃນໄລຍະທີ່ມີການລະບາດຂອງພະຍາດໂຄວິດ-19, ໄດ້ລົງຊຸກຍູ້ການສ້າງຕັ້ງໂຮງງານໂຮງ ງານຜະລິດຜ້າອັດປາກ-ດັງ ແລະ ເອື້ອອໍານວຍຄວາມສະດວກ ແລະ ເຮັດບົດປະເມີນຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ໃນພາກອຸດສາຫະກໍາປຸງແຕ່ງ ແລະ ສະເພາະປະເມີນພາກອຸດສາຫະກໍາປຸງແຕ່ງໄມ້ ແມ່ນໄດ້ຮ່ວມມືກັບພາກສ່ວນຕ່າງໆ ເຊັ່ນ: ອົງການ ສະຫະປະຊາຊາດເພື່ອການພັດທະນາອຸດສາຫະກໍາ (ຢູນິໂດ), ສູນການຄ້າສາກົນ (ໄອທີຊີ), ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ສະມາຄົມຫັດຖະກໍາ.

## 4. ການປະເມີນຈຸດດີ, ຈຸດອ່ອນ, ກາລະໂອກາດ ແລະ ຄວາມສ່ຽງ

### 4.1 ຈຸດດີ

1) ມີກົດໝາຍ ແລະ ລະບຽບການເປັນບ່ອນອີງໃຫ້ແກ່ ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກງານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ;
2) ໄດ້ຮັບການຊີ້ນໍາຢ່າງໃກ້ຊິດຈາກການນໍາ ແລະ ໄດ້ຮັບການຮ່ວມມື ແລະ ປະສານງານທີ່ດີຈາກບັນດາກົມພາຍໃນກະຊວງອຸດສາຫະກໍາ ແລະ ການຄ້າ, ຂະແໜງການກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນອື່ນໆ;
3) ມີການແບ່ງງານໃນການຈັດຕັ້ງປະຕິບັດວຽກງານລະຫວ່າງກະຊວງອຸດສາຫະກໍາ ແລະ ການຄ້າ, ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ນະຄອນ ແລະ ລະຫວ່າງຂະແໜງ ອຄ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
4) ໄດ້ມີການຍົກລະດັບມາດຕະຖານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ເປັນຕົ້ນ: ມາດຕະຖານອາຄານ, ເຕັກນິກ ແລະ ເຕັກໂນໂລຊີການຜະລິດ, ຄຸນນະພາບຜະລິດຕະພັນ, ຄວາມປອດໄພ, ສຸຂະນາໄມ ແລະ ສິ່ງແວດລ້ອມ;
5) ຜະລິດຕະພັນຈາກຂະແໜງອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ເພີ່ມຂຶ້ນ ເພື່ອຈໍາໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ;
6) ຂະແໜງອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາໄດ້ມີບົດບາດສໍາຄັນໃນການປະກອບສ່ວນເຂົ້າໃນລວມຍອດຜະລິດຕະພັນພາຍໃນ (GDP);

7) ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເປັນຂະແໜງທີ່ໄດ້ສ້າງວຽກເຮັດງານທຳຫຼາຍພໍສົມຄວນ.

## 4.2 ຈຸດອ່ອນ

1) ການເຜີຍແຜ່ ກົດໝາຍ ແລະ ລະບຽບການ ໃຫ້ພາກລັດ ແລະ ຜູ້ປະກອບການທີ່ກ່ຽວຂ້ອງ ຍັງບໍ່ທົ່ວເຖິງ; ຄວາມເຂົ້າໃຈຂອງເຈົ້າໜ້າທີ່ຍັງບໍ່ເລິກເຊິ່ງ ຈຶ່ງເຮັດໃຫ້ການຕິດຕາມກວດກາ ວຽກງານອຸດສາຫະກຳປຸງແຕ່ງບໍ່ໄປຕາມກົດໝາຍ ແລະ ລະບຽບການກຳນົດໄວ້.
2) ພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ບາງຂະແໜງການທີ່ກ່ຽວຂ້ອງກໍ່ຍັງບໍ່ທັນຈະແຈ້ງ, ຊໍ້າຊ້ອນກັນຫຼາຍ ແລະ ບໍ່ສອດຄ່ອງກັບບັນດາປະເທດອາຊຽນ ແລະ ສາກົນ ຈຶ່ງເຮັດໃຫ້ການປະຕິບັດໜ້າທີ່ວຽກງານມີຄວາມຫຍຸ້ງຍາກ ເປັນຕົ້ນ: ການແບ່ງຄວາມຮັບຜິດຊອບລະຫວ່າງຂະແໜງອຸດສາຫະກຳ ແລະ ການຄ້າ ກັບຂະແໜງພະລັງງານ ແລະ ບໍ່ແຮ່, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສາທາລະນະສຸກ ແລະ ກະສິກຳ ແລະ ປ່າໄມ້;
3) ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເປັນວຽກງານທີ່ສະຫລັບຊັບຊ້ອນທາງດ້ານເຕັກນິກ ຊຶ່ງມີຄວາມຕ້ອງການດ້ານວິຊາສະເພາະ ແລະ ບຸກຄະລາກອນທີ່ມີຄວາມຮູ້, ຊຳນານງານສະເພາະດ້ານ ແຕ່ໃນຕົວຈິງແລ້ວຂະແໜງການນີ້ແມ່ນ ມີຈຳກັດຫຼາຍຕໍ່ບັນຫາດັ່ງກ່າວ ແລະ ລວມທັງແຮງງານໃນໂຮງງານຍັງມີໜ້ອຍ, ບໍ່ພຽງພໍກັບໜ້າວຽກຕົວຈິງ, ການສ້າງຄວາມເຂັ້ມແຂງດ້ານວິຊາການຍັງບໍ່ທົ່ວເຖິງ, ມີບາງກໍລະນີພະນັກງານທີ່ຜ່ານການຝຶກອົບຮົມແລ້ວ ພັດຖືກສັບປ່ຽນໄປເຮັດວຽກງານອື່ນ;
4) ການປະສານງານກັບທ້ອງຖິ່ນ ແລະ ຂະແໜງການກ່ຽວຂ້ອງບາງກໍລະນີຍັງບໍ່ທັນເປັນລະບົບ ແລະ ຄ່ອງຕົວເທົ່າທີ່ຄວນ;
5) ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ການເຂົ້າເຖິງແຫຼ່ງທຶນ ຂອງຜູ້ຜະລິດອຸດສາຫະກຳ ແລະ ຫັດຖະກຳ ໂດຍສະເພາະ SME ເຫັນວ່າຍັງຈຳກັດ;
6) ການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມ ແລະ ການຄຸ້ມຄອງຍັງເຮັດບໍ່ໄດ້ຢ່າງທົ່ວເຖິງ ແລະ ເຂັ້ມງວດ;
7) ຜູ້ປະກອບກິດຈະການໂຮງງານຈຳນວນໜຶ່ງ ຍັງບໍ່ໃຫ້ຄວາມສຳຄັນຕໍ່ການປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ;
8) ງົບປະມານ, ພາຫະນະ, ອຸປະກອນເຄື່ອງມື ແລະ ຫ້ອງທົດລອງ ເພື່ອຮັບໃຊ້ວຽກງານສົ່ງເສີມ ແລະ ຄຸ້ມຄອງຍັງຈຳກັດຫຼາຍ;
9) ການປຸງແຕ່ງຜະລິດພັນຈາກຊັບພະຍາກອນທຳມະຊາດ ລວມທັງໄມ້ ແລະ ແຮ່ທາດໃຫ້ເປັນຜະລິດຕະພັນສຳເລັດຮູບຍັງຢູ່ໃນຂອບເຂດຈຳກັດ;
10) ຖານການຜະລິດພາຍໃນ ຍັງບໍ່ເຂັ້ມແຂງ ແລະ ເປັນລະບົບຕ່ອງໂສ້, ສີມືແຮງງານຕໍ່າ, ຂາດແຄນແຮງງານທັງປະລິມານ ແລະ ຄຸນນະພາບ ການສະໜອງວັດຖຸດິບຍັງບໍ່ສະໝໍ່າສະເໝີ, ການບໍລິຫານໂຮງງານສ່ວນໃຫຍ່ຍັງບໍ່ທັນເປັນລະບົບ ເປັນຕົ້ນແມ່ນການສົ່ງເສີມການປຸງແຕ່ງຜະລິດຕະພັນກະສິກຳໃຫ້ເປັນຜະລິດຕະພັນສຳເລັດຮູບຍັງຈຳກັດ;
11) ການເຂົ້າເຖິງຕະຫຼາດພາຍໃນ ແລະ ຕ່າງປະເທດ ຍັງຈຳກັດ. ສະພາບຂໍ້ຂັດແຍງດ້ານການຄ້າເຮັດໃຫ້ກະທົບຕໍ່ການຂະຫຍາຍຕົວຂອງເສດຖະກິດ ແລະ ຄວາມຕ້ອງການຂອງຕະຫຼາດຫຼຸດລົງ ແລະ ບັນຫາຈາກການລະບາດຂອງພະຍາດໂຄວິດ-19
12) ການອຳນວຍຄວາມສະດວກສຳລັບການດຳເນີນທຸລະກິດໃນ ສປປ ລາວ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ ເປັນຕົ້ນ: ຂອດການຂໍອະນຸຍາດ, ການຂົນສົ່ງ, ການເຄື່ອນຍ້າຍ ແລະ ການນຳເຂົ້າ-ສົ່ງອອກ;

13) ການພັດທະນາ ໂຄງລ່າງພື້ນຖານຂອງເຂດ ແລະ ນິຄົມອຸດສາຫະກຳ ຍັງຈຳກັດ. ສະພາບເສັ້ນທາງ ແລະ ການຂົນສົ່ງ ຍັງບໍ່ສະດວກເທົ່າທີ່ຄວນ;
14) ການຊອກຫາຕະຫຼາດຫັດຖະກຳໃຫ້ຜູ້ປະກອບການຫັດຖະກຳໃນໄລຍະຜ່ານມາຍັງບໍ່ທັນໄດ້ດີເທົ່າທີ່ຄວນ;
15) ຂາດການຄົ້ນຄວ້າທີ່ເປັນລະບົບໃນການຊອກຫາວິທີທາງເພື່ອເຮັດໃຫ້ລາຄາເຄື່ອງຫັດຖະກຳລາວມີລາຄາທີ່ເໝາະສົມທີ່ປະຊາຊົນລາວທົ່ວໄປສາມາດຈັບຕ້ອງໄດ້ ເພື່ອເປັນການຂະຫຍາຍຕະຫຼາດຫັດຖະກຳລາວພາຍໃນປະເທດໃຫ້ຫຼາຍຂຶ້ນ.

## 4.3 ກາລະໂອກາດ

1) ສປປ ລາວ ມີຊາຍແດນຕິດກັບ ປະເທດທີ່ມີຕະຫຼາດໃຫຍ່ເປັນຕົ້ນ: ຈີນ, ຫວຽດນາມ ແລະ ໄທ;
2) ສປປ ລາວ ໄດ້ເຂົ້າຮ່ວມເປັນສະມາຊິກອົງການການຄ້າໂລກ (WTO), ສ້າງສັນຍາການຄ້າເສລີກັບອາຊຽນ (ASEAN) ແລະ ຄູ່ຮ່ວມເຈລະຈາ ແລະ ສັນຍາຄູ່ຮ່ວມເສດຖະກິດແບບຮອບດ້ານລະດັບພາກພື້ນ (RCEP) ເປັນໂອກາດທີ່ດີທີ່ໄດ້ຮັບການປະຕິບັດ ແລະ ປົກປ້ອງສິດຜົນປະໂຫຍດທາງດ້ານການຄ້າຢ່າງເທົ່າທຽມ;
3) ການລົງທຶນຈາກຕ່າງປະເທດໃນຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຈະເປັນເງື່ອນໄຂທີ່ດີ ໃຫ້ນັກລົງທຶນພາຍໃນໄດ້ຮຽນຮູ້ປະສົບການ ແລະ ການຖ່າຍທອດເຕັກໂນໂລຊີ;
4) ຄ່າແຮງງານ ແລະ ຄ່າໄຟຟ້າຕໍ່າ ເມື່ອທຽບໃສ່ຫຼາຍປະເທດໃນຂົງເຂດ;
5) ແຮງງານລາວມີອາຍຸໜຸ່ມ ແລະ ໂອກາດໄດ້ຮັບການຈ້າງງານເພີ່ມຂຶ້ນ;
6) ສປປ ລາວ ຍັງມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ ໂດຍສະເພາະແຮ່ທາດ ຊຶ່ງສາມາດດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດ.
7) ການພັດທະນາໂຄງລ່າງພື້ນຖານດ້ານຄົມມະນາຄົມ ເຊັ່ນ: ໂຄງການທາງລົດໄຟລາວ-ຈີນ, ທາງລົດໄຟລາວ-ຫວຽດ ຈະຊ່ວຍສ້າງຄວາມສະດວກໃນການເຂົ້າຕະຫຼາດພາຍໃນ ແລະ ຕ່າງປະເທດ, ຫຼຸດຕົ້ນທຶນການຜະລິດ ແລະ ຈັດຈຳໜ່າຍ ໃຫ້ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

## 4.4 ຄວາມສ່ຽງ

1) ສປປ ລາວ ມີຕະຫຼາດນ້ອຍ ແລະ ກຳລັງຊື້ບໍ່ສູງ;
2) ການເຊື່ອມຍົງເສດຖະກິດກັບພາກພື້ນ ແລະ ສາກົນມີການແຂ່ງຂັນສູງໂດຍສະເພາະມີການແຂ່ງຂັນກັບຖານການຜະລິດຂະໜາດໃຫຍ່ທີ່ມີຄວາມໄດ້ປຽບດ້ານຕົ້ນທຶນການຜະລິດເປັນຕົ້ນ: ສປ.ຈີນ, ໄທ ແລະ ສສ.ຫວຽດນາມ;
3) ໂອກາດທີ່ຈະເຮັດໃຫ້ທຸລະກິດພາຍໃນຖືກລົ້ມລະລາຍມີສູງ ຍ້ອນຄວາມອາດສາມາດໃນການແຂ່ງຂັນມີຈຳກັດ ໂດຍສະເພາະທຶນ, ປະສົບການ ແລະ ປະສິດທິພາບການຜະລິດຕໍ່າ;
4) ສີມືແຮງງານ ແລະ ວິຊາການເຕັກນິກສະເພາະດ້ານຍັງມີຄວາມຈຳກັດ, ອາດໄດ້ນຳເຂົ້າແຮງງານວິຊາການ ແລະ ຊ່ຽວຊານຈາກຕ່າງປະເທດ. ສະນັ້ນ,ຈະເຮັດໃຫ້ຕົ້ນທຶນການຜະລິດສູງ ແລະ ຄຸນນະພາບຜະລິດຕະພັນຍັງຕໍ່າ ເມື່ອທຽບໃສ່ປະເທດອື່ນ;
5) ການລົງທຶນໃນຂະແໜງການອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຍັງຕິດພັນກັບຫຼາຍຂະແໜງການຊຶ່ງເປັນບັນຫາສ້າງຄວາມຫຍຸ້ງຍາກໃຫ້ແກ່ຜູ້ລົງທຶນ.

## 4.5 ບົດຮຽນທີ່ຖອດຖອນໄດ້

1. ໃນຕໍ່ໜ້າ ຈຳເປັນຕ້ອງໄດ້ມີການສຶກສາ ແລະ ປະເມີນຜົນກະທົບຢ່າງຮອບດ້ານ ແລະ ຕາມແຕ່ລະໄລຍະ ໂດຍສະເພາະກຳນົດທິດທາງ ແລະ ການຂະຫຍາຍຕົວ ຕາມແຜນນະໂຍບາຍສົ່ງເສີມຜົນກະທົບຂອງພະຍາດ ໂຄວິດ-19 ທີ່ລັດຖະບານກຳນົດເປັນແຕ່ລະໄລຍະ, ພາບລວມເສດຖະກິດ ຂອງພາກພື້ນ ແລະ ທົ່ວໂລກ. ຄຽງຄູ່ກັນ ຕ້ອງກຳນົດນະໂຍບາຍສົ່ງເສີມດຶງດູດການລົງທຶນຈາກຕ່າງປະເທດ ທີ່ໄດ້ຮັບຜົນກະທົບຕໍ່ຕ່ອງໂສ້ການຜະລິດຢູ່ຕ່າງປະເທດ ຫັນມາລົງທຶນຢູ່ລາວເຮົາໃຫ້ຫຼາຍຂຶ້ນ, ຊຸກຍູ້ສົ່ງເສີມການຜະລິດປະເພດເຄື່ອງອຸປະໂພກ-ບໍລິໂພກ, ອຸປະກອນ ແລະ ເຄື່ອງມືການແພດ ເພື່ອກຽມຄວາມພ້ອມຮັບໃຊ້ເວລາສຸກເສີນ;
2. ເຜີຍແຜ່ກົດໝາຍ ແລະ ລະບຽບການ ໃຫ້ພາກລັດ ແລະ ຜູ້ປະກອບການໃຫ້ທົ່ວເຖິງ; ຄວນມີມາດຕະການຕໍ່ເຈົ້າໜ້າທີ່ໃນກໍລະນີເຮັດຜິດກົດໝາຍ ແລະ ລະບຽບການ;
3. ປະສານງານກັບຂະແໜງການທີ່ກ່ຽວຂ້ອງເພື່ອແກ້ໄຂພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະຂະແໜງການໃຫ້ຈະແຈ້ງ ແລະ ເພື່ອໃຫ້ການຈັດຕັ້ງປະຕິບັດວຽກງານຖືກຕ້ອງ ແລະ ມີຄວາມເປັນເອກະພາບ;
4. ຄວນໃຫ້ຄວາມສຳຄັນຕໍ່ກັບການຮຽນ-ການສອນວິຊາສະເພາະ ໂດຍສະເພາະວິຊາວິສະວະກຳອຸດສາຫະກຳ ແລະ ອື່ນໆ ທີ່ຕິດພັນ, ເພີ່ມຈຳນວນ ວິຊາການໃຫ້ຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ປະກອບທຶນໃນການພັດທະນາສີມືແຮງງານໃຫ້ພະນັກງານ-ກຳມະກອນໃຫ້ມີຄວາມຊຳນານງານສູງຂຶ້ນ ໂດຍສະເພາະສ້າງໂຮງຮຽນວິຊາຊີບ ຫຼື ສູນຝຶກອົບຮົມໃຫ້ຫຼາຍຂຶ້ນ;
5. ສະເໜີລັດຖະບານ ແລະ ອົງການຈັດຕັ້ງສາກົນ ຄວນພິຈາລະນາຈັດງົບປະມານເພື່ອຈັດຊື້ອຸປະກອນ, ເຄື່ອງມື ແລະ ສ້າງຫ້ອງທົດລອງ ເພື່ອຕິດຕາມ, ກວດກາ ວັດແທກ ແລະ ທົດລອງ ວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ;
6. ແຮ່ທາດປະເພດຕ່າງໆ ຕ້ອງຜັກດັນໃຫ້ມີການປຸງແຕ່ງສ້າງມູນຄ່າເພີ່ມກໍ່ຄືເປັນຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບກ່ອນສົ່ງອອກ;
7. ສ້າງນະໂຍບາຍ ຫຼື ວາງແຜນການຮ່ວມກັບຂະແໜງການທີ່ກ່ຽວຂ້ອງຂອງພາກລັດ, ສະຖາບັນຄົ້ນຄວ້າ ແລະ ພາກທຸລະກິດ ເພື່ອເປັນບ່ອນອີງແກ່ຜູ້ປະກອບການທີ່ຈະລົງທຶນໃນຂະແໜງການຜະລິດປຸງແຕ່ງ;
8. ເພີ່ມການໂຄສະນາ ແລະ ງານວາງສະແດງສິນຄ້າ ເພື່ອໃຫ້ສັງຄົມຮັບຮູ້ຫຼາຍຂຶ້ນ ແລະ ຊອກຫາຕະຫຼາດພາຍໃນ ແລະ ຕ່າງປະເທດ ໃຫ້ຫຼາຍຂຶ້ນຕື່ມ;
9. ດຶງດູດນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາສ້າງໂຄງລ່າງພື້ນຖານໃນເຂດ ແລະ ນິຄົມອຸດສາຫະກຳປຸງແຕ່ງໃຫ້ເປັນຮູບປະທຳຂຶ້ນຕື່ມ;
10. ເພີ່ມທະວີໃນການຄຸ້ມຄອງສິ່ງແວດລ້ອມ ແລະ ເຄມີອຸດສາຫະກຳ ໃຫ້ເປັນລະບົບເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມຕາມທິດການຫັນເປັນອຸດສາຫະກຳສີຂຽວ ແລະ ຍືນຍົງ;
11. ຫັນເປັນແຜນງານ ແລະ ໂຄງການລະອຽດ ຍາດແຍ່ງການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ແລະ ກອງທຶນຕ່າງໆ.

## II. ແຜນພັດທະນາຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ 5 ປີ (2021-2025)

### 1. ວິໄສທັດຮອດປີ 2030

ອຸດສາຫະກຳປຸງແຕ່ງ ກາຍເປັນຫົວຈັກຂັບເຄື່ອນເສດຖະກິດ ມີຖານການຜະລິດທີ່ຫຼາກຫຼາຍສົມດຸນ, ຕາມທິດທັນເປັນທັນສະໄໝ, ສີຂຽວ ແລະ ຍືນຍົງ ກ້າວສູ່ຍຸກອຸດສາຫະກຳ 4.0; ຫັດຖະກຳ ໄດ້ຮັບການສົ່ງເສີມ, ພູມປັນຍາທ້ອງຖິ່ນ ແລະ ວັດທະນະທຳຂອງຊາດ ໄດ້ຮັບການອະນຸລັກ ແລະ ໝູນໃຊ້ໃຫ້ກາຍເປັນເອກະລັກທາງດ້ານຫັດຖະກຳ.

### 1.1 ເປົ້າໝາຍລວມ ຮອດປີ 2025

- ພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ເປັນທ່າແຮງໃຫ້ສ້າງມູນຄ່າເພີ່ມສູງ, ໄດ້ມາດຕະຖານ ແລະ ສາມາດແຂ່ງຂັນໃນລະດັບພາກພື້ນ ແລະ ສາກົນໄດ້;
- ສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ໃຫ້ກ້າວສູ່ທັນສະໄໝ ແລະ ເປັນມິດກັບສິ່ງແວດລ້ອມ;
- ພັດທະນາໂຄງລ່າງພື້ນຖານ ແລະ ສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍແກ່ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ;
- ພັດທະນາສິນຄ້າຫັດຖະກຳທີ່ເປັນຈຸດສຸມ ໃຫ້ໄດ້ຄຸນນະພາບ, ມາດຕະຖານ ແລະ ສາມາດແຂ່ງຂັນຢູ່ຕະຫຼາດພາຍໃນ ແລະ ຕ່າງປະເທດໄດ້;
- ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ຊາວຊ່າງຫັດຖະກຳ ແລະ ກຸ່ມຜູ້ຜະລິດສິນຄ້າຫັດຖະກຳ ເຊື່ອມໂຍງກັບການທ່ອງທ່ຽວ;
- ອະນຸລັກ ແລະ ປົກປັກຮັກສາ ພູມປັນຍາ ແລະ ມູນເຊື້ອມໍລະດົກວັດທະນະທຳຫັດຖະກຳ ໃຫ້ມີຄວາມຍືນຍົງ;
- ກົນໄກການປະສານງານ ແລະ ຮ່ວມມືພາຍໃນ ແລະ ຕ່າງປະເທດ ເພື່ອສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໄດ້ຮັບການຍົກລະດັບຂຶ້ນເທື່ອລະກ້າວ.

### 1.2 ທິດທາງລວມ

ພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ເປັນຖານການຜະລິດສິນຄ້າທີ່ມີຄວາມຫຼາກຫຼາຍສົມດຸນ, ສ້າງລາຍຮັບ ແລະ ວຽກເຮັດງານທຳ ປະກອບສ່ວນໃນການຫຼຸດຜ່ອນຄວາມທຸກຍາກ ແລະ ສ້າງຄວາມຮັ່ງມີໃຫ້ປະຊາຊົນ, ບຸກທະລຸແກ້ໄຂຂໍ້ຄົງຄ້າງ, ອຸປະສັກ ແລະ ສິ່ງທ້າທາຍຕ່າງໆ ເຂົ້າໃນການພັດທະນາໄລຍະໃໝ່, ນຳໃຊ້ຂີດຄວາມສາມາດ ແລະ ທຸກທ່າແຮງ ຊຸກຍູ້ໃຫ້ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເປັນໜຶ່ງໃນອົງປະກອບໃນການຫັນປ່ຽນໂຄງສ້າງເສດຖະກິດ ແລະ ກ້າວສູ່ການຫັນເປັນທັນສະໄໝ ຕາມທິສີຂຽວ ແລະ ຍືນຍົງ. ສົ່ງເສີມ ແລະ ພັດທະນາຫັດຖະກຳ ແລະ ອະນຸລັກພູມປັນຍາທ້ອງຖິ່ນ ແລະ ວັດທະນະທຳຂອງຊາດ.

### 1.3 ຄາດໝາຍລວມ ແລະ ຕົວຊີ້ບອກ

ຄາດໝາຍລວມຂອງແຜນພັດທະນາຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ມີດັ່ງນີ້:

- ອັດຕາການປະກອບສ່ວນອຸດສາຫະກຳປຸງແຕ່ງໃນລວມຍອດຜະລິດຕະພັນພາຍໃນ (GDP) 12%;
- ອັດຕາຂະຫຍາຍຕົວມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ລະຫວ່າງ 8-10% ຕໍ່ປີ;

- ການສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງຂະຫຍາຍຕົວສະເລ່ຍ 18% ຕໍ່ປີ ແລະ ມູນຄ່າສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງ ກວມ 50% ຂອງມູນຄ່າການສົ່ງອອກທັງໝົດ;
- ການສົ່ງອອກສິນຄ້າຫັດຖະກຳຂະຫຍາຍຕົວ ລະຫວ່າງ 5-7% ຕໍ່ປີ;
- ສູ້ຊົນເຮັດໃຫ້ຈຳນວນໂຮງງານ: ຂະໜາດນ້ອຍ, ກາງ ແລະ ໃຫຍ່ ໃໝ່ເພີ່ມຂຶ້ນ 2% ຕໍ່ປີ;
- ການສ້າງວຽກເຮັດງານທຳໃນຂະແໜງອຸດສາຫະກຳປຸງແຕ່ງຂະຫຍາຍຕົວລະຫວ່າງ 2-3% ຕໍ່ປີ.

## 2. ແຜນພັດທະນາຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ 5 ປີ (2021-2025)

ການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ 5 ປີ (2021-2025) ປະກອບມີ 5 ແຜນງານ ແລະ 3 ວຽກງານປິ່ນອ້ອມ (ການພັດທະນາຕາມເຂດແຄວ້ນ, ການຟື້ນຟູຈາກໂຄວິດ ແລະ ການສົ່ງເສີມບົດບາດຍິງຊາຍ) ຄືດັ່ງນີ້:

### 2.1 <u>ແຜນງານທີ 1</u>: ການສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ໃຫ້ເຕີບໂຕມີຄຸນນະພາບ ຕາມທິດສົມດຸນ, ສີຂຽວ ແລະ ຍືນຍົງ

### 2.1.1 <u>ເປົ້າໝາຍສະເພາະ ແລະ ຕົວຊີ້ບອກ:</u>

- ເຮັດໃຫ້ມູນຄ່າຜະລິດຕະພັນອຸດສາຫະກຳປຸງແຕ່ງ ເພີ່ມຂຶ້ນສະເລ່ຍ 8-10% ຕໍ່ປີ;
- ເຮັດໃຫ້ຈຳນວນໂຮງງານ ໃນ 8 ອຸດສາຫະກຳທ່າແຮງ ເພີ່ມຂຶ້ນສະເລ່ຍ 5% ຕໍ່ປີ;
- ຍົກລະດັບໂຮງງານກ້າວສູ່ມາດຕະຖານສາກົນ ແລະ ຍົກລະດັບມາດຕະຖານ ແລະ ຄຸນນະພາບຜະລິດຕະພັນອຸດສາຫະກຳ (ມອກ); ຄຸນນະພາບ ແລະ ມາດຕະຖານຜະລິດຕະພັນແຫ່ງຊາດ (ມລ).
- ສົ່ງເສີມ ແລະ ພັດທະນາອຸດສາຫະກຳທີ່ມີທ່າແຮງ ແລະ ອຸດສາຫະກຳສະໜັບສະໜູນ ມີການຂະຫຍາຍສົມຄູ່ກັນ;
- ສົ່ງເສີມ ແລະ ພັດທະນາຜະລິດຕະພັນອຸດສາຫະກຳປຸງແຕ່ງມີຄວາມຫຼາກຫຼາຍ ເພື່ອສະໜອງໃຫ້ພຽງພໍຮັບໃຊ້ພາຍໃນ, ຫຼຸດຜ່ອນການນຳເຂົ້າ ແລະ ກ້າວໄປສູ່ການສົ່ງອອກ ໃຫ້ຫຼາຍຂຶ້ນ;
- ປັບປຸງຍົກລະດັບເຕັກນິກ-ເຕັກໂນໂລຊີ ແລະ ນຳໃຊ້ນະວັດຕະກຳ ເຂົ້າໃນຂະບວນການຜະລິດ;
- ຊຸກຍູ້ສົ່ງເສີມໃຫ້ໂຮງງານອຸດສາຫະກຳປຸງແຕ່ງໄດ້ຮັບການຢັ້ງຢືນອຸດສາຫະກຳສີຂຽວຫຼາຍກວ່າ 10 ແຫ່ງ ພາຍໃນປີ 2025 ແລະ ສົ່ງເສີມການຫຼຸດຜ່ອນອາຍເຮືອນແກ້ວ ແລະ ການນຳໃຊ້ພະລັງງານທົດແທນ ໃນພາກອຸດສາຫະກຳປຸງແຕ່ງ;
- ສົ່ງເສີມ ໃຫ້ໂຮງງານອຸດສາຫະກຳປຸງແຕ່ງ ປະກອບສ່ວນໃນການພັດທະນາເສດຖະກິດ ແລະ ຊຸມຊົນ ເພີ່ມຂຶ້ນ.

### 2.1.2 <u>ວຽກຈຸດສຸມ:</u>

#### 1- <u>ສົ່ງເສີມ ແລະ ພັດທະນາອຸດສາຫະກຳ ທ່າແຮງ ແລະ ສະໜັບສະໜູນ</u>

ຫັນປ່ຽນຈາກການເອື່ອຍອີງໃສ່ຂະແໜງຊັບພະຍາກອນທຳມະຊາດໄປສູ່ການຜະລິດອຸດສາຫະກຳເບົາ ເພື່ອສ້າງຄວາມຫຼາກຫຼາຍ ແລະ ປ່ຽນແປງໂຄງປະກອບເສດຖະກິດໃຫ້ສົມດຸນ, ສົ່ງເສີມອຸດສາຫະກຳທີ່ສ້າງວຽກເຮັດ

ງານທຳ, ຫຼຸດຜ່ອນການນຳເຂົ້າ ໂດຍສຸມໃສ່ອຸດສາຫະກຳປຸງແຕ່ງທີ່ມີທ່າແຮງ, ດຶງດູດການລົງທຶນ ແລະ ຊຸກຍູ້ການເຊື່ອມໂຍງເຂົ້າຕ່ອງໂສ້ການຜະລິດພາກພື້ນ ແລະ ສາກົນໃຫ້ຂະຫຍາຍຕົວເພີ່ມຂຶ້ນຢ່າງຕໍ່ເນື່ອງ ໂດຍເນັ້ນໃສ່ທ່າແຮງບົ່ມຊ້ອນ ໃນ 8 ອຸດສາຫະກຳເປົ້າໝາຍ ທີ່ຈະສຸມໃສ່ຊຸກຍູ້ສົ່ງເສີມເປັນພິເສດ ລວມທັງອຸດສາຫະກຳຂະໜາດນ້ອຍ ແລະ ກາງ ແລະ ອຸດສາຫະກຳແບບຄອບຄົວ ເພື່ອໃຫ້ບັນລຸເປົ້າໝາຍ ເຮັດໃຫ້ຈຳນວນໂຮງງານໃຫ້ກຸ່ມອຸດສາຫະກຳທ່າແຮງ ເພີ່ມຂຶ້ນສະເລ່ຍ 5% ຕໍ່ປີ, ເຮັດໃຫ້ມູນຄ່າຜະລິດຕະພັນອຸດສາຫະກຳປຸງແຕ່ງເພີ່ມຂຶ້ນສະເລ່ຍ 8-10% ຕໍ່ປີ. ຊຸກຍູ້ໃຫ້ມີການປ່ຽນຈາກການປຸງແຕ່ງຜະລິດຕະພັນເຄິ່ງສຳເລັດຮູບເປັນສຳເລັດຮູບ. ການສົ່ງເສີມ ແລະ ພັດທະນາອຸດສາຫະກຳທ່າແຮງ ແລະ ສະໜັບສະໜູນນີ້ ແບ່ງເປັນ 2 ກຸ່ມ ຄື:

**ສົ່ງເສີມ ແລະ ພັດທະນາ ກຸ່ມອຸດສາຫະກຳທີ່ມີຢູ່ໃນປະຈຸບັນ ປະກອບມີ:**

**1) ອຸດສາຫະກຳປຸງແຕ່ງອາຫານ ແລະ ເຄື່ອງດື່ມ:**

ຊຸກຍູ້ການຜະລິດສະບຽງອາຫານ ແລະ ເຄື່ອງດື່ມໃຫ້ສາມາດຕອບສະໜອງຄວາມຕ້ອງການພາຍໃນ ເພື່ອທົດແທນການນຳເຂົ້າ ໂດຍຮັບປະກັນຜະລິດຕະພັນອາຫານ, ຢາ ແລະ ເຄື່ອງດື່ມ ໃຫ້ໄດ້ມາດຕະຖານການຜະລິດທີ່ດີ (Good Manufacturing Practice: GMP) ແລະ ມາດຕະຖານສາກົນຕ່າງໆ. ຫັນວິກິດການລະບາດຂອງພະຍາດໂຄວິດ-19 ເປັນໂອກາດ ໂດຍສົ່ງເສີມການຜະລິດພາຍໃນ ໂດຍການຈັດຕັ້ງປະຕິບັດໂຄງການ ເປັນຕົ້ນແມ່ນການປັບປຸງມາດຕະຖານໂຮງສີເຂົ້າ, ປຸງແຕ່ງກາເຟ, ການປັບປຸງ ແລະ ຍົກລະດັບໂຮງງານຂ້າສັດທັນສະໄໝ ແລະ ຈຸດຂ້າສັດຍ່ອຍ, ການຊຸກຍູ້ການປຸງແຕ່ງຜະລິດຕະພັນຈາກກະສິກຳທີ່ມີຢູ່ພາຍໃນປະເທດ ເປັນຕົ້ນ ເຂົ້າ, ສາລີຫວານ, ເຜືອກມັນ, ອ້ອຍ, ຖົ່ວ, ໝາກໄມ້, ພືດຜັກ, ຊີ້ນ ແລະ ອື່ນໆ ດ້ວຍການຊຸກຍູ້ສົ່ງເສີມການຍົກລະດັບໂຮງງານປຸງແຕ່ງໃຫ້ຂະຫຍາຍຕົວ ແລະ ດຶງດູດການລົງທຶນໃໝ່.

**2) ອຸດສາຫະກຳແຜ່ນແພ, ເຄື່ອງນຸ່ງຫົ່ມ ແລະ ເກີບ:**

ສືບຕໍ່ຫັນກາລະໂອກາດທີ່ໄດ້ຮັບສິດທິພິເສດດ້ານການຄ້າ ເພື່ອດຶງດູດການລົງທຶນໃນອຸດສາຫະກຳນີ້ ແລະ ຊອກຫາຕະຫຼາດໃໝ່; ຊຸກຍູ້ສົ່ງເສີມການນຳໃຊ້ວັດຖຸດິບ-ເຄິ່ງສຳເລັດຮູບພາຍໃນເຂົ້າໃນຕ່ອງໂສ້ການຜະລິດພາຍໃນ; ເສີມສ້າງເຄືອຂ່າຍການຜະລິດ ເນັ້ນໃສ່ເປົ້າໝາຍຕະຫຼາດ ແລະ ລູກຄ້າຖານດຽວກັນ; ຍົກລະດັບຄຸນນະພາບ ແລະ ສີມືແຮງງານໃຫ້ສູງຂຶ້ນເທື່ອລະກ້າວ; ສ້າງຂີດຄວາມສາມາດບຸກຄະລາກອນລາວ ໃນການອອກແບບຜະລິດຕະພັນ ຜ່ານການສົ່ງເສີມການສ້າງຕັ້ງໂຮງຮຽນເອກະຊົນ ຫຼື ສູນອອກແບບ ຫຼື ນຳສົ່ງໄປຮຽນຮູ້ຈາກສະຖາບັນຈາກຕ່າງປະເທດ ແລະ ສືບຕໍ່ສະໜັບສະໜູນສູນພັດທະນາສີມືຕັດຫຍິບ ພ້ອມທັງຄົ້ນຄວ້າການສະໜອງບໍລິການ ດ້ານການຢັ້ງຢືນຕ່າງໆ.

ສືບຕໍ່ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19 ຕໍ່ອຸດສາຫະກຳດັ່ງກ່າວ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອບັນເທົາຜົນກະທົບດ້ານເສດຖະກິດ ແນໃສ່ຮັກສາ ແລະ ປະຄອງຕົວ ບໍ່ໃຫ້ກະທົບຕໍ່ຜູ້ອອກແຮງງານ ແລະ ຜູ້ປະກອບການ ສົ່ງເສີມການຜະລິດເພື່ອເຊື່ອມໂຍງກັບຕະຫຼາດພາຍໃນ ເປັນຕົ້ນ: ເຄື່ອງແບບນັກຮຽນນັກສຶກສາ, ບໍລິສັດ ແລະ ໂຄງການຕ່າງໆ. ຄຽງຄູ່ກັນ, ສຸມໃສ່ປັບຍຸດທະສາດ ແລະ ທິດທາງອຸດສາຫະກຳນີ້ ພາຍຫຼັງທີ່ປະເທດເຮົາຫຼຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາ ແລະ ຈະບໍ່ໄດ້ຮັບສິດທິພິເສດດ້ານການຄ້າຈາກປະເທດທີ່ພັດທະນາແລ້ວ.

**3) ອຸດສາຫະກຳວັດສະດຸກໍ່ສ້າງ:**

ສົ່ງເສີມອຸດສາຫະກຳວັດສະດຸກໍ່ສ້າງ ຫັນເປັນທັນສະໄໝ ແລະ ເປັນມິດກັບສິ່ງແວດລ້ອມ, ຍົກກລະດັບຄວາມສາມາດແຂ່ງຂັນ ແລະ ສ້າງໃຫ້ເຂັ້ມແຂງ ຫັນເຂົ້າສູ່ມາດຕະຖານສາກົນ, ວັດສະດຸກໍ່ສ້າງ ໄດ້ຮັບການຊົມໃຊ້ ແລະ ເປັນທີ່ຍອມຮັບທົ່ວສັງຄົມ ທົດແທນການນຳເຂົ້າ ແລະ ສົ່ງອອກໄດ້ຫຼາຍຂຶ້ນ. ໃນເບື້ອງຕົ້ນ ເນັ້ນໃສ່ ❶ ອຸດສາຫະກຳຊີມັງ ໃຫ້ມີຄວາມເຂັ້ມແຂງ ແລະ ຂະຫຍາຍຕົວ, ເຕົ້າໂຮມ ແລະ ສ້າງຄວາມເຂັ້ມແຂງແກ່ກຸ່ມຜູ້ຜະລິດຊີມັງ, ຍົກລະດັບມາດຕະຖານໂຮງງານ ແລະ ຜະລິດຕະພັນຊີມັງ ແລະ ໄດ້ຮັບການຢັ້ງຢືນມາດຕະຖານ ແລະ ຄຸນ

ນະພາບໃນລະດັບທຽບເທົ່າສາກົນ, ຊຸກຍູ້ໃຫ້ຊີມັງລາວ ໄດ້ຮັບການສະໜອງແກ່ໂຄງການຂະໜາດໃຫຍ່ ແລະ ໂຄງການກໍ່ສ້າງໂຄງລ່າງພື້ນຖານຕ່າງໆ ເພື່ອທົດແທນການນໍາເຂົ້າ ແລະ ປະເມີນຂໍ້ຫຍຸ້ງຍາກຂອງອຸດສາຫະກໍາຊີມັງລາວ ແລະ ກໍານົດມາດຕະການຊຸກຍູ້ສົ່ງເສີມເພື່ອການສົ່ງອອກຊີມັງລາວ ❷ ອຸດສາຫະກໍາເຫຼັກ ເນັ້ນໃສ່ເຕົາໂຮມ ແລະ ສ້າງຄວາມເຂັ້ມແຂງແກ່ກຸ່ມຜູ້ຜະລິດເຫຼັກ, ຍົກລະດັບ ແລະ ມາດຕະຖານຄຸນນະພາບຂອງຜະລິດຕະພັນເຫຼັກຕ່າງໆ ສາມາດສະໜອງດ້ານປະລິມານ ແລະ ຄຸນນະພາບໃຫ້ແກ່ໂຄງການຕ່າງໆພາຍໃນປະເທດ ເພື່ອທົດແທນການນໍາເຂົ້າ. ສຶກສາຄວາມເປັນໄປໄດ້ ແລະ ຍົກລະດັບອຸດສາຫະກໍາປຸງແຕ່ງເຫຼັກຂອງລາວ ກ້າວເຂົ້າສູ່ອຸດສາຫະກໍາຜະລິດເຫຼັກຂະໜາດໃຫຍ່ ເພື່ອຜະລິດເປັນຜະລິດຕະພັນເຫຼັກຕ່າງໆຮັບໃຊ້ສັງຄົມ ເຊັ່ນ: ແຜ່ນເຫຼັກ, ກົ່ງເຫຼັກ, ເຫຼັກເສັ້ນທຸກຂະໜາດ ແລະ ເຫຼັກຮູບປະພັນຕ່າງໆ. ສົ່ງເສີມການປຸງແຕ່ງແຮ່ເຫຼັກ ແລະ ສ້າງມູນຄ່າ ເພື່ອຫຼຸດຜ່ອນການສົ່ງອອກວັດຖຸດິບ. ສົ່ງເສີມການນໍາໃຊ້ເຫຼັກເສດພາຍໃນ ເພື່ອມາຜະລິດຄືນໃໝ່ ທັງໝົດເຫຼົ່ານີ້ ເພື່ອຍົກລະດັບອຸດສາຫະກໍາໜັກ (ເຫຼັກ) ຂັ້ນພື້ນຖານ ເພື່ອຮອງຮັບການພັດທະນາເສດຖະກິດໃນຕໍ່ໜ້າ ❸ ຊຸກຍູ້ສົ່ງເສີມໃຫ້ມີການສ້າງມູນຄ່າເພີ່ມຈາກຊີມັງ ແລະ ປູນປາສເຕີ ເພື່ອເປັນວັດສະດຸກໍ່ສ້າງອື່ນ ເປັນຕົ້ນ: ຊີແພັກ, ກະເບື້ອງ, ດິນບ໋ອກ ແລະ ແຜນຢິບຊໍ້າ ເພື່ອສ້າງຖານການຜະລິດ ແລະ ຜະລິດຕະພັນທີ່ຫຼາກຫຼາຍ ທົດແທນການນໍາເຂົ້າ ແລະ ❹ ສົ່ງເສີມການຜະລິດວັດສະດຸກໍ່ສ້າງຈາກໄມ້ ແລະ ຜະລິດຕະພັນໄມ້.

**4) ອຸດສາຫະກໍາປຸງແຕ່ງຜົນຜະລິດກະສິກໍາ ແລະ ປ່າໄມ້:**

ສຸມໃສ່ທ່າແຮງບົ່ມຊ້ອນ ແລະ ປະສານສົມທົບຢ່າງໃກ້ຊິດກັບຂະແໜງກະສິກໍາ ແລະ ປ່າໄມ້ ເພື່ອສາມາດຈັດຕັ້ງປະຕິບັດໃຫ້ມີຄວາມສອດຄ່ອງ ແລະ ກົມກຽວກັນ ໃນການສົ່ງເສີມ ແລະ ພັດທະນາອຸດສາຫະກໍາປຸງແຕ່ງຜົນຜະລິດກະສິກໍາ (ທີ່ບໍ່ເປັນອາຫານ ແລະ ປ່າໄມ້). ຜົນຜະລິດກະສິກໍາ ຕ້ອງຕິດພັນສະໜິດແໜ້ນກັບຕ່ອງໂສ້ການຜະລິດກັບອຸດສາຫະກໍາປຸງແຕ່ງ ເພື່ອຜະລິດເປັນສິນຄ້າອຸປະໂພກ, ບໍລິໂພກ ຮັບໃຊ້ພາຍໃນ ແລະ ທົດແທນການນໍາເຂົ້າ. ການລະບາດຂອງພະຍາດ ໂຄວິດ-19 ເປັນກາລະໂອກາດອັນໜຶ່ງທີ່ຈະຊຸກຍູ້ສົ່ງເສີມ ແລະ ຍົກລະດັບການປຸງແຕ່ງສ້າງມູນຄ່າເພີ່ມໃຫ້ຜົນຜະລິດກະສິກໍາ ເນັ້ນໃສ່ການປຸງແຕ່ງພືດທີ່ເປັນທ່າແຮງ ເປັນຕົ້ນ: ສາລີຜະລິດທົວອາຫານສັດ, ໃບຢາສູບ, ມັນຕົ້ນ, ປຸ໋ຍຊີວະພາບ ແລະ ອື່ນໆ. ການປຸງແຕ່ງຢາງພາລາ ເປັນຕົ້ນ: ຖົງມືການແພດ ແລະ ຮັບໃຊ້ອຸດສາຫະກໍາ, ຢາງຮອງພື້ນເກີບ, ຢາງຕີນລົດ ແລະ ຊິ້ນສ່ວນຢາງປະເພດຕ່າງໆ. ການປຸງແຕ່ງຊັບພະຍາກອນທໍາມະຊາດທີ່ເປັນຢາ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອກໍານົດກົນໄກການສົ່ງເສີມ ແລະ ຄຸ້ມຄອງໃນການພັດທະນາເປັນຜະລິດຕະພັນທີ່ມີມູນຄ່າເພີ່ມສູງ ແລະ ຈໍາກັດການສົ່ງອອກວັດຖຸດິບເທື່ອລະກ້າວ.

ອຸດສາຫະກໍາປຸງແຕ່ງໄມ້: ສືບຕໍ່ປະຕິບັດຕາມທິດທາງ ແລະ ນະໂຍບາຍຂອງລັດຖະບານ ເປັນແຕ່ລະໄລຍະ. ດັດສົມ ແລະ ຍົກລະດັບມາດຕະຖານໂຮງງານອຸດສາຫະກໍາປຸງແຕ່ງໄມ້ ແລະ ເຟີນິເຈີ ຂຶ້ນເທື່ອລະກ້າວ ໃຫ້ສົມຄູ່ກັບຄວາມສາມາດໃນການສະໜອງວັດຖຸດິບ. ປັບປຸງລະບົບການຄຸ້ມຄອງກວດກາຕິດຕາມໄມ້ສົ່ງເຂົ້າ ແລະ ສົ່ງອອກດ້ວຍການສ້າງນິຕິກໍາ ແລະ ຖານຂໍ້ມູນການຄຸ້ມຄອງຕິດຕາມກວດກາຂອງພາກລັດ ຢ່າງມີປະສິດຕິພາບ ແລະ ປະສິດທິຜົນສູງ ເພື່ອຮັບປະກັນການຄຸ້ມຄອງທີ່ດີ. ການປຸງແຕ່ງໄມ້ ແລະ ຜະລິດຕະພັນໄມ້ ເນັ້ນໃສ່ເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດຢ່າງມີຈຸດສຸມ. ຊຸກຍູ້ການປຸງແຕ່ງເປັນຜະລິດຕະພັນສໍາເລັດຮູບດ້ວຍການສ້າງມູນຄ່າເພີ່ມສູງ ທັງຍົກລະດັບມາດຕະຖານ ແລະ ຄຸນນະພາບ ສາມາດຕອບສະໜອງຕາມຄວາມຕ້ອງການທົ່ວສັງຄົມໄດ້. ການປຸງແຕ່ງ ເນັ້ນໃສ່ການນໍາໃຊ້ໄມ້ຈາກສວນປູກ ເປັນຕົ້ນ: ໄມ້ວິກ, ກະຖິນນາລົງ-ເທພາ, ໄມ້ສັກ, ໄມ້ຢາງພາລາ ແລະ ອື່ນໆ. ຄາດຄະເນຮອດປີ 2025 ຈະຊຸກຍູ້ໃຫ້ໂຮງງານປຸງແຕ່ງໄມ້ ຫັນມານໍາໃຊ້ໄມ້ຈາກສວນປູກເປັນວັດຖຸດິບ ໃຫ້ຫຼາຍຂຶ້ນ. ສຸມໃສ່ການປຸງແຕ່ງຜະລິດຕະພັນອື່ນໆ ຈາກໄມ້ ແລະ ເຍື່ອໄມ້ ຈາກໄມ້ປູກ, ອຸດສາຫະກໍາຜະລິດເຈ້ຍ ແລະ ເຈ້ຍກາກຕົງ, ຜະລິດຕະພັນຈາກໄມ້ປ່ອງ ແລະ ຫວາຍ ແລະ ການຜະລິດຖ່ານໂດຍສະເພາະໄມ້ຈາກສວນປູກ. ສົ່ງເສີມການສ້າງເຄືອຂ່າຍການຜະລິດໃນອຸດສາຫະກໍາປຸງແຕ່ງໄມ້ ແລະ ເຟີນິເຈີ ໃຫ້ມີຄວາມເຂັ້ມແຂງ ດ້ວຍການສົ່ງເສີມການຜະລິດສະໜອງຊ່ວຍກັນ ແລະ ກັນ, ການສ້າງສູນວາງສະແດງເຟີນິເຈີລາວ, ການຝຶກອົບຮົມສີມືທັກສະໃຫ້ນາຍຊ່າງ ແລະ ການຊອກຫາຕະຫຼາດຂະໜາດໃຫຍ່ ແລະ ໝັ້ນຄົງ.

**ສົ່ງເສີມ ແລະ ພັດທະນາອຸດສາຫະກຳທີ່ມີທ່າແຮງໃໝ່ ປະກອບມີ:**

5) **ອຸດສາຫະກຳປຸງແຕ່ງແຮ່ທາດໂລຫະ ແລະ ເຄມີອຸດສາຫະກຳ:**

- **ອຸດສາຫະກຳປຸງແຕ່ງແຮ່ທາດໂລຫະ ແລະ ອະໂລຫະ:** ຫັນປ່ຽນການສົ່ງອອກຊັບພະຍາກອນແຮ່ທາດທຳມະຊາດ ສູ່ການປຸງແຕ່ງທີ່ເປັນຜະລິດຕະພັນ ສ້າງເປັນຜະລິດຕະພັນເຄິ່ງສຳເລັດຮູບ ແລະ ສຳເລັດຮູບທີ່ມີຄວາມຫຼາກຫຼາຍ ຮັບໃຊ້ສັງຄົມ ແລະ ສົ່ງອອກ, ສ້າງມູນຄ່າເພີ່ມແກ່ຜະລິດຕະພັນ ແລະ ຫຼຸດຜ່ອນເອື່ອຍອີງການນຳເຂົ້າ ແລະ ການສູນເສຍເງິນຕາຕ່າງປະເທດ ເຮັດໃຫ້ມີການໝູນວຽນເສດຖະກິດພາຍໃນປະເທດໃຫ້ຫຼາຍຂຶ້ນເທື່ອລະກ້າວ. **ປະເພດໂລຫະ** ປະສານສົມທົບກັບຂະແໜງພະລັງງານ ແລະ ບໍ່ແຮ່ ເນັ້ນໃສ່ອຸດສາຫະກຳປຸງແຕ່ງແຮ່ເຫຼັກ, ທອງແດງ, ອາລຸຍ, ຊືນ ແລະ ສັງກະສີ ມາເປັນຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ ເປັນຕົ້ນ: ເປັນແທ່ງ, ແຜ່ນ, ເສັ້ນ, ເຫຼັກຮູບປະພັນ, ສາຍໄຟຟ້າຕ່າງໆ ແລະ ອື່ນໆ ເພື່ອຜະລິດເປັນຜະລິດຕະພັນຕ່າງໆ ຮັບໃຊ້ສັງຄົມ ແລະ ຫຼຸດຜ່ອນການສົ່ງອອກແຮ່ທາດທີ່ບໍ່ທັນໄດ້ປຸງແຕ່ງ ເທື່ອລະກ້າວ. **ປະເພດອະໂລຫະ:** ສົ່ງເສີມໃຫ້ມີການປຸງແຕ່ງ ປຸ໋ຍຈາກເກືອກາລີ; ປຸງແຕ່ງຖ່ານຫີນ ແຍກຊັ້ນຄຸນນະພາບ-ປະເພດຄວາມຮ້ອນ ເພື່ອຮັບໃຊ້ອຸດສາຫະກຳ; ສົ່ງເສີມການນຳໃຊ້ຜະລິດຕະພັນປູນຂາວທີ່ຜະລິດຢູ່ພາຍໃນ ສາມາດຕອບສະໜອງເຂົ້າໃນໂຄງການຂະໜາດໃຫຍ່ຕ່າງໆ ເຊັ່ນ: ການຜະລິດຊີມັງ, ບໍ່ແຮ່, ນ້ຳປະປາ, ການບຳບັດນ້ຳເສຍ ແລະ ອື່ນໆ.
- **ເຄມີອຸດສາຫະກຳ:** ເນັ້ນໜັກການຄຸ້ມຄອງ, ກວດກາ ແລະ ຕິດຕາມການນຳເຂົ້າ, ການເກັບຮັກສາ ແລະ ການນຳໃຊ້ ໂດຍຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍກຳນົດ; ສຸມໃສ່ການສ້າງຍຸດທະສາດການຄຸ້ມຄອງ ແລະ ນຳໃຊ້ເຄມີແຫ່ງຊາດ; ສ້າງຖານຂໍ້ມູນເຄມີແຫ່ງຊາດ ເພື່ອສາມາດເກັບກຳຂໍ້ມູນໄດ້ ແລະ ເຊື່ອມໂຍງກັບພາກສ່ວນຕ່າງໆ ສຸມໃສ່ການຈັດຕັ້ງປະຕິບັດລະບົບເອກະພາບການຈັດແບ່ງປະເພດ ແລະ ການຕິດສະຫຼາກເຄມີສາກົນ (Globally Harmonized System of Clasification and Labelling) ໂດຍສະເພາະການຈັດປະເພດ, ການຕິດສະຫຼາກ ແລະ ຂໍ້ມູນຄວາມປອດໄພ ຂອງເຄມີ, ສົ່ງເສີມການຜະລິດເຄມີພື້ນຖານທີ່ມີຄຸນຄ່າສູງ ແລະ ນຳໃຊ້ຫຼາຍໃນ ສປປລາວ ເປັນຕົ້ນ: ອາຊິດຊຸນຟຣູລິກ, ໂຊດາໄຟ, ກົດກລໍຣີລິກ, ຄລໍລີນ, ຫີນສົ້ມ ແລະ ອື່ນໆ ເນື່ອງຈາກໄດ້ນຳເຂົ້າມາຮັບໃຊ້ໃນການຜະລິດຢູ່ໃນພາກອຸດສາຫະກຳ ແລະ ໂຄງການຕ່າງໆ ຊຶ່ງແຕ່ລະປີມີການນຳເຂົ້າບັນດາເຄມີເຫຼົ່ານີ້ເປັນຈຳນວນຫຼາຍແສນໂຕນຕໍ່ປີ. ປີໂຕຣເຄມີ: ສົ່ງເສີມການຜະລິດນ້ຳມັນເຊື້ອໄຟ ແລະ ອາຍແກັສ ໃຫ້ມີຄວາມເຂັ້ມແຂງ ແລະ ເຕີບໃຫຍ່ຂະຫຍາຍຕົວ ຫຼຸດຜ່ອນການນຳເຂົ້ານ້ຳມັນເຊື້ອໄຟ ແລະ ຮັບປະກັນຄວາມໝັ້ນຄົງດ້ານພະລັງງານ.

6) **ອຸດສາຫະກຳເຄື່ອງໃຊ້ໄຟຟ້າ ແລະ ຊິ້ນສ່ວນເອເລັກໂຕຣນິກ:**

- **ອຸດສາຫະກຳເຄື່ອງໃຊ້ໄຟຟ້າ:** ສົ່ງເສີມການຮ່ວມມື ແລະ ດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າໃສ່ການຜະລິດຊິ້ນສ່ວນອຸປະກອນ ແລະ ເຄື່ອງໃຊ້ໄຟຟ້າ ເພື່ອເຊື່ອມໂຍງເຂົ້າຕ່ອງໂສ້ການຜະລິດພາກພື້ນ ໂດຍສະເພາະດຶງດູດການລົງທຶນຈາກຕ່າງປະເທດທີ່ມີຄວາມຕ້ອງການຍ້າຍຖານການຜະລິດ ຍ້ອນຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ໃນນີ້ສຸມໃສ່ສົ່ງເສີມໂຮງງານທີ່ມີຢູ່ແລ້ວ ແລະ ສ້າງຕັ້ງໃໝ່ລຽບຕາມຊາຍແດນ ໄທ, ຫວຽດນາມ ແລະ ຕາມແລວເສດຖະກິດລາວ-ຈີນ ລວມທັງຢູ່ເຂດເສດຖະກິດພິເສດ ແລະ ນິຄົມອຸດສາຫະກຳ. ພ້ອມນັ້ນ ກໍສົ່ງເສີມໃຫ້ມີໂຮງງານ ປະກອບເຄື່ອງໃຊ້ໄຟຟ້າ ໃນຮູບແບບແຍກຊິ້ນສ່ວນທີ່ຍັງບໍ່ທັນລະອຽດຄົບຊຸດ ແລະ ທີ່ລະອຽດຄົບຊຸດ ເພື່ອສະໜອງຕະຫຼາດພາຍໃນ ເຊັ່ນ: ການປະກອບແອເຢັນ, ຕູ້ເຢັນ, ຈັກຊັກເຄື່ອງ ແລະ ອື່ນໆ ເພື່ອສະດວກໃນການຂົນສົ່ງ, ສ້າງວຽກເຮັດງານທຳ, ພັດທະນາສີມືແຮງງານ ແລະ ສ້າງເປັນຫົ່ວແໜງການຜະລິດອຸດສາຫະກຳທີ່ໃຊ້ເຕັກໂນໂລຊີລະດັບກາງຫາສູງ.
- **ອຸດສາຫະກຳປະກອບຊິ້ນສ່ວນເອເລັກໂຕຣນິກ:** ຊຸກຍູ້ ແລະ ເອື້ອອຳນວຍແກ່ໂຮງງານຕ່າງໆທີ່ຜະລິດ ແລະ ປະກອບຊິ້ນສ່ວນເຄື່ອງເອເລັກໂຕຣນິກ ທີ່ມີແລ້ວໃຫ້ຄ່ອງຕົວ ແລະ ຂະຫຍາຍຕົວ, ດຶງດູດການລົງທຶນຈາກ

ຕ່າງປະເທດ ໂດຍຫັນວິກິດໃຫ້ເປັນໂອກາດຈາກການລະບາດຂອງພະຍາດໂຄວິດ-19 ທີ່ກະທົບຕໍ່ລະບົບຕ່ອງໂສ້ການຜະລິດພາກພື້ນ ທີ່ຍາກຍ້າຍຖານການຜະລິດມາສປປ ລາວ ໂດຍສະເພາະການຜະລິດຊິ້ນສ່ວນໄມໂຄຣຊິບ, ຮາດດິສ, ຄອນດັກເຕີ, ຕຣິກເກີຄອຍ, ແຜງວົງຈອນເອເລັກໂຕຣນິກ, ເລນສ໌ ແລະ ອື່ນໆ.

7) **ອຸດສາຫະກຳພາຫະນະ ແລະ ກົນຈັກຮັບໃຊ້ກະສິກຳ:**

- **ອຸດສາຫະກຳພາຫະນະ:** ຊຸກຍູ້ ແລະ ປັບປຸງມາດຕະຖານ ແລະ ຄຸນພາບຂອງຊິ້ນສ່ວນຍານພາຫະນະທີ່ຜະລິດ ແລະ ປະກອບຢູ່ພາຍໃນ ໃຫ້ໄດ້ຮັບການຢັ້ງຢືນ ແລະ ຮັບຮອງຈາກອົງການທີ່ຖືກຮັບຮອງ ແລະ ຢັ້ງຢືນຈາກສາກົນ ເພື່ອສາມາດຈຳໜ່າຍໃນຕະຫຼາດພາກພື້ນ ແລະ ສາກົນ. ຍົກລະດັບມາດຕະຖານໂຮງງານ ແລະ ຄຸນນະພາບຊິ້ນສ່ວນທີ່ຜະລິດ ແລະ ປະກອບຂອງລົດຈັກ; ຊຸກຍູ້ສົ່ງເສີມການແລກປ່ຽນການສະໜອງວັດຖຸດິບ ແລະ ຊິ້ນສ່ວນຢູ່ພາກພື້ນໃຫ້ຫຼາຍຂຶ້ນ ໂດຍເນັ້ນໃສ່ການເຊື່ອມໂຍງຖານການຜະລິດດຽວພາຍໃນອາຊຽນ.
- **ອຸດສາຫະກຳກົນຈັກຮັບໃຊ້ກະສິກຳ :** ໃຫ້ນະໂຍບາຍສະເພາະ ເພື່ອດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃນການລົງທຶນສ້າງຕັ້ງໂຮງງານຜະລິດຊິ້ນສ່ວນ ແລະ ປະກອບອຸປະກອນ, ກົນຈັກ ແລະ ພະຫະນະກົນຈັກຮັບໃຊ້ກະສິກຳ ລວມທັງການໝູນໃຊ້ພູມປັນຍາ ແລະ ເຕັກນິກການຜະລິດຂອງທ້ອງຖິ່ນ, ຊຸກຍູ້ສົ່ງເສີມການຜະລິດ ແລະ ປະກອບອຸປະກອນທີ່ນຳໃຊ້ເຂົ້າໃນການຜະລິດກະສິກຳອັດສະລິຍະ (Smart farming), ຊຸກຍູ້ ແລະ ອຳນວຍການເຂົ້າຫາແຫຼ່ງທຶນຕ່າງໆ ເພື່ອນຳໃຊ້ເຂົ້າໃນການຂະຫຍາຍການຜະລິດ ແລະ ຄ້ຳປະກັນການຈຳໜ່າຍຜະລິດຕະພັນໃຫ້ຊາວກະສິກອນ ເພື່ອສາມາດເຂົ້າຫາ ແລະ ເພີ່ມປະສິດທິພາບການຜະລິດໃນຂົງເຂດກະສິກຳ ແລະ ອຳນວຍຄວາມສະດວກ ແກ່ການນຳເຂົ້າວັດຖຸອຸປະກອນ ເຂົ້າໃນການສ້າງຕັ້ງ ແລະ ຜະລິດກົນຈັກຮັບໃຊ້ກະສິກຳ.

8) **ອຸດສາຫະກຳສິ່ງພິມ ແລະ ເຄື່ອງຫຸ້ມຫໍ່:**

- ສຸມໃສ່ການຮ່ວມມືກັບອົງການທີ່ກ່ຽວຂ້ອງ ໃນການໃຫ້ຄຳປຶກສາ ແລະ ແນະນຳກ່ຽວກັບການອອກແບບ ແລະ ການຫຸ້ມຫໍ່ຜະລິດຕະພັນອຸດສາຫະກຳປຸງແຕ່ງ, ກຳນົດມາດຕະການ ກ່ຽວກັບການນຳເຂົ້າວັດຖຸອຸປະກອນສຳລັບການຫຸ້ມຫໍ່ຕ່າງໆໃນການຜະລິດ ແລະ ຊຸກຍູ້ການນຳໃຊ້ຜະລິດຕະພັນຫຸ້ມຫໍ່ພາຍໃນ ຂະຫຍາຍຫົວໜ່ວຍການຜະລິດການຫຸ້ມຫໍ່ຕ່າງໆ ດ້ວຍການຊຸກຍູ້ສົ່ງເສີມດຶງດູດການລົງທຶນ, ຊຸກຍູ້ການຜະລິດສະໜອງຊຶ່ງກັນ ແລະ ກັນພາຍໃນ, ການອຳນວຍຄວາມສະດວກການເຂົ້າຫາແຫຼ່ງທຶນ, ການນຳເຂົ້າວັດຖຸດິບ ແລະ ເຄື່ອງຈັກຮັບໃຊ້ການຜະລິດ ຊຶ່ງປະເພດອຸດສາຫະກຳສິ່ງພິມ ແລະ ເຄື່ອງຫຸ້ມຫໍ່ ສຸມໃສ່: ການຜະລິດຖົງຊີມັງ, ຖົງປຸ໋ຍ, ຖົງເປົ້າຂະໜາດຕ່າງໆ, ແກັດເຈ້ຍ, ເປົ່າຂວດແກ້ວ-ຂວດປລາສະຕິກ ຕະຫຼອດເຖິງການນຳໃຊ້ເມັດຢາງຣີໄຊເຄີນ ເຂົ້າໃນການຜະລິດສິ່ງຫຸ້ມຫໍ່.

## 2- <u>ຍົກລະດັບຄວາມສາມາດແຂ່ງຂັນ ແລະ ສົ່ງເສີມການຜະລິດ ແລະ ນຳໃຊ້ຜົນຜະລິດອຸດສາຫະກຳພາຍໃນ</u>

1) **ຍົກລະດັບຄວາມສາມາດແຂ່ງຂັນ :**

ການຍົກລະດັບຄວາມສາມາດການແຂ່ງຂັນ ແມ່ນການສ້າງຄວາມເຂັ້ມແຂງແກ່ອຸດສາຫະກຳປຸງແຕ່ງ ໃຫ້ຂະຫຍາຍຕົວ ແລະ ສາມາດແຂ່ງຂັນເພີ່ມຂຶ້ນ ໂດຍສຸມໃສ່ :

- ສົ່ງເສີມການວິໄຈ ຕໍ່ຍອດຜົນການຄົ້ນຄວ້າ ແລະ ພັດທະນາ (R&D), ການປະຍຸກນຳໃຊ້ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ ແລະ ດີຈີຕອນ ໃນການພັດທະນາຜະລິດຕະພັນ ແລະ ຍົກລະດັບປະສິດຕິພາບຂອງຂະແໜງອຸດສາຫະກຳປຸງແຕ່ງ ດ້ວຍການປັບປຸງ ແລະ ຍົກລະດັບເຕັກໂນໂລຊີ ເຂົ້າໃນຂະບວນການຜະລິດ, ຄົ້ນຄວ້າການນຳໃຊ້ຜົນການຄົ້ນຄວ້າ, ພັດທະນາ ແລະ ນະວັດຕະກຳຈາກຕ່າງປະເທດ ເຂົ້າໃນການຄຸ້ມຄອງ

ບໍລິຫານ, ການຈັດການ, ການພັດທະນາ ແລະ ຍົກລະດັບມາດຕະຖານຂອງຜະລິດຕະພັນອຸດສາຫະກຳເຂົ້າໃນບັນດາໂຮງງານອຸດສາຫະກຳປຸງແຕ່ງ ເທື່ອລະກ້າວ. ເພີ່ມທະວີການຮ່ວມມືປະສານງານ ລະຫວ່າງ ພາກລັດ, ສະຖາບັນຄົ້ນຄວ້າ ແລະ ທຸລະກິດ ໃນການຄົ້ນຄວ້າ ແລະ ພັດທະນາ ເປັນຕົ້ນ ການຫຸ້ມຫໍ່ຕ່າງໆ.

- ຍົກລະດັບ ແລະ ພັດທະນາຜູ້ດຳເນີນກິດຈະການ ແລະ ບຸກຄະລາກອນ ໃນຂະບວນການຕ່ອງໂສ້ການຜະລິດສູງຂຶ້ນ ໃນດ້ານທັກສະການຜະລິດ, ສ້າງຄວາມເຂັ້ມແຂງ ໃຫ້ພາກທຸລະກິດອຸດສາຫະກຳປຸງແຕ່ງ ໂດຍຈັດຝຶກອົບຮົມການວາງແຜນທຸລະກິດ, ການບໍລິຫານເງິນ, ຕິດພັນກັບການສ້າງຕັ້ງກຸ່ມ ແລະ ເຄືອຂ່າຍອຸດສາຫະກຳປຸງແຕ່ງ ເຕັກໂນໂລຊີ ແລະ ນະວັດຕະກຳ ໂດຍສຸມໃສ່ຍົກລະດັບຄວາມຮູ້ວິຊາສະເພາະ ໃຫ້ບຸກຄະລາກອນໃນຂະແໜງອຸດສາຫະກຳປຸງແຕ່ງ ທັງພາກລັດ ແລະ ເອກະຊົນ ເພື່ອຮອງຮັບການຂະຫຍາຍຕົວຂອງວຽກງານໃນແຕ່ລະໄລຍະ ໂດຍເນັ້ນໃສ່ການເຜີຍແຜ່ນະໂຍບາຍ ແລະ ນິຕິກຳ ເພື່ອໃຫ້ການຈັດຕັ້ງປະຕິບັດໄປໃນທາງດຽວກັນ, ພັດທະນາວິຊາຊີບ ແລະ ຍົກລະດັບສີມືແຮງງານດ້ານອຸດສາຫະກຳປຸງແຕ່ງ ດ້ວຍການປະສານສົມທົບກັບຂະແໜງສຶກສາທິການ ແລະ ກິລາ ເປັນຕົ້ນ ມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນການສຶກສາອື່ນໆ ເພື່ອສ້າງບຸກຄະລາກອນທີ່ມີຄຸນນະພາບ ແລະ ຮັບປະກັນດ້ານປະລິມານ ສະໜັບສະໜູນວຽກງານອຸດສາຫະກຳປຸງແຕ່ງ.
- ປະສານສົມທົບກັບຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ຍົກລະດັບສີມືແຮງງານ ຜ່ານສູນຝຶກອົບຮົມວິຊາຊີບ, ສູນພັດທະນາສີມືແຮງງານ ແລະ ສະຖາບັນຝຶກອົບຮົມຕ່າງໆ ເພື່ອສ້າງ ແລະ ພັດທະນາສີມືແຮງງານ ດ້ານອຸດສາຫະກຳ ລວມທັງການຮ່ວມມືກັບພາກທຸລະກິດ ໃຫ້ສາມາດຮອງຮັບ ແລະ ຕອບສະໜອງຕາມຄວາມຕ້ອງການຂອງໂຮງງານອຸດສາຫະກຳປຸງແຕ່ງ ໃນແຕ່ລະໄລຍະ. ຊຸກຍູ້ການລະດົມແຮງງານລາວທີ່ກັບຄືນຈາກປະເທດເພື່ອນບ້ານ ທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ເຂົ້າໃນອຸດສາຫະກຳປຸງແຕ່ງທີ່ນຳໃຊ້ແຮງງານຫຼາຍ ໂດຍສະເພາະອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ. ຍົກລະດັບສີມືແຮງງານ ແລະ ທັກສະດ້ານການນຳໃຊ້ ໄອຊີທີ ເພື່ອສ້າງບຸກຄະລາກອນ ແລະ ຜູ້ປະກອບການຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ເພີ່ມຂຶ້ນ ພ້ອມທັງລະດົມການມີສ່ວນຮ່ວມຂອງພາກທຸລະກິດ. ຄຽງຄູ່ກັນ, ຊຸກຍູ້ໃຫ້ບັນດາໂຮງງານຂະໜາດໃຫຍ່ ສະໜັບສະໜູນການສ້າງເຄືອຂ່າຍ ເພື່ອເຊື່ອມໂຍງການຜະລິດໃຫ້ກັນ ແລະ ກັນ, ຊຸກຍູ້ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ມີສ່ວນຮ່ວມໃນຕ່ອງໂສ້ການຜະລິດກັບບັນດາໂຮງງານອຸດສາຫະກຳຂະໜາດໃຫຍ່ ທີ່ມີຕະຫຼາດຮອງຮັບແລ້ວ.
- ຊຸກຍູ້ສົ່ງເສີມການນຳໃຊ້ວັດຖຸດິບ, ຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ ເຂົ້າໃນການປຸງແຕ່ງເປັນຜະລິດຕະພັນອື່ນໆທີ່ມີມູນຄ່າເພີ່ມຂຶ້ນ ດ້ວຍການກຳນົດບັນຊີຜະລິດຕະພັນອຸດສາຫະກຳ ທີ່ໄດ້ຮັບນະໂຍບາຍສົ່ງເສີມ;
- ພັດທະນາມາດຕະຖານການກວດສອບ ແລະ ຮັບຮອງລະບົບ ແລະ ຜະລິດຕະພັນ ເພື່ອເພີ່ມຂີດຄວາມສາມາດໃຫ້ກັບຂະແໜງອຸດສາຫະກຳປຸງແຕ່ງ ແລະ ເພື່ອຄຸ້ມຄອງຜູ້ບໍລິໂພກ: ເນັ້ນໃສ່ຍົກລະດັບມາດຕະຖານ ແລະ ຄຸນນະພາບຜະລິດຕະພັນຂອງລາວໃຫ້ດີຂຶ້ນເທື່ອລະກ້າວ ໂດຍເນັ້ນໃສ່ການປັບປຸງ ຂະບວນການຜະລິດໃຫ້ໄດ້ຮັບການຢັ້ງຢືນມາດຕະຖານການຜະລິດທີ່ດີ (GMP), ລະບົບວິເຄາະ ແລະ ຄວບຄຸມຈຸດວິກິດ (HACCP), ລະບົບການຈັດການໂຮງງານ (ISO 9001), ມາດຕະຖານສິ່ງແວດລ້ອມ (ISO 14001) ແລະ ມາດຕະຖານສາກົນອື່ນໆ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ຕະຫຼາດພາຍໃນ ແລະ ຕ່າງປະເທດ;
- ຊຸກຍູ້ສົ່ງເສີມ ໃຫ້ມີກາໝາຍຜະລິດຕະພັນອຸດສາຫະກຳທີ່ຫຼາກຫຼາຍ ເພື່ອສະໜອງຕະຫຼາດພາຍໃນ ແລະ ສາກົນ;
- ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ທຸລະກິດອຸດສາຫະກຳປຸງແຕ່ງ ລວມທັງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການເຂົ້າຫາແຫຼ່ງທຶນ;

- ສະໜັບສະໜູນການສ້າງຕັ້ງ ແລະ ຍົກລະດັບຂີດຄວາມສາມາດຂອງສູນການອອກແບບ ແລະ ກວດສອບຜະລິດຕະພັນອຸດສາຫະກໍາ ແລະ ຂະບວນການຜະລິດ; ແລະ
- ພັດທະນາກຸ່ມ ແລະ ເຄືອຂ່າຍຜູ້ຜະລິດໃນອຸດສາຫະກໍາທ່າແຮງ ເພື່ອເຊື່ອມໂຍງກັບຖານຜະລິດພາກພື້ນ ແລະ ສາກົນ: ເນັ້ນໃສ່ຊຸກຍູ້ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງ ໃນການສ້າງສະມາຄົມ, ກຸ່ມ ແລະ ເຄືອຂ່າຍຜູ້ຜະລິດ, ປັບປຸງກົງຈັກການຈັດຕັ້ງວຽກງານສົ່ງເສີມອຸດສາຫະກໍາປຸງແຕ່ງ, ປັບປຸງກົນໄກປະສານງານ ແລະ ຮ່ວມມືພາກລັດກັບພາກທຸລະກິດ, ເພີ່ມທະວີການຮ່ວມມື ແລະ ຍາດແຍ່ງການຊ່ວຍເຫຼືອຈາກສາກົນໃຫ້ຫຼາຍຂຶ້ນ.

2) **ສົ່ງເສີມການຜະລິດ ແລະ ນໍາໃຊ້ຜົນຜະລິດອຸດສາຫະກໍາພາຍໃນ ກ້າວສູ່ການສົ່ງອອກ**

ການສົ່ງເສີມການຜະລິດ ແລະ ນໍາໃຊ້ຜົນຜະລິດອຸດສາຫະກໍາພາຍໃນ ແມ່ນສຸມໃສ່:

- ສ້າງນະໂຍບາຍ ແລະ ກົນໄກກ່ຽວກັບ ການຜະລິດ, ການນໍາເຂົ້າ ແລະ ການສົ່ງອອກ ທີ່ຕິດພັນກັບວຽກງານອຸດສາຫະກໍາປຸງແຕ່ງ ແນໃສ່ເພື່ອໃຫ້ການຜະລິດມີຄວາມຄ່ອງຕົວ ແລະ ສອດຄ່ອງກົມກຽວກັນ;
- ປັບປຸງກົງຈັກການຈັດຕັ້ງ, ການກໍານົດໜ້າວຽກ, ພາລະບົດບາດ ແລະ ບຸກຄະລາກອນ ໃຫ້ສາມາດຜັນຂະຫຍາຍວຽກງານສົ່ງເສີມອຸດສາຫະກໍາປຸງແຕ່ງ ໃຫ້ຂະຫຍາຍຕົວເທື່ອລະກ້າວ
- ສົ່ງເສີມຫົວໜ່ວຍການຜະລິດທີ່ມີທ່າແຮງ ເພື່ອອໍານວຍສະໜັບສະໜູນດ້ານພາສີ-ອາກອນ ແລະ ການເຂົ້າຫາແຫຼ່ງທຶນ ແລະ ສົ່ງເສີມການຕະຫຼາດ ແລະ ການເຂົ້າຫາຕະຫຼາດ ພາຍໃນ, ພາກພື້ນ ແລະ ສາກົນ;
- ກໍານົດມາດຕະການ ແລະ ລະບຽບການທາງດ້ານເຕັກນິກຕ່າງໆ ຕໍ່ສິນຄ້າອຸດສາຫະກໍາທີ່ນໍາເຂົ້າມາ ເພື່ອປົກປ້ອງຜູ້ຊົມໃຊ້ ແລະ ຊຸກຍູ້ການໃຊ້ຜະລິດຕະພັນພາຍໃນ ສໍາລັບໂຮງງານອຸດສາຫະກໍາ ແລະ ຜູ້ບໍລິໂພກ;
- ສົ່ງເສີມ ແລະ ພັດທະນາຫົວໜ່ວຍອຸດສາຫະກໍາ ທີ່ນໍາໃຊ້ ວັດຖຸດິບ, ຜະລິດຕະພັນເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບພາຍໃນປະເທດ ແລະ ສ້າງມູນຄ່າເພີ່ມສູງ ລວມທັງສະໜັບສະໜູນການສະໜອງຜະລິດຕະພັນພາຍໃນໃຫ້ແກ່ບັນດາໂຮງງານທີ່ມີການຜະລິດພາຍໃນໃຫ້ຫຼາຍຂຶ້ນ ດ້ວຍການກໍານົດບັນຊີລາຍການຜະລິດຕະພັນອຸດສາຫະກໍາທີ່ຜະລິດຢູ່ພາຍໃນ ເພື່ອສາມາດດຸ່ນດ່ຽງສິນຄ້ານໍາເຂົ້າ ແນໃສ່ເພື່ອກໍານົດນະໂຍບາຍສົ່ງເສີມການຜະລິດພາຍໃນ ແລະ ລຸດຜ່ອນການນໍາເຂົ້າ (ລາຍການ (ບັນຊີ) ຜະລິດຕະພັນອຸດສາຫະກໍາທີ່ຜະລິດຢູ່ພາຍໃນຄັດຕິດນໍາ ເອກະສານຊ້ອນທ້າຍ 1) ໂດຍຈະມີການປັບປຸງເປັນແຕ່ລະໄລຍະ.
- ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອສ້າງຈິດສໍານຶກ ແລະ ໂຄສະນາເຜີຍແຜ່ນະໂຍບາຍ **"ລາວເຮັດ ລາວໃຊ້ ລາວໄດ້ ລາວຈະເລີນ"** ທົ່ວສັງຄົມ ດ້ວຍຫຼາຍຮູບການ ເປັນຕົ້ນ ທາງໂທລະທັດ ແລະ ສື່ສັງຄົມອອນລາຍ.
- ຊຸກຍູ້ການຜະລິດ ເພື່ອໃຫ້ຜະລິດຕະພັນຂອງລາວສາມາດຕອບສະໜອງໄດ້ທັງປະລິມານ ແລະ ຄຸນນະພາບສາມາດຕອບສະໜອງຕາມຄວາມຕ້ອງການ ແລະ ເງື່ອນໄຂຂອງຕະຫຼາດພາກພື້ນ ແລະ ສາກົນ ໂດຍສະເພາະນໍາໃຊ້ສິດທິພິເສດທາງດ້ານການຄ້າ ແລະ ການເຈລະຈາສັນຍາການຄ້າ ເພື່ອດຶງດູດການລົງທຶນ ແລະຂະຫຍາຍການຜະລິດໃຫ້ເຕີບໃຫຍ່ ແລະ ມີສິນຄ້າທີ່ຫຼາກຫຼາຍ ສໍາລັບສິນຄ້າເພື່ອສົ່ງອອກ.

## 3- <u>ການຈັດຕັ້ງປະຕິບັດເປົ້າໝາຍການເຕີບໂຕສີຂຽວແຫ່ງຊາດ</u>

ການຈັດຕັ້ງປະຕິບັດເປົ້າໝາຍການເຕີບໂຕສີຂຽວແຫ່ງຊາດສໍາລັບຂະແໜງອຸດສາຫະກໍາປຸງແຕ່ງ ແມ່ນປະຕິບັດຕາມຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຮອດປີ 2030 ເພື່ອຊຸກຍູ້ການຂະຫຍາຍຕົວຂອງເສດຖະກິດ ຕາມທິດສີຂຽວ ແລະ ຍືນຍົງ ໃນນີ້ ສຸມໃສ່:

- ປັບປຸງ ແລະ ພັດທະນາກົນໄກ ການຄຸ້ມຄອງການດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງ ໃຫ້ໄປຕາມລະບຽບກົດໝາຍ ດ້ວຍການປັບປຸງ ແລະ ຈັດຕັ້ງປະຕິບັດມາດຕະຖານໂຮງງານອຸດສາຫະກໍາ, ກົດ

ລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງກັບ ການຄຸ້ມຄອງສິ່ງແວດລ້ອມໃນຂະແໜງອຸດສາຫະກຳຢ່າງເປັນລະບົບ ແລະ ເຂັ້ມງວດເພື່ອຮັບປະກັນບໍ່ໃຫ້ນ້ຳເປື້ອນ, ມົນລະພິດທາງອາກາດ ແລະ ສິ່ງເສດເຫຼືອທີ່ເປັນພິດຈາກໂຮງງານອຸດສາຫະກຳ ແລະ ນິຄົມອຸດສາຫະກຳທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ກໍຄືຕໍ່ສຸຂະພາບຂອງຄົນ ແລະ ສັດ;

- ສ້າງນະໂຍບາຍ ແລະ ນິຕິກຳ ສົ່ງເສີມການຫັນເປັນອຸດສາຫະກຳສີຂຽວ;
- ສົ່ງເສີມ ແລະ ສະໜັບສະໜູນການພັດທະນາ ເຂດ ແລະ ນິຄົມອຸດສາຫະກຳ ແບບນິເວດວິທະຍາ;
- ການບໍລິຫານຈັດການສິ່ງເສດເຫຼືອອຸດສາຫະກຳແບບຄົບວົງຈອນ ໂດຍເນັ້ນໃສ່ການໃຊ້ປະໂຫຍດຈາກສິ່ງເສດເຫຼືອອຸດສາຫະກຳດ້ວຍການສົ່ງເສີມການພັດທະນາອຸດສາຫະກຳແບບຄົບວົງຈອນທີ່ນຳເອົາເສດວັດຖຸດິບຈາກໂຮງງານໜຶ່ງໄປເປັນວັດຖຸດິບປ້ອນໂຮງງານອື່ນ ເພື່ອເພີ່ມປະສິດທິພາບການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດໃຫ້ເກີດປະໂຫຍດສູງສຸດ;
- ສົ່ງເສີມການພັດທະນາໂຮງງານທີ່ມີຂີດຄວາມສາມາດ ໃນການເປັນອຸດສາຫະກຳປຸງແຕ່ງແບບນິເວດວິທະຍາດ້ວຍການຊຸກຍູ້ສົ່ງເສີມການນຳໃຊ້ນະວັດຕະກຳດ້ານເຕັກນິກ ແລະ ເຕັກໂນໂລຊີການຜະລິດທີ່ທັນສະໄໝ ແລະ ເປັນມິດກັບສິ່ງແວດລ້ອມ ໂດຍພັດທະນາອຸດສາຫະກຳປຸງແຕ່ງທີ່ເປັນທ່າແຮງ ໃນ 8 ກຸ່ມອຸດສາຫະກຳປຸງແຕ່ງເປົ້າໝາຍ;
- ຄົ້ນຄວ້າ, ປັບປຸງ ແລະ ຈັດຕັ້ງປະຕິບັດກົນໄກການເງິນເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການໂຮງງານອຸດສາຫະກຳໃນການນຳເຂົ້າ ແລະ ນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ, ປະຢັດວັດຖຸດິບ, ນຳໃຊ້ພະລັງງານຢ່າງມີປະສິດທິພາບ ແລະ ນຳໃຊ້ພະລັງງານທາງເລືອກ ລວມທັງນຳໃຊ້ພະລັງງານຊີວະພາບ ແລະ ໄຮໂດຣເຈນ ໂດຍສະເພາະສົ່ງເສີມການເຂົ້າເຖິງແຫຼ່ງທຶນສີຂຽວຂອງຜູ້ປະກອບການໂຮງງານອຸດສາຫະກຳຂະໜາດນ້ອຍ ແລະ ຂະໜາດກາງ;
- ສົ່ງເສີມຫົວໜ່ວຍການຜະລິດອຸດສາຫະກຳປຸງແຕ່ງ ໃຫ້ມີການພັດທະນາຜະລິດຕະພັນ ແລະ ຂະບວນການຜະລິດທີ່ເປັນມິດກັບສິ່ງແວດລ້ອມ ໂດຍຊຸກຍູ້ ແລະ ສົ່ງເສີມຂະບວນການຫັນເປັນອຸດສາຫະກຳ ແລະ ທັນສະໄໝໃນຍຸກກ້າວສູ່ອຸດສາຫະກຳ 4,0 ຢ່າງແຂງແຮງ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ຄວາມບອບບາງຕໍ່ສະພາບການປ່ຽນແປງດິນຟ້າອາກາດ, ໄພພິບັດທາງທຳມະຊາດ ແລະ ການເໜັງຕີງຂອງສະພາບເສດຖະກິດໂລກ. ຕົ້ນຕໍເລັ່ງໃສ່ຊຸກຍູ້, ສົ່ງເສີມອຸດສາຫະກຳທີ່ມີທ່າແຮງເປັນຕົ້ນ ອຸດສາຫະກຳປຸງແຕ່ງກະສິກຳ, ປຸງແຕ່ງໄມ້, ປຸງແຕ່ງແຮ່ທາດ ແລະ ອື່ນໆ;
- ສົ່ງເສີມ ແລະ ສະໜັບສະໜູນການພັດທະນາເຄືອຂ່າຍໃນການຕິດຕາມຜົນກະທົບຕໍ່ສິ່ງແວດລ້ອມ ໂດຍຜ່ານການມີສ່ວນຮ່ວມຂອງທ້ອງຖິ່ນ ແລະ ຊຸມຊົນຢ່າງຕໍ່ເນື່ອງ;
- ສ້າງໂຄງລ່າງພື້ນຖານຮອງຮັບການກຳຈັດສິ່ງເສດເຫຼືອອຸດສາຫະກຳທີ່ເປັນພິດທີ່ບໍ່ໄດ້ມາດຕະຖານດ້ານສິ່ງແວດລ້ອມ ເພື່ອຮັບປະກັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊຸມຊົນ;
- ສົ່ງເສີມອຸດສະຫະກຳປຸງແຕ່ງຂະໜາດນ້ອຍ ແລະ ກາງຕາມທິດສີຂຽວ ແລະ ຍືນຍົງ ດ້ວຍນະໂຍບາຍ ແລະ ມາດ ຕະການພິເສດຕ່າງໆ ເຊັ່ນ: ອຳນວຍຄວາມສະດວກໃນການເຂົ້າເຖິງແຫຼ່ງທຶນ, ເຕັກໂນໂລຊີທີ່ສະອາດ, ທັນສະໄໝ ແລະ ມີປະສິດທິພາບ, ປະສິດທິຜົນສູງ, ການເຂົ້າເຖິງຕະຫຼາດ, ແຮງງານທີ່ມີຄຸນນະພາບ ໄປພ້ອມໆກັບການຍົກລະດັບຂີດຄວາມສາມາດຂອງຜູ້ປະກອບການໃໝ່.

## 4- <u>ສົ່ງເສີມການພັດທະນາອຸດສາຫະກຳປຸງແຕ່ງແບບຍືນຍົງ</u>

ຕາມເງື່ອນໄຂ ແລະ ທ່າອ່ຽງຂອງສາກົນ ທີ່ມີເປົ້າໝາຍສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ແບບຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ, ສຸມໃສ່ ສົ່ງເສີມອຸດສາຫະກຳສີຂຽວ ແລະ ການຜະລິດທີ່ສະອາດ ເປັນຕົ້ນ ນຳ

ໃຊ້ເຕັກໂນໂລຊີການຜະລິດເຂົ້າໃນອຸດສາຫະກຳປຸງແຕ່ງ ໃຫ້ສາມາດຫຼຸດຜ່ອນປະລິມານການປ່ອຍທາດອາຍເຮືອນແກ້ວ, ປັບປຸງຂະບວນການຜະລິດ ແລະ ການນຳໃຊ້ຊັບພະຍາກອນໃຫ້ມີປະສິດຕະພາບ ເຮັດໃຫ້ອັດຕາການນຳໃຊ້ຊັບພະຍາກອນ (ວັດຖຸດິບ, ພະລັງງານ) ຕໍ່ຫົວໜ່ວຍຜະລິດຕະພັນຫຼຸດລົງ ພ້ອມທັງຫຼຸດຜ່ອນສິ່ງເສດເຫຼືອ ທີ່ມີຜົນກະທົບຕໍ່ສະພາບແວດລ້ອມ, ສຸຂະພາບຂອງຄົນ ແລະ ສັດ. ພ້ອມນັ້ນ ກໍສົ່ງເສີມພັດທະນາ ຫຼື ປ່ຽນຖ່າຍເຕັກໂນໂລຊີທີ່ມີປະສິດທິພາບສູງ ແລະ ເປັນມິດຕໍ່ສິ່ງແວດລ້ອມ ຊຸກຍູ້ສົ່ງເສີມໃຫ້ໂຮງງານອຸດສາຫະກຳປຸງແຕ່ງໄດ້ຮັບການຢັ້ງຢືນອຸດສາຫະກຳສີຂຽວຫຼາຍກວ່າ 10 ແຫ່ງ ພາຍໃນປີ 2025 ແລະ ການຕິດສະຫຼາກສີຂຽວສຳລັບຜະລິດຕະພັນອຸດສາຫະກຳປຸງແຕ່ງ.

ສ້າງຈິດສຳນຶກ ແລະ ສົ່ງເສີມກໍ່ໃຫ້ມີການຊົມໃຊ້ຜະລິດຕະພັນ ແລະ ການບໍລິການຈາກຂະບວນການ ທີ່ເປັນມິດຕໍ່ສິ່ງແວດລ້ອມ, ສ້າງຈິດສຳນຶກ ການມີຄວາມຮັບຜິດຊອບຕໍ່ສັງຄົມກໍ່ຄືການເຮັດທຸລະກິດຂອງຕົນຕິດພັນກັບການຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ (Corporate Social Responsibility: CSR) ແລະ ຊຸກຍູ້ການນຳໃຊ້ເສດຖະກິດແບບໝູນວຽນ ໃນຂະແໜງອຸດສາຫະກຳປຸງແຕ່ງ.

ໃນການປະຕິບັດແຜນງານສົ່ງເສີມການຜະລິດ ແລະ ການບໍລິໂພກແບບຍືນຍົງ ປະກອບດ້ວຍ 2 ແຜນງານຄື:

1) ສົ່ງເສີມການຜະລິດທີ່ສະອາດ;
2) ສົ່ງເສີມການບໍລິໂພກແບບຍືນຍົງ.

### 5- <u>ສົ່ງເສີມການສ້າງມູນຄ່າເພີ່ມ ແລະ ຍົກລະດັບຜະລິດຕະພາບ</u>

ສົ່ງເສີມອຸດສາຫະກຳປຸງແຕ່ງ ໃຫ້ມີການຜະລິດສ້າງມູນຄ່າເພີ່ມສູງ ປະກອບສ່ວນເຮັດໃຫ້ມູນຄ່າເພີ່ມການຜະລິດອຸດສາຫະກຳປຸງແຕ່ງ ສົ່ງເສີມການເຊື່ອມໂຍງຕ່ອງໂສ້ມູນຄ່າການຜະລິດ ແລະ ສ້າງຫົວໜ່ວຍການຜະລິດໃໝ່ດ້ານອຸດສາຫະກຳປຸງແຕ່ງພາຍໃນ ເພີ່ມຂຶ້ນສະເລ່ຍບໍ່ຕ່ຳກວ່າ 10% ຕໍ່ປີ ສົ່ງເສີມການນຳໃຊ້ວັດຖຸດິບ ແລະ ຜະລິດຕະພັນສຳເລັດຮູບພາຍໃນໃຫ້ຫຼາກຫຼາຍ ເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ ແລະ ສ້າງມູນຄ່າເພີ່ມຜະລິດຕະພັນໃຫ້ສູງຂຶ້ນ ເຮັດໃຫ້ມີຕ່ອງໂສ້ການຜະລິດພາຍໃນ ຂະຫຍາຍຫົວໜ່ວຍຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ຫຼາຍຂຶ້ນ ເຮັດໃຫ້ເກີດມີການໝູນວຽນເສດຖະກິດພາຍໃນ ແນໃສ່ຫຼຸດຜ່ອນການນຳເຂົ້າທັງຮູບແບບວັດຖຸດິບ, ຜະລິດຕະພັນເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ເທື່ອລະກ້າວ, ຄົ້ນຄວ້າ ແລະ ກຳນົດນະໂຍບາຍ ແລະ ໃຫ້ລາງວັນອຸດສາຫະກຳ ເພື່ອສົ່ງເສີມການສ້າງມູນຄ່າເພີ່ມ ແລະ ຜະລິດຕະພາບ ດ້ວຍການຍົກລະດັບເຕັກນິກ-ເຕັກໂນໂລຊີ ຜ່ານການອຳນວຍຄວາມສະດວກການຊ່ວຍເຫຼືອພາກທຸລະກິດ (Business Assitance Faciliy: BAF). ຄາດໝາຍຍົກລະດັບຜະລິດຕະພາບອຸດສາຫະກຳປຸງແຕ່ງ ໃຫ້ໄດ້ 1,4% ໃນປີ 2025.

ການປະຕິບັດແຜນງານສົ່ງເສີມການສ້າງມູນຄ່າເພີ່ມ ແລະ ຜະລິດຕະພາບ ປະກອບດ້ວຍ 3 ແຜນງານຍ່ອຍ ຄື:

1) ສົ່ງເສີມການເຊື່ອມໂຍງເຂົ້າຕ່ອງໂສ້ການຜະລິດອຸດສາຫະກຳປຸງແຕ່ງພາຍໃນ;
2) ສົ່ງເສີມການສ້າງມູນຄ່າເພີ່ມ ແລະ ຍົກລະດັບຜະລິດຕະພາບ;
3) ສ້າງລາງວັນອຸດສາຫະກຳດີເດັ່ນ ແລະ ຈັດງານອຸດສາຫະກຳປະຈຳປີ (Industry Expo).

## 2.2 <u>ແຜນງານທີ 2</u>: ການປັບປຸງໂຄງລ່າງພື້ນຖານ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ

### 2.2.1 ເປົ້າໝາຍສະເພາະ ແລະ ຕົວຊີ້ວັດ:

- ຊຸກຍູ້ການພັດທະນາໂຄງລ່າງພື້ນຖານສະໜັບສະໜູນອຸດສາຫະກຳປຸງແຕ່ງ ພາຍໃນປີ 2025 ໃຫ້ໄດ້ລະບົບຕາໜ່າງໄຟຟ້າ, ພັດທະນາບຸກເບີກພື້ນທີ່ ແລະ ພັດທະນາຫົນທາງ ເຂົ້າຫາເຂດ ຫຼື ນິຄົມອຸດສາຫະກຳ ແລະ ຕອບສະໜອງລະບົບນ້ຳປະປາ ເຂົ້າຫາ ເຂດ ຫຼື ນິຄົມອຸດສາຫະກຳໄດ້.

- ກຳນົດ ແລະ ພັດທະນາ ເຂດອຸດສາຫະກຳ ພາຍໃນປີ 2025 :
    - ພັດທະນາໂຄງລ່າງພື້ນຖານເຊື່ອມຕໍ່ກັບເຂດອຸດສາຫະກຳ ໃຫ້ໄດ້ຢ່າງໜ້ອຍ 7 ເຂດ;
    - ສຳຫຼວດອອກແບບລະອຽດເນື້ອທີ່ເຂດອຸດສາຫະກຳ ໄດ້ຢ່າງໜ້ອຍ 1.000 ເຮັກຕາ;
    - ບຸກເບີກ ພັດທະນາເນື້ອທີ່ດິນເຂດອຸດສາຫະກຳໃຫ້ໄດ້ 242 ເຮັກຕາ;
- ຊຸກຍູ້ ແລະ ລະດົມການລົງທຶນສ້າງເປັນນິຄົມອຸດສາຫະກຳ:
    - ພັດທະນາເປັນນິຄົມອຸດສາຫະກຳ 4 ແຫ່ງ; ເນື້ອທີ່ 1.000 ເຮັກຕາ;
    - ມູນຄ່າການລົງທຶນ ເພື່ອພັດທະນານິຄົມອຸດສາຫະກຳ 16.000.000 ໂດລາ.
- ສ້າງສະພາບແວດລ້ອມເອື້ອອຳນວຍການສ້າງຕັ້ງຫົວໜ່ວຍການຜະລິດ ແລະ ດຳເນີນກິດຈະການໂຮງງານ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຫຼຸດຄ່າໃຊ້ຈ່າຍຕ່າງໆ ແນໃສ່ເພື່ອໃຫ້ເກີດມີຫົວໜ່ວຍການຜະລິດ ທີ່ຫຼາກຫຼາຍ, ສົມດຸນ ແລະ ມີການຂະຫຍາຍຕົວຂຶ້ນເທື່ອລະກ້າວ.

### 2.2.2 ວຽກຈຸດສຸມ:

1- <u>ການພັດທະນາໂຄງລ່າງພື້ນຖານສະໜັບສະໜູນອຸດສາຫະກຳປຸງແຕ່ງ</u>

ເພື່ອຮອງຮັບການຂະຫຍາຍຕົວດ້ານອຸດສາຫະກຳປຸງແຕ່ງໃນຕໍ່ໜ້າ, ໜຶ່ງໃນວຽກຈຸດສຸມຈະເນັ້ນໜັກ ແລະ ໃຫ້ຄວາມສຳຄັນໃນການຈັດສັນເຂດ ແລະ ນິຄົມອຸດສາຫະກຳ ເພື່ອເປັນໂຄງລ່າງພື້ນຖານຮອງຮັບ ແລະ ຮັບປະກັນ ໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ຕັດສິນໃຈລົງທຶນໃນລາວ ໃຫ້ເພີ່ມຂຶ້ນເທື່ອລະກ້າວ. ສິ່ງສຳຄັນເນັ້ນໃສ່ ການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຊຸກຍູ້ ແລະ ກຳນົດການພັດທະນາໂຄງລ່າງພື້ນຖານທີ່ຈຳເປັນ ໃຫ້ໄປໃນທິດທາງດຽວກັນ ໂດຍເນັ້ນໃສ່ການຈັດສັນ, ກຳນົດ ແລະ ບຸກເບີກສະຖານທີ່ ແລະ ສ້າງ ໂຄງລ່າງພື້ນຖານ ທີ່ຈຳເປັນ ເພື່ອຮອງຮັບການສ້າງຕັ້ງໂຮງງານອຸດສາຫະກຳປຸງແຕ່ງ ຢ່າງເປັນລະບົບ. ຊຸກຍູ້, ສົ່ງເສີມ ແລະ ດຶງດູດການ ລົງທຶນທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃສ່ການພັດທະນາເຂດ ແລະ ນິຄົມອຸດສະຫະກຳ ທີ່ໄດ້ກຳນົດ ແລະ ເຫັນ ວ່າມີທ່າແຮງ, ມີຄວາມເໝາະສົມ ແລະ ເປັນໄປໄດ້ ຢູ່ຕາມແລວທາງເສດຖະກິດລາວ-ຈີນ ກໍ່ຄືເສັ້ນທາງລົດໄຟ ແລະ ທາງດ່ວນ ເປັນຕົ້ນ ຢູ່ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ຫຼວງນ້ຳທາ, ອຸດົມໄຊ, ຫຼວງພະບາງ ແລະ ຕາມແລວ ທາງເສດຖະກິດ ອອກ-ຕົກ ແລະ ເໜືອ-ໃຕ້ ເປັນຕົ້ນ ແຂວງ ຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ ໃຫ້ໄດ້ຢ່າງ ໜ້ອຍ 4 ແຫ່ງ ແລະ ສຶກສາຄວາມເປັນໄປໄດ້ໃນການພັດທະນາເຂດ ແລະ ນິຄົມອຸດສາຫະກຳໃຫ້ໄດ້ ຢ່າງໜ້ອຍ 05 ແຫ່ງພາຍໃນປີ 2025. ຊຸກຍູ້ ແລະ ຂົນຂວາຍ ບັນດາໂຮງງານອຸດສາຫະກຳປຸງແຕ່ງ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ການລົງທຶນໃໝ່ ເຂົ້າໃນເຂດເສດຖະກິດພິເສດ ແລະ ນິຄົມອຸດສາຫະກຳ ເພື່ອສາມາດຄຸ້ມຄອງໃຫ້ ເປັນລະບຽບຮຽບຮ້ອຍ ແລະ ຖືກຈັດສັນຢ່າງເປັນລະບົບ.

ໃນແຜນງານພັດທະນາໂຄງລ່າງພື້ນຖານອຸດສາຫະກຳປຸງແຕ່ງ ແລະ ລະບົບສາຫາລະນຸປະໂພກ ສະໜັບສະ ໜູນອຸດສາຫະກຳປຸງແຕ່ງ ປະກອບດ້ວຍ 3 ແຜນງານຍ່ອຍຄື:

1) ການກຳນົດນະໂຍບາຍ, ເຂດທີ່ຕັ້ງ ແລະ ລະບົບຄຸ້ມຄອງເຂດອຸດສາຫະກຳ;
2) ການກຳນົດນະໂຍບາຍນິຄົມອຸດສາຫະກຳປຸງແຕ່ງ;
3) ຊຸກຍູ້ການພັດທະນາໂຄງລ່າງພື້ນຖານສະໜັບສະໜູນອຸດສາຫະກຳປຸງແຕ່ງ ເປັນຕົ້ນ ຖະໜົນຫົນທາງ , ໄຟຟ້າ, ນ້ຳປະປາ, ການສື່ສານ ແລະ ອື່ນໆ ໂດຍປະສານສົມທົບ ເພື່ອກຳນົດທິດທາງ ແລະ ແຜນການພັດທະນາຂອງຂະແໜງການ ກັບການພັດທະນາເຂດ ແລະ ນິຄົມອຸດສາຫະກຳ ໃຫ້ໄປໃນ ທິດທາງດຽວກັນ ໂດຍເປົ້າໝາຍເພື່ອປະສານສົມທົບ ແມ່ນກະຊວງແຜນການ ແລະ ການລົງທຶນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງເຕັກໂນໂລຊີ ແລະ ການ

ສື່ສານ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ລັດວິສາຫະກິດໄຟຟ້າລາວ, ລັດວິສາຫະກິດ ນ້ຳປະປາລາວ ແລະ ອື່ນໆ.

ຄຽງຄູ່ກັນ, ການພັດທະນາ ໂຄງລ່າງພື້ນຖານເບົາ ກໍມີຄວາມສຳຄັນ ແລະ ຈຳເປັນຫຼາຍໃນຍຸກດີຈີຕອນ. ການພັດທະນາໂຄງລ່າງພື້ນຖານເບົາສຳລັບອຸດສາຫະກຳ ຈະສຸມໃສ່ການຫັນເປັນທັນສະໄໝ ໂດຍເນັ້ນໃສ່ການຫັນເຂົ້າສູ່ການຈັດການບໍລິຫານ ແລະ ຄຸ້ມຄອງ ເຂົ້າສູ່ເອເລັກໂຕຣນິກ ແນໃສ່ຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍ, ຍົກລະດັບການຜະລິດ ກ້າວສູ່ການເປັນເຕັກໂນໂລຊີດີຈີຕອນ ແລະ ນຳໃຊ້ເຕັກໂນໂລຊີອຸດສາຫະກຳ 4.0 ເພື່ອລະກ້າວດ້ວຍການສ້າງຄວາມເຂົ້າໃຈ ແລະ ສ້າງຂີດຄວາມສາມາດກ່ຽວກັບລະບົບນິເວດເສດຖະກິດດີຈີຕອນ, ສ້າງຂີດຄວາມສາມາດດ້ານບຸກຄະລາກອນ ແລະ ສ້າງລະບົບນິເວດອັນຈຳເປັນ ໃຫ້ແກ່ອຸດສາຫະກຳປຸງແຕ່ງໂດຍສະເພາະຈຸນລະວິສາຫະກິດ, ວິສາຫະກິດຂະໜາດຂະໜາດນ້ອຍ ແລະ ກາງ ເພື່ອຮອງຮັບກ້າວເຂົ້າສູ່ການຫັນເປັນເຕັກໂນໂລຊີດິຈິຕອນຂອງຫົວໜ່ວຍການຜະລິດ. ສຸມໃສ່ຈັດຕັ້ງປະຕິບັດບັນດາໂຄງການທີ່ຖືກຮັບຮອງໃນແຜນງານຂອງແຜນແມ່ບົດເສດຖະກິດດິຈິຕອນແຫ່ງຊາດ 5 ປີ (2021-25) ໂດຍສະເພາະຕິດພັນກັບການພັດທະນາອຸດສາຫະກຳປຸງແຕ່ງ.

ການພັດທະນາໂຄງລ່າງພື້ນຖານເບົາ ສຸມໃສ່: 1) ພັດທະນາຖານຂໍ້ມູນໂຮງງານອຸດສາຫະກຳປຸງແຕ່ງ ແລະ ລະບົບການອອກອະນຸຍາດທັນສະໄໝ; 2) ພັດທະນາຖານຂໍ້ມູນເຄມີແຫ່ງຊາດ, ການເຊື່ອມເຂົ້າໃນຖານຂໍ້ມູນໂຮງງານ ແລະ ການອະນຸຍາດຜ່ານທາງເອເລັກໂຕຣນິກ; 3) ພັດທະນາຖານຂໍ້ມູນມົນລະພິດໂຮງງານອຸດສາຫະກຳປຸງແຕ່ງ; 4) ພັດທະນາລະບົບຂໍ້ມູນເສດຖະກິດອຸດສາຫະກຳ ເພື່ອການກຳນົດທິດທາງການພັດທະນາ ແລະ ນະໂຍບາຍດ້ານອຸດສາຫະກຳປຸງແຕ່ງ; 5) ພັດທະນາຖານຂໍ້ມູນການຕິດຕາມໄມ້ສົ່ງເຂົ້າ ແລະ ສົ່ງອອກ; ແລະ 6) ພັດທະນາຖານຂໍ້ມູນການຜະລິດ ແລະ ການອະນຸຍາດຜ່ານທາງເອເລັກໂຕຣນິກ.

ສຳລັບ ໂຄງການທີ່ນອນໃນແຜນແມ່ບົດເສດຖະກິດດິຈິຕອນແຫ່ງຊາດ 5 ປີ (2021-25) ສຸມໃສ່: 1) ໂຄງການສົ່ງເສີມການຍົກລະດັບການຜະລິດຂອງປະເທດ ໄປສູ່ອຸດສາຫະກຳທີ່ທັນສະໄໝ ການຜະລິດແບບດິຈິຕອນ; 2) ໂຄງການຍົກລະດັບວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການນຳໃຊ້ເຕັກໂນໂລຊີດີຈີຕອນ ໃນການອອກແບບ ແລະ ການຜະລິດໃນທາງວິສະວະກຳ; 3) ໂຄງການສົ່ງເສີມການພັດທະນາໂຮງງານອຸດສາຫະກຳອັດສະລິຍະ (smart manufacting); ແລະ 4)ໂຄງການສ້າງເຂດ ແລະ ນິຄົມອຸດສາຫະກຳດິຈິຕອນ.

2- <u>ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ພາກທຸລະກິດ:</u>

ສ້າງ, ທົບທວນ ນິຕິກຳ ແລະ ກົນໄກ ເພື່ອສົ່ງເສີມ ແລະ ເອື້ອອຳນວຍໃຫ້ແກ່ການດຶງດູດການລົງທຶນ ເພື່ອການສ້າງຕັ້ງ ແລະ ດຳເນີນກິດຈະການອຸດສາຫະກຳປຸງແຕ່ງ ໃຫ້ມີຄວາມສະດວກ ແລະ ວ່ອງໄວ. ຄົ້ນຄວ້າ ແລະ ແກ້ໄຂ ບັນຫາທີ່ບໍ່ເອື້ອອຳນວຍຕໍ່ການດຳເນີນທຸລະກິດ ໃນຂະແໜງອຸດສາຫະກຳປຸງແຕ່ງ ເປັນຕົ້ນ ການນຳເຂົ້າປັດໄຈການຜະລິດ ແລະ ການສົ່ງອອກສິນຄ້າ, ການສະໜອງຂໍ້ມູນຂ່າວສານ ແລະ ການອະນຸຍາດ ໃຫ້ສະດວກ ແລະ ວ່ອງໄວ.

ແຜນງານສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ອຸດສາຫະກຳປຸງແຕ່ງ ແມ່ນສຸມໃສ່:

1) ສ້າງ, ທົບທວນ ນິຕິກຳ ແລະ ກົນໄກ ເພື່ອສົ່ງເສີມ ແລະ ເອື້ອອຳນວຍໃຫ້ແກ່ການດຶງດູດການລົງທຶນ ເພື່ອການສ້າງຕັ້ງ ແລະ ດຳເນີນກິດຈະການອຸດສາຫະກຳປຸງແຕ່ງ. ຄົ້ນຄວ້າ ແລະ ກຳນົດນະໂຍບາຍສົ່ງເສີມອຸດສາຫະກຳປຸງແຕ່ງໃຫ້ເປັນອັນລະອຽດທີ່ມີລັກສະນະຊຸກຍູ້ສົ່ງເສີມການຜະລິດຢ່າງແທ້ຈິງ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ຂະແໜງແຜນການ ແລະ ການລົງທຶນ, ຂະແໜງການເງິນ, ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອື່ນໆ;

2) ຄົ້ນຄວ້າປັບປຸງ ແລະ ລຶບລ້າງນິຕິກຳ, ເອກະສານ ແລະ ຂັ້ນຂອດ ທີ່ບໍ່ຈຳເປັນ ແລະ ແກ້ໄຂບັນຫາ ທີ່ບໍ່ເອື້ອອຳນວຍ ແລະ ສ້າງຄວາມຫຍຸ້ງຍາກ ໃນການດຳເນີນກິດຈະການ;

3) ສົ່ງເສີມຂະຫຍາຍການຜະລິດໃຫ້ແກ່ອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ກາງ ແລະ ເຊື່ອມໂຍງກັບເຄືອຂ່າຍການຜະລິດພາຍໃນ;

4) ຍົກລະດັບປະສິດທິພາບການຈັດການດ້ານການນຳເຂົ້າ ແລະ ເຄື່ອນຍ້າຍ ເພື່ອສະໜອງໃນຂະບວນການຕ່ອງໂສ້ການຜະລິດ ແລະ ເຊື່ອມຈອດກັບປະເທດເພື່ອນບ້ານ ດ້ວຍການປັບປຸງລະບົບກົນໄກຕ່າງໆ ເປັນຕົ້ນ: ການນຳໃຊ້ລະບົບການແຈ້ງພາສີ ຜ່ານລະບົບອາຊີກູດາ, ປັບປຸງການຂໍອະນຸຍາດ ຫຼື ຢັ້ງຢືນການນຳເຂົ້າ ແລະ ລຶບລ້າງບັນດາສິ່ງກີດຂວາງຕໍ່ການນຳເຂົ້າ, ການເຄື່ອນຍ້າຍ ແລະ ການສົ່ງອອກ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍຕ່າງໆ ແກ່ພາກທຸລະກິດ.

## 2.3 <u>ແຜນງານທີ 3</u>: ການເຊື່ອມໂຍງ ກັບພາກພື້ນ ແລະ ສາກົນ

### 2.3.1 ເປົ້າໝາຍສະເພາະ ແລະ ຕົວຊີ້ບອກ:

- ມູນຄ່າສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງ ກວມ 50% ຂອງມູນຄ່າການສົ່ງອອກທັງໝົດ ;
- ຊຸກຍູ້ການຜະລິດທີ່ນຳໃຊ້ເຕັກໂນໂລຊີລະດັບກາງ ແລະ ສູງ ໃຫ້ເຊື່ອມໂຍງກັບຖານການຜະລິດພາກພື້ນ ໃຫ້ເພີ່ມຂຶ້ນ
- ສົ່ງເສີມດຶງດູດການລົງທຶນຕ່າງປະເທດເຂົ້າໃນຂະແໜງອຸດສາຫະກຳປຸງແຕ່ງ ໃຫ້ເພີ່ມຂຶ້ນເທື່ອລະກ້າວ ຢ່າງໜ້ອຍ 35 ໂຄງການ ແລະ ມູນຄ່າການລົງທຶນ ສະເລ່ຍບໍ່ຫຼຸດ 50.000.000 ໂດລາ ຕໍ່ປີ ;
- ສ້າງສາຍພົວພັນການຮ່ວມມືຢ່າງໃກ້ຊິດ ແລະ ຮອບດ້ານຕໍ່ກັບວຽກງານການພັດທະນາ ເພື່ອຫັນການແຂ່ງຂັນກັນ ມາສູ່ການຜະລິດຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນຂອບສອງຝ່າຍ, ພາກພື້ນ ແລະ ສາກົນ ໂດຍການຂົນຂວາຍການຊ່ວຍເຫຼືອຈາກສາກົນ ສະໜັບສະໜູນການຈັດຕັ້ງປະຕິບັດບັນດາໂຄງການໃນແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

### 2.3.2 ວຽກຈຸດສຸມ:

ຊຸກຍູ້ສົ່ງເສີມການຮ່ວມມື ແລະ ເຊື່ອມໂຍງກັບເຄືອຂ່າຍການຜະລິດພາກພື້ນ ແລະ ສາກົນ ໂດຍສະເພາະ ປະເທດໄທ, ຫວຽດນາມ, ຈີນ, ຍີ່ປຸ່ນ, ເກົາຫຼີ ແລະ ອື່ນໆ, ເພື່ອຊ່ວຍໃຫ້ອຸດສາຫະກຳພາຍໃນປະເທດສາມາດເຊື່ອມໂຍງກັບຕ່ອງໂສ້ການຜະລິດຂອງພາກພື້ນ ເປັນຕົ້ນ ອຸດສາຫະກຳເຂັ້ມງານ, ອຸດສາຫະກຳກົນຈັກ, ພາຫະນະ, ເອເລັກໂຕຣນິກ, ອຸດສາຫະກຳເຄື່ອງມືການແພດ ແລະ ອື່ນໆ ເຮັດໃຫ້ມູນຄ່າການຜະລິດເພື່ອການສົ່ງອອກບັນລຸໄດ້ 8.000 ລ້ານໂດລາ ໃນປີ 2025 ຈາກ 4.236 ລ້ານໂດລາ ໃນປີ 2016 ແລະ ການສະໜອງ ຫຼື ການຈັດຊື້ພາຍໃນໃຫ້ແກ່ອຸດສາຫະກຳ ເພີ່ມຂຶ້ນຢ່າງໜ້ອຍເປັນ 15% ໃນປີ 2025 ຈາກ 6,18% ໃນປີ 2016.

ແຜນງານເຊື່ອມໂຍງກັບເຄືອຂ່າຍການຜະລິດກັບພາກພື້ນ ແລະ ສາກົນ ມີຄືດັ່ງນີ້:

1- <u>ສ້າງນະໂຍບາຍການເຊື່ອມໂຍງການຜະລິດອຸດສາຫະກຳເຄືອຂ່າຍ ແລະ ອຸດສາຫະກຳສະໜັບສະໜູນ ກັບພາກພື້ນ ແລະ ສາກົນ:</u>

ສຸມໃສ່ແລກປ່ຽນຂໍ້ມູນ ແລະ ການເຊື່ອມໂຍງມາດຕະຖານ ໜຶ່ງດຽວກັນໃນພາກພື້ນອາຊຽນ ໂດຍສະເພາະຂໍ້ມູນດ້ານອຸດສາຫະກຳຍານພາຫະນະ; ເຄມີອຸດສາຫະກຳ; ໄມ້ ແລະ ຜະລິດຕະພັນໄມ້; ຢາງພາລາ ແລະ ອື່ນໆ,

ສົ່ງເສີມການຜະລິດພາຍໃນພາກພື້ນ ຫັນເປັນເປັນຖານການຜະລິດໜຶ່ງດຽວ, ເສີມສ້າງ ແລະ ຫັນສູ່ມາດຕະຖານໜຶ່ງດຽວ ແລະ ດຶງດູດການລົງທຶນໃນຕ່ອງໂສ້ການຜະລິດຂອງພາກພື້ນໃຫ້ສູງຂຶ້ນເທື່ອລະກ້າວ. ສຸມໃສ່ສະໜັບສະໜູນການສ້າງສູນນະວັດຕະກຳອຸດສາຫະກຳ ອາຊຽນ-ເກົາຫລີ ເພື່ອສົ່ງເສີມການສ້າງ ແລະ ນຳໃຊ້ນະວັດຕະກຳເຂົ້າໃນຖານການຜະລິດຂອງພາກພື້ນ ດ້ວຍການຄົ້ນຄວ້າ-ພັດທະນາຮ່ວມກັນ, ແລກປ່ຽນບົດຮຽນ, ການສ້າງຄວາມເຂັ້ມແຂງພາກລັດ ແລະ ທຸລະກິດ ແລະ ການພັດທະນາຜະລິດຕະພັນອຸດສາຫະກຳພາຍໃນພາກພື້ນອາຊຽນ ແລະ ສົ່ງເສີມການຮ່ວມມືໃນຂອບ ອາເຊັບ (RCEP).

2- <u>**ສົ່ງເສີມການຮ່ວມມືພັດທະນາອຸດສາຫະກຳໃນປະເທດແມ່ນ້ຳຂອງກັບຄູ່ຮ່ວມພັດທະນາ:**</u>

1) **ການຮ່ວມມືແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ:**

ສຸມໃສ່ເພີ່ມທະວີການຮ່ວມມືແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ ໂດຍສະເພາະຂົງເຂດບູລິມະສິດດ້ານການຮ່ວມມືການສ້າງຂີດຄວາມສາມາດດ້ານການຜະລິດ ແນໃສ່ຈັດຕັ້ງປະຕິບັດຮ່ວມກັບບັນດາປະເທດສະມາຊິກແມ່ນ້ຳຂອງ ແລະ ຈີນ. ສຸມໃສ່ສ້າງໂຄງການ ເພື່ອຍາດແຍ່ງການຊ່ວຍເຫຼືອຈາກກອງທຶນພິເສດຈີນທີ່ໃຫ້ການສະໜັບສະໜູນ ໂດຍເນັ້ນຈັດຕັ້ງປະຕິບັດໂຄງການການມີສ່ວນຮ່ວມຂອງສະມາຊິກປະເທດແມ່ນ້ຳຂອງ ໃນຂອບວຽກກ່ຽວກັບ ❶ ການປັບປຸງການສ້າງຂີດຄວາມສາມາດການຜະລິດ ແລະ ການແລກປ່ຽນການປະຕິບັດທີ່ດີ ແລະ ການຈັດຝຶກອົບຮົມສຳມະນາຕ່າງໆ; ❷ ການໂຄສະນາເຜີຍແຜ່ສະພາບ ແລະ ຂໍ້ມູນເພື່ອດຶງດູດການລົງທຶນ, ການຈັດກອງປະຊຸມ ສ້າງ ແລະ ຈັບມືພັນທະມິດ ຫຼື ຄູ່ຮ່ວມ ເພື່ອການສົ່ງເສີມການສ້າງຂີດຄວາມສາມາດດ້ານການຜະລິດ ແລະ ການຮ່ວມມືການລົງທຶນ ໃນບັນດາປະເທດສະມາຊິກແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ; ❸ ສະໜັບສະໜູນທຸລະກິດ ແລະ ສະຖາບັນການເງິນ ຂອງບັນດາປະເທດແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ ຮ່ວມມືໃນການສ້າງຂີດຄວາມສາມາດການຜະລິດ; ແລະ ❹ ຊຸກຍູ້ການສ້າງຕັ້ງກອງທຶນ ສຳລັບການພັດທະນາການຮ່ວມມືການສ້າງຂີດຄວາມສາມາດການຜະລິດ ໂດຍການມີສ່ວນຮ່ວມຈາກຫຼາຍຝ່າຍ.

**2) ການຮ່ວມມືແມ່ນ້ຳຂອງ-ຍີ່ປຸ່ນ:**

ສຸມໃສ່ຜັນຂະຫຍາຍການຈັດຕັ້ງປະຕິບັດ ວິໄສທັດການພັດທະນາອຸດສາຫະກຳໃນຂົງເຂດແມ່ນ້ຳຂອງ ໄລຍະທີ 2 (MIDV 2,0) ແຕ່ປີ 2019-2023 ຮ່ວມກັບ ຍີ່ປຸ່ນ ແລະ ຄູ່ຮ່ວມພັດທະນາ ໂດຍເນັ້ນການຈັດຕັ້ງປະຕິບັດໂຄງການທີ່ຕິດພັນກັບການພັດທະນາຂອງລາວເຮົາ ໂດຍສະເພາະການພັດທະນາແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ ແລະ ເໜືອ-ໃຕ້. ຂົງເຂດທີ່ໃຫ້ຄວາມສຳຄັນ ປະກອບມີ:

❶ **ການເຊື່ອມຈອດ**: ສົ່ງເສີມການລົງທຶນ ໃນຮູບແບບສຳມະນາສົ່ງເສີມການລົງທຶນ, ການສ້າງຂີດຄວາມສາມາດດ້ານນະໂຍບາຍສົ່ງເສີມການລົງທຶນ ແລະ ການແຂ່ງຂັນໃຫ້ພາກການຜະລິດ, ການສ້າງຕັ້ງຈຸດຄຳປຶກສາໃຫ້ພາກທຸລະກິດ ທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19, ໂຄງການສະໜັບສະໜູນດ້ານການເງິນ ເພື່ອສ້າງຄວາມເຂັ້ມແຂງໃຫ້ຕ່ອງໂສ້ການຜະລິດ, ການສົ່ງເສີມການແຂ່ງຂັນໃຫ້ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຮູບແບບຂອງການສ້າງຂີດຄວາມສາມາດ ເພື່ອເສີມສ້າງເສດຖະກິດດິຈິຕອນດ້ານນິເວດ ສຳລັບຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ຈາກຜົນກະທົບຂອງໂຄວິດ-19 ໃນນີ້ລົງເລິກ ພາກອຸດສາຫະກຳ; ການຮ່ວມກັນສຶກສາ ເພື່ອໃຫ້ຄຳແນະນຳ ດ້ານນະໂຍບາຍເພື່ອກະຕຸ້ນເສດຖະກິດຈາກຜົນກະທົບຂອງໂຄວິດ-19.

❷ **ນະວັດຕະກຳດິຈິຕອນ**: ຍົກລະດັບອຸດສາຫະກຳ ຜ່ານເຕັກໂນໂລຊີດິຈິຕອນ ໃນຮູບແບບຂອງການສ້າງໂຄງການຕົວແບບຮ່ວມກັນ ລະຫວ່າງຫົວໜ່ວຍທຸລະກິດຍີ່ປຸ່ນກັບປະເທດແມ່ນ້ຳຂອງ ເພື່ອຂ້າມຜ່ານໄປສູ່

ເສດຖະກິດດີຈີຕອນ; ການສຶກສາຄວາມເປັນໄປໄດ້ເພື່ອສ້າງຕົວເມືອງອັດສະລິຍະ ແລະ ການໝູນໃຊ້ນະວັດຕະກໍາພາກພື້ນ.

❸ **ເປົ້າໝາຍການພັດທະນາແບບຍືນຍົງ (SDG) ເປົ້າໝາຍທີ 9 ອຸດສາຫະກໍາຕິດພັນໂຄງລ່າງພື້ນຖານ ແລະ 12 ການຜະລິດ ແລະ ບໍລິໂພກແບບຍືນຍົງ:** ເນັ້ນການສົ່ງເສີມເສດຖະກິດສີຂຽວ ດ້ວຍການສຸມໃສ່ການຮ່ວມມືການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະການຄຸ້ມຄອງມົນລະພິດ; ການມີສ່ວນຮ່ວມໃນໂຄງການຕົວແບບຕ່າງໆ ເພື່ອການປະຢັດພະລັງງານ ແລະ ອື່ນໆ.

3- <u>ການເຊື່ອມໂຍງການຮ່ວມມືລະຫວ່າງ ລາວ-ຈີນ:</u>

1) ຜັນຂະຫຍາຍແຜນແມ່ບົດ ກ່ຽວກັບການຊຸກຍູ້ການຮ່ວມການກໍ່ສ້າງ "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ໂດຍສຸມໃສ່ :
   - **ການສ້າງຂີດຄວາມສາມາດ:** ລົງເລິກການຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານໃນຂະແໜງອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ດ້ວຍການຍາດແຍ່ງທຶນການສຶກສາໄປຮຽນຕໍ່ຢູ່ຈີນ ແລະ ການເພີ່ມທະວີການຮ່ວມມື ແລະ ແລກປ່ຽນດ້ານວິຊາການ ກ່ຽວກັບ ການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ, ຮ່ວມກັນສ້າງຈິດສໍານຶກທີ່ເປັນມິດກັບສິ່ງແວດລ້ອມ ແລະ ສົ່ງເສີມການພັດທະນາສີຂຽວ;
   - **ເຂດ-ນິຄົມອຸດສາຫະກໍາ:** ເລັ່ງລັດສ້າງເຂດທົດລອງການພັດທະນາ ແລະ ເປີດກວ້າງຈຸດສຸມ (ບໍ່ຫານ) ເມືອງຫຼາ, ຊຸກຍູ້ການກໍ່ສ້າງເຂດຮ່ວມມືເສດຖະກິດ ບໍ່ເຕັນ-ບໍ່ຫານ ແລະ ເຂດພັດທະນາກວມລວມໄຊເສດຖາ; ສົ່ງເສີມນັກທຸລະກິດໄປລົງທຶນໃນນິຄົມອຸດສາຫະກໍາ ເພື່ອໃຫ້ກາຍເປັນສູນລວມຂອງການພັດທະນາອຸດສາຫະກໍາເບົາ, ເຄື່ອງໄຟຟ້າ, ໂລຈິສຕິກ ແລະ ອື່ນໆ ໂດຍສ້າງເງື່ອນໄຂສະດວກ ແລະ ໃຫ້ນະໂຍບາຍສະໜັບສະໜູນທຸລະກິດທີ່ລົງທຶນໃນເຂດດັ່ງກ່າວ. ແລກປ່ຽນບົດຮຽນໃນການຄຸ້ມຄອງນິຄົມອຸດສາຫະກໍາ ເພື່ອເພີ່ມທະວີການຮ່ວມມື ແລະ ປັບປຸງຮູບແບບການພັດທະນານິຄົມອຸດສາຫະກໍາ ໃຫ້ສົມບູນແບບຍິ່ງຂຶ້ນ ພ້ອມທັງຄົ້ນຄວ້າສ້າງລະບົບຂອງຄະນະກໍາມະການຄຸ້ມຄອງເຂດດັ່ງກ່າວ;
   - **ຂະແໜງການຜະລິດ** ສຸມໃສ່ສົ່ງເສີມການຮ່ວມມືໃນຂະແໜງການຜະລິດ, ຮ່ວມກັນຊຸກຍູ້ການປັບປຸງ ແລະ ຍົກລະດັບທາງດ້ານເຕັກນິກຂອງວິສາຫະກິດ ແລະ ເພີ່ມທະວີການຮ່ວມມືທາງດ້ານຄວາມອາດສາມາດຂອງການຜະລິດສາກົນ.

2) ຜັນຂະຫຍາຍ ບົດບັນທຶກຄວາມເຂົ້າໃຈກ່ຽວກັບການຮ່ວມກັນສ້າງ "ແລວທາງເສດຖະກິດ ລາວ-ຈີນ" ໂດຍສຸມໃສ່ການຈັດຕັ້ງປະຕິບັດຂອບການຮ່ວມມືວ່າດ້ວຍ ການຮ່ວມກັນພັດທະນາແລວທາງເສດຖະກິດ ລາວ-ຈີນ (2019-2030) ທີ່ຕິດພັນກັບການພັດທະນາອຸດສາຫະກໍາປຸງແຕ່ງ ເນັ້ນໃສ່ການຮ່ວມມືອຸດສາຫະກໍາ ໂດຍການເພີ່ມທະວີການຮ່ວມມືດ້ານຄວາມອາດສາມາດຂອງການຜະລິດຢ່າງຮອບດ້ານ. ການຮ່ວມມື ສຸມໃສ່ ❶ ການພັດທະນາອຸດສາຫະກໍາປຸງແຕ່ງ ຕາມແລວທາງລົດໄຟລາວ-ຈີນ, ຍົກລະ ດັບເຕັກນິກ, ຂະຫຍາຍຕ່ອງໂສ້ອຸດສາຫະກໍາ, ສ້າງເຄືອຂ່າຍອຸດສາຫະກໍາ ແລະ ຍົກສູງຄວາມສາມາດການແຂ່ງຂັນຂອງອຸດສາຫະກໍາປຸງແຕ່ງ. ຮ່ວມມືຄົ້ນຄວ້າ ແລະ ສ້າງລະບົບທີ່ສຸມໃສ່ການປຸງແຕ່ງຜະລິດຕະພັນກະສິກໍາ-ປ່າໄມ້, ຜະລິດຕະພັນອາຫານ ແລະ ອຸດສາຫະກໍາເບົາ; ❷ ດຶງດູດນັກລົງທຶນຈີນ ເພື່ອປັບປຸງ ແລະ ຍົກລະດັບການພັດທະນາອຸດສາຫະກໍາ; ປັບປຸງສະພາບແວດລ້ອມການລົງທຶນ; ແລະ ອີງໃສ່ທ່າແຮງການຂົນສົ່ງຜ່ານທາງລົດໄຟລາວ-ຈີນ ແລະ ການຂົນສົ່ງຕາມລໍາແມ່ນໍ້າຂອງ ເພື່ອຂະຫຍາຍການຮ່ວມມືການຂົນສົ່ງ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍຄ່າຂົນສົ່ງສໍາລັບການນໍາເຂົ້າ ແລະ ສົ່ງອອກ ດ້ວຍການນໍາໃຊ້ລະບົບໂລຈິສຕິກທີ່ທັນສະໄໝ; ❸ ຄັດເລືອກເອົາເຂດເສດຖະກິດພິເສດ ແລະ ນິຄົມອຸດສາຫະກໍາທີ່ມີເງື່ອນໄຂຄົບຖ້ວນ ເພື່ອເປັນ

ເປົ້າ ໝາຍຮ່ວມມືດ້ານຄວາມອາດສາມາດດ້ານຜະລິດ, ປັບປຸງສະພາບແວດລ້ອມການລົງທຶນໃນເຂດເປົ້າໝາຍ ແລະ ສະໜອງນະໂຍບາຍທີ່ເອື້ອອຳນວຍ ພ້ອມທັງຮັບປະກັນດ້ານໂຄງລ່າງພື້ນຖານ ແນໃສ່ຂະຫຍາຍຕ່ອງໂສ້ອຸດສາຫະກຳຂ້າມຊາດໃຫ້ກວ້າງອອກ ແລະ ແລກປ່ຽນຂໍ້ມູນຂ່າວສານຊຶ່ງກັນ ແລະ ກັນ.

4- <u>ຮ່ວມມື ກັບອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ:</u>

ຮ່ວມມືກັບອົງການສະຫະປະຊາຊາດເພື່ອການພັດທະນາອຸດສາຫະກຳ (UNIDO) ເນັ້ນໃສ່ການສົ່ງເສີມການຜະລິດທີ່ສະອາດ, ການຫັນເປັນອຸດສາຫະກຳສີຂຽວ, ນິຄົມອຸດສາຫະກຳແບບນິເວດ ຊຸກຍູ້ການພັດທະນາແບບຍືນຍົງ; ສະຖາບັນເຕີບໂຕສີຂຽວໂລກ (GGGI) ໃນການຫຼຸດຜ່ອນອາຍເຮືອນແກ້ວ ແລະ ການສ້າງນະໂຍບາຍອຸດສາຫະກຳສີຂຽວ; ທະນາຄານໂລກ ສົ່ງເສີມການຍົກລະດັບປະສິດທິພາບໂຮງງານສີເຂົ້າໃຫ້ໄດ້ມາດຕະຖານການຜະລິດທີ່ດີ (GMP); ອົງການຈີໄອແຊັດ (GIZ) ຊຸກຍູ້ການເຈລະຈາການຈັດຕັ້ງປະຕິບັດການຄ້າໄມ້ແບບສະໝັກໃຈ ແລະ ການສ້າງ/ປັບປຸງນິຕິກຳຄຸ້ມຄອງອຸດສາຫະກຳປຸງແຕ່ງໄມ້ ເພື່ອໃຫ້ສອດຄ່ອງຕາມຫຼັກການຂອງສາກົນ; ອົງການໄຈກາ (JICA) ຊຸກຍູ້ການຈັດຕັ້ງປະຕິບັດ ວິໄສທັດການພັດທະນາອຸດສາຫະກຳໃນຂົງເຂດແມ່ນ້ຳຂອງ ໄລຍະທີ 2 ແຕ່ປີ 2019-2023; ການຊ່ວຍເຫຼືອລ້າ ເພື່ອການພັດທະນາພາກການຜະລິດ ໂດຍເນັ້ນການສະໜັບສະໜູນຕ່ອງໂສ້ການຜະລິດ; ຊ່ວຍເຫຼືອດ້ານວິຊາການ ດ້ວຍການສົ່ງຊ່ຽວຊານ ແລະ ອາສາສະໝັກ ມາຊ່ວຍພັດທະນາວຽກງານອຸດສາຫະກຳປຸງແຕ່ງຂອງລາວ; ແລະ ຊ່ວຍເຫຼືອສືບຕໍ່ການສົ່ງເສີມເຄືອຂ່າຍ ແລະ ຕ່ອງໂສ້ການຜະລິດຜະລິດຕະພັນ ແລະ ເຟີນິເຈີໄມ້; ສະຫະພາບເອີລົບ (EU): ຊຸກຍູ້ ແລະ ຂົນຂວາຍການຊ່ວຍເຫຼືອຕ່າງໆ ເພື່ອຮ່ວມພັດທະນາຜະລິດຕະພັນອຸດສາຫະກຳຂອງລາວ ແລະ ເສີມສ້າງທຸກທ່າແຮງ ໃນການເຂົ້າຫາຕະຫຼາດອີຢູຢ່າງໝັ້ນຄົງ ທັງດ້ານຄວາມຫຼາກຫຼາຍຂອງຜະລິດ ຕະພັນ ໃນເງື່ອນໄຂການໄດ້ຮັບສິດທິພິເສດດ້ານການຄ້າ; ອົງການພັດທະນາສາກົນອາເມລິກາ (USAID) ໂຄງການປັບປຸງສະພາບແວດລ້ອມ ການດຳເນີນທຸລະກິດຢູ່ ສປປ ລາວ - ເນັ້ນໃສ່ການປັບປຸງຄວາມສາມາດໃນການແຂ່ງຂັນຂອງ SME.

## 2.4 <u>ແຜນງານທີ 4</u>: ການສົ່ງເສີມ ແລະ ພັດທະນາຫັດຖະກຳ

### 2.4.1 ເປົ້າໝາຍສະເພາະ ແລະ ຕົວຊີ້ບອກ

- ສົ່ງເສີມການຜະລິດຫັດຖະກຳ ເຮັດໃຫ້ມູນຄ່າຜະລິດຕະພັນສົ່ງອອກ ເພີ່ມຂຶ້ນໂດຍສະເລ່ຍ 5-7% ຕໍ່ປີ;
- ຊຸກຍູ້ການສ້າງສະມາຄົມຫັດຖະກຳຂັ້ນແຂວງ ໃຫ້ໄດ້ຕື່ມອີກ 3 ແຂວງ;
- ຢັ້ງຢືນການສ້າງສູນສົ່ງເສີມຫັດຖະກຳ ໃຫ້ໄດ້ຢ່າງໜ້ອຍ 5 ແຫ່ງ;
- ຍົກລະດັບ ແລະ ພັດທະນາກຸ່ມຫັດຖະກຳຕົວແບບຢ່າງໜ້ອຍ 3 ກຸ່ມ ແລະ ຊຸກຍູ້ສົ່ງເສີມການສ້າງຕັ້ງກຸ່ມຜະລິດຫັດຖະກຳ ຢ່າງໜ້ອຍ 3 ກຸ່ມ ໃນປີ 2025;
- ສົ່ງເສີມ ແລະ ພັດທະນາຊາວຊ່າງຫັດຖະກຳທີ່ເປັນຄອບຄົວ ໃຫ້ໄດ້ຮັບການຢັ້ງຢືນຄອບຄົວຕົວແບບ ຢ່າງໜ້ອຍ 50 ຄອບຄົວ;
- ສ້າງຄວາມເຂັ້ມແຂງ ແລະ ຂີດຄວາມສາມາດໃຫ້ແກ່ຫົວໜ່ວຍຫັດຖະກຳ 10 ແຫ່ງ ແລະ ຍົກລະດັບສີມືແຮງງານໃຫ້ຊາວຊ່າງຫັດຖະກຳໄດ້ 250 ເທື່ອຄົນ;
- ຊຸກຍູ້ໃຫ້ບັນດາຫົວໜ່ວຍຫັດຖະກຳ ໄດ້ຮັບຢັ້ງຢືນ Made in Laos ແລະ ກາໝາຍ ODOP;
- ຊຸກຍູ້ການນຳໃຊ້ຜະລິດຕະພັນຫັດຖະກຳລາວ ຮັບໃຊ້ບັນດາໂຄງການຂອງລັດ ແລະ ທົ່ວສັງຄົມ;
- ຍົກລະດັບ ມາດຕະຖານ ແລະ ຄຸນນະພາບ ຜະລິດຕະພັນຫັດຖະກຳລາວ ຂຶ້ນເທື່ອລະກ້າວ;
- ສົ່ງເສີມການເຜີຍແຜ່ ວັນຫັດຖະກຳແຫ່ງຊາດ.

### 2.4.2 ວຽກຈຸດສຸມ

1- **ສ້າງຄວາມເຂັ້ມແຂງ ແລະ ຍົກລະດັບວິຊາການໃຫ້ແກ່ຫົວໜ່ວຍຫັດຖະກຳ**

ສຸມໃສ່ການຊຸກຍູ້ສົ່ງເສີມດ້ານວິຊາການ ແລະ ພັດທະນາຊັບພະຍາກອນມະນຸດ ດ້ວຍການຍົກລະດັບຄວາມຮູ້ດ້ານວິຊາການ ແລະ ພັດທະນາດ້ານສີມືແຮງງານໃຫ້ແກ່ພາກທຸລະກິດ, ຊາວຊ່າງຫັດຖະກຳ ແລະ ສະມາຄົມຫັດຖະກຳລາວ ເພື່ອໃຫ້ເຊື່ອມໂຍງກັບການທ່ອງທ່ຽວ ແລະ ບັນຫາຜົນກະທົບການລະບາດຂອງພະຍາດໂຄວິດ-19 ໂດຍເນັ້ນໃສ່: 1) ຊຸກຍູ້ສົ່ງເສີມ ການສ້າງຕັ້ງ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ກຸ່ມການຜະລິດ ຫຼື ກຸ່ມຫັດຖະກຳຕົວແບບ, ຄອບຄົວຕົວແບບ ແລະ ສະມາຄົມຫັດຖະກຳ; 2) ພັດທະນາສີມືການຜະລິດສິນຄ້າຫັດຖະກຳ ໃຫ້ເປັນຜະລິດຕະພັນມີຄຸນນະພາບ ແລະ ມີຄວາມຫຼາກຫຼາຍ ແລະ; 3) ຍົກລະດັບພັດທະນາການອອກແບບຜະລິດຕະພັນຫັດຖະກຳ ໃຫ້ມີຄວາມໂດດເດັ່ນ, ມີເອກະລັກສະເພາະຕົວ, ປານີດ, ສວຍງາມ ແລະ ຕອບ ສະໜອງຄວາມຕ້ອງການຜູ້ບໍລິໂພກ ແລະ ຕະຫຼາດ; 4) ສ້າງກົນໄກປະສານງານ, ການຮ່ວມມື ແລະ ແລກປ່ຽນບົດຮຽນທັງພາຍໃນ ແລະ ຕ່າງປະເທດ, ແລະ 5) ສ້າງເງື່ອນໄຂໃນການສ້າງຕັ້ງສະຫະກອນຂອງຫົວໜ່ວຍຫັດຖະກຳ.

2- **ສົ່ງເສີມ ແລະ ພັດທະນາຜະລິດຕະພັນຫັດຖະກຳ ທີ່ມີທ່າແຮງ**

ສຸມໃສ່ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ທ່າແຮງບົ່ມຊ້ອນຂອງແຕ່ລະທ້ອງຖິ່ນ ເພື່ອຜະລິດເປັນສິນຄ້າຫັດຖະກຳທີ່ມີຄວາມຫຼາກຫຼາຍ ແລະ ເຮັດໃຫ້ຊຸມຊົນມີການຂະຫຍາຍຕົວຂອງເສດຖະກິດ, ສົ່ງເສີມການສ້າງລາຍຮັບ, ສ້າງວິຊາຊີບ-ວຽກເຮັດງານທຳ ແລະ ພັດທະນາຄວາມຮູ້ຄວາມສາມາດຂຶ້ນເທື່ອລະກ້າວ. ການສົ່ງເສີມ ແລະ ພັດທະນາຫັດຖະກຳທີ່ມີທ່າແຮງ ແມ່ນເນັ້ນໃສ່ການນຳໃຊ້ວັດຖຸດິບ ແລະ ພູມປັນຍາຂອງແຕ່ລະທ້ອງຖິ່ນ ເພື່ອສົ່ງເສີມ ແລະ ຜະລິດເປັນສິນຄ້າ. ເປົ້າໝາຍລວມ ເພື່ອເຮັດໃຫ້ການຜະລິດສິນຄ້າຫັດຖະກຳມີການຂະຫຍາຍຕົວ ໂດຍສະເພາະສົ່ງເສີມເຮັດໃຫ້ສິນຄ້າຫັດຖະກຳມີມູນຄ່າການສົ່ງອອກ ເພີ່ມຂຶ້ນໂດຍສະເລ່ຍ 5-7% ຕໍ່ປີ; ຊຸກຍູ້ໃຫ້ໄດ້ຮັບຍັ້ງຢືນ Made in Laos ແລະ ກາໝາຍ ODOP ສໍາລັບຜະລິດຕະພັນຂອງຫົວໜ່ວຍທຸລະກິດຫັດຖະກຳ; ແລະ ຜະລິດຕະພັນຫັດຖະກຳ ໄດ້ຮັບການຍົກລະດັບທາງດ້ານປະລິມານ ແລະ ຄຸນນະພາບຂຶ້ນເທື່ອລະກ້າວ ສາມາດຕອບສະໜອງໄດ້ຕະຫຼາດພາຍໃນ ແລະ ສາກົນ. ຜະລິດຕະພັນຫັດຖະກຳທີ່ເປັນທ່າແຮງ ແມ່ນນອນໃນ 7 ຂະແໜງວິຊາຊີບຫັດຖະກຳ ມີຄືດັ່ງນີ້:

**1) ຂະແໜງແຜ່ນແພພື້ນເມືອງ:**

ສົ່ງເສີມການຜະລິດຜະລິດຕະພັນຫັດຖະກຳຈາກເສັ້ນໃຍທຳມະຊາດ, ຜ້າໄໝ ແລະ ຜ້າຝ້າຍ ໃຫ້ມີຄຸນນະພາບ, ຜະລິດຕະພັນມີຄວາມຫຼາກຫຼາຍ, ມີຫຼາຍລາຄາ ເພື່ອເປັນທາງເລືອກໃຫ້ກັບສັງຄົມ ແລະ ຕະຫຼາດທີ່ໝັ້ນຄົງ. ວຽກຈຸດສຸມສະເພາະການຜະລິດເສັ້ນໃຍທຳມະຊາດ ແມ່ນເນັ້ນໃສ່ການປັບປຸງເຕັກນິກວິຊາການ ແລະ ຍົກລະດັບຂັ້ນຕອນການຜະລິດ ແລະ ການກວດສອບຄຸນນະພາບຂອງການຍ້ອມສີ ເປັນຕົ້ນ ການຕ່ຳຫູກ, ສາວໄໝ ແລະ ຍ້ອມສີທຳມະຊາດ ໃຫ້ຖືກຕ້ອງຕາມເຕັກນິກວິຊາການ, ສົ່ງເສີມນຳໃຊ້ວັດຖຸດິບ ພືດປະເພດຫ້ອມ ແລະ ການເຮັດນ້ຳຍ້ອມນິນຈາກຫ້ອມເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກ; ການຜະລິດຜ້າໄໝ ແມ່ນສຸມໃສ່ ຢູ່ທ້ອງຖິ່ນ ແລະ ແຂວງທີ່ມີທ່າແຮງ ເປັນຕົ້ນ: ແຂວງຫົວພັນ, ຫຼວງພະບາງ, ຊຽງຂວາງ ແລະ ຈຳປາສັກ ທີ່ມີຂີດຄວາມສາມາດໃນການສ້າງເປັນກຸ່ມ ແລະ ເຄືອຂ່າຍການຜະລິດຜ້າໄໝ. ຜະລິດຕະພັນຜ້າຝ້າຍ ແມ່ນເນັ້ນໃສ່ເຂດທີ່ມີການເຂັນຝ້າຍ, ຕ່ຳຫູກ ແລະ ແຜ່ນແພຈາກຝ້າຍ ເປັນຕົ້ນ: ແຂວງວຽງຈັນ, ສະຫວັນນະເຂດ, ເຊກອງ ແລະ ສາລະວັນ. ດ້ານຕະຫຼາດພາຍໃນ ແມ່ນເນັ້ນໃສ່ແຂວງໃຫຍ່ ທີ່ມີການຊົມໃຊ້ ແລະ ຊື້-ຂາຍສູງ ທັງຊ່ວຍແກ້ໄຂການລະບາດຂອງພະຍາດໂຄວິດ-19 ເປັນຕົ້ນ

ຢູ່ນະຄອນຫຼວງວຽງຈັນ, ສະຫວັນນະເຂດ, ຄໍາມ່ວນ, ຈໍາປາສັກ, ຫຼວງພະບາງ, ຫົວພັນ ແລະ ແຂວງອື່ນໆ ທີ່ເປັນຈຸດຊື້-ຂາຍເສັ້ນໄຍໄໝທໍາມະຊາດ ແລະ ສັງເຄາະ, ການເກັບຊື້ ແລະ ຂາຍຜະລິດຕະພັນຈາກຜ້າໄໝ ແລະ ຝ້າຍ ພ້ອມກັນນັ້ນກໍ່ຍັງມີຜ້າໄໝພິມ. ສໍາລັບຕະຫຼາດຕ່າງປະເທດ ເນັ້ນໃສ່ຕະຫຼາດ ອີຢູ, ອາເມລິກາ ແລະ ຍີ່ປຸ່ນເປັນຫຼັກ ໂດຍເນັ້ນໃສ່ຜະລິດຕະພັນມີມູນຄ່າເພີ່ມສູງ ຊຶ່ງສິນຄ້າຫັດຖະກໍາສົ່ງອອກໃນກຸ່ມນີ້ ເນັ້ນໃສ່ປະເພດ ແຜ່ນແພ, ຜ້າປູໂຕະ, ຜ້າບ່ຽງ, ຊຸດຜ້າສິ້ນ, ຊຸດຜ້າຈານ ແລະ ອື່ນໆ ເນື່ອງຈາກຕະຫຼາດເຫຼົ່ານີ້ ແມ່ນໃຫ້ຄວາມສໍາຄັນໃນການສົ່ງເສີມຜະລິດຜະລິດຕະພັນຈາກທໍາມະຊາດທີ່ເປັນມິດກັບສິ່ງແວດລ້ອມ, ປອດສານພິດ, ການຍົກສູງບົດບາດຍິງ-ຊາຍ ແລະ ການໄດ້ຮັບສິດທິພິເສດດ້ານການຄ້າ.

2) **ຂະແໜງໄມ້, ຫວາຍ ແລະ ໄມ້ປ່ອງ:**

ປະສານສົມທົບກັບຂະແໜງກະສິກໍາ ແລະ ປ່າໄມ້ ເພື່ອສາມາດຈັດຕັ້ງປະຕິບັດໃຫ້ມີຄວາມສອດຄ່ອງ ແລະ ກົມກຽວກັນ ໂດຍສະເພາະສຸມໃສ່ທ່າແຮງບົ່ມຊ້ອນ ແລະ ການສະໜອງວັດຖຸດິບ ເພື່ອຜະລິດເປັນສິນຄ້າໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມນະໂຍບາຍຂອງລັດຖະບານແຕ່ລະໄລຍະ. ຜະລິດຕະພັນຫັດຖະກໍາໃນຂະແໜງນີ້ ເນັ້ນໃສ່:

- **ຜະລິດຈາກໄມ້, ຕໍໄມ້ ແລະ ປຸດໄມ້** ເພື່ອແກະສະຫຼັກ ແລະ ຜະລິດເຄື່ອງຕົບແຕ່ງຕ່າງໆ ຕາມລວດລາຍທີ່ເປັນອັນສະເພາະ ດ້ວຍການນໍາໃຊ້ ງ່າໄມ້, ໄມ້ເສດ, ໄມ້ປີກ, ຮາກໄມ້, ຕໍໄມ້ ແລະ ອື່ນໆເປັນວັດຖຸດິບ ເພື່ອຜະລິດເປັນຜະລິດຕະພັນໄມ້ຕ່າງໆໃຫ້ມີມູນຄ່າເພີ່ມສູງ ເປັນຕົ້ນ: ຮູບແກະສະຫຼັກລວດລາຍວັດທະນະທໍາ, ຊຸດໂຕະຕັ່ງແກະສະຫຼັກ, ຖ້ວຍ, ບ່ວງ, ໄມ້ທູ່, ໂຖດອກໄມ້, ຮູບສັດຕ່າງໆ. ເນັ້ນໃສ່ ກຸ່ມແກະສະຫຼັກໄມ້ທີ່ເປັນເປົ້າໝາຍ ເປັນຕົ້ນ: ຢູ່ນະຄອນຫຼວງວຽງຈັນ, ແຂວງບໍລິຄໍາໄຊ, ຄໍາມ່ວນ ແລະ ອັດຕະປື. ການຍົກລະດັບຄຸນນະພາບ ແລະ ພັດທະນາສິນຄ້າ ເນັ້ນໃສ່ການຊຸກຍູ້ສົ່ງເສີມພັດທະນາສີມືແຮງງານ, ຍົກລະດັບຄວາມຮູ້ຄວາມສາມາດ ແລະ ທັກສະໃຫ້ແກ່ຊາວຊ່າງ/ກຸ່ມແກະສະຫຼັກໄມ້ ເປັນຕົ້ນ: ການອອກແບບ, ການແຕ້ມແບບລວດລາຍ, ການນໍາໃຊ້ເຕັກໂນໂລຊີໃໝ່ເຂົ້າໃນການຜະລິດ ເຮັດໃຫ້ສິນຄ້າມີຄວາມຫຼາກຫຼາຍ ແລະ ມີຫຼາຍລາຄາ ເພື່ອເປັນທາງເລືອກໃຫ້ຜູ້ຊົມໃຊ້. ຊຸກຍູ້ການສ້າງເປັນກຸ່ມຕ່ອງໂສ້ຂອງຊາວຊ່າງຫັດຖະກໍາ ເພື່ອຍົກລະດັບມາດຕະຖານ ແລະ ຄຸນນະພາບ ສຸມໃສ່ຕະຫຼາດທີ່ໃຫຍ່ຂຶ້ນ ແລະ ມີມູນຄ່າສູງ. ສົ່ງເສີມການຕິດຍີ່ຫໍ້ຂອງຜະລິດຕະພັນທີ່ເປັນຂອງຕົນເອງ ແນໃສ່ເພື່ອສ້າງຄວາມຮັບຮູ້ ແລະ ໂຄສະນາສິນຄ້າ. ຕະຫຼາດພາຍໃນ ເນັ້ນໃສ່ຊຸກຍູ້ສົ່ງເສີມເຂົ້າຮ່ວມງານວາງສະແດງຕ່າງໆ, ງານຫັດຖະກໍາປະຈໍາປີ ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງທີ່ມີເງື່ອນໄຂຈັດໄດ້, ການໂຄສະນາຜ່ານທາງວິທະຍຸ, ສື່ສັງຄົມອອນລາຍ ແລະ ອື່ນໆ. ຕະຫຼາດຕ່າງປະເທດ ເນັ້ນໃສ່ຕະຫຼາດທີ່ມີກໍາລັງຊື້ສູງ ແລະ ເປັນທີ່ຕ້ອງການ ເຊັ່ນ: ຈີນ, ຍີ່ປຸ່ນ, ຫວຽດນາມ ແລະ ອີຢູ.
- **ຜະລິດຕະພັນຈາກຫວາຍ** ເນັ້ນໃສ່ການຜະລິດຫັດຖະກໍາເຄື່ອງເຮືອນ ແລະ ເຟີນີເຈີ ເປັນຕົ້ນ ຊຸດໂຕະຕັ່ງ, ກະຕ່າ, ກະເປົາ, ພາເຂົ້າ, ພາຖາດ ແລະ ອື່ນໆ. ເປົ້າໝາຍແມ່ນເນັ້ນໃສ່ແຂວງວຽງຈັນ, ໄຊສົມບູນ ແລະ ບໍລິຄໍາໄຊ ທີ່ມີແຫຼ່ງວັດຖຸດິບຫວາຍຕອບສະໜອງ, ມີຂີດຄວາມສາມາດ ແລະ ທ່າແຮງ ໃນການຜະລິດເຄື່ອງຈັກສານ ແລະ ຜະລິດຕະພັນຈາກຫວາຍ. ການຍົກລະດັບຄຸນນະພາບ ແລະ ພັດທະນາສິນຄ້າຫັດຖະກໍາຈາກຫວາຍ ເນັ້ນໃສ່ການຄັດເລືອກວັດຖຸດິບ (ຫວາຍດິບ), ແຍກຂະໜາດ ແລະ ການຮັກສາ; ພັດທະນາການອອກແບບຜະລິດຕະພັນໃຫ້ມີຄວາມຫຼາກຫຼາຍ ແລະ ຍົກລະດັບເຕັກນິກ ດ້ວຍການປະຍຸກການນໍາໃຊ້ຫວາຍປະສົມປະສານກັບວັດສະດຸອື່ນ. ຊຸກຍູ້ສົ່ງເສີມການສ້າງຄູ່ຮ່ວມພັດທະນາ ແລະ ເຄືອຂ່າຍການຜະລິດເພື່ອຍົກລະດັບເຕັກນິກການຜະລິດໃຫ້ສູງຂຶ້ນ ຫັນຈາກການຜະລິດແບບປະຖົມປະຖານ-ດັ້ງເດີມ ມາສູ່ການຜະລິດຕາມຄວາມຕ້ອງການຂອງຕະຫຼາດທັງພາຍໃນ ແລະ ຕ່າງປະເທດ ຢ່າງມີຈຸດສຸມ. ຊຸກຍູ້ການຊົມໃຊ້ຜະລິດຕະພັນຈາກຫວາຍເຂົ້າໃນບັນດາໂຮງແຮມ, ໂຄງການຕ່າງໆທັງພາກລັດ ແລະ ເອກະຊົນຢ່າງກວ້າງຂວາງ ແລະ ຍົກລະດັບ ແລະ ມູນຄ່າເພີ່ມຂອງຜະລິດຕະພັນໃຫ້ສູງຂຶ້ນເທື່ອລະກ້າວ.

- **ຜະລິດຕະພັນຈາກໄມ້ປ່ອງ** ສຸມໃສ່ການປຸງແຕ່ງ ແລະ ພັດທະນາຜະລິດຕະພັນໃຫ້ມີຄວາມຫຼາກຫຼາຍ ແລະ ສ້າງມູນຄ່າການຜະລິດພາຍໃນໃຫ້ສູງຂຶ້ນ, ຈຳກັດການສົ່ງອອກໄມ້ປ່ອງດິບເທື່ອລະກ້າວ. ເປົ້າໝາຍຈຸດສຸມ ເນັ້ນໃສ່ ທ້ອງຖິ່ນທີ່ມີຂີດຄວາມສາມາດ ແລະ ເປັນທ່າແຮງ ເປັນຕົ້ນ: ນະຄອນຫຼວງວຽງຈັນ, ແຂວງວຽງຈັນ , ຫົວພັນ, ຫຼວງພະບາງ ແລະ ໄຊຍະບູລີ. ຊຸກຍູ້ສົ່ງເສີມການນຳໃຊ້ໄມ້ປ່ອງໃຫ້ເປັນຜະລິດຕະພັນທີ່ມີຄວາມ ຫຼາກຫຼາຍ ຮັບໃຊ້ສັງຄົມຢ່າງທົ່ວເຖິງ ເປັນຕົ້ນ: ຜະລິດຕະພັນໄມ້ທູ່, ພາເຂົ້າ, ພາຖາດ, ຕິບເຂົ້າ, ຫວດ, ກະຕ່າ, ກະເປົາ ແລະ ຜະລິດຕະພັນອື່ນໆ. ຄຽງຄູ່ກັນ ຄົ້ນຄວ້າມາດຕະການສິນຄ້າຫັດຖະກຳທີ່ນຳເຂົ້າຈາກ ຕ່າງປະເທດ ແນໃສ່ຫຼຸດຜ່ອນການນຳເຂົ້າເທື່ອລະກ້າວ. ພັດທະນາ ແລະ ຍົກລະດັບຄຸນນະພາບຂອງ ຜະລິດຕະພັນ ດ້ວຍການຍົກລະດັບຄວາມຮູ້ ດ້ານຄຸນນະພາບຜະລິດຕະພັນໃຫ້ມີຄວາມຄົງທົນ, ການເກັບ ຮັກສາ, ການອອກແບບຜະລິດຕະພັນ, ສ້າງຂີດຄວາມສາມາດ ແລະ ສ້າງຄວາມເຂັ້ມແຂງໃຫ້ຫົວໜ່ວຍ ແລະ ກຸ່ມຈັກສານຂຶ້ນເທື່ອລະກ້າວ. ການຕະຫຼາດ ເນັ້ນໃສ່ຕະຫຼາດພາຍໃນເປັນຫຼັກ, ສຳລັບຕະຫຼາດສົ່ງອອກ ເນັ້ນໃສ່ປະເທດທີ່ຕິດຊາຍແດນ ເປັນຕົ້ນ: ໄທ, ຫວຽດນາມ ແລະ ຈີນ. ສຳລັບຕະຫຼາດອາເມລິກາ, ຍີ່ປຸ່ນ ແລະ ອີຢູ ແມ່ນສຸມໃສ່ຫົວໜ່ວຍຫັດຖະກຳ ທີ່ໃຫ້ຄວາມສຳຄັນຂອງການຫຼຸດຜ່ອນຄວາມທຸກຍາກ, ການ ຍົກສູງບົດບາດຍິງ-ຊາຍ ຢ່າງເທົ່າທຽມ ແລະ ການນຳໃຊ້ ແລະ ບໍລິໂພກແບບຍືນຍົງ.

3) **ຂະແໜງເຈ້ຍພື້ນເມືອງ:**

ເນັ້ນໃສ່ຊຸກຍູ້ການຜະລິດຜະລິດຕະພັນເຈ້ຍປໍສາ ທີ່ເປັນຜະລິດຕະພັນເຈ້ຍພື້ນເມືອງ ໃຫ້ມີການຂະຫຍາຍຕົວ ແລະ ມີຕະຫຼາດສົ່ງອອກທີ່ໝັ້ນຄົງ. ຈຸດສຸມແມ່ນກຸ່ມຜູ້ຜະລິດຢູ່ແຂວງພາກເໜືອ ເປັນຕົ້ນ: ແຂວງ ຫຼວງພະບາງ, ໄຊ ຍະບູລີ ແລະ ໄຊສົມບູນ. ຊຸກຍູ້ສົ່ງເສີມ 1-ການສ້າງຕັ້ງກຸ່ມຜະລິດຜະລິດຕະພັນຈາກເຈ້ຍປໍສາ ເປັນຕົ້ນ: ໂຄມໄຟ, ຄັນຮົ່ມ, ເຈ້ຍສຳລັບວາດພາບ, ເປັນຂອງຕົບແຕ່ງຕ່າງໆ ແລະ ນຳໃຊ້ເຂົ້າໃນການຫຸ້ມຫໍ່ຕ່າງໆ ເປັນຜະລິດຕະພັນໃໝ່ ທີ່ມີຄວາມຫຼາກຫຼາຍ; 2- ການສ້າງຄວາມເຂັ້ມແຂງໃຫ້ກຸ່ມຜູ້ຜະລິດເຈ້ຍປໍສາ ດ້ວຍການຂະຫຍາຍຜະລິດໃຫ້ສູງຂຶ້ນ. ເບື້ອງຕົ້ນ ເນັ້ນໃສ່ຜະລິດເພື່ອຕອບສະໜອງຕະຫຼາດພາຍໃນ ຮັບປະກັນປະລິມານ ແລະ ຄຸນນະພາບ ເຮັດໃຫ້ ຜະລິດຕະພັນເປັນທີ່ຍອມຮັບ ແລະ ຖືກນຳໃຊ້ຢ່າງກວ້າງຂວາງ ຊຶ່ງເຫັນວ່າປະຈຸບັນ ຍັງມີຄວາມຕ້ອງການສູງ ແລະ ຕິດພັນກັບການທ່ອງທ່ຽວ.

4) **ຂະແໜງສິລະປະໂລຫະ ແລະ ອະໂລຫະ:**

- **ຂະແໜງສິລະປະໂລຫະ** ເນັ້ນໃສ່ຊຸກຍູ້ສົ່ງເສີມ ແລະ ພັດທະນາຫັດຖະກຳຕີເຫຼັກ ໃນການຜະລິດເປັນສິນຄ້າ ເຊັ່ນ: ພ້າ, ມີດ, ກຽວ, ຄ້ອນ, ຄາດ, ຈອບ ແລະ ອື່ນໆ ໂດຍສຸມໃສ່ກຸ່ມຕີເຫຼັກເປົ້າໝາຍ ຢູ່ນະຄອນຫຼວງ ເພື່ອສ້າງເປັນກຸ່ມຕົວແບບ ດ້ານຄຸນນະພາບ ແລະ ການສ້າງກາໝາຍຂອງຕົນເອງ ແນໃສ່ເພື່ອຖ່າຍທອດໃຫ້ ກຸ່ມຕີເຫຼັກຢູ່ແຂວງອື່ນໆ. ການຊຸກຍູ້ສົ່ງເສີມເນັ້ນໃສ່ 1- ການຍົກລະດັບການຈັດການບໍລິຫານ; 2- ຍົກ ລະດັບຄວາມປອດໄພ ແລະ ສຸຂານາໄມ ໃນສະຖານທີ່ເຮັດວຽກ; 3- ເອື້ອອຳນວຍກົນໄກການນຳເຂົ້າ ແລະ ນຳໃຊ້ວັດຖຸດິບພາຍໃນ ແລະ ຕ່າງປະເທດ; 4- ດ້ານແຫຼ່ງທຶນ: ຊຸກຍູ້ການຈັດການດ້ານການເງິນ ແລະ ການ ບໍລິຫານຂອງກຸ່ມໃຫ້ມີຄວາມເຂັ້ມແຂງ ແລະ ເປັນລະບົບ; ແລະ 5- ການຕະຫຼາດ ແມ່ນເນັ້ນໃສ່ການ ໂຄສະນາຜ່ານສື່ສັງຄົມອອນລາຍ ແລະ ງານວາງສະແດງສິນຄ້າຕ່າງໆ.
- **ຂະແໜງສິນລະປະອະໂລຫະ**: ສຸມໃສ່ການແກະສະຫຼັກຫີນ ເພື່ອເປັນສິນຄ້າ ເພື່ອສ້າງມູນຄ່າເພີ່ມໃຫ້ສູງຂຶ້ນ. ຈຸດສຸມເນັ້ນໃສ່ ແຫຼ່ງທີ່ມີວັດຖຸດິບ ແລະ ກຸ່ມທີ່ເປັນເປົ້າໝາຍ ໂດຍຊຸກຍູ້ສົ່ງເສີມດ້ານການອອກແບບ ແລະ ຄຸນນະພາບຜະລິດຕະພັນ ຕາມຄວາມຕ້ອງການຂອງຕະຫຼາດ, ການນຳໃຊ້ເຄື່ອງມື-ເຄື່ອງຈັກຈຳນວນໜຶ່ງ ເຂົ້າໃນການຜະລິດ ແລະ ອື່ນໆ.

5) **ຂະແໜງເຄື່ອງປັ້ນດິນເຜົາ:**

ເນັ້ນໃສ່ຜະລິດຕະພັນເຄື່ອງປັ້ນດິນເຜົາ ທີ່ເປັນເອກະລັກ ແລະ ນຳໃຊ້ວັດຖຸດິບພາຍໃນເປັນຫຼັກ ເປັນຕົ້ນ: ໝໍ້ດິນ, ໂຄມໄຟ, ຄົກ, ໂຖດອກໄມ້ ແລະ ອື່ນໆ. ການພັດທະນາຜະລິດຕະພັນ ເນັ້ນໃສ່ 1- ການອອກແບບຜະລິດຕະ

ພັນແບບດັ້ງເດີມທີ່ມີຄວາມສວຍງາມ ແລະ ເປັນວັດທະນະທໍາມາແຕ່ບູຮານ ແລະ ຮ່ວມຍຸກສະໄໝ; ແລະ 2- ເຕັກນິກການຜະລິດ ເພື່ອຍົກລະດັບຄຸນນະພາບ ແລະ ກໍາລັງການຜະລິດ ແລະ 3- ສົ່ງເສີມ ແລະ ພັດທະນາເຕັກນິກວິຊາການກ່ຽວກັບ 1) ດ້ານດິນ, 2) ດ້ານເຕົາເຜົາ, ແລະ 3) ສີນລະປະການປັ້ນ. ການຊຸກຍູ້ສົ່ງເສີມ ສຸມໃສ່ສ້າງກຸ່ມໃຫ້ມີຄວາມເຂັ້ມແຂງ ດ້ານການຈັດການບໍລິຫານ, ການເງິນ ແລະ ການຕະຫຼາດ ເພື່ອສ້າງເງື່ອນໄຂກ້າວໄປສູ່ການຍັ້ງຍືນການສ້າງຕັ້ງກຸ່ມ ໃຫ້ໄດ້ຢ່າງໜ້ອຍ 1 ກຸ່ມ.

**6) ຂະແໜງເຄື່ອງປະດັບ ແລະ ເຄື່ອງເອ້ຢ້ອງ:**

ຂະແໜງເຄື່ອງປະດັບ ແລະ ເຄື່ອງເອ້ຢ້ອງ ປະກອບມີຫຼາກຫຼາຍຜະລິດຕະພັນ ເປັນຕົ້ນ: ເຄື່ອງປະດັບ, ເຄື່ອງຕົບແຕ່ງພາຍໃນເຮືອນ, ເຄື່ອງທີ່ລະນຶກ ແລະ ເຄື່ອງວັດທະນະທໍາ ທີ່ເປັນປະເພດຜະລິດຕະພັນສາຍຄໍ, ຕຸ້ມຫູ, ແຫວນ, ສາຍແຂນ ຈາກເຜັດ, ພອຍ, ຄໍາ ແລະ ເງິນ; ເຄື່ອງປະດັບ ທີ່ເຮັດຈາກອະໂລຫະຕ່າງໆ ເຊັ່ນ: ຫີນ, ຜ້າແພ, ຟັກມ້ອນ ແລະ ອື່ນໆ.

ການສົ່ງເສີມ ແລະ ພັດທະນາ ເນັ້ນໃສ່: 1- ການຍົກລະດັບ ແລະ ສ້າງຄວາມເຂັ້ມແຂງດ້ານບຸກຄະລາກອນເປັນຕົ້ນ: ຍົກລະດັບສີມືແຮງງານ, ການຖ່າຍທອດຄວາມຮູ້ເຕັກນິກວິຊາການ ແລະ ການສ້າງເຄືອຂ່າຍ; 2- ການອອກແບບຜະລິດຕະພັນໃໝ່ໆ ທີ່ຕິດພັນກັບຄວາມຕ້ອງການຂອງຕະຫຼາດທັງພາຍໃນ ແລະ ສາກົນ; 3- ການຍົກລະດັບດ້ານເຕັກນິກການຜະລິດ ແລະ ນໍາໃຊ້ເຄື່ອງມືເຂົ້າໃນການຜະລິດ; 4- ປະສານສົມທົບ ແລະ ຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຊຸກຍູ້ໃຫ້ທຸລະກິດຫັດຖະກໍາຂະໜາດໃຫຍ່ ມີສ່ວນຮ່ວມໃນການສ້າງຄວາມເຂັ້ມແຂງໃຫ້ໂຮງຊ່າງຫັດຖະກໍາຂະໜາດນ້ອຍ ໃນດ້ານຕ່າງໆຢ່າງເປັນປົກກະຕິ ແລະ ເພື່ອເປັນຄູ່ຮ່ວມການຜະລິດໃນຕໍ່ໜ້າ.

**7) ຂະແໜງອາຫານ ແລະ ເຄື່ອງດື່ມພື້ນເມືອງ:**

ອາຫານ ແລະ ເຄື່ອງດື່ມພື້ນເມືອງ ມີລັກສະນະແຕກຕ່າງຂອງແຕ່ລະທ້ອງຖິ່ນ ທີ່ມີເອກະລັກສະເພາະຂອງຕົນເອງ. ອາຫານ ແລະ ເຄື່ອງດື່ມພື້ນເມືອງ ເນັ້ນໃສ່ຜະລິດຕະພັນທີ່ເປັນທ່າແຮງຂອງແຕ່ລະທ້ອງຖິ່ນແບບຫັດຖະກໍາຄອບຄົວ ເພື່ອສ້າງອາຊີບ ແລະ ລາຍຮັບຂອງຄອບຄົວ ແລະ ຊຸມຊົນ. ຂະແໜງອາຫານພື້ນເມືອງ ເນັ້ນໃສ່: ຜະລິດຕະພັນການປຸງແຕ່ງຈາກຊີ້ນ, ໜັງ, ປາ ເຊັ່ນ: ຊີ້ນແຫ້ງ, ໄສ້ກອກ, ໄສ້ອົ່ວ, ຍໍ, ສົ້ມໝູ, ໜັງເຄັມ, ປາແຫ້ງ, ສົ້ມປາ ແລະ ອື່ນໆ; ຈາກ ພືດຜັກ ປະກອບມີ: ເຫັດຈືນ, ໄຄແຜ່ນ, ກວນໝາກໄມ້, ໝາກໄມ້ເຊື່ອມ; ປະເພດ ແຈ່ວຕ່າງໆ ເຊັ່ນ: ແຈ່ວບອງ ຫຼວງພະບາງ, ແຈ່ວປາບໍ້າ ແຂວງຫົວພັນ, ແຈ່ວປາກະເຕົ໋າ; ເສັ້ນເຝີ ແລະ ອື່ນໆ. ສໍາລັບຂະແໜງເຄື່ອງດື່ມພື້ນເມືອງ ເນັ້ນໃສ່: ຜະລິດຕະພັນເຄື່ອງດື່ມ ເຊັ່ນ: ນໍ້າໝາກຍໍ, ນໍ້າໝາກມອນ, ເຫຼົ້າພື້ນເມືອງຕ່າງໆ, ເຫຼົ້າບອງ ຢາພື້ນເມືອງ ແລະ ອື່ນໆ.

ການຊຸກຍູ້ສົ່ງເສີມ ແມ່ນສຸມໃສ່ :1) ຍົກລະດັບຄຸນນະພາບການຫຸ້ມຫໍ່ຜະລິດຕະພັນ ແລະ ການເກັບຮັກສາດ້ວຍການຍົກລະດັບຄວາມຮູ້ວິຊາການ, ການອອກແບບຜະລິດຕະພັນຫຸ້ມຫໍ່ໃຫ້ມີຄວາມຫຼາກຫຼາຍ, ການນໍາໃຊ້ເຄື່ອງຈັກຈໍານວນໜຶ່ງເຂົ້າໃນການຜະລິດ ແລະ ການເກັບຮັກສາ; 2) ການສ້າງຕັ້ງເປັນກຸ່ມ ແລະ ສ້າງຄວາມເຂັ້ມແຂງດ້ານການຈັດການບໍລິຫານ ແລະ ການເງິນ ເພື່ອຮັບປະກັນມາດຕະຖານ, ຄຸນນະພາບຂອງຜະລິດຕະພັນ ແລະ ການຜະລິດ; 3) ສົ່ງເສີມການສ້າງຍີ່ຫໍ້ (Brand) ຂອງຕົນເອງ; 4) ຊຸກຍູ້ໃຫ້ໄດ້ຮັບກາໝາຍ ໜຶ່ງເມືອງໜຶ່ງຜະລິດຕະພັນ (ODOP) ແລະ 5) ການຕະຫຼາດ ເນັ້ນໃສ່ການໂຄສະນາສິນຄ້າຜ່ານ ສື່ສັງຄົມອອນລາຍ ແລະ ງານວາງສະແດງສິນຄ້າຕ່າງໆ ເພື່ອການຂະຫຍາຍຕະຫຼາດຕົວ ແລະ ສົ່ງເສີມໃຫ້ເປັນທີ່ຍອມຮັບຂອງສັງຄົມ.

## 3- <u>ການເອື້ອອໍານວຍຄວາມສະດວກວຽກງານຫັດຖະກໍາ</u>

ສ້າງ ແລະ ປັບປຸງບັນດານິຕິກໍາ ແລະ ກົນໄກ ທີ່ເອື້ອອໍານວຍໃນການດໍາເນີນທຸລະກິດຫັດຖະກໍາ ແລະ ດຶງດູດການລົງທຶນໃໝ່ໃນໂຮງງານຫັດຖະກໍາ ແລະ ຫົວໜ່ວຍໂຮງຊ່າງຫັດຖະກໍາ ດ້ວຍການສຸມໃສ່: 1) ສ້າງ ແລະ ປັບປຸງນິຕິກໍາ ໃນການຊຸກຍູ້ເອື້ອອໍານວຍ, ການຍັ້ງຍືນກຸ່ມ ຫຼື ຫົວໜ່ວຍຫັດຖະກໍາດີເດັ່ນ; 2) ຄົ້ນຄວ້າລົບລ້າງນິຕິກໍາ, ເອກະສານ ແລະ ຂັ້ນຂອດ ທີ່ບໍ່ຈໍາເປັນ ແລະ ແກ້ໄຂບັນຫາ ທີ່ບໍ່ເອື້ອອໍານວຍ ແລະ ສ້າງຄວາມຫຍຸ້ງຍາກ ໃນ

ການດຳເນີນດຳເນີນທຸລະກິດ ຫຼື ການສ້າງຕັ້ງຂອງຫົວໜ່ວຍຫັດຖະກຳ. ປັບປຸງຂັ້ນຂອດການສົ່ງອອກສິນຄ້າຫັດຖະກຳໃຫ້ກະທັດຫັດ ແລະ ວ່ອງໄວຂຶ້ນເທື່ອລະກ້າວ; 3) ປັບປຸງ ແລະ ຍົກລະດັບປະສິດທິພາບ, ກົນໄກ ການນຳເຂົ້າວັດຖຸດິບ-ວັດຖຸປະກອບ, ການເຄື່ອນຍ້າຍ ແລະ ການສົ່ງອອກສິນຄ້າຫັດຖະກຳ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍຕ່າງໆທີ່ບໍ່ຈຳເປັນ ເທື່ອລະກ້າວ; 4) ປັບປຸງລະບົບຂໍ້ມູນຂ່າວສານກ່ຽວກັບຫັດຖະກຳ ແລະ ກົນໄກການປະສານງານ ດ້ວຍການທັນເປັນທັນສະໄໝ ເປັນຕົ້ນ: ເຕັກໂນໂລຊີຂໍ້ມູນຂ່າວສານ ໃນຍຸກການເຊື່ອມຂໍ້ມູນຂ່າວສານ ແລະ ອິນເຕີເນັດເປັນທຸກສິ່ງທຸກຢ່າງ; 5) ປະສານສົມທົບ ແລະ ຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງເພື່ອຊຸກຍູ້ສົ່ງເສີມການຜະລິດສິນຄ້າຫັດຖະກຳ, ກວດກາ ແລະ ຕິດຕາມ ການເຄື່ອນໄຫວຫົວໜ່ວຍທຸລະກິດທີ່ບໍ່ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍ, ສະກັດກັ້ນ ຫົວໜ່ວຍ ຫຼື ກຸ່ມການຜະລິດສິນຄ້າຫັດຖະກຳທີ່ບໍ່ຖືກຕ້ອງ ທີ່ກະທົບເຖິງການດຳເນີນທຸລະກິດ, ການສະຫງວນ ແລະ ການປົກປັກຮັກສາວິຊາຊີບຫັດຖະກຳຂອງຫົວໜ່ວຍຫັດຖະກຳແຕ່ລະທ້ອງຖິ່ນ; ແລະ 6) ຊຸກຍູ້ ແລະ ຍົກສູງການຮ່ວມມືກັບສາກົນ ເພື່ອເຜີຍແຜ່ ແລະ ນຳໃຊ້ສິນຄ້າຫັດຖະກຳຂອງລາວ ໃນເວທີພາກພື້ນ ແລະ ສາກົນ.

## 4- ການເຂົ້າຫາແຫຼ່ງທຶນສຳລັບຫົວໜ່ວຍຫັດຖະກຳ

ຊຸກຍູ້ ແລະ ເອື້ອອຳນວຍຫົວໜ່ວຍທຸລະກິດ ໃຫ້ສາມາດເຂົ້າຫາແຫຼ່ງທຶນ ໄລຍະຍາວ ແລະ ອັດຕາດອກເບັ້ຍຕ່ຳ ໂດຍສະເພາະກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ດ້ວຍການເນັ້ນໃສ່ 1) ກຳນົດນະໂຍບາຍສົ່ງເສີມຂະແໜງວິຊາຊີບຫັດຖະກຳທີ່ເປັນບູລິມະສິດ ເພື່ອເປັນເງື່ອນໄຂໃນການເຂົ້າຫາກອງທຶນ ຫຼື ແຫຼ່ງທຶນ; 2) ປະສານຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ຊຸກຍູ້ການປັບປຸງ ແລະ ຍົກລະດັບການຈັດການບໍລິຫານຂອງຫົວໜ່ວຍ ແລະ ກຸ່ມຫັດຖະກຳເປົ້າໝາຍ ແລະ ມີທ່າແຮງ ຂຶ້ນເທື່ອລະກ້າວ; 3) ປະສານສົມທົບ ແລະ ຈັດຝຶກອົບຮົມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ ແລະ ໃຫ້ຂໍ້ມູນ, ຄວາມຮູ້, ລະບຽບ ແລະ ເງື່ອນໄຂຂອງການເຂົ້າຫາແຫຼ່ງທຶນທີ່ຖືກຕ້ອງ ໃຫ້ກັບຫົວໜ່ວຍ ແລະ ກຸ່ມຫັດຖະກຳເປົ້າໝາຍ ຢ່າງມີຈຸດສຸມ ແລະ ເປັນປົກກະຕິ; ແລະ 4) ຊຸກຍູ້ສົ່ງເສີມ ເພື່ອຄັດເລືອກຫົວໜ່ວຍ ຫຼື ກຸ່ມເປົ້າໝາຍ ເພື່ອເຂົ້າຫາແຫຼ່ງທຶນ ຮັບໃຊ້ການຂະຫຍາຍການຜະລິດ ແລະ ຍົກລະດັບປະສິດທິພາບ ແລະ ຄຸນນະພາບຜະລິດຕະພັນ.

## 5- ສົ່ງເສີມການຜະລິດຫັດຖະກຳເຊື່ອມໂຍງກັບການທ່ອງທ່ຽວ

ການສົ່ງເສີມການຜະລິດຫັດຖະກຳເຊື່ອມໂຍງກັບການທ່ອງທ່ຽວ ແມ່ນການນຳເອົາເອກະລັກ, ສິນຄ້າຫັດຖະກຳທີ່ມີຊື່ສຽງ, ສິນຄ້າມີຄຸນນະພາບ ຕາມຄວາມຕ້ອງການຂອງຕະຫຼາດ ແລະ ແບບແຜນຂອງຊາວຊ່າງ ແລະ ຫົວໜ່ວຍຫັດຖະກຳເປັນຈຸດຂາຍ ເພື່ອດຶງດູດ ແລະ ປະກອບສ່ວນໃນກັບການທ່ອງທ່ຽວ. ແຜນງານການສົ່ງເສີມການຜະລິດຫັດຖະກຳເຊື່ອມໂຍງກັບການທ່ອງທ່ຽວ ເນັ້ນໃສ່ 1) ການຂົນຂວາຍຫົວໜ່ວຍ ຫຼື ກຸ່ມຫັດຖະກຳ ດ້ວຍການນຳສິນຄ້າຫັດຖະກຳ ແລະ ຊາວຊ່າງຫັດຖະກຳ ເພື່ອສາທິດຂັ້ນຕອນການຜະລິດ ເຂົ້າຮ່ວມໃນງານວາງສະແດງສິນຄ້າ, ງານເທດສະການທ່ອງທ່ຽວຕ່າງໆ, ງານບຸນເທດສະການ ທີ່ສຳຄັນຂອງທ້ອງຖິ່ນ, ແຂວງ ແລະ ຂອງຊາດ ທັງພາຍໃນ ແລະ ຕ່າງປະເທດ ເປັນຕົ້ນ: ງານບຸນພະທາດຫຼວງ, ງານບຸນຊ່ວງເຮືອ, ງານບຸນຊ້າງ ແຂວງໄຊຍະບູລີ, ງານວາງສະແດງສິນຄ້າໂອດອບ (ODOP), ງານວາງສະແດງລະດັບພາກພື້ນເປັນຕົ້ນ ງານວາງສະແດງ CAEXPO ຢູ່ຈີນ ແລະ ອື່ນໆ; 2) ນຳເອົາຜະລິດຕະພັນຫັດຖະກຳ ທີ່ມີຊື່ສຽງ ແລະ ມີຕະຫຼາດຮອງຮັບ ໄປວາງຈຳໜ່າຍຕາມຮ້ານຄ້າ, ສະໜາມບິນ ແລະ ແຫຼ່ງທ່ອງທ່ຽວທີ່ສຳຄັນຕ່າງໆ; 3) ສ້າງຈຸດຈຳໜ່າຍສິນຄ້າຫັດຖະກຳ ຫຼື ໂອດອບ ເພື່ອເປັນບ່ອນກະຈາຍສິນຄ້າ; 4) ປະສານສົມທົບ ແລະ ຮ່ວມມືກັບ ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ບັນດາບໍລິສັດທ່ອງທ່ຽວ ເພື່ອຊຸກຍູ້ການມີສ່ວນຮ່ວມໃນການສົ່ງເສີມການທ່ອງທ່ຽວຕິດພັນກັບວິຖີການຜະລິດຫັດຖະກຳພື້ນບ້ານ ໂດຍເນັ້ນໃສ່ສິນຄ້າຫັດຖະກຳທີ່ເປັນເຄື່ອງຕ້ອນຂອງຝາກຕ່າງໆ ເປັນຕົ້ນ: ເຄື່ອງອາຫານແຫ້ງ, ເຄື່ອງດື່ມພື້ນເມືອງ, ເຄື່ອງປະດັບ-ເອ້ຍ້ອງ, ແພຜ້າໄໝ ແລະ ຝ້າຍ ແລະ ອື່ນໆ; 5) ຊຸກຍູ້ສົ່ງເສີມການນຳສິນຄ້າຫັດຖະກຳທີ່ມີຊື່ສຽງ ແລະ ຄຸນນະພາບ ເຂົ້າໃນການໃຊ້ສອຍ ແລະ ຕົບແຕ່ງພາຍໃນບັນດາໂຮງແຮມ ແລະ ບ້ານພັກ

ຕ່າງໆ ເປັນຕົ້ນ: ຜ້າປູໂຕະ, ຜ້າກັ້ງ, ເຄື່ອງປະດັບພາຍໃນ, ຢາສະໝຸນພື້ນເມືອງ, ຜ້າເຊັດມື ແລະ ສິນຄ້າຫັດຖະກຳອື່ນໆ ດ້ວຍການຮ່ວມມື ແລະ ກຳນົດນະໂຍບາຍ/ມາດຕະການ ເພື່ອກະຕຸ້ນການຜະລິດຮັບໃຊ້ການທ່ອງທ່ຽວ.

## 2.5 <u>ແຜນງານທີ 5:</u> ການອະນຸລັກ, ການສະຫງວນ ແລະ ປົກປັກຮັກສາຫັດຖະກຳລາວ

### 2.5.1 ເປົ້າໝາຍສະເພາະ ແລະ ຕົວຊີ້ວັດ

- ຊຸກຍູ້ໃຫ້ຊາວຊ່າງ ແລະ ນາຍຊ່າງຫັດຖະກຳ ແຈ້ງຂໍຂຶ້ນທະບຽນປົກປ້ອງ ຊັບສິນທາງປັນຍາກ່ຽວກັບຜະລິດຕະພັນຫັດຖະກຳ ໃຫ້ໄດ້ຢ່າງໜ້ອຍ 25 ລາຍການ ພາຍໃນປີ 2025;
- ສ້າງປຶ້ມຄູ່ມືກ່ຽວກັບ ວິທີການຜະລິດຫັດຖະກຳທີ່ໂດດເດັ່ນ ແລະ ເປັນພູມປັນຍາຫັດຖະກຳ ຢ່າງໜ້ອຍ 2 ເຫຼັ້ມ ພາຍໃນປີ 2025;
- ສ້າງປຶ້ມປະຫວັດຊາວຊ່າງ ແລະ ນາຍຊ່າງຫັດຖະກຳ ທີ່ພົ້ນເດັ່ນ ຢ່າງໜ້ອຍ 3 ເຫຼັ້ມ ພາຍໃນປີ 2025;
- ສ້າງບັນຊີລາຍການສິນຄ້າຫັດຖະກຳທີ່ສະຫງວນໄວ້ໃຫ້ຄົນລາວ;
- ເຜີຍແຜ່ການອະນຸລັກຫັດຖະກຳ ແລະ ງານວາງສະແດງສິນຄ້າຫັດຖະກຳທີ່ເປັນເອກະລັກວັດທະນະທຳຂອງແຕ່ລະທ້ອງຖິ່ນ ແລະ ທົ່ວປະເທດ.

### 2.5.2 ວຽກຈຸດສຸມ

1- <u>**ການອະນຸລັກມໍລະດົກຫັດຖະກຳ**</u>

ການອະນຸລັກມໍລະດົກຫັດຖະກຳ ແມ່ນເພື່ອບໍ່ໃຫ້ຜະລິດຕະພັນທີ່ເປັນມໍລະດົກຫັດຖະກຳຂອງຊາດ ຖືກທຳລາຍ ຫຼື ສູນຫາຍໄປ ຄຽງຄູ່ກັນ ກໍ່ເພື່ອໃຫ້ຄົນຮຸ່ນຫຼັງ ໄດ້ສືບທອດມູນເຊື້ອທີ່ເປັນມໍລະດົກຫັດຖະກຳຂອງປະຊາຊົນບັນດາເຜົ່າ.

ແຜນວຽກຈຸດສຸມ ແມ່ນເນັ້ນໃສ່ 1) ສຳຫຼວດ, ເກັບກຳຂໍ້ມູນ ແລະ ຂຶ້ນບັນຊີຜະລິດຕະພັນຫັດຖະກຳທີ່ໂດດເດັ່ນ ທີ່ເປັນພູມປັນຍາຫັດຖະກຳ ເພື່ອວາງແຜນອະນຸລັກ ແລະ ໂຄສະນາເຜີຍແຜ່; 2) ຄົ້ນຄວ້າ ແລະ ສ້າງເປັນປຶ້ມ ກ່ຽວກັບ ວິທີການຜະລິດຫັດຖະກຳທີ່ໂດດເດັ່ນ ແລະ ເປັນພູມປັນຍາຫັດຖະກຳ ເພື່ອຖ່າຍທອດວິຊາຄວາມຮູ້ໃຫ້ແກ່ຄົນຮຸ່ນສືບທອດ; 3) ຄົ້ນຄວ້າ ແລະ ສ້າງປຶ້ມປະຫວັດມໍລະດົກຫັດຖະກຳ, ປະຫວັດຊາວຊ່າງ ແລະ ນາຍຊ່າງເປົ້າໝາຍ ເພື່ອໃຫ້ສັງຄົມ ແລະ ມວນຊົນຮັບຮູ້ ແລະ ເຂົ້າໃຈສິລະປະຫັດຖະກຳລາວ; 4) ເສີມສ້າງ ແລະ ຂະຫຍາຍເຄືອຂ່າຍ ແນໃສ່ການອະນຸລັກມໍລະດົກຫັດຖະກຳ; 5) ສະຫງວນ ແລະ ປົກປັກຮັກສາ ພູມປັນຍາທ້ອງຖິ່ນຂອງປະຊາຊົນບັນດາເຜົ່າໃຫ້ຍືນຍົງ ; 6) ພັດທະນາຜະລິດຕະພັນຫັດຖະກຳທີ່ອະນຸລັກ ໃຫ້ໄດ້ຮັບການຢັ້ງຢືນ ກາໝາຍ ODOP; 7) ຊຸກຍູ້ສົ່ງເສີມ ແລະ ເຜີຍແຜ່ການອານຸລັກຫັດຖະກຳ ດ້ວຍການໂຄສະນາຫຼາຍຮູບແບບ ເປັນຕົ້ນ ທາງໂທລະພາບ, ໜັງສືພິມ ແລະ ສື່ສັງຄົມອອນລາຍ; 8) ຊຸກຍູ້ ແລະ ປະສານສົມທົບກັບສະມາຄົມຫັດຖະກຳ ເພື່ອຄັດເລືອກບຸກຄົນທີ່ມີຊື່ສຽງເພື່ອເປັນຕົວແທນໂຄສະນາຫັດຖະກຳຂອງລາວ; ແລະ 9) ເຊີດຊູກຽດ ຊາວຊ່າງ ແລະ ນາຍຊ່າງ, ພັດທະນາຮຸ່ນສືບທອດ ສົ່ງເສີມກິດຈະກຳທີ່ມີຄຸນຄ່າ ໃຫ້ແກ່ງານອະນຸລັກ. ຊຸກຍູ້ສົ່ງເສີມຫັດຖະກຳຂອງລາວເຂົ້າໃນຫຼັກສູດການຮຽນການສອນ.

2- **ການສະຫງວນຫັດຖະກຳ**

ຊຸກຍູ້ການສະຫງວນຫັດຖະກຳ ໃຫ້ເປັນວິຊາຊີບການຜະລິດ ແລະ ການດຳເນີນທຸລະກິດ ທີ່ເປັນເອກະລັກ ແລະ ລັກສະນະຈຳເພາະຂອງແຕ່ລະຂົງເຂດຊົນເຜົ່າ. ຊຸກຍູ້ການຜະລິດຫັດຖະກຳຂອງແຕ່ລະທ້ອງຖິ່ນ ໃຫ້ມີຊື່ສຽງ ແລະ ເປັນທີ່ຍອມຮັບຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ. ການຊຸກຍູ້ສົ່ງເສີມການສະຫງວນຫັດຖະກຳ ເນັ້ນໃສ່

1) ປັບປຸງນິຕິກຳ ເພື່ອສະຫງວນອາຊີບຫັດຖະກຳໃຫ້ຄົນລາວ ເປັນຕົ້ນ: ບັນຊີປະເພດທຸລະກິດທີ່ສະຫງວນໄວ້ໃຫ້ກັບຄົນລາວ ປະກອບມີ : ການຕ່ຳຫູກ, ອອກແບບ ການຈົກເກັບລວດລາຍ, ການມັດ ມີ່ພື້ນເມືອງລາວ; ການປັກຖັກແສ່ວ ຜ້າໄໝ-ຝ້າຍຂອງບັນດາຊົນເຜົ່າ; ເຄື່ອງປະດັບ ແລະ ເອ້ຢ້ອງ; ເຄື່ອງແກະສະຫຼັກໄມ້; ເຄື່ອງຈັກສານ; ເຄື່ອງປັ້ນດິນເຜົາ; ລວດລາຍບູຮານ ແລະ ຫັດຖະກຳພື້ນເມືອງທີ່ເປັນເອກະລັກ; 2) ກຳນົດບັນຊີລາຍການສິນຄ້າຫັດຖະກຳ ແລະ ຄົ້ນຄວ້າກຳນົດເນື້ອໃນປະເພດຫັດຖະກຳທີ່ສະຫງວນ ເປັນຕົ້ນ: ການຕ່ຳຫູກ, ອອກແບບການຈົກເກັບລວດລາຍ, ການມັດມີ່ພື້ນເມືອງລາວ, ການຫຍິບປັກຖັກແສ່ວ ຜ້າໄໝ-ຝ້າຍ ຂອງບັນດາຊົນເຜົ່າ, ເຄື່ອງປະດັບ ແລະ ເອ້ຢ້ອງ, ເຄື່ອງແກະສະຫຼັກໄມ້ ແລະ ເຄື່ອງສິລະປະໂລຫະ ແລະ ອະໂລຫະ; 3) ໃຫ້ຄຳປຶກສາ, ແນະນຳຊາວຊ່າງ ແລະ ຫົວໜ່ວຍຫັດຖະກຳ ແຈ້ງຈົດຊັບສິນທາງປັນຍາ ຫຼື ມໍລະດົກດ້ານຫັດຖະກຳ; 4) ຊຸກຍູ້ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງສະກັດກັ້ນສິນຄ້າຫັດຖະກຳລອກລຽນແບບສິນຄ້າຫັດຖະກຳຂອງລາວ ແລະ ກຳນົດມາດຕະການຕ່າງໆ ເພື່ອຫຼຸດຜ່ອນການນຳເຂົ້າສິນຄ້າດັ່ງກ່າວຈາກຕ່າງປະເທດ.

### 3- ການປົກປັກຮັກສາຫັດຖະກຳລາວ

ການປົກປັກຮັກສາຫັດຖະກຳລາວ ແມ່ນເພື່ອປ້ອງກັນຜົນກະທົບທຸລະກິດຫັດຖະກຳຂອງຄົນລາວ ຈາກການດຳເນີນທຸລະກິດ, ລັກລອບ, ສວຍໃຊ້ ຫຼື ມ້າງເພ ຫັດຖະກຳຂອງລາວ ແນໃສ່ເພື່ອເຮັດໃຫ້ອາຊີບຫັດຖະກຳ ໄດ້ຮັບການອະນຸລັກ, ການສະຫງວນ ແລະ ພັດທະນາຂຶ້ນເທື່ອລະກ້າວ. ວຽກຈຸດສຸມ ເນັ້ນໃສ່ 1- ການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຊຸກຍູ້ລົງກວດກາ ແລະ ຕິດຕາມ ການດຳເນີນທຸລະກິດ ທີ່ບໍ່ຖືກຕ້ອງ ຕາມລະບຽບກົດໝາຍ; 2- ກຳນົດມາດຕະການສະກັດກັ້ນ ຕໍ່ສິນຄ້າຫັດຖະກຳປອມແປງ, ລອກຮຽນແບບ, ລອກແບບລວດລາຍແນວຄິດປະດິດສ້າງຂອງຊາວຊ່າງຫັດຖະກຳລາວ ຫຼື ກະທົບຕໍ່ທຸລະກິດທີ່ຖືກຕ້ອງ; ແລະ 3- ປະສານສົມທົບກັບສະມາຄົມຫັດຖະກຳ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອໂຄສະນາ ແລະ ຊ່ວຍໃນການປົກປັກຮັກສາອາຊີບຫັດຖະກຳຂອງລາວໃຫ້ສືບຕໍ່ ແລະ ຍືນຍົງ.

## 3. ສົ່ງເສີມການພັດທະນາຕາມເຂດແຄວ້ນ (ແຕ່ລະພາກ)

ການສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳຕາມເຂດແຄວ້ນ ແມ່ນອີງໃສ່ຈຸດພິເສດ, ທ່າແຮງ ແລະ ຄວາມເໝາະສົມຂອງແຕ່ລະພາກ ສຸມໃສ່ສົ່ງເສີມແຕ່ລະປະເພດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳດັ່ງລຸ່ມນີ້:

**1- ພາກເໜືອ**

- ອຸດສາຫະກຳປຸງແຕ່ງຜົນຜະລິດຈາກກະສິກຳ ແລະ ປ່າໄມ້ ເປັນຕົ້ນ ສາລີ, ປຸງແຕ່ງຢາງພາລາ, ຫົວອາຫານສັດ, ປຸງແຕ່ງຊີ້ນ, ຜະລິດຕະພັນຈາກນົມງົວ, ແປ້ງສາຄູ, ປຸງແຕ່ງຊາ, ຢາສູບ, ໝາກແໜ່ງ, ກາເຟ, ປຸງແຕ່ງໄມ້ສັກຈາກສວນປູກ, ປຸງແຕ່ງໄມ້ປ່ອງ ແລະ ຫວາຍ, ໝາກເກົ້າ, ຂີງ, ໝາກເດືອຍ, ໝາກງາ, ປໍສາ ແລະ ຝຸ່ນຊີວະພາບ.
- ອຸດສາຫະກຳປຸງແຕ່ງແຮ່ທາດ ເປັນຕົ້ນ ຊີມັງ, ແຮ່ເຫຼັກ ແລະ ເຫຼັກ, ທອງ, ຊືນ, ສັງກະສີ, ອາລູມີນຽມ, ແກະສະຫຼັກຫີນປາໂກໄດ ແລະ ແຮ່ທາດ ອື່ນໆ;
- ຫັດຖະກຳຕ່ຳຫູກ ແລະ ຍ້ອມສີທຳມະຊາດ, ປັກດິ້ງ, ແກະສະຫຼັກໄມ້ ແລະ ເຄື່ອງປະດັບ ເອ້ຢ້ອງຂອງທີ່ລະນຶກ, ຈັກສານ, ເຄື່ອງປັ້ນດິນເຜົາ, ຫັດຖະກຳຊານ້ຳກ້ຽງ ແລະ ອາຫານພື້ນເມືອງ;
- ອຸດສາຫະກຳປຸງແຕ່ງອາຫານ, ເຄື່ອງດື່ມ ແລະ ຫັດຖະກຳ ທີ່ຕິດພັນກັບການທ່ອງທ່ຽວ;

- ສ້າງໂຄງລ່າງພື້ນຖານອຸດສາຫະກຳ ເປັນຕົ້ນ ເຂດ ແລະ ນິຄົມອຸດສາຫະກຳ ຢູ່ ແຂວງ ຫຼວງນ້ຳທາ ແລະ ແຂວງອຸດົມໄຊ ແລະ ແຂວງອື່ນໆ ທີ່ມີເງື່ອນໄຂເໝາະສົມ ໂດຍສະເພາະລຽບຕາມທາງແລວລົດໄຟລາວ-ຈີນ.

2- ພາກກາງ

- ອຸດສາຫະກຳປຸງແຕ່ງໄມ້, ອຸດສາຫະກຳອາຫານ ແລະ ເຄື່ອງດື່ມ (ປຸງແຕ່ງນ້ຳນົມສາລີ ແລະ ນົມຖົ່ວເຫຼືອງ), ວັດສະດຸກໍ່ສ້າງ, ຜະລິດຕະພັນອື່ນໆຈາກຊີມັງ, ກັ່ນນ້ຳມັນເຊື້ອໄຟ, ປຸງແຕ່ງພືດທີ່ເປັນຢາ, ແປ້ງມັນສາຄູ, ປຸງແຕ່ງມັນຕົ້ນ, ປຸງແຕ່ງອ້ອຍ, ປຸງແຕ່ງໄມ້ປ່ອງ ແລະ ຫວາຍ, ປຸງແຕ່ງເຄື່ອງປ່າຂອງດົງ, ປຸງແຕ່ງພືດທີ່ເປັນຢາ, ເຂົ້າ, ປຸງແຕ່ງຢາງພາລາ, ຫົວອາຫານສັດ ແລະ ອື່ນໆ;
- ອຸດສາຫະກຳທີ່ເຂັ້ມງານ ເປັນຕົ້ນ ອຸດສາຫະກຳເຄື່ອງນຸ່ງຫົ່ມ, ເກີບ, ອີເລັກໂຕຣນິກ ແລະ ອື່ນໆ;
- ອຸດສາຫະກຳທີ່ນຳໃຊ້ເຕັກໂນໂລຊີລະດັບກາງ ຫາ ສູງ ເປັນຕົ້ນ ການຜະລິດອຸປະກອນໄຟຟ້າ ແລະ ເອເລັກໂຕຣນິກ, ເຄື່ອງກົນຈັກ ແລະ ຍານພາຫະນະ ແລະ ອື່ນໆ;
- ຫັດຖະກຳ ເປັນຕົ້ນ ຕ່ຳຫູກ ແລະ ຍ້ອມສີທຳມະຊາດ, ໄມ້ແກະສະຫຼັກ, ຈັກສານ ແລະ ເຄື່ອງປັ້ນດິນເຜົາ, ອາຫານພື້ນເມືອງ ແລະ ເຄື່ອງເອ້ຢ້ອງຂອງທີ່ລະນຶກຕ່າງໆ;
- ສ້າງ ແລະ ພັດທະນາ ໂຄງລ່າງພື້ນຖານອຸດສາຫະກຳ ເປັນຕົ້ນ ເຂດ ແລະ ນິຄົມອຸດສາຫະກຳ ຢູ່ ນະຄອນຫຼວງ, ແຂວງຄຳມ່ວນ, ສະຫວັນນະເຂດ ແລະ ແຂວງອື່ນໆ ທີ່ມີເງື່ອນໄຂເໝາະສົມ.

3- ພາກໃຕ້

- ອຸດສາຫະກຳປຸງແຕ່ງໄມ້, ອາຫານ ແລະ ເຄື່ອງດື່ມ ເປັນຕົ້ນ: ປຸງແຕ່ງຊີ້ນ, ປາ ແລະ ວັດສະດຸກໍ່ສ້າງ;
- ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ ເປັນຕົ້ນ ຢາງພາລາ, ປຸງແຕ່ງມັນຕົ້ນ, ນ້ຳຕານ, ເຫຼົ້າ, ເຂົ້າ, ນ້ຳມັນພືດ, ຊາ, ກາເຟ ແລະ ຢາພື້ນເມືອງ;
- ອຸດສາຫະກຳປຸງແຕ່ງແຮ່ທາດເພື່ອສ້າງມູນຄ່າເພີ່ມສູງ ເປັນຕົ້ນ ປຸງແຕ່ງອາລູມິນາ, ການຜະລິດສາຍໄຟ, ການຜະລິດເຫຼັກເສັ້ນຕ່າງໆ ແລະ ປຸງແຕ່ງຫີນປາໂກໄດ;
- ຫັດຖະກຳ ເປັນຕົ້ນ ຕ່ຳຫູກ ແລະ ຍ້ອມສີທຳມະຊາດ, ແກະສະຫຼັກໄມ້ ແລະ ຫີນ, ຈັກສານ ແລະ ເຄື່ອງປັ້ນດິນເຜົາ, ອາຫານພື້ນເມືອງ;
- ສ້າງໂຄງລ່າງພື້ນຖານອຸດສາຫະກຳ ເປັນຕົ້ນ ເຂດ ແລະ ນິຄົມອຸດສາຫະກຳ ຢູ່ ເມືອງ ໂພນທອງ ແຂວງ ຈຳປາສັກ ແລະ ເຂດສາມຫຼ່ຽມມໍລະກົດ ແຂວງອັດຕະປື

## 4. ການຟື້ນຟູຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19:

ມາດຕະການຟື້ນຟູຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ສຳລັບຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຈະແບ່ງອອກເປັນ 2 ໄລຍະຄື:

**4.1. ການຟື້ນຟູໄລຍະສັ້ນ:**

ແຜນການຟື້ນຟູໄລຍະສັ້ນ ແມ່ນເລັ່ງໃສ່ການບັນເທົາຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ເພື່ອເຮັດໃຫ້ບັນດາຫົວໜ່ວຍການຜະລິດຕ່າງໆ ສາມາດດຳເນີນກິດຈະການ ແລະ ຟື້ນໂຕໄວ ໂດຍຈະເລັ່ງໃສ່ໄລຍະເວລາ 1-2 ປີ, ຊຶ່ງໜ້າວຽກປະກອບມີ:

- ສືບຕໍ່ຊຸກຍູ້ການປະຕິບັດມາດຕະການປ້ອງກັນການລະບາດ ໂດຍການຜັນຂະຫຍາຍເນື້ອໃນຄຳສັ່ງຂອງຄະນະສະເພາະກິດ ແລະ ກະຊວງ ໂດຍເນັ້ນໃສ່ມາດຕະການປ້ອງກັນ ແລະ ບໍ່ໃຫ້ເກີດຜົນກະທົບໄລຍະກາງ ແລະ ຍາວ;
- ຄົ້ນຄວ້າມາດຕະການເພື່ອບັນເທົາດ້ານເສດຖະກິດ ໂດຍສະເພາະແມ່ນການສ້າງເງື່ອນໄຂສະໜັບສະໜູນໂດຍສະເພາະຊຸກຍູ້ເອື້ອອຳນວຍການບໍລິການ ແລະ ອຳນວຍຄວາມສະດວກ ເພື່ອບໍ່ໃຫ້ຫົວໜ່ວຍທຸລະກິດຢຸດເຊົາການຜະລິດ ແລະ ການແກ້ໄຂບັນຫາ ແລະ ມາດຕະການຕອບໂຕ້ສະເພາະໜ້າ ເປັນຕົ້ນ: ຂອດການຂົນສົ່ງວັດຖຸດິບ ແລະ ສິນຄ້າສຳເລັດຮູບ ໃຫ້ສາມາດດຳເນີນໄດ້ ບົນພື້ນຖານມາດຕະການປ້ອງກັນເຂັ້ມງວດ; ຂອດການຜະລິດ ຖ້າບໍລິສັດ/ໂຮງງານ ທີ່ມີມາດຕະການປ້ອງກັນດີ ແລະ ປະຕິບັດເຂັ້ມງວດໄດ້ ແມ່ນຄວນໃຫ້ມີການສືບຕໍ່ດຳເນີນການຜະລິດ; ບັນຫາຂອງຜູ້ປະກອບການ ໃນກໍລະນີເກີດມີຄຳສັ່ງຜະລິດຂອງລູກຄ້າ ເພື່ອເຈລະຈາ ຫຼືອອກໜັງສືແຈ້ງ ເພື່ອບໍ່ໃຫ້ມີການປັບໃໝ ຍ້ອນເຫດສຸກເສີນທີ່ມີການລະບາດຂອງພະຍາດ ແລະ ອື່ນໆ;
- ຕິດຕາມ, ກວດກາ ແລະ ປະສານສົມທົບກັບຜູ້ປະກອບການ ເພື່ອສັງລວມບັນຫາ ແລະ ຜົນກະທົບ ເພື່ອຄົ້ນຄວ້າ ແລະ ລາຍງານຂໍທິດຊີ້ນຳ ເພື່ອແກ້ບັນຫາໂດຍໄວ, ທົ່ວເຖິງ ແລະ ທັນຕໍ່ສະພາບການ. ລວມທັງສ້າງຊ່ອງທາງການຮັບຮູ້ຂໍ້ມູນ ຈາກບັນດາຫົວໜ່ວຍທີ່ໄດ້ຮັບຜົນກະທົບ;
- ປະສານສົມທົບ ແລະ ຊຸກຍູ້ການຊ່ວຍເຫລືອຜູ້ປະກອບການ ແລະ ແຮງງານ ໃນຂະແໜງ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເພື່ອຊ່ວຍບັນເທົາຜົນກະທົບຂອງຜູ້ປະກອບການ ແລະ ແຮງງານ.
- ພິຈາລະນານະໂຍບາຍແກ່ ແຮງງານ ທີ່ບໍ່ໄດ້ເຮັດວຽກໃນຊ່ວງໂຮງງານຖືກປິດ ຫຼື ຖືກຈຳກັດຄົນລົງ ຊຶ່ງຄວນໄດ້ຮັບການຊ່ວຍເຫຼືອຈາກເຈົ້າຂອງໂຮງງານ ຫຼື ຈາກກອງທຶນປະກັນສັງຄົມ ແລະ ນະໂຍບາຍຕໍ່ຜູ້ທີ່ຖືກຜົນກະທົບ (ຫົວໜ່ວຍທຸລະກິດ ແລະ ແຮງງານ) ດ້ວຍການຫລຸດ ຫຼື ຜ່ອນຊຳລະຄ່າໄຟຟ້າ, ນ້ຳປະປາ, ໂທລະສັບ ແລະ ອາກອນ, ອື່ນໆ;
- ຄົ້ນຄວ້ານະໂຍບາຍ ເພື່ອຊຸກຍູ້ ແລະ ສະເໜີຂໍການພັກໜີ້ ຫລື ດອກເບ້ຍ ຫລື ເລື່ອນໄລຍະເວລາໃນການຊຳລະໜີ້ຂອງຫົວໜ່ວຍອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ຖືກຜົນກະທົບການຈາກການລະບາດພະຂອງຍາດໂຄວິດ-19 ຢ່າງເໝາະສົມ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ລັດຖະບານ ພິຈາລະນາ;
- ຊຸກຍູ້ ແລະ ສະໜັບສະໜູນການຄ້ຳປະກັນສະບຽງອາຫານ ແລະ ສົ່ງເສີມການຜະລິດພາຍໃນ ຢ່າງຕໍ່ເນື່ອງ ແລະ ເປັນລະບົບ. ພ້ອມກັນນັ້ນ, ປະສານສົມທົບ ແລະ ຊຸກຍູ້ການເຈລະຈາ ແລະ ຂະຫຍາຍຕະຫລາດ ເພື່ອຮອງຮັບການຜະລິດທີ່ມີຄວາມຈຳເປັນ ພ້ອມທັງຊຸກຍູ້ການຜະລິດ-ປຸງແຕ່ງປະເພດເຄື່ອງອຸປະໂພກ-ບໍລິໂພກ , ເຄື່ອງປ້ອງກັນການລະບາດ ແລະ ເຄື່ອງຫັດຖະກຳ ທີ່ນຳໃຊ້ວັດຖຸດິບພາຍໃນເປັນຫຼັກ ເພື່ອສ້າງຄວາມເຂັ້ມແຂງ ແລະ ຫລຸດຜ່ອນການນຳເຂົ້າສິນຄ້າປະເພດດັ່ງກ່າວເທື່ອລະກ້າວ.

**4.2. ການຟື້ນຟູໄລຍະກາງ ແລະ ຍາວ:**

- ປະສານຮ່ວມມືກັບສະຖາບັນຄົ້ນຄວ້າພາຍໃນ ແລະ ຕ່າງປະເທດ ເພື່ອສຶກສາ ແລະ ຄົ້ນຄວ້າຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ທີ່ມີຕໍ່ລາວເຮົາ ເພື່ອເປັນຍຸດທະສາດ ແລະ ແຜນການໄລຍະຍາວ ເພື່ອຈະສາມາດຜັນຂະຫຍາຍອອກເປັນແນວທາງ, ກົນໄກ, ວິທີການ ແລະ ກຳນົດນະໂຍບາຍ ແຕ່ລະໄລຍະ.

- ລະດົມຄຳເຫັນ ແລະ ປະສານສົມທົບລະຫວ່າງພາກລັດ, ພາກທຸລະກິດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ເພື່ອກຳນົດແນວທາງ, ກົນໄກ ແລະ ການຊ່ວຍເຫລືອ ເພື່ອບັນເທົາ ແລະ ຟື້ນຟູຈາກຜົນກະທົບຢ່າງເປັນລະບົບ ພ້ອມທັງກຳນົດແນວທາງ, ແບ່ງຄວາມຮັບຜິດຊອບ ແລະ ວິທີທາງອອກທີ່ຈະແຈ້ງ ແລະ ຊັດເຈນ.
- ກຳນົດກຸ່ມ ແລະ ປະເພດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ໄດ້ຮັບຜົນກະທົບສູງ, ກາງ ແລະ ຕ່ຳ ຈາກການລະບາດຂອງພະຍາດໂຄວິດ-19 ເພື່ອກຳນົດເປັນແນວທາງນະໂຍບາຍສົ່ງເສີມສະເພາະ.
- ປະສານສົມທົບ ແລະ ຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ ໃນການເຂົ້າຫາ ແລະ ປ່ອຍສິນເຊື່ອສຳລັບຫົວໜ່ວຍອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ມີທ່າແຮງ ແລະ ຖືກຜົນກະທົບແທ້ ເພື່ອໃຫ້ສາມາດດຳເນີນທຸລະກິດຢ່າງຄ່ອງຕົວ.
- ລະດົມການຊ່ວຍເຫລືອຈາກສາກົນ ເພື່ອຟື້ນຟູ ແລະ ໃຫ້ການຊ່ວຍເຫລືອດ້ານວິຊາການ, ແຫລ່ງທຶນ ແລະ ການໃຫ້ບູລິມະສິດດ້ານໂຄຕາ ແລະ ນະໂຍບາຍພາສີ-ອາກອນ ສຳລັບການສົ່ງອອກສິນຄ້າລາວ ເນື່ອງຈາກຜົນກະທົບຂອງພະຍາດໂຄວິດ-19.
- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເລັ່ງລັດເຈລະຈາ ແລະ ຊອກຕະຫລາດ ເພື່ອໃຫ້ຜະລິດຕະພັນຂອງລາວສາມາດສົ່ງອອກ ໂດຍມີຕະຫລາດທີ່ມີຄວາມຫລາກຫລາຍໂດຍໄວ.
- ປະສານ ແລະ ພົວພັນ ກັບແຂວງ ຢູນນານຂອງສປ ຈີນ ເພື່ອຊຸກຍູ້ກົນໄກການຄ້າ ແລະ ການລົງທຶນ ໂດຍສະເພາະໃນຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເພື່ອຮອງຮັບການເປີດເສັ້ນທາງລົດໄຟລາວ-ຈີນໃຫ້ໄດ້ໄວ ແລະ ທັນກັບສະພາບການ. ຫັນການສົ່ງອອກວັດຖຸດິບພາຍໃນ ມາຊຸກຍູ້ສົ່ງເສີມການລົງທຶນຂອງພາຍໃນ ແລະ ນັກລົງທຶນຈີນ ມາປຸງແຕ່ງເປັນສິນຄ້າທີ່ມີມູນຄ່າເພີ່ມ ກ່ອນການສົ່ງອອກໂດຍໄວ.
- ຊຸກຍູ້ການຜະລິດສິນຄ້າບໍລິໂພກຂອງລາວ ຕິດພັນກັບການທ່ອງທ່ຽວ ໂດຍເນັ້ນໃສ່ການຜະລິດສິນຄ້າທີ່ຄົນຈີນໃຫ້ຄວາມສົນໃຈ ແລະ ເປັນທີ່ຕ້ອງການຂອງຕະຫລາດຈີນ.

## 5. ສົ່ງເສີມບົດບາດຍິງ-ຊາຍ

ຊຸກຍູ້ສົ່ງເສີມ ແລະ ຍົກສູງບົດບາດຂອງຍິງ-ຊາຍ ຢ່າງເທົ່າທຽມ ດ້ວຍການຍົກລະດັບຄວາມຮູ້-ຄວາມສາມາດ, ການຍົກລະດັບ ແລະ ບົດບາດຂອງແມ່ຍິງ, ຄວາມເທົ່າທຽມດ້ານຕ່າງໆ ໃນການປະກອບສ່ວນເຂົ້າໃນການພັດທະນາຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຊຶ່ງແຜນງານແມ່ນຈະເນັ້ນໃສ່: 1) ຊຸກຍູ້ການມີສ່ວນຮ່ວມ ແລະ ຍົກລະດັບການເປັນຜູ້ນຳຂອງແມ່ຍິງ ໃນຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ; 2) ຊຸກຍູ້ການເຂົ້າຮ່ວມ ແລະ ຍົກລະດັບຄວາມຮູ້-ຄວາມສາມາດ ວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳດ້ວຍການຈັດຝຶກອົບຮົມ ແລະ ສຳມະນາຕ່າງໆ ຢູ່ສູນກາງ ແລະ ທ້ອງຖິ່ນ; 3) ສົ່ງເສີມການເປັນຜູ້ນຳ ແລະ ສິດທິເທົ່າທຽມຂອງແມ່ຍິງ ໃນຫົວໜ່ວຍອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຢ່າງສະໝ່ຳສະເໝີ ແລະ ເປັນປົກກະຕິ; 4) ປະສານສົມທົບນຳພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ສາກົນ ເພື່ອຊຸກຍູ້ສົ່ງເສີມ ແລະ ການຊ່ວຍເຫລືອ ເພື່ອສົ່ງເສີມບົດບາດ ແລະ ການມີສ່ວນຮ່ວມຂອງແມ່ຍິງ ໃນການພັດທະນາວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເປັນປົກກະຕິ; ແລະ 5) ສ້າງໂຄງການ ແລະ ກິດຈະກຳຕ່າງໆ ກ່ຽວກັບການສົ່ງເສີມບົດບາດຍິງ-ຊາຍ.

## III. ມາດຕະການຈັດຕັ້ງປະຕິບັດ, ກົນໄກປະສານງານ, ວິທີການຈັດຕັ້ງປະຕິບັດ ແລະ ການຕິດຕາມ, ປະເມີນຜົນ ແລະ ລາຍງານ

### 1. ມາດຕະການຈັດຕັ້ງປະຕິບັດ

1) ເພື່ອເຮັດໃຫ້ແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປີ 2021-2025 ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ແລະ ໄດ້ຮັບຜົນສຳເລັດສູງ ຈະຕ້ອງໄດ້ເຜີຍແຜ່ແຜນພັດທະນາສະບັບນີ້ ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອເອກະພາບກັນ ແລະ ຮ່ວມມືກັນໃນການຈັດຕັ້ງປະຕິບັດບັນດາມາດຕະການ, ນະໂຍບາຍ, ໂຄງການຕ່າງໆ ໃນແຜນງານພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຕາມສິດ ແລະ ພາລະບົດບາດຂອງແຕ່ລະຂະແໜງການ;
2) ບັນດາກະຊວງ, ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ອຳນາດການປົກຄອງທ້ອງຖິ່ນ ຈະຕ້ອງບັນຈຸເອົາແຜນດັ່ງກ່າວເຂົ້າໃນແຜນພັດທະນາ ຂອງຕົນໃຫ້ເປັນອັນລະອຽດ ແລະ ຊັດເຈັນ ພ້ອມທັງຈັດສັນງົບປະມານທີ່ເໝາະສົມ ໃນການຈັດຕັ້ງປະຕິບັດແຕ່ລະໂຄງການພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ກ່ຽວພັນກັບພາລະບົດບາດຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
3) ເພີ່ມທະວີການຮ່ວມມື, ປະສານງານ ແລະ ການເປັນເຈົ້າການຂອງອົງການຈັດຕັ້ງລັດ ແລະ ພາກທຸລະກິດ ເພື່ອຈັດຕັ້ງປະຕິບັດບັນດາກິດຈະກຳ ແລະ ໂຄງການຕ່າງໆ ດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເປັນຕົ້ນ ການສະໜອງທຶນ, ການກຳນົດ ແລະ ໃຫ້ນະໂຍບາຍສົ່ງເສີມ, ການສະໜອງຂໍ້ມູນຂ່າວສານ, ສົ່ງເສີມການນຳເຕັກໂນໂລຊີ, ການສົ່ງເສີມວິຊາການ, ສີມືແຮງງານ, ການຕະຫຼາດ ແລະ ອື່ນໆ ເພື່ອຊຸກຍູ້ການສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ;
4) ທົບທວນ ແລະ ສຶກສາຄວາມຈຳເປັນໃນການປັບປຸງກົດໝາຍທີ່ກ່ຽວຂ້ອງເປັນຕົ້ນ ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 048/ສພຊ, ລົງວັນທີ 25 ທັນວາ 2013, ກົດໝາຍວ່າດ້ວຍຫັດຖະກຳ ເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008, ກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016, ສ້າງ ແລະ ປັບປຸງບັນດານິຕິກຳ ແລະ ລະບຽບການ ທີ່ເຫັນວ່າມີຄວາມຈຳເປັນ ເພື່ອກຳນົດແນວທາງ, ຫຼັກການ, ນະໂຍບາຍ, ມາດຕະການ ໃຫ້ລະອຽດ ແນໃສ່ເຮັດໃຫ້ກົນໄກການປະສານງານ ແລະ ລະບົບການຈັດຕັ້ງໃຫ້ມີປະສິດທິພາບ. ກຳນົດນະໂຍບາຍທີ່ເປັນບູລິມະສິດ ໃຫ້ແກ່ການພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ມີຄວາມລະອຽດ, ຊັດເຈນ ແລະ ສາມາດຈັດຕັ້ງປະຕິບັດໄດ້ໃນແຕ່ລະປີ;
5) ຜັນຂະຫຍາຍບັນດານະໂຍບາຍດັ່ງກ່າວ ອອກເປັນແຜນງານ, ໂຄງການລະອຽດ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຮ່ວມມືກັນໃນການຈັດຕັ້ງປະຕິບັດ, ກຳນົດໃຫ້ບຸລິມະສິດດ້ານຕ່າງໆ ແກ່ຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ເປັນຍຸດທະສາດ ແລະ ບູລິມະສິດຂອງລັດຖະບານ ເປັນຕົ້ນອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ຕິດພັນກັບການປະກອບສ່ວນລຶບລ້າງຄວາມທຸກຍາກ, ການແກ້ໄຂວຽກເຮັດງານທຳ-ສ້າງອາຊີບ ແລະ ລາຍຮັບທີ່ໝັ້ນຄົງ, ການອະນຸລັກ ແລະ ສະຫງວນວິຊາຊີບທີ່ເປັນມູນເຊື້ອຂອງຊາດ, ການແກ້ໄຂບັນຫາສັງຄົມ, ການພັດທະນາອຸດສາຫະກຳຕາມທິດສີມດຸນ, ສີຂຽວ ແລະ ຍືນຍົງ;
6) ຊຸກຍູ້ແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳສະບັບນີ້ ຕິດພັນກັບການພັດທະນາທີ່ປິ່ນອ້ອມດ້ານຕ່າງໆເປັນຕົ້ນ ການພັດທະນາໂຄງລ່າງພື້ນຖານ, ການພັດທະນາລະບົບຂໍ້ມູນ, ໄອຊີທີ, ເສດຖະກິດດີຈິ

ຕອນ ແລະ ປັນຍາປະດິດ, ເສດຖະກິດພູມປັນຍາ, ການພັດທະນາບຸກຄະລາກອນ, ການສ້າງ ແລະ ສະໜອງ ສີມືແຮງງານ, ການຍົກລະດັບເຕັກນິກ-ເຕັກໂນໂລຊີການຜະລິດ, ຍົກລະດັບຕ່ອງໂສ້ການຜະລິດເປັນສິນຄ້າ ທີ່ສ້າງມູນຄ່າເພີ່ມສູງ ເປັນມິດຕໍ່ສິ່ງແວດລ້ອມ ແລະ ມາດຕະຖານສາກົນ, ການຜະລິດ ແລະ ບໍລິໂພກແບບ ຍືນຍົງ ເຮັດໃຫ້ເຊື່ອມໂຍງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ທ້ອງຖິ່ນ ຢ່າງກົມກຽວ ແລະ ສອດຄ່ອງກັນ ໃນແຕ່ລະໄລຍະ.

## 2. ກົນໄກປະສານງານ

1) ຄົ້ນຄວ້າສ້າງ ແລະ ກຳນົດກົນໄກປະສານງານ ເພື່ອຊີ້ນຳ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ແລະ ສ້າງລະບົບການຈັດຕັ້ງທີ່ມີປະສິດທິພາບ ໃຫ້ໃກ້ຄຽງກັບ ປະເທດອື່ນ ທີ່ມີຜົນສຳເລັດ ແລະ ປະສົບການ ໃນການສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ;
2) ຄົ້ນຄວ້າ ແລະ ສ້າງກົນໄກການປະສານງານ ດ້ວຍການນຳໃຊ້ເຕັກໂນໂລຊີທີ່ມີຢູ່ໃນປະຈຸບັນ ເພື່ອສາມາດຊີ້ ນຳ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນ ໃຫ້ມີຄວາມວ່ອງໄວ, ຫຼຸດຜ່ອນຄ່າໃຊ້ຈ່າຍຕ່າງໆ ແລະ ມີຜົນສຳເລັດສູງ ໃນແຕ່ລະປີ ໃຫ້ຊັດເຈັນ;
3) ສ້າງລະບົບຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເພື່ອໃຫ້ສາມາດລາຍງານສະພາບຜົນການຈັດຕັ້ງປະຕິບັດໃຫ້ລັດຖະບານຢ່າງເປັນລະບົບ ແລະ ທັນການ ແລະ ມີການສະຫຼຸບຖອດຖອນບົດຮຽນເປັນແຕ່ລະໄລຍະ;
4) ສ້າງກົນໄກປະສານງານກັບບັນດາອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ທີ່ມີປະສິດທິຜົນ ແລະ ມີ ຫຼາຍເວທີການປຶກສາຫາລື ເຊັ່ນ: ກອງປະຊຸມພາກພື້ນແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ, ແມ່ນ້ຳຂອງ-ຍີ່ປຸ່ນ, ເວທີສຳລັບປຶກສາຫາລື ດ້ານນະໂຍບາຍລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາ ຜ່ານໜ່ວຍງານການ ຄ້າ ແລະ ພາກທຸລະກິດ, ເວທີພົບປະພາກລັດ ແລະ ພາກທຸລະກິດ ແລະ ອື່ນໆ.

## 3. ວິທີການຈັດຕັ້ງປະຕິບັດ

ເພື່ອເຮັດໃຫ້ແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ປີ 2021-2025 ໄດ້ຮັບການຈັດຕັ້ງ ປະຕິບັດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ ສຳເລັດຕາມລະດັບຄາດໝາຍ ຈຶ່ງກຳນົດວິທີການຈັດຕັ້ງປະຕິບັດ ຄືດັ່ງນີ້:

**1) ການຜັນຂະຫຍາຍ**

- **ການເພີ່ມທະວີການຮ່ວມມື ແລະ ປະສານງານ**: ແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳສະບັບ ນີ້ ພົວພັນກັບຫຼາຍພາກສ່ວນຂະແໜງການຂອງລັດ (ສາຍຕັ້ງ ແລະ ສາຍຂວາງ) ແລະ ພາກທຸລະກິດ. ສະນັ້ນ ພາກສ່ວນທີ່ກ່ຽວຂ້ອງ ຄວນໃຫ້ການຮ່ວມມື ແລະ ປະສານສົມທົບຢ່າງກົມກຽວ, ສະໝ່ຳສະເໝີ ແລະ ເປັນ ປົກກະຕິ ໃນການຈັດຕັ້ງປະຕິບັດ ແລະ ສະໜອງຂໍ້ມູນຄວາມຄືບໜ້າ ໂດຍນຳໃຊ້ກົນໄກການປະສານງານ ແລະ ປະຕິບັດຕາມພາລະບົດບາດຂອງຕົນ ທັງນີ້ກໍ່ເພື່ອເຮັດໃຫ້ການປະຕິບັດວຽກງານດຳເນີນໄປຢ່າງມີຈຸດ ສຸມ ແລະ ຫລີກລ້ຽງຄວາມຊ້ຳຊ້ອນ ໃນການປະຕິບັດວຽກງານ;
- **ການກຳນົດແຫຼ່ງທຶນ ແລະ ການຈັດສັນທຶນ**: ທຶນຮອນໃນການສະໜັບສະໜູນແຜນພັດທະນາສະບັບນີ້ເປັນ ປັດໄຈສຳຄັນຕັດສິນຊີ້ຂາດການຈັດຕັ້ງປະຕິບັດບັນດາມາດຕະການ ແລະ ໂຄງການທີ່ກຳນົດໄວ້. ສະນັ້ນ ຕ້ອງໄດ້ກຳນົດແຫຼ່ງທຶນ, ລະດົມທຶນ ແລະ ຈັດສັນທຶນຢ່າງເໝາະສົມ ຊຶ່ງນອກຈາກການລະດົມການ ຂໍນຂວາຍຊ່ວຍເຫຼືອຈາກສາກົນແລ້ວ ການປະກອບສ່ວນ ແລະ ການລົງທຶນຂອງພາກເອກະຊົນ ລວມທັງ

ທະນາຄານທຸລະກິດ ແມ່ນມີຄວາມຈຳເປັນ ຊຶ່ງຈະຕ້ອງຂົນຂວາຍ, ຊຸກຍູ້ການມີສ່ວນຮ່ວມຂອງພາກທຸລະກິດເຂົ້າໃນບັນດາໂຄງການໃນແຜນສະບັບນີ້ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ. ຄຽງຄູ່ກັນ, ຈະຕ້ອງໄດ້ຈັດສັນງົບປະມານປົກກະຕິຂອງລັດຖະບານ ເພື່ອຈະສາມາດຈັດຕັ້ງປະຕິບັດແຜນສະບັບນີ້ ໃຫ້ສຳເລັດຕາມຄາດໝາຍ;

- **ການເພີ່ມທະວີການມີສ່ວນຮ່ວມຂອງພາກເອກະຊົນ ແລະ ຜູ້ມີສ່ວນກ່ຽວຂ້ອງ**: ແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳສະບັບນີ້ ໃຫ້ຄວາມສຳຄັນ ແລະ ສົ່ງເສີມພາກທຸລະກິດ ໂດຍສະເພາະການສ້າງຄວາມເຂັ້ມແຂງ ແລະ ການມີສ່ວນຮ່ວມຂອງພາກທຸລະກິດ ເພື່ອເປັນຄູ່ຮ່ວມພັດທະນາຢ່າງເຂັ້ມແຂງ ແລະ ໝັ້ນຄົງ ໂດຍສະເພາະເນັ້ນໃສ່ການປະກອບສ່ວນຂອງພາກທຸລະກິດ ລວມທັງສະພາການຄ້າ ແລະ ອຸດສາຫະກຳ ເປັນໃຈກາງ ແລະ ຜູ້ຂັບເຄື່ອນ ເນື່ອງຈາກວ່າພາກທຸລະກິດເປັນຜູ້ທີ່ໄດ້ຮັບຜົນກະທົບໂດຍກົງ ຈາກການຈັດຕັ້ງປະຕິບັດນະໂຍບາຍຂອງລັດຖະບານ. ຊຸກຍູ້ ແລະ ສ້າງເງື່ອນໄຂ ເພື່ອຂະຫຍາຍຫົວໜ່ວຍການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທຸກຂະໜາດ ແລະ ປະເພດ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ແລະ ຕິດຕາມປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້;
- **ການເຊື່ອມໂຍງກັບແຜນງານ ແລະ ແຜນການອື່ນໆຂອງລັດຖະບານ**: ແຜນພັດທະນາສະບັບນີ້ເຊື່ອມໂຍງກັບແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ ປີ 2021-2025 ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ຜັນຂະຫຍາຍເປັນແຜນງານ ແລະ ໂຄງການລະອຽດເຊື່ອມໂຍງກັບບັນດາແຜນງານຕ່າງໆກັບຂະແໜງການທີ່ກ່ຽວຂ້ອງ ຊຶ່ງການຈັດຕັ້ງປະຕິບັດ ຈະຕ້ອງໄດ້ດັດປັບ ແລະ ຜັນຂະຫຍາຍກັບການປະຕິບັດບັນດາຍຸດທະສາດ, ແຜນການ ແລະ ແຜນງານລວມ ແລະ ວາລະແຫ່ງຊາດຂອງລັດຖະບານ ແຕ່ລະໄລຍະ;
- **ການເຜີຍແຜ່ ແລະ ແບ່ງຄວາມຮັບຜິດຊອບທີ່ຈະແຈ້ງ**: ໃນການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການໃນແຜນການສະບັບນີ້ ຈະຕ້ອງໄດ້ລົງເຜີຍແຜ່ ແລະ ສ້າງຄວາມເຂົ້າໃຈໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຮູ້ ແລະ ເຫັນໄດ້ເຖິງຄວາມສຳຄັນ ໂດຍເນັ້ນໃຫ້ມີຄວາມເຂົ້າໃຈໄປໃນທາງດຽວກັນ ກ່ຽວກັບວິໄສທັດ, ເປົ້າໝາຍ ແລະ ວິທີການ ທີ່ຈະສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຕໍ່ໜ້າ. ຄຽງຄູ່ກັນ ຈະໄດ້ແບ່ງຄວາມຮັບຜິດຊອບລະຫວ່າງຂະແໜງການທີ່ຈະແຈ້ງ ໂດຍມີເປົ້າໝາຍ ແລະ ຄາດໝາຍ ທີ່ກົມກຽວ ແລະ ໄປໃນທາງດຽວກັນໄດ້;
- **ການດັດປັບໃຫ້ມີຄວາມເໝາະສົມ:** ແຜນພັດທະນາສະບັບນີ້ ສ້າງຂຶ້ນບົນພື້ນຖານຂໍ້ມູນ ແລະ ສະພາບການພັດທະນາໃນສະພາບປະຈຸບັນ ແລະ ຄາດຄະເນແນວໂນ້ມໃນອະນາຄົດ ໂດຍສຶກສາບັນຫາ ແລະ ຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດໃຫ້ມີຄວາມຫຼາກຫຼາຍ, ສົມດູນ ແລະ ຍົກລະດັບໃຫ້ເຂັ້ມແຂງ ເພື່ອກຳນົດເປັນທິດທາງລວມເບື້ອງຕົ້ນໃນການພັດທະນາວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໄລຍະ 5 ປີ 2021-2025. ເຖິງແນວໃດກໍຕາມ ໃນການຈັດຕັ້ງປະຕິບັດຕົວຈິງ ຈະໄດ້ດັດປັບໃຫ້ແທດເໝາະກັບສະພາບການ ໂດຍສະເພາະການລະບາດຂອງພະຍາດໂຄວິດ-19, ຈຸດພິເສດຂອງແຕ່ລະຂະ ແໜງການ ແລະ ທ້ອງຖິ່ນ ແລະ ຄວາມພ້ອມໃນແຕ່ລະໄລຍະ ບົນພື້ນຖານການປຶກສາຫາລື ແລະ ເອກະພາບກັບຂະແໜງການທີ່ກ່ຽວຂ້ອງຂອງລັດ, ທ້ອງຖິ່ນ, ພາກທຸລະກິດ, ຄູ່ຮ່ວມພັດທະນາ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ.

**2) ກົນໄກ ແລະ ຄວາມຮັບຜິດຊອບການຈັດຕັ້ງປະຕິບັດ**

ການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້ ຈຳເປັນຕ້ອງໄດ້ມີການກຳນົດກົນໄກ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ເພື່ອເຮັດໜ້າທີ່ປະສານງານ, ຕິດຕາມ ແລະ ໃຫ້ການຊີ້ນຳໃນການຈັດຕັ້ງປະຕິບັດໃນແຕ່ລະໄລຍະ ເນື່ອງຈາກວ່າການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຕິດພັນກັບຫຼາຍພາກສ່ວນ ແລະ ມີຜົນຕໍ່ການຂະຫຍາຍຕົວຂອງພາກທຸລະກິດການຜະລິດ ລວມທັງມີລັກສະນະຕິດພັນຫຼາຍ

ພາກສ່ວນ (Cross-cutting Issues) ຕິດພັນກັບການຫຼຸດຜ່ອນຄວາມທຸກຍາກ, ການສ້າງວຽກເຮັດງານທຳ, ສ້າງລາຍຮັບ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນເປັນວົງກວ້າງ. ດັ່ງນັ້ນ ບັນດາພາກສ່ວນທີ່ກ່ຽວຂ້ອງ ຄວນກຳນົດກົນໄກຈັດຕັ້ງປະຕິບັດການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຂະແໜງຕົນ ດັ່ງນີ້:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ: ມີບົດບາດສຳຄັນ ແລະ ຊີ້ນຳລວມ ພ້ອມທັງຕິດຕາມການປະຕິບັດວຽກງານຂອງພາກສ່ວນກ່ຽວຂ້ອງໃຫ້ມີຄວາມກົມກຽວກັນ ແລະ ຢ່າງຕໍ່ເນື່ອງ
- ກະຊວງອຸດສະຫະກຳ ແລະ ການຄ້າ ມີໜ້າທີ່:
  - ເຊື່ອມໂຍງແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເຂົ້າກັບແຜນການ ແລະ ຍຸດທະສາດລວມຂອງກະຊວງ ແລະ ແຜນພັດທະນາ-ແຜນຍຸດທະສາດແຫ່ງຊາດ ເຊັ່ນ: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ປີ 2021- 2025, ແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ ປີ 2021-2025 ແລະ ອື່ນໆ;
  - ປະສານກັບບັນດາກະຊວງ, ອົງກອນຂັ້ນສູນກາງ ແລະ ພະແນກຕ່າງໆຂອງແຂວງ ໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້; ແລະ
  - ຊຸກຍູ້ ແລະ ຂົນຂວາຍການຊ່ວຍເຫຼືອຈາກບັນດາຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ການມີສ່ວນຂອງພາກເອກະຊົນ, ຂົ້ນໂຄງການລົງທຶນຂອງລັດ ແລະ ອື່ນໆ ເພື່ອມາຈັດຕັ້ງປະຕິບັດບັນດາມາດຕະການ, ໂຄງການ ແລະ ກິດຈະກຳຕ່າງໆ ທີ່ໄດ້ກຳນົດໄວ້;
  - ສັງລວມຄວາມຄືບໜ້າການຈັດຕັ້ງປະຕິບັດ, ລາຍງານ ແລະ ຂໍທິດຊີ້ນຳຈາກຄະນະລັດຖະບານ.
- ກົມອຸດສາຫະກຳ ແລະ ຫັດຖະກຳ ມີໜ້າທີ່ຫລັກໃນການເປັນເຈົ້າການເພື່ອນຳພາຈັດຕັ້ງປະຕິບັດ, ດຳເນີນງານ ແລະ ເປັນຈຸດປະສານງານ ໃນການສົ່ງເສີມ ແລະ ພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຊຶ່ງໜ້າທີ່ຕົ້ນຕໍ ມີດັ່ງນີ້:
  - ເຜີຍແຜ່ແຜນພັດທະນາຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳສະບັບນີ້ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ລວມທັງພາກລັດ ຂັ້ນກະຊວງ ແລະ ທ້ອງຖິ່ນ, ພາກທຸລະກິດ ແລະ ຄູ່ຮ່ວມພັດທະນາ ໄດ້ຮັບຊາບ ແລະ ເຂົ້າໃຈຢ່າງທົ່ວເຖິງ;
  - ຈັດຕັ້ງປະຕິບັດມາດຕະການ, ນະໂຍບາຍ, ໂຄງການ ແລະ ກິດຈະກຳ ຕາມສິດ ແລະ ພາລະບົດບາດຂອງຕົນ;
  - ຊຸກຍູ້ ແລະ ຂົນຂວາຍການຊ່ວຍເຫຼືອຈາກທັງພາຍໃນ ແລະ ຕ່າງປະເທດ, ຊຸກຍູ້ການມີສ່ວນຮ່ວມຂອງພາກເອກກະຊົນໃນການລົງທຶນສະໜັບສະໜູນ ແລະ ການປະກອບສ່ວນການລົງທຶນຂອງລັດ ເພື່ອຮັບປະກັນເຮັດໃຫ້ສາມາດຈັດຕັ້ງປະຕິບັດໄດ້ ບັນດາມາດຕະການ, ນະໂຍບາຍ, ໂຄງການ ແລະ ກິດຈະກຳຕ່າງໆທີ່ໄດ້ກຳນົດໄວ້;
  - ເປັນຈຸດໃຈກາງປະສານງານ, ຮ່ວມມື ແລະ ຊຸກຍູ້ໜ່ວຍງານທີ່ກ່ຽວຂອງໃນລະດັບສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້;
  - ຕິດຕາມກວດກາ, ປະເມີນຜົນ ແລະ ລາຍງານຄວາມຄືບໜ້າ ການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້ ເປັນປະຈຳ.
- ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມ, ກຸ່ມຜູ້ຜະລິດ ແລະ ພາກທຸລະກິດ: ມີບົດບາດສຳຄັນ ແລະ ປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້ ໂດຍສະເພາະແມ່ນການເປັນຄູ່ຮ່ວມ ແລະ

ປະກອບສ່ວນໃນການຈັດຕັ້ງປະຕິບັດແຜນງານຕ່າງໆ ລວມທັງການປຶກສາຫາລືໃນທາງປະຕິບັດຕົວຈິງ ແລະ ຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂ;

- ພາກທະນາຄານ ແລະ ສະຖາບັນການເງິນຕ່າງໆ: ມີຄວາມສໍາຄັນຫຼາຍ ໃນການສະໜອງສິນເຊື່ອ ແກ່ຫົວໜ່ວຍການຜະລິດອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ໂດຍສະເພາະການກໍານົດເງື່ອນໄຂ, ຂົງເຂດບູລິມະສິດ, ການໃຫ້ຄໍາປຶກສາ ແລະ ຄໍາແນະນໍາ ເພື່ອຮັບປະກັນໃຫ້ຫົວໜ່ວຍການຜະລິດ ສາມາດເຂົ້າຫາແຫຼ່ງທຶນ; ຜັນຂະຫຍາຍ ການຫັນຊັບສິນບັດຄົງທີ່ ເປັນແຫຼ່ງທຶນ ແລະ ກໍານົດກົນໄກເອື້ອອໍານວຍທີ່ສະດວກ, ວ່ອງໄວ ແລະ ຮັບປະກັນ;
- ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ: ມີຄວາມສໍາຄັນ ແລະ ມີບົດບາດໃນການເຊື່ອມໂຍງ ແລະ ໃຫ້ການຊ່ວຍເຫຼືອ ດ້ານວິຊາການ ແລະ ງົບປະມານ ໂດຍສະເພາະການມີສ່ວນຮ່ວມໃນການຜັນຂະຫຍາຍ ແລະ ຮ່ວມຈັດຕັ້ງປະຕິບັດມາດຕະການ, ໂຄງການ ລວມທັງແລກປ່ຽນບົດຮຽນ ແລະ ວິທີການຈັດຕັ້ງປະຕິບັດ ເພື່ອຍົກລະດັບການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;

ບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ທັງສາຍຕັ້ງ ແລະ ສາຍຂວາງ ມີຄວາມຮັບຜິດຊອບໃນການຜັນຂະຫຍາຍບັນດາມາດຕະການ ແລະ ໂຄງການທີ່ກ່ຽວຂ້ອງເຂົ້າໃນແຜນງານ ແລະ ແຜນການຂອງຕົນ ແລະ ຮ່ວມກັນຈັດຕັ້ງປະຕິບັດແຜນພັດທະນາຂະແໜງອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ສະບັບນີ້ ຕາມພາລະບົດບາດຂອງຕົນ. ນອກນັ້ນ ຂະແໜງການຕ່າງໆ ຄວນໃຫ້ການຮ່ວມມືໃນການຕິດຕາມປະເມີນຜົນການຈັດ ຕັ້ງປະຕິບັດໃນແຕ່ລະໄລຍະ ເພື່ອໃຫ້ກົມອຸດສາຫະກໍາ ແລະ ຫັດຖະກໍາ ສາມາດສັງລວມວຽກງານໃນການເປັນຜູ້ປະສານງານ ແລະ ລາຍງານຄວາມຄືບໜ້າໃຫ້ຂັ້ນເທິງເພື່ອຊາບ ແລະ ໃຫ້ທິດຊີ້ນໍາຢ່າງເປັນລະບົບຕໍ່ເນື່ອງ.

## 4. ການຕິດຕາມ, ປະເມີນຜົນ ແລະ ລາຍງານ

1) ຄົ້ນຄວ້າສ້າງກົນໄກ ແລະ ລະບົບການຕິດຕາມ, ປະເມີນຜົນ ແລະ ການລາຍງານຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ 5 ປີ (2021-2025) ໃຫ້ຊັດເຈນ ແລະ ມີປະສິດທິຜົນ ໂດຍກໍານົດຄືດັ່ງນີ້:
   - **ຂັ້ນສູນກາງ**: ກະຊວງອຸດສາຫະກໍາ ແລະ ການຄ້າ ຄົ້ນຄວ້າ ເພື່ອກໍານົດກົນໄກ, ຕິດຕາມປະເມີນຜົນການຈັດຕັ້ງປະຕິບັດແຕ່ລະປີ ແລະ ລາຍງານການຈັດຕັ້ງປະຕິບັດເປັນປົກກະຕິ ໂດຍຊອກໃຫ້ໄດ້ຜົນສໍາເລັດ, ຂໍ້ຄົງຄ້າງ, ບັນຫາທ້າທາຍ ແລະ ວິທີການແກ້ໄຂຢ່າງເປັນລະບົບ. ກະຊວງຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ກໍານົດກົນໄກຮັບຜິດຊອບ ການຈັດຕັ້ງປະຕິບັດແຜນການຂອງຕົນ ແລະ ຕິດຕາມ, ປະເມີນຄວາມສອດຄ່ອງ ແລະ ກົມກຽວກັບແຜນພັດທະນາສະບັບນີ້ ຢ່າງເປັນປະຈໍາ ແລະ ປົກກະຕິ. ກໍລະນີພົບເຫັນບັນຫາ ແລະ ຂໍ້ຂັດແຍ່ງ ຕ້ອງມີການປຶກສາຫາລື ແລະ ຮ່ວມມືກັນແກ້ໄຂ ໂດຍປະຕິບັດໃຫ້ສໍາເລັດຕາມຄາດໝາຍທີ່ໄດ້ກໍານົດ. ລາຍງານຜົນການຈັດຕັ້ງປະຕິບັດມາດຕະການ, ນະໂຍບາຍ ແລະ ການຈັດຕັ້ງປະຕິບັດໂຄງການໃຫ້ຂັ້ນເທິງ ແລະ ລັດຖະບານຮັບຊາບ ເປັນແຕ່ລະໄລຍະ ເພື່ອລາຍງານ ແລະ ຂໍທິດຊີ້ນໍາ ຕາມແຕ່ລະກໍລະນີ;
   - **ຂັ້ນທ້ອງຖິ່ນ**: ບັນດາພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ນະຄອນ ແລະ ອໍານາດການປົກຄອງທ້ອງຖິ່ນ ຄວນກໍານົດສ້າງກົນໄກ ແລະ ລະບົບການຕິດຕາມ, ປະເມີນຜົນ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາຂະແໜງອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ແລະ ແຜນການຕ່າງໆທີ່ກ່ຽວຂ້ອງປົ່ນອ້ອມໃນແຕ່ລະປີ ໂດຍລາຍງານຂັ້ນເທິງ ທັງສາຍຕັ້ງ ແລະ ສາຍຂວາງ ເປັນປະຈໍາປົກກະຕິ.
2) ຂອບເຂດການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້ ແມ່ນປະເມີນຕາມຕົວຊີ້ວັດ ຫຼື ຜົນໄດ້ຮັບ ຫຼື ໝາກຜົນ ຕາມທີ່ໄດ້ກໍານົດໄວ້ໃນແຜນ ແລະ ວິທີການທີ່ໄດ້ນໍາໃຊ້ໃນການປະເມີນຜົນອື່ນໆ.

## IV. ງົບປະມານ ແລະ ແຫຼ່ງທຶນ

### 1. ງົບປະມານ

ເພື່ອເຮັດໃຫ້ບັນດາໂຄງການ ແລະ ກິດຈະກຳ ທີ່ກຳນົດໄວ້ໃນແຜນພັດທະນາຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ 5 ປີ (2021-2025) ໄດ້ຮັບການຈັດຕັ້ງປະຕິບັດ ໃຫ້ມີຜົນສຳເລັດ ຕາມຈຸດປະສົງລະດັບຄາດໝາຍ ທີ່ກຳນົດໄວ້ ຈຶ່ງໄດ້ກຳນົດໂຄງການຕ່າງໆ ເພື່ອຈັດຕັ້ງປະຕິບັດ ຈຳນວນທັງໝົດ 64 ໂຄງການ, ຄາດຄະເນມູນຄ່າ ປະມານ 322,5 ຕື້ກີບ ໂດຍແບ່ງອອກຈາກ 3 ແຫຼ່ງ ຄື:

1) ລັດຖະບານລົງທຶນ ມູນຄ່າປະມານ: 76 ຕື້ກີບ.
2) ເອກະຊົນລົງທຶນ ມູນຄ່າປະມານ: 72,1 ຕື້ກີບ.
3) ການຊ່ວຍເຫຼືອຈາກສາກົນ ມູນຄ່າປະມານ: 174,4 ຕື້ກີບ.

### 2. ແຫຼ່ງທຶນ

ລັດຖະບານ, ຄູ່ຮ່ວມພັດທະນາ ແລະ ບັນດາປະເທດເພື່ອນມິດ ລວມທັງອົງການຈັດຕັ້ງສາກົນຕ່າງໆມີ ບົດບາດໃນການສະໜັບສະໜູນທຶນຮອນ ແລະ ເຕັກນິກວິຊາການ ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາຂະ ແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ. ພ້ອມນັ້ນ ພາກທຸລະກິດໃນຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳເອງ ມີສ່ວນຮ່ວມໃນການປະກອບທຶນ, ລົງທຶນ ທັງໃນຮູບແບບຂອງງົບປະມານ ແລະ ການຍົກລະດັບ ເຕັກນິກໃນດ້ານຕ່າງໆ. ການປະກອບສ່ວນຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນຕ່າງໆ ກໍ່ມີຄວາມສຳ ຄັນ.

(ລາຍລະອຽດກ່ຽວກັບໂຄງການ ແລະ ຄາດຄະເນງົບປະມານ ຄັດຕິດໃນເອກະສານຊ້ອນທ້າຍ 2)

# ລາຍການ (ບັນຊີ) ຜະລິດຕະພັນອຸດສາຫະກຳທີ່ຜະລິດຢູ່ພາຍໃນ

**ເອກະສານຊ້ອນທ້າຍ 1**

| ຂະແໜງ | ພາກສ່ວນ | ລ/ດ | ລາຍການຜະລິດຕະພັນ | ຫົວໜ່ວຍ | ຈຳນວນ |
|---|---|---|---|---|---|
| | | | | | ປະລິມານ |
| 10 | | | ການຜະລິດສະບຽງອາຫານ | | |
| | 101 | | ການຜະລິດປຸງແຕ່ງ ແລະ ເກັບຮັກສາຊີ້ນ (ຂ້າສັດ, ສະໜອງຊີ້ນ, ໄສ້ກອກ, ໄສ້ອົ່ວ, ຊີ້ນແຫ້ງ, ໜັງເຄັມ ແລະ ຜະລິດຕະພັນອື່ນໆກ່ຽວກັບຊີ້ນ | | |
| | | 1 | ບໍລິການຂ້າສັດ ( ຊີ້ນ ) | ໂຕນ | 55,427.00 |
| | | 2 | ໜັງເຄັມ | ໂຕນ | 102,099.00 |
| | | 3 | ໄສ້ກອກ | ໂຕນ | 121,744.00 |
| | | 4 | ຊີ້ນແຫ້ງ | ໂຕນ | 27,858.00 |
| | | 5 | ໝູຟອຍ | ໂຕນ | 93,864.00 |
| | | 6 | ຜະລິດຕະພັນກ່ຽວກັບຊີ້ນສັດ | | |
| | 102 | | ຂະບວນການຜະລິດ ແລະ ການເກັບຮັກສາປາ ແລະ ສັດນ້ຳ( ປາແດກ, ປາເຄັມ, ປາແຫ້ງ, ຜະລິດຕະພັນອື່ນໆ ກ່ຽວກັບປາ) | | |
| | | 1 | ປາແດກ | ໂຕນ | 18,105.00 |
| | | 2 | ປາເຄັມ | ໂຕນ | 32,747.00 |
| | | 3 | ປາແຫ້ງ | ໂຕນ | 15,506.00 |
| | | 4 | ຜະລິດຕະພັນກ່ຽວກັບຊີ້ນປາ | | |
| | 103 | | ຂະບວນການຜະລິດປຸ່ງແຕ່ງ, ການເກັບຮັກສາ  ໝາກໄມ້, ພືດຜັກ, ເຕົ້າຮູ້ ແລະ ຊາ, ກາເຟ, ຊາສະໝຸນໄພ (ອົບ, ກວນ,ດອງ,ກະປ໋ອງ ແລະ ຜະ ລິດຕະພັນອື່ນໆ) | | |
| | | 1 | ກາເຟ | ໂຕນ | 100,281.00 |
| | | 2 | ໃບຊາແຫ້ງ | ໂຕນ | 117,057.00 |
| | | 3 | ໝາກຕາວເຊື່ອມ | ໂຕນ | 88,867.00 |
| | | 4 | ຜະລິດຕະພັນອົບແຫ້ງ (ສາລີ, ຊາ...) | ໂຕນ | 97,867.00 |
| | | 5 | ນ້ຳເຕົາຮູ້ | ຣຕລ | 2,970,249.00 |
| | | 6 | ຜະລິດຕະພັນອື່ນໆ | | |
| | 104 | | ການປຸງແຕ່ງນ້ຳມັນຈາກພືດຜັກ, ນ້ຳມັນສັດ ແລະ ໄຂມັນ | | |
| | | 1 | ນ້ຳມັນພືດ | ຣຕລ | 371,728.00 |
| | | 2 | ນ້ຳມັນໝູ | ຣຕລ | 203,980.00 |
| | | 3 | ນ້ຳມັນຫົວສີໄຄຕົ້ນ | ຣຕລ | 230,163.00 |
| | | 4 | ຜະລິດຕະພັນນ້ຳມັນອື່ນໆ | | |
| | 105 | | ການປຸງແຕ່ງຜະລິດຕະພັນນົມ ແລະ ຄີມຕ່າງໆ | | |
| | | 1 | ນົມງົວ, ຄີມນ້ຳນົມງົວ ຊະນິດຕ່າງໆ | ຣຕລ | 194,944.00 |
| | 1053 (ໝວດ) | | ການປຸງແຕ່ງກະແລ່ມ ແລະ ນ້ຳໝາກໄມ້ແຊ່ແຂງ, ນ້ຳກ້ອນອານາໄມ | | |
| | | 1 | ນ້ຳກ້ອນອານາໄມ | ໂຕນ | 387,228.00 |
| | | 2 | ກະແລ້ມໝາກໄມ້, ນ້ຳຫວານແຊ່ແຂງ ອື່ນໆ | ໂຕນ | 205,962.00 |
| | 106 | | ການປຸງແຕ່ງຜະລິດຕະພັນເມັດພືດທີ່ສີແລ້ວ, ຜະລິດຕະພັນແປ້ງສຳລັບອາຫານ | | |
| | | 1 | ຜະລິດທາດແປ້ງ (ແປ້ງມັນຕົ້ນ, ແປ້ງສາລີ) | ໂຕນ | 339,507.00 |
| | | 2 | ຜະລິດຕະພັນແປ້ງສຳລັບອາການອື່ນໆ | ໂຕນ | 518,910.00 |
| | 10632 (ໝູ່) | | ກິດຈະການ ສີເຂົ້າ | | |
| | | 1 | ເຂົ້າສານ | ໂຕນ | 167,684.00 |
| | 107 | | ການຜະລິດ ຜະລິດຕະພັນສະບຽງອາຫານອື່ນໆ(ເຂົ້າຈີ່, ເຂົ້າໜົມປັງ, ເຂົ້າໜົມເຄັກ, ຊ໋ອກໂກແລັດ ແລະ ອື່ນໆ) | | |
| | | 1 | ເຂົ້າຈີ່, ເຂົ້າໜົມ ຊະນິດຕ່າງໆ | ໂຕນ | 129,460.00 |
| | 1074 (ໝູ່) | | ການຜະລິດເສັ້ນໝີ່, ເສັ້ນເຝີ ແລະ ຜະລິດຕະພັນຈາກແປ້ງທີ່ຄ້າຍຄືກັນ | | |
| | | 1 | ເສັ້ນໝີ່, ເສັ້ນເຝີ, ເຂົ້າປຸ້ນ ແລະ ເສັ້ນອື່ນໆ | ໂຕນ | 172,284.00 |
| | 1077 (ໝວດ) | | ຂະບວນການຜະລິດເຄື່ອງເທດ, ແຈ່ວ, ເຄື່ອງປຸງອາຫານ ແລະ ຜະລິດຕະພັນຄົວກິນອື່ນໆ (ນ້ຳຕານ, ແປ້ງນົວ, ເກືອ, ນ້ຳປາ, ຊີອິ້ວ ແລະ ອື່ນໆ | | |
| | | 1 | ນ້ຳປາ-ນ້ຳສະອິວ,ນ້ຳຊອດ,ນ້ຳສົ້ມ | ຣຕລ | 420,849.00 |
| | | 2 | ນ້ຳຕານ | ໂຕນ | 22,558.00 |

| | | | | | |
|---|---|---|---|---|---|
| | | 3 | ເກືອ | ໂຕນ | 468,628.00 |
| | | 4 | ຜະລິດຕະພັນເຄື່ອງປຸງອາຫານຊະນິດອື່ນໆ | | |
| | 108 | | ການປຸງແຕ່ງອາຫານສັດ | | |
| | | 1 | ຫົວອາຫານສັດ ແລະ ອາຫານອື່ນໆຂອງສັດ | ໂຕນ | 1,328,265.00 |
| 11 | | | ການຜະລິດເຄື່ອງດື່ມ | | |
| | 110 | | ການຜະລິດເຄື່ອງດື່ມປະເພດ ເຫຼົ້າ, ເບຍ, ນ້ຳອັດລົມ, ໂສດາ ແລະ ອື່ນໆ | | |
| | | 1 | ເຫຼົ້າຕ່າງໆ | ຣຕລ | 220,446.00 |
| | | 2 | ເບຍ | ຣຕລ | 1,315,982.00 |
| | | 3 | ນ້ຳຫວານ+ໂສດາ | ຣຕລ | 509,986.00 |
| | | 4 | ຜະລິດຕະພັນທີ່ກ່ຽວກັບເຄື່ອງດື່ມອື່ນໆ | | |
| | 1105 (ໝວດ) | | ການຜະລິດນ້ຳດື່ມບໍລິສຸດ ແລະ ນ້ຳແຮ່ທາດຕ່າງໆ | | |
| | | 1 | ນ້ຳດື່ມບໍລິສຸດ | ຣຕລ | 3,343,441.00 |
| 12 | | | ການຜະລິດ ຜະລິດຕະພັນຢາສູບ | | |
| | | 1 | ຢາສູບ | ຊອງ | 2,652,515.00 |
| | | 2 | ໃບຢາແຫ້ງ | ໂຕນ | 453,024.00 |
| | | 3 | ຜະລິດຕະພັນທີ່ກ່ຽວກັບຢາສູບອື່ນໆ | | |
| 13 | | | ການຜະລິດແຜ່ນແພ ແລະ ຜະລິດຕະພັນກ່ຽວກັບເຊືອກ, ຕ່າໜ່າງ, ແຫ ແລະ ອື່ນໆ | | |
| | | 1 | ຜ້າປູໂຕະ/ແພພັນຄໍ/ຜ້າປູບ່ອນນອນ/ແຜ່ນແພ່ | ຜືນ | 9,955,331.00 |
| | | 2 | ເຊື່ອນອນ | ຜືນ | 10,689,687.00 |
| | | 3 | ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງ | | |
| 14 | | | ການຜະລິດເຄື່ອງນຸ່ງຫົ່ມ | | |
| | | 1 | ເຄື່ອງນຸ່ງຫົ່ມທຸກຊະນິດ | ຜືນ | 16,966,177.00 |
| | | 2 | ສິ້ນ(ສິ້ນຝ້າຍ, ສິ້ນໄໝລາຍຕ່າງໆ) | ຜືນ | 199,658.00 |
| | | 3 | ຜະລິດຕະພັນເຄື່ອງນຸ່ງຫົ່ມອື່ນໆ | | |
| 15 | | | ການຜະລິດຜະລິດຕະພັນເຄື່ອງໜັງ, ການເອືອບ, ການຟອກ( ກະເປົາເດີນທາງ, ເກີບ ແລະ ອື່ນໆ) | | |
| | | 1 | ເກີບ+ພື້ນເກີບ | ພັນຄູ່ | 2,483,461.00 |
| | | 2 | ກະເປົາໃສ່ເງິນຫຼຽນ (ຊາຍ-ຍິງ) | ໜ່ວຍ | 2,076,910.00 |
| | | 3 | ເອືອບໜັງ | ໂຕນ | 3,255,835.00 |
| | | 4 | ຜະລິດຕະພັນເຄື່ອງໜັງອື່ນໆທີ່ກ່ຽວຂ້ອງ | | |
| 16 | | | ການເລື່ອຍ, ກົບ, ການຜະລິດໄມ້ແປຮູບ ແລະ ຜະລິດຕະພັນຈາກໄມ້, ຫວາຍ; ຜະລິດຕະພັນຈາກເຟືອງ ແລະ ວັດຖຸຈັກສານ; ຍົກເວັ້ນເຄື່ອງເຟີນີເຈີ | | |
| | | 1 | ເຜົາຖ່ານ | ໂຕນ | 127,188.00 |
| | | 2 | ວົງກົບປະຕູ, ລູກຕົງ, ບານປະຕູ, ປ້ອງຢ້ຽມ | ຊິ້ນ | 154,048.00 |
| | | 3 | ໄມ້ປູພື້ນ/ປັກເກ | ພ.ມ2 | 121,654.00 |
| | | 4 | ແກະສະຫຼັກຫວາຍ | ໜ່ວຍ, ຊຸດ | 24,674.00 |
| | | 5 | ສານຕິບເຂົ້າ | ພ.ຕິບ | 1,579.00 |
| | | 6 | ຜະລິດຕະພັນໄມ້ອື່ນໆ ທີ່ກ່ຽວຂ້ອງ | | |
| 17 | | | ການຜະລິດເຈ້ຍ ແລະ ຜະລິດຕະພັນເຈ້ຍ | | |
| | | 1 | ປຶ້ມຂຽນ | ພ.ຫົວ | 3,880.00 |
| | | 2 | ແກັດ, ເຈ້ຍໄຫວພະ, ເຈ້ຍຫໍ່ຂອງຂວັນ | ໂຕນ | 58,226.00 |
| | | 3 | ຜະລິດຕະພັນເຈ້ຍອື່ນໆ ທີ່ກ່ຽວຂ້ອງ | | |
| 18 | | | ການພິມ, ການອັດສຳເນົາ, ພາບແສງສີສຽງທີ່ອັດບັນທຶກ (ໃສ່ແຜ່ນຊີດີ, ເທບ ແລະ/ຫຼື ອື່ນໆ) | | |
| | | 1 | ແຜ່ນຊີດີເພງ, ໜັງ | ພ.ແຜ່ນ | 89,825.00 |
| | | 2 | ພິມປ້າຍ, ແຕ້ມປ້າຍ, ບັດເຊີນ | | 632,319.00 |
| | | 3 | ຜະລິດຕະພັນອື່ນໆ ທີ່ກ່ຽວຂ້ອງ | | |
| 19 | | | ການຜະລິດຖ່ານຫີນຕ່າງໆ ແລະ ການກັ່ນຜະລິດຕະພັນນ້ຳມັນດິບ | | |
| | | 1 | ຜະລິດຖ່ານຫີນດຳ, ຂາວ | ໂຕນ | 5,075.00 |
| | | 2 | ຜະລິດຖ່ານຫີນຕ່າງໆທີ່ກ່ຽວຂ້ອງ | ໂຕນ | 1,278.00 |
| 20 | | | ການຜະລິດສານເຄມີ ແລະ ຜະລິດຕະພັນເຄມີ(ອົກຊີ, ນ້ຳກັ່ນ, ຝຸ່ນເຄມີ, ນ້ຳສີ, ຢາຂ້າແມງໄມ້, ສະບູຝຸ່ນ/ກ້ອນ, ນ້ຳຫອມ ແລະ ອື່ນໆ) | | |
| | | 1 | ສະບູຝຸ່ນ, ນ້ຳຢາລ້າງຈານ, ນ້ຳຢາລ້າງຫ້ອງນ້ຳ | ຣຕລ | 239,546.00 |
| | | 2 | ນ້ຳສີ, ທິນເນີ, ນ້ຳຢາກັນຊຶມ | ຣຕລ | 539,526.00 |
| | | 3 | ປຸຍເຄມີ/ຊີວະພາບ | ໂຕນ | 167,020.00 |

| | | | | | |
|---|---|---|---|---|---|
| | | 4 | ນ້ຳກົດ( ສາກໝໍ້ໄຟ), | ຣຕລ | 354,820.00 |
| | | 5 | ອາຍແກັສທຸງຕົ່ມ(ອົກຊີແຊນ) | ພ.ບັ້ງ | 11,975.00 |
| | | 6 | ຜະລິດສໍຂາວ/ສໍສີ | ພ.ກັບ | 19,462.00 |
| | | 7 | ຜະລິດຄະພັນເຄມີອື່ນໆ ທີ່ກ່ຽວຂ້ອງ | | |
| 21 | | | ການຜະລິດຢາປົວພະຍາດ, ຜະລິດຕະພັນເຄມີໃຊ້ປຸງຢາ ແລະ ຜະລິດຕະພັນການຢາຈາກພືດ | | |
| | | 1 | ເຫລົ້າ 90 | ຣຕລ | 37,775.00 |
| | | 2 | ເຊໂລມ | ພັນ.ຖົງ | 61,804.00 |
| | | 3 | ຢາປົວພະຍາດ( ແບບເມັດ,ຫຼອດ) | ພັນ.ຫຼອດ | 118,265.00 |
| | | 4 | ປຸຍເຄມີ/ຊີວະພາບ | ໂຕນ | 254,625.00 |
| | | 5 | ຜະລິດຕະພັນຢາປົວພະຍາດອື່ນໆ ທີ່ກ່ຽວຂ້ອງ | | |
| 22 | | | ການຜະລິດຢາງ ແລະ ຜະລິດຕະພັນປລາສຕິກ | | |
| | | 1 | ຟອງນ້ຳ, ປະເພດຖົງຢາງ, ສາດຢາງ | ໂຕນ | 164,881.00 |
| | | 2 | ຢາງຕີນລົດອັດດອກ | ເສັ້ນ | 245,645.00 |
| | | 3 | ທໍ່ນ້ຳ ພີ ວີ ຊີ ( p v c ) | ເສັ້ນ | 1,160,116.00 |
| | | 4 | ເຊືອກຟາງ, ຫຼອດດູດ | ໂຕນ | 181,717.00 |
| | | 5 | ສາຍໄຟຟ້າ | ແມັດ | 2,622,781.00 |
| | | 6 | ຜະລິດຕະພັນຢາງ ແລະ ປລາສຕິກ ອື່ນໆ | ໂຕນ | |
| 23 | | | ການຜະລິດຜະລິດຕະພັນແຮ່ທາດອື່ນໆ ທີ່ບໍ່ແມ່ນໂລຫະ (ຜະລິດຕະພັນແກ້ວ, ເຄື່ອງປັ້ນດິນເຜົາ, ທາດ, ທໍາບູຊາ, ໂຕະຫີນ,ຊີມັງ,ຂັດຫີນ,ເສົາໄຟຟ້າ, ດິນຈີ່, ດິນບູ້ອກ, ກະເບື້ອງ, ໄຫ,... | | |
| | | 1 | ກະເບື້ອງມຸງຫຼັງຄາ, ຊີແພັກໂມເນຍ | ພ.ແຜ່ນ | 127,783.00 |
| | | 2 | ຊີມັງ | ພ.ໂຕນ | 4,800.00 |
| | | 3 | ດິນບູ້ອກ/ດິນຈີ່ | ພ.ກ້ອນ | 450,942.00 |
| | | 4 | ທໍ່ນ້ຳສ້າງ/ທໍ່ຖະໜົນ | ທໍ່ | 274,215.00 |
| | | 5 | ເສົາໄຟຟ້າ | ຕົ້ນ | 96,303.00 |
| | | 6 | ຜະລິດເຕົາປະຫຍັດ, ເຄື່ອງປັ້ນດິນເຜົາ | ໜ່ວຍ | 45,016.00 |
| | | 7 | ຜະລິດຕະພັນອື່ນ ທີ່ກ່ຽວຂ້ອງ | | |
| 24 | | | ການຜະລິດໂລຫະຂັ້ນພື້ນຖານ( ເຫຼັກເສັ້ນ , ຫຼອມເຫຼັກ ແລະ ທາດເຫຼັກອື່ນໆ ທີ່ກ່ຽວຂ້ອງ) | | |
| | | 1 | ເຫຼັກເສັ້ນ (ຝີຕ່າງໆ) | ພ.ໂຕນ | 78,349.00 |
| | | 2 | ເຫຼັກຮູບປະພັນ | ພ.ໂຕນ | 59,277.00 |
| 25 | | | ການຜະລິດຜະລິດຕະພັນໂລຫະ ຍົກເວັ້ນເຄື່ອງກົນຈັກ ແລະ ອຸປະກອນເຄື່ອງຈັກ (ໂລຫະທີ່ເປັນໂຄງ, ອ່າງ , ປະຕູເຫຼັກ, ອາວຸດ, ຕະປູ, ເສັ້ນລວດ ແລະ ເຄື່ອງຂອງມີຄົມໂລຫະ ແລະ ອື່ນໆ) | | |
| | | 1 | ເຟີນີເຈີ ປະຕູຮົ້ວເຫຼັກ | ໜ່າງ | 35,349.00 |
| | | 2 | ຕ່າໜ່າງກັນຂະໂມຍ | ປ່ອງ | 81,723.00 |
| | | 3 | ເຄື່ອງມືອອກແຮງງານ(ຈົກ, ສ້ອມ) | ຊີ້ນ | 45,932.00 |
| | | 4 | ໜາມໜາກຈັບ+ຕະປູ+ລວດຕ່າງໆ | ໂຕນ | 60,739.00 |
| | | 5 | ສັງກະສີ | ພ.ແຜ່ນ | 81,663.00 |
| | | 6 | ຜະລິດຕະພັນໂລຫະອື່ນໆ | | |
| 26 | | | ການຜະລິດເຄື່ອງຄອມພິວເຕີ, ເຄື່ອງເອເລັກໂຕຼນິກ ແລະ ຜະລິດຕະພັນກ່ຽວກັບຮູບພາບແສງສີສຽງ (ໂທລະທັດ, ເຄື່ອງຫຼິ້ນຊີດີ, ກ້ອງຖ່າຍຮູບ, ແອ, ໂມງ, ຊີດີເປົ່າ ແລະ ອື່ນໆ) | | |
| | | 1 | ຊິ້ນສ່ວນກ້ອງຖ່າຍຮູບ | ໜ່ວຍ | 45,126.00 |
| | | 2 | ຜະລິດແຜ່ນເປົ່າ CD,DVD,VCD | | 14,342.00 |
| | | 3 | ຜະລິດ USB | | 5,405.00 |
| | | 4 | ໂທລະທັດ | ໜ່ວຍ | 57,625.00 |
| | | 5 | ຜະລິດຕະພັນ ແລະ ຊິ້ນສ່ວນເອເລັກໂຕຼນິກອື່ນໆ | | |
| 27 | | | ການຜະລິດອຸປະກອນໄຟຟ້າ, ສາຍສົ່ງໄຟຟ້າ, ສັນຍານ ແລະ ອຸປະກອນສົ່ງສັນຍານ(ມໍເຕີໄຟຟ້າລົດຍົນ, ຟິວ, ໝໍ້ໄຟຟ້າ ແລະ ອື່ນໆ) | | |
| | | 1 | ປະກອບໂທລະສັບມືຖື | ໜ່ວຍ | 240,595.00 |
| | | 2 | ສາຍໄຟຟ້າ | ແມັດ | 88,561.00 |
| | | 3 | ປັກສຽບ | ໜ່ວຍ | 72,268.00 |
| | | 4 | ໝໍ້ຫຸງເຂົ້າ | ໜ່ວຍ | 50,670.00 |
| | | 5 | ຜະລິດຕະພັນອຸປະກອນສາຍສົ່ງອື່ນທີ່ກ່ຽວຂ້ອງ | | |
| | 2753 (ໝູ່) | | ການຜະລິດເຄື່ອງໃຊ້ໃນການແຕ່ງກິນ ທີ່ບໍ່ແມ່ນໄຟຟ້າ ແລະ ອຸປະກອນເຮັດຄວາມຮ້ອນ (ເຕົາຖ່ານ, ຄຽງ ແລະ ອື່ນໆ) | | |
| | | 1 | ຄ່ຽງ, ຄົກ, ສາກ | ໜ່ວຍ | 41,826.00 |

| | | | | | |
|---|---|---|---|---|---|
| | | 2 | ຫວດ, ຊາມ, ໄມ້ຫວີເຂົ້າ | ໜ່ວຍ | 36,534.00 |
| | | 3 | ຜະລິດຕະພັນອື່ນໆ ທີ່ກ່ຽວຂ້ອງ | | |
| 28 | | | ການຜະລິດເຄື່ອງຈັກ ແລະ ເຄື່ອງຈັກປະກອບທົ່ວໄປ(ຜະລິດຈັກສູບ, ຈັກປໍ້າ, ວາວ, ລົດໄຖນາ,ເຄື່ອງຈັກການກະເສດ ແລະ ຜະລິດຕ່າງໆ) | | |
| | | 1 | ປະກອບຈັກສູບນໍ້າ, ເຄື່ອງກອງນໍ້າ | ໜ່ວຍ | 3,172.00 |
| | | 2 | ປະກອບລົດໄຖນາເດີນຕາມ | ໜ່ວຍ | 2,518.00 |
| | | 3 | ຜະລິດ ແລະ ປະກອບເຄື່ອງຈັກອື່ນໆທີ່ກ່ຽວຂ້ອງ | | |
| 29 | | | ການຜະລິດລົດຍົນ, ລົດພວງ ແລະ ຊິ້ນສ່ວນອາໄຫຼ່, ອຸປະກອນລົດຈັກ, ລົດຍົນຕ່າງໆ | | |
| | | 1 | ລົດຈັກ | ຄັນ | 154,507.00 |
| | | 2 | ລົດບັນທຸກ | | 3,600.00 |
| | | 3 | ລົດກະບະ | | 315.00 |
| | | 4 | ຊິ້ນສ່ວນ-ອາໄຫຼ່ ອື່ນໆ | ຊິ້ນ | |
| 30 | | | ການຜະລິດອຸປະກອນການຂົນສົ່ງອື່ນໆ(ເຮືອ, ຫົວຈັກລົດໄຟ, ຍວດຍານພາຫະນະສຳລັບທະຫານ, ລົດຖີບ, ລໍ້ຍູ້, ລໍ້ສະຫຼັບຄົນເສຍອົງຄະ ແລະ ອື່ນໆ | | |
| | | 1 | ຊິ້ນສ່ວນ-ອາໄຫຼ່ ລົດຖີບ, ລໍ້ຍູ້ ແລະ ອື່ນໆທີ່ກ່ຽວຂ້ອງ | | 12,895.00 |
| 31 | | | ການຜະລິດເຄື່ອງເຟີນີເຈີ(ຜະລິດດ້ວຍໄມ້, ຫວາຍ, ປລາສຕິກ, ໂລຫະ ແລະ ອື່ນໆ) | | |
| | | 1 | ເຟີນີເຈີໄມ້ (ໂຕະ, ຕັ່ງ, ຕູ້, ຕຽງ) | ຊິ້ນ | 9,084.00 |
| | | 2 | ເຟີນີເຈີຫວາຍ (ໂຕະ, ຕັ່ງ, ຕູ້, ຕຽງ) | ຊິ້ນ | 9,925.00 |
| | | 3 | ໂຊຟາ | ຊຸດ | 11,393.00 |
| | | 4 | ຜະລິດຕະພັນອື່ນ ທີ່ກ່ຽວຂ້ອງ | | |
| 32 | | | ອຸດສາຫະກຳແປຮູບອື່ນໆ(ເຄື່ອງເອ້ທຽມ, ເຄື່ອງປະ ດັດ, ຫຼຽນ, ປອກຄໍປອກແຂນ, ເຄື່ອງຫຼິ້ນດົນຕີ ໄດ້ແກ່: ແຄນ, ລະນາດ; ທູບ, ກັບໄຟ, ຄັນຮົ່ມ, ໂລງສົບ, ແຂ້ວທຽມ, ເຂັມສັກຢາ ແລະ ຜະລິດຕະພັນອື່ນໆ) | | |
| | | 1 | ປັກແສ່ວຕົວອັກສອນຕ່າງໆ | ຊຸດ | 44,817.00 |
| | | 2 | ໂລງສົບ | ໂລງ | |
| | | 3 | ຄັນຮົ່ມ | ອັນ | 40,081.00 |
| | | 4 | ກະເປົາານ້ອຍ | ໜ່ວຍ | 46,447.00 |
| | | 5 | ຜະລິດຕະພັນອື່ນໆ ທີ່ກ່ຽວຂ້ອງ | | |

## ໂຄງການສຳລັບຈັດຕັ້ງປະຕິບັດແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ 5 ປີ (2021-2025)

ເອກະສານຊ້ອນທ້າຍ 2

| ລດ | ໂຄງການ | ໜ່ວຍງານຮັບຜິດຊອບຫຼັກ | ມູນຄ່າລວມ (ລ້ານກີບ) | ທຶນຊ່ວຍເຫຼືອ (ລ້ານກີບ) | ລົງທຶນຂອງລັດ ( ລ້ານກີບ) | ການລົງທຶນຂອງເອກະຊົນ (ລ້ານກີບ) |
|---|---|---|---|---|---|---|
| 1 | ໂຄງການສົ່ງເສີມການຜະລິດ ແລະ ຊົມໃຊ້ພາຍໃນ, ລົງເລິກການປຸງແຕ່ງອາຫານ ແລະ ເຄື່ອງດື່ມ | ກະຊວງ ອຄ, ກະຊວງ ກປ, ພາກເອກະຊົນ, ຄູ່ຮ່ວມພັດທະນາ | 37,954 | 3,080 | 3,874 | 31,000 |
| 2 | ໂຄງການສະໜັບສະໜູນອຸດສາຫະກຳຕັດຫຍິບ, ແຜ່ນແພ ແລະ ເກີບ ຜ່ານຜ່າຈາກຜົນກະທົບຂອງພະຍາດ ໂຄວິດ-19 | ກະຊວງ ອຄ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ສະມາຄົມຕັດຫຍິບ | 18,310 | 13,850 | 1,960 | 2,500 |
| 3 | ໂຄງການກະກຽມຜົນກະທົບອຸດສາຫະກຳຕັດຫຍິບຂອງລາວ ພາຍຫຼັງບໍ່ໄດ້ຮັບສິດທິພິເສດດ້ານການຄ້າເລີ້ມປີ 2025 | ກະຊວງ ອຄ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ສະມາຄົມຕັດຫຍິບ | 500 | - | 500 | |
| 4 | ໂຄງການຍົກລະດັບອຸດສາຫະກຳຊີມັງ ແລະ ເຫຼັກຂອງ ສປປ ລາວ | ກະຊວງ ອຄ, ກຸ່ມຜູ້ຜະລິດຊີມັງ, ກຸ່ມຜູ້ຜະລິດເຫລັກ | 14,780 | 2,450 | 3,330 | 9,000 |
| 5 | ໂຄງການຊຸກຍູ້ການຜະລິດ ຜະລິດຕະພັນກະສິກຳທີ່ບໍ່ແມ່ນອາຫານ | ກະຊວງ ອຄ, ກະຊວງ ກປ, LNCCI, ພາກທຸລະກິດ | 10,160 | 4,700 | 2,960 | 2,500 |
| 6 | ໂຄງການຊຸກຍູ້ ແລະ ຍົກລະດັບອຸດສາຫະກຳການປຸງແຕ່ງໄມ້ ແລະ ຜະລິດຕະພັນອື່ນໆ ຈາກໄມ້ | ສະມາຄົມປຸງແຕ່ງໄມ້<br>ສະມາຄົມເຟີນີເຈີລາວ<br>ກະຊວງ ອຄ, ກະຊວງ ກປ, ກະຊວງ ຊງ<br>ຜູ້ປະກອບການ | 37,290 | 26,100 | 8,390 | 2,800 |
| 7 | ໂຄງການກຳນົດນະໂຍບາຍສົ່ງເສີມການປຸງແຕ່ງແຮ່ທາດ ແລະ ການຜະລິດ ເປັນ ຜະລິດຕະພັນສຳເລັດຮູບ | ກະຊວງ ອຄ, ກະຊວງ ພຣ, ກະຊວງແຜນການ ແລະ ການລົງທຶນ | 3,900 | 1,500 | 1,600 | 800 |
| 8 | ໂຄງການຊຸກຍູ້ສົ່ງເສີມການປຸງແຕ່ງອະໂລຫະ | ກະຊວງ ອຄ, ກະຊວງ ຜທ, ພຣ, LNCCI | 930 | 600 | 330 | - |
| 9 | ໂຄງການຊຸກຍູ້ສົ່ງເສີມ ແລະ ຄຸ້ມຄອງການປຸງແຕ່ງອຸດສາຫະກຳເຄມີພື້ນຖານ ແລະ ນ້ຳມັນເຊື້ອໄຟ | ກະຊວງ ອຄ, ກະຊວງ ຜທ, ພຣ, LNCCI | 7,640 | 7,500 | 140 | - |
| 10 | ໂຄງການສົ່ງເສີມ ແລະ ດຶງດູດການລົງທຶນເຂົ້າໃສ່ການຜະລິດຊິ້ນສ່ວນກ່ຽວເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ ເພື່ອເຊື່ອມໂຍງເຂົ້າໃນຂະບວນການຕ່ອງໂສ້ການຜະລິດ ພາກພື້ນ | ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງ ຜທ, ອົງການຮ່ວມມືສາກົນ, ພາກທຸລະກິດ, LNCCI | 5,300 | 4,000 | 1,300 | - |
| 11 | ໂຄງການຍົກລະດັບອຸດສາຫະກຳການຜະລິດຊິ້ນສ່ວນຍານພາຫະນະຂອງລາວ ກ້າວສູ່ຕະຫລາດອາຊຽນ | ຍທຂ, ກະຊວງອຸດສາຫະກຳ ແລະ ການຄ້າ, ສະມາຄົມຍານພາຫະນະລາວ | 4,900 | 1,400 | 1,500 | 2,000 |
| 12 | ໂຄງການສົ່ງເສີມການລົງທຶນ ພັດທະນາກົນຈັກ ແລະ ຍານພາຫະນະຮັບໃຊ້ກະສິກຳ | ກະຊວງ ອຄ, ກະຊວງ ຍທຂ, ກະຊວງ ກປ | 3,300 | 2,200 | 1,100 | - |
| 13 | ໂຄງການຊຸກຍູ້ສົ່ງເສີມການແລກປ່ຽນການສະໜອງວັດຖຸດິບ ແລະ ຊິ້ນສ່ວນ ຢູ່ພາຍໃນປະເທດ | ກະຊວງ ອຄ, ກະຊວງ ພຣ, ກະຊວງ ຍທຂ ແລະ ກຸ່ມ | 500 | 200 | 300 | |

| | | | | | | |
|---|---|---|---|---|---|---|
| | | ອຸດສາຫະກຳຍານພາຫະນະລາວ/ ບັນດາໂຮງງານຜະລິດຊິ້ນສ່ວນ | | | | |
| 14 | ໂຄງການສົ່ງເສີມການນຳໃຊ້ຜະລິດຕະພັນສິ່ງພິມ ແລະ ສິ່ງຫຸ້ມຫໍ່ເຂົ້າໃນການຜະລິດສິນຄ້າ | ກະຊວງ ອຄ, ກະຊວງ ຖວທ, ກະຊວງ ຜທ, LNCCI | 2,250 | 1,000 | 1,250 | - |
| 15 | ໂຄງການສ້າງເງື່ອນໄຂ ແລະ ຄວາມເຂັ້ມແຂງໃຫ້ ພາກທຸລະກິດ ໃນການຫຸ້ມຫໍ່ສິນຄ້າ ແລະ ໃຊ້ ສະຫຼາກສິນຄ້າທັນສະໄໝ | ກະຊວງ ອຄ, LNCCI | 490 | - | 490 | - |
| 16 | ໂຄງການສົ່ງເສີມການນຳໃຊ້ເຕັກໂນໂລຊີ, ນະ ວັດຕະກຳ ແລະ ດິຈິຕອນ ເຂົ້າໃນການພັດທະນາ ຜະລິດຕະພັນອຸດສາຫະກຳ | ກະຊວງ ອຄ, ກະຊວງ ເຕັກໂນ ໂລຊີ ແລະ ການສື່ສານ | 300 | - | 300 | - |
| 17 | ໂຄງການຍົກລະດັບ ແລະ ພັດທະນາຜູ້ດຳເນີນ ກິດຈະການ ແລະ ແຮງງານ ໃນກຸ່ມທຸລະກິດຈຸນ ລະວິສາຫະກິດ, ວິສາຫະກິດຂະ ໜາດນ້ອຍ ແລະ ກາງ (MSMEs) | ກະຊວງ ອຄ, LNCCI | 5,150 | 3,000 | 1,150 | 1,000 |
| 18 | ໂຄງການພັດທະນາມາດຕະຖານ ການກວດສອບ , ຮັບຮອງລະບົບ ແລະ ຜະລິດຕະພັນໂຮງງານ ເພື່ອກ້າວສູ່ມາດຕາຖານອຸດສາຫະກຳ (ມອກ) | ກະຊວງ ອຄ, LNCCI | 1,100 | 500 | 600 | |
| 19 | ໂຄງການຊຸກຍູ້ສົ່ງເສີມການສ້າງຕັ້ງສູນການອອກ ແບບ ແລະ ກວດສອບຜະລິດຕະພັນອຸດສາຫະກຳ ແລະ ຂະບວນການຜະລິດ | ກະຊວງ ອຄ, ສູນທົດສອບ-ກວດ ທຽບ, ກະຊວງ ສຶກສາທິການ ແລະ ກິລາ | 1,900 | 1,200 | 700 | |
| 20 | ໂຄງການສ້າງຄວາມເຂັ້ມແຂ່ງຂອງກຸ່ມຜູ້ຜະລິດ ອຸດສາຫະກຳທີ່ມີທ່າແຮງ ເພື່ອເຊື່ອມໂຍງກັບ ການຜະລິດພາກພື້ນ ແລະ ສາກົນ | ກະຊວງອຸດສາຫະກຳ ແລະ ການ ຄ້າ, ຂະແໜງການທີ່ກ່ຽວຂ້ອງ, LNCCI | 3,000 | 2,000 | 1,000 | 2,000 |
| 21 | ໂຄງການສົ່ງເສີມ ການຜະລິດເປັນສິນຄ້າ ແລະ ຊົມໃຊ້ຜະລິດຕະພັນອຸດສາຫະກຳພາຍໃນ | ກະຊວງ ອຄ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | 2,800 | - | 2,800 | - |
| 22 | ໂຄງການຄຸ້ມຄອງສິ່ງເສດເຫລືອຂອງໂຮງງານ ອຸດສາຫະກຳປຸງແຕ່ງ | ກະຊວງ ອຄ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | 22,900 | 12,300 | 600 | 10,000 |
| 23 | ໂຄງການສົ່ງເສີມ ແລະ ສະໜັບສະໜູນການ ພັດທະນາ ເຂດ ແລະ ນິຄົມອຸດສາຫະກຳ ເຊີງ ນິເວດວິທະຍາ | ກະຊວງອຸດສາຫະກຳ ແລະ ການ ຄ້າ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | 5,500 | 5,000 | 500 | |
| 24 | ໂຄງການສົ່ງເສີມການພັດທະນາກຸ່ມທີ່ມີຂີດ ຄວາມສາມາດ ໃນການເປັນອຸດສາຫະກຳປຸງແຕ່ງ ເຊີງນິເວດວິທະຍາ | ກະຊວງ ອຄ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຄູ່ຮ່ວມພັດທະນາ | 600 | - | 600 | |
| 25 | ໂຄງການສົ່ງເສີມອຸດສະຫະກຳປຸງແຕ່ງຂະໜາດ ນ້ອຍ ແລະ ກາງຕາມທິດສີຂຽວ-ຍືນຍົງ | ກະຊວງອຸດສາຫະກຳ ແລະ ການ ຄ້າ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ | 6,800 | 6,000 | 800 | |
| 26 | ໂຄງການສ້າງນະໂຍບາຍ ແລະ ຍຸດທະສາດການ ພັດທະນາອຸດສາຫະກຳສີຂຽວ | ກະຊວງອຸດສາຫະກຳ ແລະ ການ ຄ້າ ຮ່ວມກັບສະຖາບັນເຕີບໂຕ ສີຂຽວໂລກ (GGGI) | 500 | - | 500 | |

| | | | | | | |
|---|---|---|---|---|---|---|
| 27 | ໂຄງການສ້າງຍຸດທະສາດວ່າດ້ວຍການພັດທະນາ ພະລັງງານຊີວະມວນ | ກະຊວງ ອຸດສາຫະກຳ ແລະ ການຄ້າ ຮ່ວມກັບອົງການ UNIDO | 600 | 600 | | |
| 28 | ໂຄງການການນຳໃຊ້ພະລັງງານຢ່າງມີ ປະສິດທິພາບ ໃນພາກອຸດສາຫະກຳປຸງແຕ່ງຂອງ ສປປ ລາວ | ກະຊວງອຸດສາຫະກຳ ແລະ ການ ຄ້າ ຮ່ວມກັບສະຖາບັນເຕີບໂຕ ສີຂຽວໂລກ(GGGI) | 3,000 | 3,000 | | |
| 29 | ໂຄງການການຫຼຸດຜ່ອນການປ່ອຍອາຍພິດເຮືອນ ແກ້ວໃນພາກອຸດສາຫະກຳໂດຍຜ່ານການນຳໃຊ້ ສິ່ງເສດເຫຼືອເປັນພະລັງງານ | ກະຊວງ ອຄ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງ ພຣ | 4,000 | 4,000 | | |
| 30 | ໂຄງການສົ່ງເສີມການຫັນເຂົ້າສູ່ມາດຕະຖານ GMP ຂອງອຸດສາຫະກຳອາຫານ ແລະ ເຄື່ອງ ດື່ມ | ກະຊວງ ອຄ, ກະຊວງ ກປ, ກະຊວງ ສາທາລະນະສຸກ | 500 | 500 | | 3,000 |
| 31 | ໂຄງການສ້າງແຜນພັດທະນາ ການຫລຸດຜ່ອນ, ການນຳໃຊ້ຄືນ ແລະ ການຜະລິດຄືນໃໝ່ (3R) ຈາກສິ່ງເສດເຫລືອ | ກະຊວງ ອຄ | 100 | 100 | | |
| 32 | ໂຄງການຊຸກຍູ້ສົ່ງເສີມການຜະລິດ ແລະ ນຳໃຊ້ ພະລັງງານແບບຍືນຍົງ | ກະຊວງ ອຄ, ກະຊວງ ພຣ, ອົງ ການຈັດຕັ້ງສາກົນ | 17,800 | 12,400 | 5,400 | - |
| 33 | ໂຄງການພັດທະນາຂໍ້ມູນດ້ານອຸດສາຫະກຳປຸງ ແຕ່ງ | ກະຊວງ ອຸດສາຫະກຳ ແລະ ການ ຄ້າ, ພະແນກ ອຄ, UNIDO, ອົງການຮ່ວມມືສາກົນ | 1,900 | 1,500 | 400 | |
| 34 | ໂຄງການສົ່ງເສີມ ແລະ ຍົກລະດັບການສ້າງມູນ ຄ່າເພີ່ມຜະລິດຕະພັນອຸດສາຫະກຳ | ກະຊວງ ອຄ, LNCCI | 2,000 | 1,300 | 700 | - |
| 35 | ໂຄງການ ຊຸກຍູ້ສົ່ງເສີມອຸດສາຫະກຳດີເດັ່ນ | ກະຊວງ ອຄ, LNCCI | 6,050 | 800 | 2,000 | 3,250 |
| 36 | ໂຄງການສຶກສາຄວາມເປັນໄປໄດ້ ໃນການ ພັດທະນາ ເຂດ ແລະ ນິຄົມອຸດສາຫະກຳ ຕາມ ລາວແລວທາງລົດໄຟລາວ-ຈີນ | ກະຊວງ ອຄ, ຄູ່ຮ່ວມພັດທະນາ | 1,450 | 500 | 950 | - |
| 37 | ໂຄງການພັດທະນາໃນນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ (ພາກຂະຫຍາຍ ໄລຍະ 2) | ກະຊວງ ອຄ, VITA, ຄູ່ຮ່ວມ ພັດທະນາ | 2,700 | 2,000 | 700 | |
| 38 | ໂຄງການຊຸກຍູ້ການພັດທະນາພື້ນຖານໂຄງລ່າງ ແລະ ສະໜັບສະໜູນອຸດສາຫະກຳປຸງແຕ່ງ | ກະຊວງ ອຄ, ກະຊວງ ຍທຂ, ກະຊວງ ພຣ, ກະຊວງ ເຕັກໂນ ໂລຊີ ແລະ ການສື່ສານ, ອົງການ ຮ່ວມມືສາກົນ | 2,400 | 1,300 | 1,100 | - |
| 39 | ໂຄງການສຶກສາ ແລະ ອອກແບບລະບົບບຳບັດນ້ຳ ເສຍແລະ ບ່ອນກຳຈັດສິ່ງເສດເຫຼືອ ຈາກ ອຸດສາຫະກຳ ເຂດອຸດສາຫະກຳ ນະຄອນຫຼວງ ວຽງຈັນ ແລະ ແຂວງຈຳປາສັກ | ກະຊວງ ອຄ, ນະຄອນຫຼວງວຽງ ຈັນ ແລະ ຈຳປາສັກ | 800 | 800 | - | - |
| 40 | ໂຄງການພັດທະນາຖານຂໍ້ມູນໂຮງງານ ອຸດສາຫະກຳປຸງແຕ່ງ ແລະ ລະບົບການອອກ ອະນຸຍາດທັນສະໄໝ | ອົງການຈັດຕັ້ງສາກົນ (ADB, World Bank, etc.) | 500 | 500 | - | - |
| 41 | ໂຄງການພັດທະນາລົງເລິກລະບົບຂໍ້ມູນ ເສດຖະກິດອຸດສາຫະກຳ ເພື່ອການກຳນົດທິດ ທາງການພັດທະນາ ແລະ ນະໂຍບາຍ ດ້ານ ອຸດສາຫະກຳປຸງແຕ່ງ | ກະຊວງ ອຄ, UNIDO ແລະ ຄູ່ ຮ່ວມພັດທະນາ | 3,270 | 3,270 | - | - |

| | | | | | | |
|---|---|---|---|---|---|---|
| 42 | ໂຄງການພັດທະນາຖານຂໍ້ມູນການຕິດຕາມໄມ້ສິ້ນເຂົ້າ ແລະ ສິ້ນອອກຂອງໂຮງງານ (CoC Data-base) | ກະຊວງ ອຸດສາຫະກຳ ແລະ ການຄ້າ, ຫ້ອງການ FLEGT | 500 | 500 | | |
| 43 | ໂຄງການ ສົ່ງເສີມການຍົກລະດັບການຜະລິດຂອງປະເທດ ໄປສູ່ອຸດສາຫະກຳທີ່ທັນສະໄໝ ການຜະລິດແບບດີຈີຕອນ (Digital Manufacturing Platform) | ກະຊວງ ອຄ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ (ນອນໃນແຜນແມ່ບົດເສດຖະກິດ ດີຈີຕອນ 5 ປີ ຂອງລາວ) | 8,900 | 8,200 | 700 | - |
| 44 | ໂຄງການປັບປຸງສະພາບແວດລ້ອມການລົງທຶນ ແລະ ດຳເນີນກິດຈະການດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ | ກະຊວງ ຜທ, ກະຊວງ ອຄ, ກະຊວງ ທີ່ກ່ຽວຂ້ອງ | 400 | - | 400 | - |
| 45 | ໂຄງການສົ່ງເສີມດຶງດູດການລົງທຶນຂະໜາດໃຫຍ່ (Anchor Industry) | ກະຊວງ ຜທ, ກະຊວງ ອຄ, ກະຊວງ ທີ່ກ່ຽວຂ້ອງ | 1,400 | 700 | 700 | 1,000 |
| 46 | ໂຄງການສ້າງຄວາມສາມາດໃຫ້ແກ່ພະນັກງານທ້ອງຖິ່ນໃນການຄຸ້ມຄອງ ແລະ ສົ່ງເສີມອຸດສາຫະກຳປຸງແຕ່ງ | ກະຊວງ ອຄ, ພະແນກ ອຄ ທົ່ວປະເທດ | 1,200 | - | 1,200 | - |
| 47 | ໂຄງການຍົກລະດັບ ແລະ ສ້າງຄວາມເຂັ້ມແຂງໃຫ້ຫົວໜ່ວຍຫັດຖະກຳ | ກະຊວງ ອຄ, ກຸ່ມຫັດຖະກຳ, LNCCI, ຄູ່ຮ່ວມພັດທະນາ | 7,300 | 3,650 | 2,650 | 1,000 |
| 48 | ໂຄງການ ຍົກລະດັບການຜະລິດແຜ່ນແພພື້ນເມືອງ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 3,680 | 2,150 | 1,280 | 250 |
| 49 | ໂຄງການຍົກລະດັບການສ້າງມູນຄ່າເພີ່ມ ແລະ ຊຸກຍູ້ການຜະລິດ ເພື່ອສົ່ງອອກ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 2,700 | 1,250 | 1,450 | - |
| 50 | ໂຄງການ ເສີມສ້າງຄຸນນະພາບຜະລິດຕະພັນຫວາຍ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 2,200 | 1,100 | 1,100 | - |
| 51 | ໂຄງການ ຊຸກຍູ້ການຜະລິດຜະລິດຕະພັນໄມ້ປ່ອງຂອງກຸ່ມຈັກສານ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 1,800 | 1,050 | 750 | - |
| 52 | ໂຄງການສົ່ງເສີມເຕັກນິກວິຊາການຜະລິດ ຖ່າຍທອດຄວາມຮູ້ກ່ຽວກັບປັ້ນສາ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 3,050 | 1,750 | 1,300 | - |
| 53 | ໂຄງການ ຍົກລະດັບຄຸນນະພາບ ແລະ ສ້າງການໝາຍຫັດຖະກຳຕີເຫຼັກ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 3,300 | 2,000 | 1,300 | - |
| 54 | ໂຄງການ ສົ່ງເສີມການອອກແບບ ແລະ ຍົກລະດັບເຕັກນິກການແກະສະຫຼັກຫີນ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 500 | - | 500 | |
| 55 | ໂຄງການ ອະນຸລັກ ແລະ ສົ່ງເສີມການຜະລິດເຄື່ອງປັ້ນດິນເຜົາ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 1,720 | 1,350 | 370 | - |
| 56 | ໂຄງການ ຖ່າຍທອດຄວາມຮູ້ເຕັກນິກ ແລະ ການສ້າງເຄືອຂ່າຍ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 3,450 | 2,150 | 1,300 | - |
| 57 | ໂຄງການ ປັບປຸງການເກັບຮັກສາ, ການຫຸ້ມຫໍ່ ແລະ ສ້າງກາໝາຍຜະລິດຕະພັນ ອາຫານ ແລະ ເຄື່ອງດື່ມພື້ນເມືອງ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 1,450 | 750 | 700 | - |
| 58 | ໂຄງການ ສ້າງລະບົບຂໍ້ມູນຂ່າວສານຫັດຖະກຳທັນສະໄໝ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 6,400 | 3,500 | 2,900 | - |

| | | | | | | |
|---|---|---|---|---|---|---|
| 59 | ໂຄງການ ສ້າງຄວາມເຂັ້ມແຂງກ່ຽວກັບການເຂົ້າຫາແຫລ່ງທຶນໃຫ້ຫົວໜ່ວຍຫັດຖະກຳ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 1,100 | 550 | 550 | - |
| 60 | ໂຄງການ ຟື້ນຟູຫັດຖະກຳຄຶດພັນກັບການທ່ອງທ່ຽວຈາກຜົນກະທົບໂຄວິດ-19 | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 1,700 | 1,200 | 500 | |
| 61 | ໂຄງການ ສົ່ງເສີມການຊົມໃຊ້ສິນຄ້າຫັດຖະກຳພາຍໃນ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 4,250 | 2,100 | 2,150 | - |
| 62 | ໂຄງການ ອະນຸລັກສີໄມ້ລາຍມື ແລະ ເຊີດຊູຫັດຖະກຳລາວ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ | 5,400 | 3,000 | 2,400 | - |
| 63 | ໂຄງການ ສ້າງ ແລະ ເຜີຍແຜ່ ອາຊີບ ແລະ ຜະລິດຕະພັນຫັດຖະກຳທີ່ສະຫງວນໃຫ້ຄົນລາວ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ, ຜູ້ປະກອບການ | 1,500 | 700 | 800 | - |
| 64 | ໂຄງການ ຊຸກຍູ້ປົກປ້ອງສິນຄ້າຫັດຖະກຳຂອງລາວ | ກະຊວງ ອຄ, ກຸ່ມຜູ້ຜະລິດ, ຄູ່ຮ່ວມພັດທະນາ, ຜູ້ປະກອບການ | 1,770 | 1,050 | 720 | - |
| Total | | | 322,494 | 174,350 | 76,044 | 72,100 |

ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ
ໂທລະສັບ: 021: 452 425, ແຟກ: 021 452 425, ຕູ້ ປນ 4107
ເວບໄຊ: www.dih.moic.gov.la, ເຟດບຸກ: facebook.com/Dihlaos

ຂອບການຮ່ວມມື ແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ
<u>ສະໜັບສະໜູນໂດຍ:</u>
ໂຄງການສ້າງຂີດຄວາມສາມາດໃນການສ້າງນະໂຍບາຍ ອຸດສາຫະກຳ ແລະ ການວາງແຜນ ເພື່ອການພັດທະນາ ແລະ ຮ່ວມມືອຸດສາຫະກຳ
ພາຍໃຕ້ກອງທຶນພິເສດ ແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ